# ມໍລະດົກໂລກໃນມືຂອງຊາວໜຸ່ມ

## ຮູ້, ຮັກ ແລະ ປົກປັກຮັກສາ

## ຄູ່ມືການສອນການຮຽນເພື່ອຮັບໃຊ້ຄູ

WORLD HERITAGE EDUCATIONAL RESOURCE KIT FOR TEACHERS
First published by the United Nations Educational, Science and Cultural Organization (UNESCO), Paris, France
© UNESCO 1999
© UNESCO 2001 for the *Laotian translation*

ຊື່ ແລະ ອຸປະກອນທີ່ໃຊ້ໃນຄູ່ມືຫົວນີ້ບໍ່ສະແດງວ່າອຸຍແນດສະໂກມີຄຳເຫັນກ່ຽວກັບຖານະຊອບກົດໝາຍຂອງປະເທດ, ຜືນແຜ່ນດິນ, ເມືອງ ຫຼື ສະຖານທີ່ ຫຼື ອຳນາດການປົກຄອງ, ຫຼື ການກຳນົດຊາຍແດນ ຫຼື ຂອບເຂດຂອງປະເທດໃດໜຶ່ງແຕ່ຢ່າງໃດ.

ຄູ່ມືທີ່ແປ ແລະ ພິມເປັນພາສາລາວຫົວນີ້ຢູ່ໃນຄວາມຮັບຜິດຊອບຂອງຄະນະກຳມາທິການແຫ່ງຊາດລາວເພື່ອອຸຍແນດສະໂກ

# ຄຳນຳ

ຄູ່ມືການສອນການຮຽນມໍລະດົກໂລກໃນຊັ້ນມັດທະຍົມໄດ້ຮັບການຮຽບຮຽງ ແລະ ພິມແຈກຢາຍຕາມໂຄງການການສຶກສາພາຍໃຕ້ຊື່ " ການປະກອບສ່ວນຂອງຊາວໜຸ່ມໃນການປົກປັກຮັກສາ ແລະ ການສົ່ງເສີມມໍລະດົກໂລກ " ຊຶ່ງອອກແບບໃນປີ 1994 ໂດຍສູນກາງມໍລະດົກໂລກ ແລະ ເຄືອຂ່າຍຂອງລະບົບໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດຂອງອຸຍແນດສະໂກ.

ໂຄງການການສຶກສາຂອງອຸຍແນດສະໂກ ໂຄງການນີ້ມີເປົ້າໝາຍພັດທະນາການສອນແບບໃໝ່ ທີ່ສົ່ງເສີມການອະນຸລັກມໍລະດົກໂລກເພື່ອເຮັດໃຫ້ນັກຮຽນສາມາດ:

- ເຂົ້າໃຈດີສະຖານທີ່ວັດທະນະທຳ ແລະ ທຳມະຊາດທີ່ມີຄຸນຄ່າພິເສດລະດັບໂລກ ແລະ ໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ;
- ມີຄວາມສາມາດອັນຈຳເປັນເພື່ອປະກອບສ່ວນໃນການອະນຸລັກສະຖານທີ່ຊຶ່ງໄດ້ຮັບການປົກປັກຮັກສາໂດຍສົນທິສັນຍາວ່າດ້ວຍມໍລະດົກໂລກຂອງອຸຍແນດສະໂກ;
- ຝຶກຝົນທ່າທີໃໝ່ ແລະ ປະຕິບັດພັນທະເປັນປະຈຳໃນພາລະກິດແຫ່ງການປົກປັກຮັກສາມໍລະດົກໂລກ, ມໍລະດົກແຫ່ງຊາດ ແລະ ມໍລະດົກຂອງທ້ອງຖິ່ນໄວ້ໃຫ້ຄົນຮຸ່ນໃນປະຈຸບັນ ແລະ ໃນອະນາຄົດ;
- ປະຕິບັດໜ້າທີ່ໃນການອະນຸລັກຄວາມຫຼາກຫຼາຍດ້ານວັດທະນະທຳ ແລະ ທຳມະຊາດອັນມະຫັດສະຈັນຂອງໂລກໂດຍຜ່ານການຮ່ວມມືສາກົນ.

ຄູທີ່ຮ່ວມມືກັບອົງການອຸຍແນດສະໂກໂດຍຜ່ານລະບົບໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດ ແລະ ຄູໃນລະບົບການສຶກສາແຫ່ງຊາດມີບົດບາດຕັດສິນຜົນສຳເລັດທີ່ດີຂອງການສຶກສາກ່ຽວກັບມໍລະດົກຖືກຍ້ອນວ່າຄູເປັນຜູ້ເຜີຍແຜ່ເນື້ອໃນຈິດໃຈຂອງສົນທິສັນຍາວ່າດ້ວຍມໍລະດົກໂລກໃຫ້ແກ່ຊາວໜຸ່ມທີ່ຈະເປັນຜູ້ຕັດສິນໃຈ ແລະ ຮັບຜິດຊອບດ້ານການເມືອງໃນອະນາຄົດດ້ວຍວິທີແລກປ່ຽນຄຳຄິດຄຳເຫັນກ່ຽວກັບຄວາມອຸດົມຮັ່ງມີ ແລະ ຄຸນຄ່າຂອງມໍລະດົກດ້ານວັດທະນະທຳ ແລະ ທຳມະຊາດ, ສະນັ້ນຄູ່ມືຄູຫົວນີ້ຈຶ່ງເປັນອຸປະກອນເພື່ອຊຸກຍູ້ການຄົ້ນຄິດ ແລະ ການມີຫົວຄິດປະດິດສ້າງຂອງຄູ ແລະ ນັກຮຽນເພື່ອເຮັດໃຫ້ວິຊາຄູທີ່ໃຊ້ເຂົ້າໃນການສອນການຮຽນກ່ຽວກັບມໍລະດົກໂລກມີຄວາມຫຼາກຫຼາຍ. ຄູຂອງທຸວິຊາຮຽນໃນຊັ້ນມັດທະຍົມສຶກສາສາມາດນຳໃຊ້ຄູ່ມືຄູຫົວນີ້ເພື່ອປັບປຸງເນື້ອໃນ ແລະ ວິທີສອນຂອງຕົນຊຶ່ງກ່ຽວພັນກັບຫົວເລື່ອງຕ່າງໆຂອງຄູ່ມືຫົວນີ້.

ຄະນະກຳມາທິການແຫ່ງຊາດລາວ
ເພື່ອອຸຍແນດສະໂກ
2001

# ຄູ່ມືການສອນການຮຽນເພື່ອຮັບໃຊ້ຄູ

ຄຳນຳ


| | |
|---|---|
| ວິທີນຳໃຊ້ຄູ່ມືເພື່ອການສອນການຮຽນກ່ຽວກັບມໍລະດົກໂລກ | 1 |
| ສົນທິສັນຍາວ່າດ້ວຍມໍລະດົກໂລກ | 25 |
| ມໍລະດົກໂລກ ແລະ ເອກະລັກປະຈຳຕົວ | 72 |
| ມໍລະດົກໂລກ ແລະ ການທ່ອງທ່ຽວ | 91 |
| ມໍລະດົກໂລກ ແລະ ສະພາບແວດລ້ອມ | 117 |
| ມໍລະດົກໂລກ ແລະ ວັດທະນະທຳແຫ່ງສັນຕິພາບ | 143 |

# ວິທີນຳໃຊ້ຄູ່ມືເພື່ອການສອນການຮຽນກ່ຽວກັບ ມໍລະດົກໂລກ.

ຄູ່ມືຄູຫົວນີ້ ໄດ້ສ້າງຂຶ້ນມາເພື່ອຮັບໃຊ້ຄູໃນທົ່ວໂລກ ທີ່ປະຕິບັດໜ້າທີ່ໃນເງື່ອນໄຂແຕກຕ່າງກັນ ແລະ ສ່ວນຫຼາຍໃນເງື່ອນໄຂຫຍຸ້ງຍາກ (ອາຄານສະຖານທີ່, ໂຕະ ຕັ່ງ ແລະ ແບບຮຽນຂາດເຂີນ, ນັກຮຽນລົ້ນຫ້ອງ, ຫຼັກສູດໜັກໜ່ວງ ແລະ ອື່ນໆ) ກໍຄື ຄູທີ່ປະຕິບັດໜ້າທີ່ໃນໂຮງຮຽນ ຊຶ່ງມີອຸປະກອນທັນສະໄໝຮັບໃຊ້ການສອນ ການຮຽນ ເຊັ່ນ: ລະບົບເຄືອຄ່າຍອິນເຕີເນັດ, ຊີດີຣອມ ແລະ ອື່ນໆ.

ຄູຂອງທຸກວິຊາຮຽນ ເຊັ່ນ: ພູມສາດ, ປະຫວັດສາດ, ພາສາ, ວິທະຍາສາດ, ຄະນິດສາດ, ສິລະປະ ແລະ ອື່ນໆທີ່ສອນນັກຮຽນໃນເກນອາຍຸແຕ່ 12 ປີ ຫາ 18 ປີ ສາມາດນຳໃຊ້ຄູ່ມືຄູຫົວນີ້ເຂົ້າໃນການສອນຂອງຕົນ.

**ຄູ່ມືຄູຫົວນີ້ ງ່າຍໃນການນຳໃຊ້ຍ້ອນວ່າຄູສາມາດ:**

- ເລືອກບົດທີ່ຕົນຕ້ອງການສອນໃນມື້ນີ້, ມື້ອື່ນ, ອາທິດໜ້າ ຫຼື ເດືອນໜ້າຢູ່ຫ້ອງຮຽນ ຫຼື ນອກໂຮງຮຽນ.
- ເລີ່ມຕົ້ນດ້ວຍການອ່ານວິທີສອນທີ່ໄດ້ສະເໜີໃນຕອນທຳອິດຂອງຄູ່ມື.
- ສອນຕາມຫົວເລື່ອງໃດກ່ອນກໍໄດ້ ເຊັ່ນ: ສົນທິສັນຍາວ່າດ້ວຍມໍລະດົກໂລກ, ມໍລະດົກໂລກ ແລະ ເອກະລັກສະເພາະຕົວ, ມໍລະດົກໂລກ ແລະ ການທ່ອງທ່ຽວ, ມໍລະດົກໂລກ ແລະ ສະພາບແວດລ້ອມ, ມໍລະດົກໂລກ ແລະ ວັດທະນະທຳເພື່ອສັນຕິພາບ.
- ສັງເກດເບິ່ງສື່ການຮຽນການສອນໃນຖົງປາສະຕິກທີ່ຢູ່ດ້ານໃນຂອງໜ້າປົກ ແລະ ຫຼັງປົກຂອງຄູ່ມືຄູຫົວນີ້. ເຊັ່ນບົດສົນທິສັນຍາມໍລະດົກໂລກ, ແຜນທີ່ມໍລະດົກ ແລະ ຮູບອັດແຜ່ນປລາສະຕິກແຂງ.
- ນຳໃຊ້ໝົດ ຫຼື ນຳໃຊ້ບາງສ່ວນຂອງຄູ່ມືຄູ.
- ເພີ່ມເຕີມເອກະສານທີ່ຄູຈັດຫາໄດ້ ຕົວຢ່າງ: ຂ່າວສານຂອງປະເທດຕົນ ກ່ຽວກັບສະຖານທີ່ມໍລະດົກໂລກ, ທີ່ຍັງດຳເນີນການປົກປັກຮັກສາມໍລະດົກໃນປະເທດ ແລະ ຢູ່ແຫ່ງອື່ນ, ຮູບປະກອບ ຫຼື ແຜນທີ່ ແລະ ສ່ວນປະກອບອື່ນໆ ທີ່ຄູ ແລະ ນັກຮຽນຮ່ວມກັນສ້າງຂຶ້ນມາ, ອຸປະກອນເຫຼົ່ານີ້ອາດຈະເອົາລວມເຂົ້າໃນຖົງປລາສະຕິກຢູ່ດ້ານໃນຂອງໜ້າປົກ ແລະ ຫຼັງປົກໃຊ້ໄວ້ມ້ຽນສື່ການຮຽນການສອນເຫຼົ່ານີ້.

## ວິທີສອນມໍ ລະດົກໂລກ.

### ວິຊາຄູທີ່ນຳໃຊ້.

ກິດຈະກຳຂອງນັກຮຽນ:

- ການສົນທະນາ
- ການຄົ້ນຄວ້າ
- ບົດຝຶກຫັດ
- ການສະເໜີສິ່ງປະຈັກຕາ (ຮູບ, ແຜ່ນໃສ, ແຜນທີ່....)
- ໄປທັດສະນະສຶກສາຢູ່ມໍລະດົກສະຖານແຫ່ງຊາດ ແລະ ມໍລະດົກໂລກ.

### ການຢ້ຽມຢາມບູຮານສະຖານ ແລະ ຫໍພິພິທະພັນ

ການໄປທັດສະນະສຶກສາຢູ່ບູຮານສະຖານ.

- ການກະກຽມ.
- ກ່ອນການຢ້ຽມຢາມບູຮານສະຖານ.
- ການຢ້ຽມຢາມບູຮານສະຖານ.
- ຕິດຕາມຫຼັງການຢ້ຽມຢາມບູຮານສະຖານ.

**ຮ່າງກິດຈະກຳການສອນການຮຽນ:**

- ການຢ້ຽມຢາມບູຮານສະຖານ, ການຢ້ຽມຢາມຫໍພິພິທະພັນ.
- ການສົນທະນາໃນລະຫວ່າງການຢ້ຽມຢາມຫໍພິພິທະພັນ.
- ຄົ້ນຄວ້າກ່ຽວກັບວັດຖຸບູຮານໃດໜຶ່ງຂອງພິພິທະພັນ.

**ຮ່າງກິດຈະກຳການສອນການຮຽນ:**

- ຄົ້ນຄວ້າກ່ຽວກັບວັດຖຸບູຮານໃດໜຶ່ງ
- ຢ້ຽມຢາມໂຮງຊ່າງຫັດຖະກຳ.

### ການສະແດງລະຄອນຕາມໜ້າທີ່ສົມມຸດ.

- ການສະແດງລະຄອນໃນຫ້ອງຮຽນ.
- ທົບທວນປະຫວັດສາດຄືນໂດຍສະແດງຜ່ານລະຄອນ ຢູ່ສະຖານທີ່ມໍລະດົກໂລກ.
- ການແກ້ໄຂຂໍ້ຂັດແຍ່ງໂດຍສັນຕິວິທີ.

## ການນຳໃຊ້ເຄືອຂ່າຍການຄົມມະນາຄົມໂລກ ແລະ ອິນເຕີແນັດ.

ການນຳໃຊ້ເຄືອຂ່າຍການຄົມມະນາຄົມໂລກ.

ການນຳໃຊ້ອິນເຕີແນັດເພື່ອສົ່ງເສີມ

ການຮຽນການສອນກ່ຽວກັບມໍລະດົກໂລກ.

- ເຄືອຂ່າຍອິນເຕີແນັດ.
- ຈົດໝາຍເອເລັກໂຕຣນິກ (E-mail)
- ເຄືອຂ່າຍສື່ສານຂອງໂລກ (World Wide Web ຫຼື Web Site).
- ເປັນຫຍັງຈຶ່ງນຳໃຊ້ອິນເຕີແນັດ?

ມໍລະດົກໂລກໃນອິນເຕີແນັດ.

ເຄືອຄ່າຍຂໍ້ມູນຂ່າວສານກ່ຽວກັບມໍລະດົກໂລກ (WHIN)

ລະບົບໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດໃນອິນເຕີແນັດ.

ທີ່ຢູ່ອັນເປັນປະໂຫຍດໃນອິນເຕີແນັດ.

## ວິຊາຄູຂອງຫຼາຍວິຊາ (ຮອບດ້ານ)

ຄຸນຄ່າມະຫາສານ ແລະ ຄວາມສຳຄັນລະດັບໂລກໃນການປົກປັກຮັກສາມໍລະດົກໂລກເພື່ອຄົນຮຸ່ນຫຼັງ ຊຶ່ງແມ່ນການສືບຕໍ່ມີຊີວິດຂອງການຄົງຕົວຂອງໂລກພິພົບໄດ້ມອບຫຼາຍຢ່າງ ຫຼາຍຂະແໜງວິຊາ ເຊັ່ນ ເອື້ອອຳນວຍວິທີການຮຽນການສອນ ຄົ້ນຄິດໃນຫົວເລື່ອງດຽວກັນ ແລະ ໃນວິຊາລວມ.

ໃນຄະນະທີ່ຍັງມີໂຮງຮຽນ ເປັນຈຳນວນຫຼວງຫຼາຍ ທີ່ມີຫຼັກສູດການຮຽນໜັກໜ່ວງ ແລະ ຄວາມຕ້ອງການຄູໃຫ້ເຮັດວຽກງານນັບມື້ນັບຫຼາຍຂຶ້ນ, ສະນັ້ນ ຄູຜູ້ທີ່ຕ້ອງການສອນໃຫ້ນັກຮຽນຮູ້ຈັກຄວາມສຳຄັນຂອງການປົກປັກຮັກສາມໍລະດົກໂລກຈຳເປັນຕ້ອງນຳໃຊ້ວິຊາຄູຂອງຫຼາຍວິຊາ.

ການບັນຈຸເນື້ອໃນເຂົ້າໃນຫຼາຍວິຊາ ເຮັດໃຫ້ຄູຂອງວິຊາຕ່າງໆເຊັ່ນ: ປະຫວັດສາດ, ພູມສາດ, ວິທະຍາສາດ ຫຼື ພາສາ ສາມາດສອນກ່ຽວກັບມໍລະດົກໂລກ. ວິທີສອນໃນຫົວເລື່ອງດຽວຂອງຫຼາຍວິຊາໄດ້ສະເໜີໃນຕອນທ້າຍຂອງແຕ່ລະພາກ. ໃນນີ້ ຄູບໍ່ຈຳເປັນຕ້ອງສອນຕາມວິທີທີ່ໄດ້ສະເໜີນັ້ນ ຢ່າງເຄັ່ງຄັດ ແຕ່ສາມາດປັບການສອນຂອງຕົນຕາມການສອດຄ່ອງກັບສະຖານະການ ແລະ ຄວາມອາດສາມາດ ຫຼື ຕາມກາລະໂອກາດ ຂອງຫຼັກສູດ.

ການສຶກສາກ່ຽວກັບມໍລະດົກໂລກສົ່ງເສີມໃຫ້ຄູຂອງທຸກວິຊາຮຽນເຮັດວຽກເປັນໜ່ວຍງານ ເພື່ອຊຸກຍູ້ນັກຮຽນໃຫ້ມີຄວາມກະຕືລືລົ້ນໃນການຮູ້ຈັກຫວງແຫນ ແລະ ປະຕິບັດຕົນເພື່ອປົກປັກຮັກສາມໍລະດົກໂລກ.

## ກິດຈະກຳການຮຽນການສອນ.

ກິດຈະກຳສຳລັບນັກຮຽນທີ່ໄດ້ສະເໜີໃນຄູ່ມືຫົວນີ້ ແມ່ນເພື່ອອຳນວຍຄວາມສະດວກໃຫ້ແກ່ການຮຽນການສອນດ້ວຍຫຼາຍວິທີ. ພາກສ່ວນໜຶ່ງຂອງກິດຈະກຳເຫຼົ່ານີ້ ກໍໄດ້ມີການສຳຫຼວດ, ທົດລອງ ແລະ ປະເມີນໂດຍຄູທີ່ຖືກຄັດເລືອກມາຈາກທຸກພາກຂອງໂລກ ຈຳນວນໜຶ່ງ ແລະ ເປັນຜູ້ທີ່ຕິດພັນກັບຈຳນວນໜຶ່ງຂອງຄູທີ່ໄດ້ເຂົ້າຮ່ວມແຕ່ຕົ້ນ ຂອງໂຄງການການສຶກສາຂອງອຸຍແນດສະໂກກ່ຽວກັບມໍລະດົກໂລກມາແຕ່ຕົ້ນ. ຄູສາມາດປັບກິດຈະກຳທີ່ໄດ້ສະເໜີມານີ້ເພື່ອໃຫ້ສອດຄ່ອງກັບລະບົບການສຶກສາ ແລະ ຕອບສະໜອງຄວາມຕ້ອງການຂອງແຕ່ລະທ້ອງຖິ່ນ. ຈຸດປະສົງຕົ້ນຕໍຂອງວິທີຮຽນແບບນີ້ແມ່ນເພື່ອເຮັດໃຫ້ຊາວໜຸ່ມມີຄວາມກະຕືລືລົ້ນ ແລະ

ເພີ່ມທະວີການປະກອບສ່ວນຂອງຕົນເຂົ້າໃນການປົກປັກຮັກສາມໍລະດົກຂອງພວກເຮົາພ້ອມທັງລະດົມການປະກອບສ່ວນຂອງວົງສາຄະນະຍາດໃຫ້ນັບມື້ນັບຫຼາຍຂຶ້ນເພື່ອເຮັດໃຫ້ໂຮງຮຽນ ແລະ ສັງຄົມເຊື່ອມເຂົ້າກັນ.

**ກິດຈະກຳສຳລັບນັກຮຽນຈະປະຕິບັດໃນທົກສາຍພົດຕິກຳ:**

- ການສົນທະນາ.
- ການຄົ້ນຄວ້າ.
- ບົດຝຶກຫັດ.
- ການຮຽນດ້ວຍໂສດທັດສະນຸປະກອນ.
- ທັດສະນະສຶກສາໃນສະຖານທີ່ມໍລະດົກໂລກ.
- ການສະແດງລະຄອນໃນບົດບາດສົມມຸດ.

## ການສົນທະນາ.

ໃນການສຶກສາກ່ຽວກັບມໍລະດົກໂລກ ນັກຮຽນສາມາດຄົ້ນຄິດ ແລະ ສົນທະນາກັນ (ໂຕ້ວາທີ) ກ່ຽວກັບຄວາມສຳຄັນ ແລະ ຄຸນຄ່າຂອງມໍລະດົກ, ເຕັກນິກພື້ນຖານເພື່ອຄຸ້ມຄອງມໍລະດົກໂລກ, ຜົນໄດ້ຮັບ ແລະ ອັນຕະລາຍຂອງຂະບວນກຸ່ມນັກທ່ອງທ່ຽວຕໍ່ມໍລະດົກໂລກ ແລະ ອື່ນໆ. ການຮຽນການສອນກ່ຽວກັບມໍລະດົກໂລກແມ່ນເພື່ອເຮັດໃຫ້ນັກຮຽນມີຄວາມຮູ້ ແລະ ປະຕິບັດຕົວຈິງ, ສະນັ້ນ ການຈັດເວລາສົນທະນາເພື່ອໃຫ້ນັກຮຽນຊິນເຄີຍກັບການປົກປັກຮັກສາມໍລະດົກໂລກ ແລະ ຊຸກຍູ້ໃຫ້ເຂົາເຈົ້າປະກອບສ່ວນຢ່າງຕັ້ງໜ້າ ແລະ ເປັນຂະບວນຕໍ່ເນື່ອງໃນການປົກປັກຮັກສາມໍລະດົກໂລກຈຶ່ງມີປະໂຫຍດທີ່ສຸດ.

## ການຄົ້ນຄວ້າ.

ປັດຈຸບັນຍ້ອນວິທະຍາສາດ ແລະ ເຕັກນິກມີຄວາມກ້າວໜ້າບາງປະເທດກໍກຳລັງເຮັດການປະຕິວັດດ້ານຂໍ້ມູນຂ່າວສານ ຢ່າງຈິງຈັງ. ໂຮງຮຽນຫຼາຍຕໍ່ຫຼາຍແຫ່ງມີເງື່ອນໄຂ ແລະ ໃນອະນາຄົດອີກຫຼາຍໂຮງຮຽນກໍຈະມີເງື່ອນໄຂໃຊ້ວິທະຍາສາດ ແລະ ເຕັກນິກອັນທັນສະໄໝນັ້ນ ເພື່ອເກັບກຳຂໍ້ມູນຂ່າວສານ, ທຳການຄົ້ນຄວ້າ, ທຳການສະຫຼຸບສະຖິຕິຈາກຫ້ອງສະໝຸດ ຫຼື ຜ່ານແອງແຕກແນດ (*Internet*). ການສຶກສາເພື່ອມໍລະດົກໂລກ ແນະນຳໃຫ້ນັກຮຽນຮູ້ວິທີການຄົ້ນຄວ້າແບບພື້ນຖານ ເຊັ່ນວ່າ ການຄົ້ນຄວ້າເພື່ອຊອກຫາຂໍ້ມູນ, ສະຫຼຸບສັງລວມ ແລະ ສ້າງຂໍ້ສະເໜີຕ່າງໆ ເພື່ອດຳເນີນການປົກປັກຮັກສາມໍລະດົກໂລກ.

## ບົດຝຶກຫັດ.

ການສຶກສາກ່ຽວກັບມໍລະດົກໂລກ ໃຫ້ຄວາມສຳຄັນແກ່ການຮຽນດ້ວຍພຶດຕິກຳທີ່ເຂົາເຈົ້າເຮັດໃນຊົ່ວໂມງພາກປະຕິບັດຕົວຈິງ. ວິທີນີ້ ມີຄຸນະພາບຕາມການຮຽນດ້ວຍການເຮັດທົດລອງ. ນັກຮຽນຕ້ອງໃຊ້ຫົວຄິດປະດິດສ້າງ, ຄົ້ນຄິດ ແລະ ຄວາມຄ່ອງແຄ້ວເຂົ້າໃນການແກ້ໄຂບັນຫາ, ເຂົາເຈົ້າຕ້ອງມີສີລະປະສູນທະລີຍະພາບ ແລະ ຄວາມຊຳນິຊຳນານຂອງສິລະປິນ ແລະ ເກມ ຫຼື ການສະແດງຕາມພອນສະຫວັນ. ບົດຝຶກຫັດທີ່ສະເໜີໃນຄູ່ມືຄູຫົວນີ້ ມີຮ່າງ (ແບບຟອມ) ຂອງກິດຈະກຳເພື່ອການສຶກສາຊຶ່ງນັກຮຽນສາມາດຕອບໃນຫ້ອງຮຽນໄດ້ຢ່າງງ່າຍດາຍ.

## ການຮຽນການສອນດ້ວຍຮູບ.

ການສຶກສາກ່ຽວກັບມໍລະດົກໂລກ ຊຸກຍູ້ໃຫ້ນັກຮຽນຊອກຫາເອກະສານກ່ຽວກັບສະຖານທີ່ຊຶ່ງໄດ້ຈົດເຂົ້າໃນບັນຊີຂອງມໍລະດົກໂລກ (552 ແຫ່ງໃນເດືອນທັນວາ 1997). ຄູ່ມືຫົວນີ້ເຮັດໃຫ້ຂະບວນການຮຽນງ່າຍຂຶ້ນຍ້ອນມີຮູບປະກອບຫຼາຍແຜ່ນ. ຊາວໜຸ່ມທີ່ເຫັນຮູບສະຖານທີ່ມໍລະດົກເທື່ອທຳອິດຈະບໍ່ລືມມັນງ່າຍ. ສະເພາະຜູ້ທີ່ມີເຕັກໂນໂລຊີແບບໃໝ່ ເຊັ່ນ: ຊີດີຣອມ ຫຼື ອິນເຕີແນັດ ຄວນໄດ້ຮັບການສົ່ງເສີມເງື່ອນໄຂໃນການສຶກສາໃຫ້ນຳໃຊ້ພາຫະນະເຫຼົ່ານີ້ ເພື່ອຊອກຮູ້ສະຖານທີ່ມະຫັດສະຈັນ ຂອງມໍລະດົກໂລກ.

## ທັດສະນະສຶກສາໃນສະຖານທີ່ມໍລະດົກໂລກ.

ໂຄງການອຸຍແນດສະໂກເພື່ອສຶກສາຊາວໜຸ່ມກ່ຽວກັບມໍລະດົກໂລກ ຊີ້ໃຫ້ເຫັນວ່າຖ້າພວກເຮົາຮູ້ຈັກມໍລະດົກໂລກຫຼາຍເທົ່າໃດ ພວກເຮົາກໍຍິ່ງຢາກຮຽນ ຢາກສືບຕໍ່ຊອກຮູ້ ແລະ ເຮັດການຄົ້ນຄວ້າກ່ຽວກັບມໍລະດົກໂລກທີ່ຢູ່ຕ່າງປະເທດ ແລະ ຢູ່ຕ່າງທະວີບຕື່ມອີກ. ຈາກກິດຈະກຳທີ່ສະເໜີໃນຄູ່ມືການສຶກສາຫົວນີ້, ຜູ້ຮຽນສາມາດເຂົ້າໃຈລັກສະນະສະເພາະຕົວ ແລະ ຄຸນຄ່າຂອງສະຖານທີ່ທຳມະຊາດ ແລະ ວັດທະນະທຳຂອງມໍລະດົກໂລກທີ່ຖືກເລືອກເຟັ້ນມາຈາກຂົງເຂດຕ່າງໆຂອງໂລກ ລວມທັງການປົກປັກຮັກສາສິ່ງເຫຼົ່ານັ້ນນຳອີກ. ຕ້ອງເຫັນວ່າຂ່າວສານ, ຮູບ ແລະ ແຜ່ນໃສທີ່ນັກຮຽນວາດພາບການທ່ອງທ່ຽວ ແລະ ຊອກຮູ້ສະຖານທີ່ມໍລະດົກໂລກໃນບ່ອນຫ່າງໄກ ຈະພັດທະນາການຄົ້ນຄິດ ແລະ ເຮັດໃຫ້ເຂົາເຈົ້າມີຄວາມສົນໃຈ ແລະ ເຫັນຜົນປະໂຫຍດຂອງເຂົາເຈົ້າ.

ກິດຈະກຳທີ 1 ສຳລັບນັກຮຽນ.

## ຂໍ້ທົດສອບນັກຮຽນ ກ່ຽວກັບສະຖານທີ່ມໍລະດົກໂລກ.

ແບບຫຼິ້ນເພື່ອທົດສອບຄວາມຮູ້ນັກຮຽນ ກ່ຽວກັບມໍລະດົກໂລກ ແລະ ເຮັດໃຫ້ເຂົາເຈົ້າສົນໃຈນຳການປົກປັກຮັກສາມໍລະດົກໂລກ.

- ຄູອະທິບາຍໃຫ້ນັກຮຽນຮູ້ວ່າ ຄູຈະສະເໜີແບບຫຼິ້ນ ເພື່ອທົດສອບຄວາມຮູ້ກ່ຽວກັບມໍລະດົກໂລກ. ບອກໃຫ້ນັກຮຽນຂຽນລາຍຊື່ ພ້ອມດ້ວຍເລກລຳດັບແຕ່ 1 ຫາ 25 ແລ້ວຂຽນຊື່ສະຖານທີ່ຊຶ່ງກົງກັບຮູບທີ່ຄູໃຫ້ເຂົາເຈົ້າເບິ່ງຕາມລຳດັບ. ຖ້າເຂົາເຈົ້າບໍ່ຈື່ຊື່ຂອງສະຖານທີ່, ເຂົາເຈົ້າສາມາດຂຽນຊື່ປະເທດບ່ອນທີ່ສະຖານທີ່ນັ້ນຢູ່ກໍໄດ້. ຄູຍົກຮູບ 25 ແຜ່ນໃຫ້ນັກຮຽນເບິ່ງເທື່ອລະແຜ່ນແລ້ວໃຫ້ເຂົາເຈົ້າຂຽນຊື່ຂອງແຕ່ລະສະຖານທີ່ (*ເພື່ອກັນລືມ ຄູຄວນຂຽນຊື່ສະຖານທີ່ໄວ້ດ້ານຫຼັງຂອງຮູບ*).

- ເມື່ອຕອບຄຳຖາມແລ້ວ, ຄູບອກນັກຮຽນເອົາຄຳຕອບຂອງຕົນໃຫ້ຜູ້ທີ່ນັ່ງຢູ່ຂ້າງເປັນຜູ້ກວດໃຫ້. ຖ້າບອກຊື່ສະຖານທີ່ ແລະ ປະເທດຖືກຕ້ອງໃຫ້ 1 ຄະແນນ. ຖ້າບອກຊື່ປະເທດພຽງຢ່າງດຽວໃຫ້ເຄິ່ງຄະແນນ. ຕ້ອງຊົມເຊີຍຜູ້ທີ່ໄດ້ຄະແນນຫຼາຍດ້ວຍການໃຫ້ຂອງຂວັນ ຕົວຢ່າງ: ເຄື່ອງໝາຍມໍລະດົກໂລກທີ່ຢູ່ໃນຄູ່ມືຄູ.

## ຢ້ຽມຢາມສະຖານທີ່ທຳມະຊາດ ແລະ ວັດທະນະທຳ ແລະ ຫໍພິພິທະພັນ.

ໜຶ່ງໃນຫຼາຍກິດຈະກຳທີ່ເຮັດໃຫ້ນັກຮຽນມີຄວາມມ່ວນຊື່ນໃນການຮຽນ ກ່ຽວກັບມໍລະດົກໂລກນັ້ນ ແມ່ນການຈັດໂອກາດໃຫ້ນັກຮຽນໄດ້ໄປຢ້ຽມຢາມສະຖານທີ່ທຳມະຊາດ ແລະ ວັດທະນະທຳຢູ່ທ້ອງຖິ່ນຂອງຕົນ, ຢູ່ໃນປະເທດ ຫຼື ຕ່າງປະເທດ. ເພື່ອໃຫ້ໄດ້ຜົນສຳເລັດດີ, ຄູຕ້ອງວາງແຜນລະອຽດ, ຈັດຕັ້ງການຢ້ຽມຢາມ ແລະ ມີການຕິດຕາມກິດຈະກຳຕ່າງໆໃຫ້ດີ.

## ທັດສະນະສຶກສາຢູ່ສະຖານທີ່.

ປະສົບການຊີ້ບອກວ່າ ໜຶ່ງໃນຫຼາຍວິທີສຳຄັນຂອງການສຶກສາກ່ຽວກັບມໍລະດົກໂລກ ແມ່ນການຢ້ຽມຢາມສະຖານທີ່ມໍລະດົກໂລກ. ຖ້າພາກປະຕິບັດຕົວຈິງຫາກໄດ້ຮັບການຈັດຕັ້ງດີເທົ່າໃດ ຄູ ແລະ ນັກຮຽນຈະມີຄວາມຊົງຈຳໃນການລົງຢ້ຽມຢາມດີເທົ່ານັ້ນ.

## ການກະກຽມ.

ການກະກຽມໄດ້ດີແມ່ນຜົນສຳເລັດຂອງການລົງຢ້ຽມຢາມສະຖານທີ່ຕ່າງໆ. ສະນັ້ນຄວນມີ:

- ຄູຜູ້ໜຶ່ງ ຫຼື ຫຼາຍຄົນທາງຫາກະກຽມເພື່ອໄປຢ້ຽມຢາມສະຖານທີ່.
- ການກະກຽມປະມວນຄຳຖາມເພື່ອໃຫ້ນັກຮຽນຕອບກ່ອນ ແລະ ຫຼັງການຢ້ຽມຢາມ ເພື່ອທົດສອບລະດັບຄວາມຮູ້, ທ່າທີ, ຄວາມຊຳນິຊຳນານ ແລະ ການປະພຶດຂອງນັກຮຽນ ຕໍ່ສະຖານທີ່ ແລະ ການປົກປັກຮັກສາມັນ.
- ການກະກຽມນັກຮຽນເພື່ອເຮັດກິດຈະກຳບາງຊະນິດ ຕົວຢ່າງ: ການຂຽນຄືນປະຫວັດ, ການເລົ່ານິທານ ແລະ ຕຳນານ ຫຼື ແຕ້ມຮູບສະຖານທີ່.
- ການກະກຽມວຽກໃຫ້ນັກຮຽນເຮັດຫຼັງການຢ້ຽມຢາມ.

## ກ່ອນການຢ້ຽມຢາມ.

ຄູປະຈຳວິຊາຕ້ອງເຕົ້າໂຮມຄູຂອງຫຼາຍວິຊາເປັນໜ່ວຍງານ ເພື່ອຊ່ວຍວຽກຕົນໃນການກະກຽມນັກຮຽນລົງຢ້ຽມຢາມ ຕົວຢ່າງ: ຄູປະຫວັດສາດເປັນຜູ້ໃຫ້ຂ່າວສານຕາມໄລຍະປະຫວັດສາດຂອງສະຖານທີ່; ຄູພູມສາດເປັນຜູ້ເນັ້ນລັກສະນະພິເສດດ້ານທີ່ຕັ້ງ ແລະ ເອກະລັກດ້ານພູມສາດ; ຄູອັກສອນສາດເປັນຜູ້ສະເໜີບົດທີ່ຕົນເອງເລືອກ ເຊັ່ນ: ບົດວັນນະຄະດີ, ກະວີ,

ບົດລະຄອນເປັນຕົ້ນ; ຄູສິລະປະກຳອາດສະເໜີໃຫ້ນັກຮຽນແຕ້ມ ຫຼື ສ້າງຮູບຈຳລອງສະຖານທີ່; ຄູຄະນິດສາດອາດສະເໜີໃຫ້ນັກຮຽນຄິດໄລ່ຂໍ້ມູນດ້ານການກໍ່ສ້າງຂອງບູຮານສະຖານ ຫຼື ຈຳນວນກ່ຽວກັບສິ່ງທີ່ມີຊີວິດໃນສະຖານທີ່ທຳມະຊາດ; ຄູຊີວະສາດສາມາດຊີ້ແຈງໃຫ້ນັກຮຽນຮູ້ຈັກອັນຕະລາຍຈາກການທ່ອງທ່ຽວ, ມົນພາວະ ແລະ ການບໍ່ໃຫ້ຄວາມສຳຄັນ ທີ່ຂຶ້ນຢູ່ສະຖານທີ່ທຳມະຊາດ ແລະ ວັດທະນະທຳ.

ຈົ່ງເຮັດໃຫ້ການຢ້ຽມຢາມນີ້ ເປັນປະສົບການທີ່ນັກຮຽນລືມບໍ່ໄດ້: ເຊື້ອເຊີນ (ແນະນຳ) ໃຫ້ເຂົາເຈົ້ານຸ່ງເຄື່ອງປະເພນີພື້ນເມືອງ, ເອົາເຄື່ອງເກົ່າແກ່ ຫຼື ເຄື່ອງດົນຕີລາວເດີມມາເສບນຳ ຫຼື ໃຫ້ເຂົາເຈົ້າຮ້ອງເພງຕາມດົນຕີນັ້ນ, ເຊີນແຂກພິເສດ (ໂດຍບໍ່ແຈ້ງໃຫ້ເຂົາເຈົ້າຮູ້ລ່ວງໜ້າ). ສອບຖາມເພື່ອໃຫ້ຮູ້ວ່າມີຜູ້ຮັບຜິດຊອບການສຶກສາປະຈຳສະຖານທີ່ ເພື່ອຈະຊ່ວຍເຫຼືອຄູໃນການຈັດຕັ້ງການຢ້ຽມຢາມ.

ຖ້າຫາກໄດ້ຜະລິດອຸປະກອນກ່ຽວກັບສະຖານທີ່ຈະໄປຢ້ຽມຢາມນັ້ນ, ໃຫ້ນຳໃຊ້ອຸປະກອນເຫຼົ່ານັ້ນກັບນັກຮຽນກ່ອນການໄປຢ້ຽມຢາມ. ບັນທຶກທຸກຄຳແນະນຳທີ່ຈຳເປັນ ສຳລັບການຢ້ຽມຢາມ ເຊັ່ນ: ຄ່າເຂົ້າຊົມ, ເວລາເປີດ ແລະ ປິດ, ການອະນຸຍາດຖ່າຍຮູບ, ຮ້ານອາຫານ ຫຼື ບ່ອນຂາຍນ້ຳຢູ່ກັບສະຖານທີ່, ຮ້ານຂາຍເຄື່ອງທີ່ລະນຶກ, ຫ້ອງນ້ຳ ແລະ ໜ່ວຍປະຖົມພະຍາບານເປັນຕົ້ນ. ສອບຖາມເພື່ອໃຫ້ຮູ້ວ່າ ສາມາດຢ້ຽມຢາມພ້ອມກັນໝົດ ຫຼື ຕ້ອງແບ່ງອອກເປັນຫຼາຍໜ່ວຍ.

ການກະກຽມຮ່າງ ຂອງກິດຈະກຳເພື່ອການສຶກສາທີ່ນັກຮຽນຕ້ອງຂຽນຕື່ມ ໃຫ້ຄົບຖ້ວນໃນເວລາຢ້ຽມຢາມ ແລະ ເຕົ້າໂຮມທຸກອຸປະກອນ ແລະ ເຄື່ອງໃຫ້ທີ່ຈຳເປັນສຳລັບການຢ້ຽມຢາມ ເຊັ່ນ: ເຈ້ຍຂຽນ, ເຈ້ຍແຕ້ມ, ກ້ອງຖ່າຍຮູບ ແລະ ສໍດຳ.

ຖ້າມີກ້ອງຖ່າຍວິດີໂອ, ກໍສາມາດອັດ-ຖ່າຍທຳວິດີໂອໃນລະຫວ່າງການຢ້ຽມຢາມ ແລ້ວນຳເອົາໄປສາຍໃຫ້ນັກຮຽນ, ພໍ່ແມ່ ແລະ ຜູ້ອື່ນໆເບິ່ງນຳ.

## ການຢ້ຽມຢາມສະຖານທີ່.

ໃນລະຫວ່າງທຳການຢ້ຽມຢາມພະຍາຍາມຄາດຄະເນກິດຈະກຳໄວ້ລ່ວງໜ້າຫຼາຍໆແບບ ຕົວຢ່າງ: ການແຕ້ມຮູບ ຫຼື ຖ່າຍຮູບ, ການສຳພາດ (ພະນັກງານນຳທ່ຽວ, ພະນັກງານປະຈຳສະຖານທີ່ ຫຼື ລະຫວ່າງນັກຮຽນຂອງເຂົາເຈົ້າເອງ), ນັກຮຽນແຕ່ລະຄົນຂຽນຂ່າວກ່ຽວກັບການຢ້ຽມຢາມ, ການອັດວິດີໂອ, ໃຫ້ມີການພັກຜ່ອນ ແລະ ການຫຼິ້ນຕ່າງໆ (ຍົກຕົວຢ່າງ, ຈັດການ, ຮ້ອງເອງ, ກິນອາຫານທ່ວາງ ຊຶ່ງກຽມໂດຍພໍ່ແມ່ນັກຮຽນ ຮ່ວມກັບພະນັກງານປະຈຳສະຖານທີ່.

ເອົາຂອງທີ່ລະນຶກໄປນຳ ແລະ ກ່ອນຈະກັບໃຫ້ນັກຮຽນມອບໃຫ້ຜູ້ຄຸ້ມຄອງສະຖານທີ່ ແລະ ສະແດງຄວາມຂອບໃຈ.

## ການຕິດຕາມຫຼັງການຢ້ຽມຢາມສະຖານທີ່.

ການຕິດຕາມຫຼັງການຢ້ຽມຢາມມີຄວາມສຳຄັນເທົ່າກັບການກະກຽມຍ້ອນວ່າມັນເຮັດໃຫ້ນັກຮຽນຊາບຊຶມປະສົບການທີ່ເຂົາເຈົ້າປະສົບ ແລະ ມີໂອກາດເພື່ອແລກປ່ຽນຄວາມຄິດຄວາມເຫັນຊຶ່ງກັນ ແລະ ກັນ. ຄູອາດປະຕິບັດດັ່ງນີ້:

- ສົນທະນາໃນສິ່ງທີ່ນັກຮຽນໄດ້ເຫັນ ໄດ້ຮູ້ ແລະ ໃນສິ່ງທີ່ເຂົາເຈົ້າມັກທີ່ສຸດ ແລະ ມັກໜ້ອຍກວ່າໝູ່;
- ສະເໜີໃຫ້ນັກຮຽນເຮັດໂຄງການຄົ້ນຄວ້າໃໝ່ ຕົວຢ່າງ: ວິທີປັບປຸງສະຖານທີ່ ເພື່ອຊຸກຍູ້ການທ່ອງທ່ຽວຄະນະດຽວກັນ ກຳທຳການປົກປັກຮັກສາສະຖານທີ່ນັ້ນ, ຊອກຮູ້ອັນຕະລາຍທີ່ຂົ່ມຂູ່ສະຖານທີ່ ແລະ ວິທີແກ້ໄຂ, ສະເໜີການປະກອບສ່ວນຂອງພະນັກງານນຳທ່ຽວໃໝ່ ເຂົ້າໃນການຄຸ້ມຄອງການທ່ອງທ່ຽວ.
- ແນະນຳນັກຮຽນໃຫ້ຂະຫຍາຍຮູບແຕ້ມ ຫຼື ຮູບຄວັດໃຫ້ໃຫຍ່ໂດຍອີງໃສ່ພາບຮ່າງຈຳລອງ ແລະ ຮູບແຕ້ມ ແລ້ວຈັດການວາງສະແດງຜົນງານຂອງເຂົາເຈົ້າ.
- ຊຸກຍູ້ນັກຮຽນໃຫ້ຂະຫຍາຍຮູບທີ່ເຂົາເຈົ້າຖ່າຍໃນເວລາຢ້ຽມຢາມແລ້ວຈັດການວາງສະແດງ ເພື່ອໃຫ້ນັກຮຽນ ຫຼື ພໍ່ແມ່ນັກຮຽນຄັດເລືອກຮູບພໍລະດົກທີ່ງາມກວ່າໝູ່ແລ້ວ; ມອບຂອງຂວັນໃຫ້ຜູ້ຊະນະເລີດ;
- ແນະນຳໃຫ້ນັກຮຽນຂຽນບົດຂ່າວກ່ຽວກັບການຢ້ຽມຢາມເພື່ອລົງໃນໜັງສືພິມຂອງໂຮງຮຽນ ແລະ/ຫຼື ໜັງສືພິມທ້ອງຖິ່ນ/ ໜັງສືພິມທົ່ວປະເທດ.
- ບອກໃຫ້ນັກຮຽນສະເໜີການຢ້ຽມຢາມສະຖານທີ່ໃໝ່.

## ຮ່າງກິດຈະກຳເພື່ອການສຶກສາ.

ຮ່າງເພື່ອໃຫ້ແຕ່ລະຄົນຕື່ມກ່ອນການຢ້ຽມຢາມ, ເວລາຢ້ຽມຢາມ ແລະ ຫຼັງການຢ້ຽມຢາມສະຖານທີ່ (ດີແທ້ຄວນແມ່ນສະຖານທີ່ມໍລະດົກໂລກ).

ຊື່ສະຖານທີ່:

ຊື່ ແລະ ນາມສະກຸນຂອງນັກຮຽນ:

ວັນຢ້ຽມຢາມສະຖານທີ່:

ກ່ອນການຢ້ຽມຢາມ:

ບັນທຶກສິ່ງທີ່ພວກເຈົ້າຢາກຮູ້ ແລະ ຢາກຮຽນໃນເວລາຢ້ຽມຢາມ.

## ເວລາຢ້ຽມຢາມ.

ແຕ້ມສ່ວນປະກອບ ຫຼື ພາກສ່ວນໃດໜຶ່ງຂອງສະຖານທີ່ ຊຶ່ງພວກເຈົ້າມີຄວາມຈັບອົກຈັບໃຈເປັນພິເສດ.

ບັນທຶກຂໍ້ມູນ ແລະ ຕົວເລກທີ່ພວກເຈົ້າຮຽນຮູ້ຢູ່ສະຖານທີ່:

ເລົ່າສິ່ງທີ່ພວກເຈົ້າໄດ້ສຳຜັດ: ຫລັບຕາແລ້ວເລົ່າສິ່ງທີ່ພວກເຈົ້າໄດ້ຍິນ, ສິ່ງທີ່ພວກເຈົ້າໄດ້ດົມກິ່ນ ແລະ ພັນລະນາເອກະລັກຂອງສະຖານທີ່ ຊຶ່ງພວກເຈົ້າມີຄວາມຈັບອົກຈັບໃຈກວ່າໝູ່:

ສຽງ:

ກິ່ນ:

ພາບ:

## ຫຼັງການຢ້ຽມຢາມ:

ການຢ້ຽມຢາມສະຖານທີ່ຕອບສະໜອງຄວາມຕ້ອງການຂອງພວກເຈົ້າບໍ່

☐ ຕອບສະໜອງ ☐ ບໍ່ຕອບສະໜອງ

ຈົ່ງອະທິບາຍສາເຫດ.

ຮ່າງກິດຈະກຳເພື່ອການສຶກສາ.

ເປັນຫຍັງພວກເຈົ້າຈຶ່ງຄິດວ່າສະຖານທີ່ນີ້ສຳຄັນ?

ຂໍ້ສັງເກດອື່ນໆ.

ລາຍເຊັນ.

ວັນທີ

## ການຢ້ຽມຢາມຫໍພິພິທະພັນ.

ການຢ້ຽມຢາມຫໍພິພິທະພັນແມ່ນກິດຈະກຳໜຶ່ງສຳຄັນ ຂອງການສຶກສາກ່ຽວກັບມໍລະດົກໂລກ, ສະນັ້ນ ພະນັກງານປະຈຳພິພິດທະພັນ ແລະ ສະມາຊິກຂອງສະພາພິພິທະພັນສາກົນຈຶ່ງແມ່ນເພື່ອນຮ່ວມງານທີ່ມີຄຸນຄ່າຂອງຄູ. ພິພິທະພັນສ່ວນຫຼາຍ ແມ່ນບ່ອນວາງສະແດງເຄື່ອງສາລະຄະດີດ້ານວັດທະນະທຳ ຫຼື ທຳມະຊາດແຫ່ງດຽວເທົ່ານັ້ນ ເພື່ອໃຫ້ເຮົາໄດ້ເບິ່ງ ແລະ ໄວ້ເປັນບ່ອນຄົ້ນຄວ້າ.

ສຳລັບໂຮງຮຽນທາກຢູ່ໄກຈາກພິພິທະພັນ, ສະຖານທີ່ຫ້ອງຖິ່ນອື່ນໆ, ຄົນຢູ່ໃນທ້ອງຖິ່ນ, ພໍ່ແມ່ ແລະ ປູ່ຍ່າຕາຍາຍ ມີບົດບາດໃນການບອກເລົ່າປະຫວັດ ແລະ ສ້າງສາຍກ່ຽວພັນລະຫວ່າງອະດີດ ເຖິງ ປັດຈຸບັນ.

## ການສົນທະນາໃນເວລາຢ້ຽມຢາມພິພິທະພັນ.

ນັກຮຽນບໍ່ສາມາດທ່ຽວຊົມ [ເພື່ອຊອກຮູ້ ແລະ ເຫັນຄຸນຄ່າຂອງໝົດທຸກຢ່າງໄດ້ໃນເທື່ອດຽວ] ຍ້ອນພິພິທະພັນບາງບ່ອນມີຄວາມໃຫຍ່ໂຕ ແລະ ມີເຄື່ອງ ວາງສະແດງເປັນພັນໆກວ່າຊະນິດ.. ສະນັ້ນ ຄູຈຶ່ງຈັດການຢ້ຽມຢາມຕາມຫົວເລື່ອງ ຫຼື ຫົວຂໍ້ໃດໜຶ່ງສະເພາະ ແລະ ກະກຽມໃຫ້ມີການບັນຍາຍພິເສດໃນລະຫວ່າງການຢ້ຽມຢາມພິພິທະພັນ (ເປັນຄົນທີ່ມີຄວາມຮູ້ຮອບດ້ານ ແລະ ໃຫ້ຄວາມບັນເທີງແກ່ຜູ້ອື່ນ).

## ການສຶກສາກ່ຽວກັບວັດຖຸວາງສະແດງໃດໜຶ່ງໃນພິພິທະພັນ

ກ່ອນໄປຢ້ຽມຢາມພິພິທະພັນ, ຄວນມອບວັດຖຸໃດໜຶ່ງໃຫ້ນັກຮຽນແຕ່ລະຄົນເພື່ອສັງເກດ ແລະ ສຶກສາຢ່າງເລິກເຊິ່ງ ໂດຍສະເພາະໃນເວລາຢ້ຽມຢາມ. ຢາຍຮ່າງກິດຈະກຳເພື່ອການສຶກສາ "ສຶກສາວັດຖຸຂອງພິພິທະພັນ" ໃຫ້ນັກຮຽນແຕ່ລະຄົນເພື່ອໃຫ້ເຂົາເຈົ້າມີຄວາມສະດວກໃນການປະຕິບັດຕາມໜ້າທີ່. ຫຼັງການຢ້ຽມຢາມ, ໃຫ້ນັກຮຽນສະເໜີຜົນການຄົ້ນຄວ້າຂອງເຂົາເຈົ້າໃນຫ້ອງຮຽນ.

## ຮ່າງກິດຈະກຳເພື່ອການສຶກສາ.

ຊີ້ແຈງວັດຖຸທີ່ສຶກສາໃນພິພິດທະພັນ.

| ສັງເກດລັກສະນະ | ຄຳຖາມ | ຂໍ້ສັງເກດ | ຂ່າວສານເພີ່ມເຕີມການຄົ້ນຄວ້າ |
|---|---|---|---|
| ເອກະລັກດ້ານຮູບຊົງ | • ວັດຖຸນັ້ນມີສີຫຍັງ?<br>• ມັນມີກິ່ນແນວໃດ?<br>• ມັນຄືກັບສິ່ງໃດ?<br>• ມັນເຮັດດ້ວຍອັນໃດ?<br>• ມັນເກີດໂດຍທຳມະຊາດ ຫຼື ຜະລິດຈາກໂຮງຊ່າງ?<br>• ມັນຄົບຖ້ວນບໍ່?<br>• ມັນຖືກປ່ຽນຮູບດັດແປງ ຫຼື ສ້ອມແປງຄືນ?<br>• ມັນຖືກໃຊ້ແລ້ວບໍ່? | | |
| ການຜະລິດ | • ມັນຖືກຜະລິດດ້ວຍມື ຫຼື ເຄື່ອງຈັກ?<br>• ມັນຖືກຫຼໍ່ ຫຼື ຜະລິດດ້ວຍວັດຖຸຫຼາຍຊິ້ນ?<br>• ມັນຖືກຕິດຕັ້ງຂຶ້ນມາດ້ວຍວິທີໃດ? | | |
| ໜ້າທີ່ | • ວັດຖຸນີ້ໄດ້ນຳໃຊ້ແບບໃດ?<br>• ໄດ້ປ່ຽນແປງການນຳໃຊ້ບໍ່? | | |
| ອອກແບບ | • ມັນຕອບສະໜອງການຊົມໃຊ້ຕາມວັດຖຸປະສົງບໍ່?<br>• ມັນແມ່ນເຄື່ອງປະດັບປະດາບໍ່?<br>• ມັນແມ່ນວັດຖຸທີ່ນຳໃຊ້ໄດ້ດີທີ່ສຸດບໍ່?<br>• ພວກເຈົ້າມັກຮູບຊົງໃນຂອງມັນບໍ່?<br>• ພວກເຈົ້າຊິອອກແບບມັນແນວໃດ? | | |
| ຄຸນຄ່າ | • ມັນມີຄຸນຄ່າແນວໃດ?<br>• ມັນມີຄຸນຄ່າຕໍ່ຜູ້ຜະລິດແນວໃດ?<br>• ມັນມີຄຸນຄ່າຕໍ່ຜູ້ຊົມໃຊ້ແນວໃດ?<br>• ມັນມີຄຸນຄ່າຕໍ່ຜູ້ປົກປັກຮັກສາແນວໃດ?<br>• ມັນມີຄຸນຄ່າຕໍ່ເຈົ້າແນວໃດ?<br>• ມັນມີຄຸນຄ່າຕໍ່ພິພິດທະພັນແນວໃດ?<br>• ມັນມີຄຸນຄ່າຕໍ່ຜູ້ສະສົມແນວໃດ? | | |

## ການຢັ້ງມຢາມໂຮງຊ່າງຫັດຖະກຳ.

ໃນປັດຈຸບັນວັດຖຸສະແດງ ຕົວຢ່າງ: ເຄື່ອງປັ້ນດິນເຜົາທີ່ພວກເຮົາເຫັນໃນພິພິດທະພັນໄດ້ຮັບການຜລິດຈາກຊ່າງຫັດຖະກຳ ຊຶ່ງໄດ້ຖ່າຍທອດວິຊາໃຫ້ກັນມາຫຼາຍທົດສະວັດ ຫຼື ຫຼາຍສະຕະວັດແລ້ວ. ເວລາຢັ້ງມຢາມໂຮງຊ່າງຫັດຖະກຳນັກຮຽນສາມາດຈັບບາຍສິ່ງຂອງແລະເບິ່ງວິທີການຜະລິດເຄື່ອງບູຮານ ທີ່ເຂົາເຈົ້າເຫັນໃນພິພິດທະພັນນັ້ນດ້ວຍຕາເຂົາເຈົ້າເອງ. ຈາກສິ່ງເຫຼົ່ານີ້ ເຂົາເຈົ້າສາມາດເຂົ້າໃຈສາຍກ່ຽວພັນລະຫວ່າງເອກະລັກຂອງເຂົາເຈົ້າ, ມໍລະດົກ (ນັບທັງມໍລະດົກໂລກ) ແລະ ຫັດຖະກຳທ້ອງຖິ່ນ.

## ການສະແດງລະຄອນຕາມບົດບາດສົມມຸດ.

ຄູທີ່ຊອກຫາວິທີເກັບກຳຄວາມສົນໃຈຂອງນັກຮຽນ ທີ່ສະໜັບສະໜູນການປົກປັກຮັກສາມໍລະດົກໂລກໄດ້ ເຫັນວ່າການສະແດງລະຄອນຕາມບົດບາດສົມມຸດ ແມ່ນມີປະໂຫຍດທີ່ສຸດ ຍ້ອນວ່າມັນຕອບສະໜອງທ້າວັດຖຸປະສົງດ້ານວິຊາຄູ ເຊັ່ນ:

- ສ້າງຈິດສຳນຶກທົ່ວເລື່ອງ.
- ຫຼື ເປັນຫົວຂໍ້ນາມມະທຳ ເຮັດໃຫ້ເຂົ້າໃຈໄດ້ງ່າຍກວ່າ.
- ມີຄວາມສາມາດໃໝ່ໃນການຄົ້ນຄວ້າ.
- ສ້າງທ່າທີ ແລະ ພັນທະໄວ້ຍາວນານ.
- ພັດທະນາການມີຫົວຄິດປະດິດສ້າງຂອງນັກຮຽນ.

## ການສະແດງລະຄອນຕາມບົດບາດສົມມຸດໃນຫ້ອງຮຽນ.

ການປົກປັກຮັກສາມໍລະດົກໂລກ ກວມເອົາສິ່ງທ້າທາຍຫຼາຍຢ່າງ ແລະ ຄຳຖາມທີ່ຊັບຊ້ອນ ເຊັ່ນ: ການຕົກລົງຮັບເອົາສະຖານທີ່ໃໝ່ເຂົ້າໃນບັນຊີມໍລະດົກໂລກ, ການເລືອກວັດຖຸ ແລະ ວິທີຕ່າງໆເຂົ້າໃນການປະຕິສັງຂອນ, ການບູລະນະພື້ນທີ່ (ການທຳລາຍເຮືອນເກົ່າແກ່, ການຂະຫຍາຍຕົວຂອງການທ່ອງທ່ຽວດ ການສ້າງຖະໜົນຫົນທາງໃໝ່ ແລະ ອື່ນໆ), ການປົກປັກຮັກສາ ແລະ ແຜນການ ການຄຸ້ມຄອງ, ການກວດກາສະຖານທີ່, ການປຸກລະດົມ ຫຼື ການໃຫ້ບຸລິມະສິດດ້ານການເງິນແກ່ສະຖານທີ່ໃດໜຶ່ງ.

ຈາກການສະແດງລະຄອນ ນັກຮຽນສາມາດເຂົ້າໃຈບັນຫາໄດ້ດີ ແລະ ມີວິທີຕັດສິນໃຈຖືກຕ້ອງ. ຄູຈັດນັກຮຽນເປັນຫຼາຍຈຸແລ້ວບອກເຂົາເຈົ້າໃຫ້ຄົ້ນຄິດເພື່ອກຳນົດທ່າທີຂອງຈຸ

ຫຼື ຕົວລະຄອນທີ່ເຂົາເຈົ້າຈະສະແດງ, ຊ່ວຍເຫຼືອເຂົາເຈົ້າດ້ວຍການແນະນຳສະຖານທີ່ ເພື່ອຊອກຫາຂ່າວສານ ແລະ ຂໍ້ມູນທີ່ຈຳເປັນສຳລັບເຂົາເຈົ້າ. ພ້ອມດຽວກັນນີ້ ຄູຕ້ອງກຽມໃບແນະນຳ ແຕ່ລະຂັ້ນຕອນໃຫ້ແຕ່ລະຈຸ. ແຕ່ລະຈຸຕ້ອງກຳນົດທ່າທີ ແລະ ເລືອກຜູ້ສະແດງທີ່ເປັນຕົວແທນເພື່ອປ້ອງກັນຜົນປະໂຫຍດຂອງເຂົາເຈົ້າ. ນັກຮຽນທີ່ເຫຼືອຈາກການສະແດງລະຄອນເປັນຜູ້ຕັດສິນ ຫຼື ຄະນະກຳມະການເພື່ອລົງມະຕິຕາມເຫດຜົນທີ່ໄດ້ຮັບຈາກນັກສະແດງ.

ເພື່ອເຮັດໃຫ້ນັກຮຽນເຂົ້າໃຈເຕັກນິກທັງໝົດ ຂອງການສະແດງ, ຕ້ອງຈັດເປັນຂັ້ນຕອນດັ່ງນີ້:

- ນິຍາມເນື້ອແທ້ຂອງບັນຫາທ້າທາຍທີ່ຍັງຜະເຊີນໜ້າກັບການປົກປັກຮັກສາມໍລະດົກໂລກ.
- ຕ່າງໜ້ານັກຮຽນຂອງແຕ່ລະຈຸສະເໜີທາງອອກທີ່ເປັນໄປໄດ້ກ່ຽວກັບການແກ້ໄຂບັນຫາທີ່ທ້າທາຍນັ້ນ.
- ນັກຮຽນຕີລາຄາຄຳຕອບທີ່ສະເໜີໄປນັ້ນ.
- ນັກຮຽນເລືອກເອົາຄຳຕອບດີເລີດຢ່າງມີປະຊາທິປະໄຕ.
- ນັກຮຽນຕົກລົງປະຕິບັດຄຳຕອບນັ້ນແບບໄວ.
- ນັກຮຽນປະເມີນຜົນສະທ້ອນຈາກການເລືອກຂອງເຂົາເຈົ້າ.

## ຟື້ນຟູປະຫວັດສາດດ້ວຍການສະແດງລະຄອນຢູ່ສະຖານທີ່ມໍລະດົກໂລກ.

ການສະແດງລະຄອນປະຫວັດສາດບົດໜຶ່ງຢູ່ສະຖານທີ່ມໍລະດົກໂລກ ເຮັດໃຫ້ນັກຮຽນຈື່ເຫດການໄວ້ໃນຄວາມຊົງຈຳຂອງເຂົາເຈົ້າ. ບົດລະຄອນທີ່ມີຊື່ສຽງຫຼາຍເລື່ອງໄດ້ນຳມາສະແດງຢູ່ສະຖານທີ່ມໍລະດົກໂລກ ເຊັ່ນ: ເລື່ອງ Hamlet ຂອງ Shakespeare ຢູ່ຄະລືຫາດ Kronborg ໃນປະເທດ Denmark ແລະເລື່ອງ Verdi ຢູ່ໂຮງລະຄອນ opèra Aida ຢູ່ Luxor ໃນປະເທດເອຢິບ. ນັກຮຽນໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດ ຂອງອຸຍແນດສະໂກ ຢູ່ເມືອງ (Split) ປະເທດໂກຣອາຊີ ຈັດສະແດງລະຄອນສາກໜຶ່ງ ທີ່ກ່ຽວພັນເຖິງຈັກກະພັດ Dioclétien ຂອງໂຣມັນ ຢູ່ໃນພະຣາຊະວັງຮ້າງຂອງເພິ່ນ.

## ການແກ້ໄຂ (ໄກ່ເກ່ຍ) ຂໍ້ຂັດແຍ່ງ ໂດຍສັນຕິວິທີ.

ການປົກປັກຮັກສາມໍລະດົກໂລກ ບາງເທື່ອເປັນຕົ້ນກຳເນີດຂອງຂໍ້ຂັດແຍ່ງຍ້ອນມີການທວງເອົາດິນແດນ, ສົງຄາມ ຫຼື ໂຄງການພັດທະນາ ຊຶ່ງຕ້ອງແກ້ໄຂດ້ວຍວິທີຖືກຕ້ອງ, ປະ

ດົດສ້າງ ແລະ ໂດຍສັນຕິ. ການສະແດງລະຄອນຕາມບົດບາດສົມມຸດມີປະໂຫຍດເພື່ອສ້າງເຂົາເຈົ້າໃຫ້ມີຄວາມສາມາດໃນການແກ້ໄຂຂໍ້ຂັດແຍ່ງໂດຍບໍ່ໃຊ້ຄວາມຮຸນແຮງ, ເຮັດໃຫ້ເຂົາເຈົ້າເບິ່ງບັນຫາໃນຫຼາຍແງ່ ແລະ ເຂົ້າໃຈຄວາມສຳຄັນ ແລະ ນຳໃຊ້ຄວາມເຫັນແບບປະນີປະນອມ ໃນການແກ້ບັນຫາ.

ຄູສາມາດຈັດສາກລະຄອນ ຕົວຢ່າງ ກ່ຽວກັບໂຄງການພັດທະນາທີ່ຂັດກັບການປົກປັກຮັກສາມໍລະດົກໂລກ. ສັບຊ້ອນນັກຮຽນເປັນຫຼາຍຈຸ ເພື່ອສະແດງບົດບາດໃດໜຶ່ງ ເຊັ່ນ: ຜູ້ສົ່ງເສີມໂຄງການ, ຜູ້ຮັກສາສະຖານທີ່, ຜູ້ອະນຸລັກມໍລະດົກ, ອຳນາດການປົກຄອງເມືອງ, ກຳມະກອນກໍ່ສ້າງ ຫຼື ນັກທ່ອງທ່ຽວເປັນຕົ້ນ. ຄູຢາຍເຈ້ຍລາຍຊື່ຕົວລະຄອນໃຫ້ແຕ່ລະຈຸເພື່ອຊ່ວຍເຂົາເຈົ້າໃນການກະກຽມເພື່ອເຈລະຈາກັນ ຈົນກ້າວໄປເຖິງ ການບັນລຸຂໍ້ຕົກລົງທີ່ທຸກຄົນພໍໃຈ ແລະ ບໍ່ມີບັນຫາອື່ນຕາມພາຍຫຼັງ.

ການສະແດງລະຄອນກ່ຽວກັບການແກ້ໄຂຂໍ້ຂັດແຍ່ງໃນການອະນຸລັກມໍລະດົກໂລກໂດຍສັນຕິວິທີ ຕ້ອງປະຕິບັດຕາມຈິດໃຈດັ່ງນີ້:

1. ເນັ້ນຄວາມສຳຄັນຂອງບັນຫາກວ່າຜູ້ສະແດງ.
2. ພະຍາຍາມປັບຕົວເຂົ້າຢູ່ໃນສະຖານະການຂອງຝ່າຍກົງກັນຂ້າມ ແລະ ບໍ່ຄວນລືມວ່າຈຸໜຶ່ງສາມາດປ້ອງກັນຫຼາຍສິດຜົນປະໂຫຍດ.
3. ປ່ອຍໃຫ້ຝ່າຍກົງກັນຂ້າມສະແດງຄວາມຄິດຄວາມເຫັນຢ່າງເສລີ ແລະ ຕັ້ງໃຈຟັງເຂົາເຈົ້າ.
4. ພະຍາຍາມເຂົ້າໃຈ ແລະ ຮູ້ຈັກເຫດຜົນຕົ້ນຕໍ (ສຳຄັນ) ຂອງເຂົາເຈົ້າ.
5. ຕັ້ງຄຳຖາມແບບເລິກເຊິ່ງ (ເຈາະຈີ້ມ) ແທນທີ່ຈະຖາມແບບກວມລວມຟ້າວຟັ່ງ.
6. ຕ້ອງເຊື່ອໝັ້ນວ່າຝ່າຍກົງກັນຂ້າມເຂົ້າໃຈສິ່ງທີ່ຕົນເອງເວົ້າ.
7. ບໍ່ຄວນແກ່ຍາວນຳຂໍ້ປຶກຍ່ອຍ.
8. ຖ້າເປັນໄປໄດ້ ຊອກຫາຄຳຕອບທີ່ເຮັດໃຫ້ໝົດທຸກຈຸເພິ່ງພໍໃຈ ຍ້ອນວ່າຈຸດປະສົງແມ່ນຊອກຫາຄຳຕອບທີ່ເໝາະສົມ.
9. ບໍ່ຄວນນາບຂູ່ຝ່າຍກົງກັນຂ້າມ.
10. ບໍ່ຄວນຍອມແພ້ ຍ້ອນຖືກກົດດັນ.
11. ຕ້ອງມີຄວາມເຫັນໂດດເດັ່ນ ແລະ ສ້າງສັນ.
12. ຕ້ອງແກ້ໄຂຂໍ້ຂັດແຍ່ງເທື່ອລະກ້າວໂດຍເລີ່ມຕົ້ນຈາກຄຳຖາມທີ່ແຫຼມຄົມກວ່າໝູ່.
13. ຕ້ອງຮ່ວມມືກັນ ເພື່ອຫຼີກເວັ້ນຂໍ້ຂັດແຍ່ງໃໝ່.
14. ຕ້ອງມີມາດຕະການເພື່ອແກ້ໄຂຂໍ້ຂັດແຍ່ງໃໝ່ທີ່ອາດຈະເກີດຂຶ້ນໃນອະນາຄົດ

ຄູຄວນຢູ່ເບື້ອງຫຼັງສາກ ເພື່ອສັງເກດການ ແຕ່ກຽມພ້ອມເພື່ອໃຫ້ຄຳແນະນຳຖ້າເຂົາເຈົ້າຂໍຮ້ອງ.

## ການນຳໃຊ້ລະບົບເຄືອຂ່າຍຂອງໂລກ ແລະ ອິນເຕີແນັດ.

ປັດຈຸບັນພວກເຮົາພວມດຳລົງຊີວິດໃນຍຸກການຂະຫຍາຍຕົວຢ່າງວ່ອງໄວຂອງວຽກງານຂ່າວສານ. ຜ່ານອິນເຕີແນັດ ພວກເຮົາສາມາດເຂົ້າເຖິງຫໍສະໝຸດ, ສູນຂໍ້ມູນ, ເອກະສານ, ແຈ້ງຂ່າວພະຍາກອນອາກາດ, ເຄື່ອງບໍລິໂພກ ແລະ ອຸປະໂພກທີ່ຢູ່ແຈກຢາຍທົ່ວທຸກມູມໂລກ. ສະນັ້ນ ຂ່າວສານ ແລະ ຂໍ້ມູນຈຶ່ງເປັນປັດໃຈອັນສຳຄັນສຳລັບການສຶກສາມໍລະດົກໂລກ ແລະ ການຄົ້ນຄວ້າ, ເຕັກໂນໂລຢີໃໝ່ ຕອບສະໜອງຄວາມຕື່ນເຕັ້ນໃຫ້ຄູ ແລະ ນັກຮຽນ ເພື່ອຊອກຮູ້ຄຸນຄ່າໃນສະຖານທີ່ມໍລະດົກໂລກ ແລະ ເຂົ້າໃຈບັນຫາການອະນຸລັກດີຂຶ້ນຕື່ມ.

ຢ່າງໃດກໍດີ, ອິນເຕີແນັດ ຍັງບໍ່ທັນຕອບສະໜອງໃຫ້ທຸກໆຄົນ, ໃນທຸກຂົງເຂດຂອງໂລກ ແລະ ສ່ວນຫຼາຍກໍຍັງບໍ່ມີເງື່ອນໄຂທີ່ຈະຊື້ໄດ້. ແນວໃດກໍຕາມ ເມື່ອລາຄາຄອມພິວເຕີ ຫຼຸດລົງ ແລະ ຖືກວ່າການບໍລິການດ້ານໂທລະຄົມມະນາຄົມທີ່ມີຢູ່ອ້ອມໂລກນີ້, ຈຳນວນຜູ້ຊົມໃຊ້ກໍຈະເພີ່ມຂຶ້ນ ແລະ ຂະຫຍາຍກວ້າງອອກໄປ.

## ການເຂົ້າເຖິງລະບົບເຄືອຂ່າຍຂອງໂລກ.

ຈາກໂຄງການຂອງອຸຍແນດສະໂກ ວ່າດ້ວຍການສຶກສາຂອງຊາວໜຸ່ມ ກ່ຽວກັບມໍລະດົກໂລກອຳນວຍໃຫ້ໂຮງຮຽນເຂົ້າເປັນພາກສ່ວນຂອງເຄືອຂ່າຍຂອງໂລກ ຊຶ່ງກວມເອົາໂຮງຮຽນມັດທະຍົມທຸກຮູບແບບຢູ່ໃນໂລກ. ດ້ານສຳຄັນຂອງໂຄງການ ແມ່ນພ້ອມກັນຮຽນ ແລະ ແລກປ່ຽນປະສົບການຊຶ່ງກັນ ແລະ ກັນເພື່ອພັດທະນາໃໝ່ ແລະ ເພື່ອມີປະສິດທິພາບບັນຈຸມໍລະດົກໂລກເຂົ້າໃນຫຼັກສູດການຮຽນ.

ໂຮງຮຽນທີ່ເຂົ້າຮ່ວມໂຄງການນີ້ສ່ວນຫຼາຍ ເປັນສະມາຊິກຂອງລະບົບໂຮງຮຽນເພື່ອຄວາມເຂົ້າໃຈອັນດີ ລະຫວ່າງຊາດຂອງອຸຍແນດສະໂກ ຊຶ່ງມີໜ້າທີ່ສົ່ງເສີມການສຶກສາທີ່ເນັ້ນຄຸນຄ່າຂອງຄົນ, ວັດທະນະທຳ ແລະ ລັກສະນະສາກົນດ້ວຍການປະຕິບັດໂຄງການຕົວແບບ ເຊັ່ນ: ໂຄງການການສຶກສາຂອງຊາວໜຸ່ມກ່ຽວກັບມໍລະດົກໂລກ ຊຶ່ງນຳພາຜ່ານ ASP net ຮ່ວມກັບສູນກາງມໍລະດົກໂລກຂອງອຸຍແນດສະໂກ. ສະມາຊິກໂຮງຮຽນ ASP net ສ້າງສາຍພົວພັນ ແລກປ່ຽນຢູ່ເລື້ອຍໆ ບໍ່ພຽງແຕ່ດ້ານປະສົບການ ແຕ່ບາງຄັ້ງຄາວ ຍັງຊ່ວຍເຫຼືອກັນ ດ້ານຊັບພະຍາກອນອີກດ້ວຍ.

ວັດຖຸປະສົງຕົ້ນຕໍອື່ນ ຂອງການສ້າງຕັ້ງລະບົບເຄືອຂ່າຍ ແມ່ນເຕົ້າໂຮມນັກຮຽນ ແລະ ຄູໃນພາກພື້ນຕ່າງໆຂອງໂລກ. ສະນັ້ນ ອຸຍແນດສະໂກ ຈຶ່ງໄດ້ຈັດກອງປະຊຸມຊາວໜຸ່ມ

ວ່າດ້ວຍ ມໍລະດົກໂລກ, ກອງປະຊຸມຝຶກອົບຮົມຄູ ລະດັບຊາດ ແລະ ລະດັບພາກພື້ນ. ນອກນີ້ ຍັງໄດ້ສົ່ງເສີມປະເທດສະມາຊິກໃຫ້ຈັດການຝຶກອົບຮົມຄູ ເຊັ່ນ: ກອງປະຊຸມມໍລະດົກໂລກ ລະດັບຊາດ ສໍາລັບພາຍຄູ.

ໃນເດືອນສິງຫາ 1997/1998 ໃນເມືອງບໍ່ແຮ່ໂຣຣົສ ຂອງປະເທດນອກແວ ທີ່ເປັນມໍລະດົກໂລກ. ແຕ່ວັນທີ 5 ຫາວັນທີ 14 ສິງຫາ 1997 ກອງປະຊຸມ ຝຶກອົບຮົມກ່ຽວກັບການປະຕິສັງຂອນມໍລະດົກໂລກສໍາລັບຊາວໜຸ່ມເອີຣົບກໍໄດ້ຈັດຢູ່ເມືອງນີ້.

ແນ່ນອນ ການເຕົ້າໂຮມນັກຮຽນ ແລະ ຄູຈາກຫຼາຍປະເທດມາປະຊຸມມັນສຸດທີ່ຈະຈ່າຍຄ່າແພງ. ແຕ່ຍ້ອນມີການນໍາໃຊ້ເຕັກໂນໂລຊີໃໝ່ ເຊັ່ນ: ອິນເຕີແນັດ ຈຶ່ງພິສູດໃຫ້ເຫັນວ່າເປັນພາຫານະທີ່ມີປະສິດທິພາບໃນການເຮັດໃຫ້ຄົນຮູ້ຈັກກັນ, ຕິດຕໍ່ພົວພັນ ແລະ ແລກປ່ຽນຄວາມຄິດຄວາມເຫັນຊຶ່ງກັນແລະກັນເປັນປົກກະຕິ.

ເພື່ອເຮັດໃຫ້ວຽກງານຂອງລະບົບເຄືອຂ່າຍມີປະສິດທິພາບ ຕ້ອງມີຄູ່ຮ່ວມງານເຂັ້ມແຂງ ແລະມີການສະໜອງຂ່າວສານໃຫ້ກັນຢູ່ເລື້ອຍໆ. ສະນັ້ນ ອຸຍແນດສະໂກຈຶ່ງຖ່າຍທອດຂ່າວ ໂຄງການການສຶກສາຂອງຊາວໜຸ່ມ ກ່ຽວກັບມໍລະດົກໂລກທາງອິນເຕີແນັດ ຫຼື ໜັງສືພິມຕ່າງໆເປັນປົກກະຕິ.

## ນໍາໃຊ້ອິນເຕີແນັດເພື່ອສົ່ງເສີມການສຶກສາກ່ຽວກັບມໍລະດົກໂລກ

ຍ້ອນເຕັກໂນໂລຊີໃໝ່ຂອງສື່ສານພວກເຮົາສາມາດຮັບຂ່າວສານດ້ວຍພາຫະນະທັນສະໃໝທີ່ພວກເຮົາບໍ່ເຄີຍມີມາກ່ອນ. ສິ່ງທ້າທ້າຍສໍາລັບຊາວໜຸ່ມໃນປັດຈຸບັນ ແມ່ນການຮູ້ຈັກຄຸ້ມຄອງຂ່າວສານ ແລະ ຂໍ້ມູນທີ່ໄດ້ຮັບ ແລະ ນໍາໃຊ້ຢ່າງຖືກຕ້ອງ. ເຂົາເຈົ້າຕ້ອງຮູ້ສິ່ງທີ່ເຂົາເຈົ້າຕ້ອງການຊອກຫາ, ວິທີ ແລະ ຢູ່ໃສ່.

## ລະບົບເຄືອຂ່າຍອິນເຕີແນັດ

ອິນເຕີແນັດ ແມ່ນລະບົບເຄືອຂ່າຍການແລກປ່ຽນຂ່າວສານຕາມສັນຍາຮ່ວມ ຫຼື ສູນກາງສື່ສານ.

ນອກຈາກເປັນພາຫະນະໃໝ່ຂອງການແລກປ່ຽນ ແລະ ກະຈາຍຂ່າວສານແລ້ວ, ອິນເຕີແນັດຍັງແມ່ນເຄື່ອງມືເພື່ອກວດເບິ່ງຖານຂໍ້ມູນ, ໜັງສືພິມເອເລັກໂຕຣນິກ, ບັນນານຸກົມ ແລະ ຊັອບແວຕື່ມອີກ.

ລະບົບເຄືອຂ່າຍອິນເຕີແນັດຂະຫຍາຍຕົວໄວຈົນບໍ່ສາມາດຄາດຄະເນໄວ້ລ່ວງໜ້າໄດ້. ເວບໄຊໃໝ່ເພີ່ມຂຶ້ນໃນແຕ່ລະມື້. ໃນປີ 1995 ມີຜູ້ໃຊ້ອິນເຕີແນັດ 56 ລ້ານຄົນ. ໃນປີ 2000 ຄາດຄະເນຕົວເລກ ຜູ້ໃຊ້ອິນເຕີແນດ ຈະຮອດ 2 ຕື້ຄົນ.

## ຈົດໝາຍເອເລັກໂຕຣນິກ (ອີແມວ).

ຈົດໝາຍເອເລັກໂຕຣນິກ ແມ່ນວິທີສື່ສານດ້ວຍຄອມພິວເຕີ. ເນື້ອໃນຂອງຈົດໝາຍທີ່ຕີພິມເຂົ້າໃສ່ຄອມພິວເຕີ ຈະສົ່ງເຖິງໜ່ວຍອື່ນໃນເຄືອຂ່າຍທາງເອເລັກໂຕຣນິກ ໂດຍມີໂມແດມ (modem), ໂທລະສັບ ຫຼື ສາຍສົ່ງອື່ນເປັນພາຫະນະ.

ສະຖາບັນການສຶກສາທີ່ມີຄອມພິວເຕີຊະນິດໃດກໍຕາມ, ມີໂມແດມ ແລະ ສາຍສົ່ງໂທລະສັບສາມາດຕິດຕໍ່ກັບພາກສ່ວນອື່ນດ້ວຍຈົດໝາຍເອເລັກໂຕຣນິກ (ອີແມວ) ແລະ ກໍກາຍມາເປັນພາກສ່ວນເຄືອຂ່າຍໃໝ່ຂອງການສື່ສານ.

ການຕິດຕໍ່ພົວພັນດ້ວຍຈົດໝາຍເອເລັກໂຕຣນິກ ຕົວຢ່າງ ກັບພະແນກຂ່າວສານຂອງສູນກາງມໍລະດົກໂລກ WHNEWS ຂອງອຸຍແນດສະໂກ ຫຼື ວາລະສານມໍລະດົກໂລກ La lettre du patrimorine mondial ມີຄວາມສະດວກສະບາຍ.

ພ້ອມນີ້ ການຕິດຕໍ່ພົວພັນດ້ວຍຈົດໝາຍເອເລັກໂຕຣນິກ ຍັງສາມາດໃຫ້ເຂົ້າເຖິງຂ່າວສານດ້ວຍການເຊື່ອມກັບລະບົບເຄືອຂ່າຍສື່ມວນຊົນໂລກ (World Wide Web).

## ລະບົບເຄືອຂ່າຍສື່ມວນຊົນໂລກ (World Wide Web)

ເວັບໄຊ ແມ່ນໜຶ່ງໃນຫຼາຍອຸປະກອນທີ່ໃຊ້ລະບົບອິນເຕີແນັດ ເພື່ອສະໜອງຂ່າວສານໃຫ້ທົ່ວໂລກ. ຜູ້ຊົມໃຊ້ຖອດເອົາບົດທີ່ປະກົດຢູ່ໃນໜ້າຈໍຄອມພິວເຕີ ຄືດັ່ງກະດານຂ່າວ.

ເວັບໄຊປະກອບດ້ວຍຫຼາຍໜ້າ ໂດຍທົ່ວໄປແລ້ວ ແຕ່ລະໜ້າບັນຈຸຂໍ້ຄວາມ ຫຼື ຄຳສັບເດັ່ນທີ່ນຳເຂົ້າສູ່ຂ່າວສານໃນຫົວເລື່ອງຕ່າງໆ ເຊັ່ນ: ເອກະສານ, ອົງການຈັດຕັ້ງ ແລະອື່ນໆທີ່ບັນຈຸໃນເວັບໄຊອື່ນ.

ບາງເວບໄຊບັນຈຸຂ່າວສານເປັນບົດຢ່າງດຽວ ແຕ່ເວັບໄຊອື່ນມີຮູບປະກອບ, . ຄຳເວົ້າ ຫຼື ດົນຕີປະກອບ.

ຖານເວັບໄຊ ປະກອບດ້ວຍເວັບໄຊຂອງການຈັດຕັ້ງ, ອົງການ, ບຸກຄົນ, ໂຮງຮຽນ ແລະອື່ນໆ.

ປັດຈຸບັນເວັບໄຊ ປະກອບດ້ວຍ 30 ຫາ 50 ລ້ານໜ້າ ແລະໃນແຕ່ລະເດືອນຈະເພີ່ມຂຶ້ນ 20%.

## ອິນເຕີແນັດ ໃຊ້ໄວ້ເຮັດຫຍັງ?

ລະບົບເຄືອຂ່າຍອິນເຕີແນັດ ເປັນບ່ອນສະໜອງຂ່າວສານຕ່າງໆ ໃຫ້ແກ່ຄູ ແລະ ນັກຮຽນ ແລະ ເປັນພາຫະນະເພື່ອຕິດຕໍ່ໂດຍກົງກັບຄູ, ນັກຮຽນ ແລະໂຮງຮຽນໃນທົ່ວໂລກ. ເພື່ອໃຫ້ນັກຮຽນມີເງື່ອນໄຂຊົມໃຊ້ຊັບພະຍາກອນຂອງເຄືອຂ່າຍອັນກວ້າງຂວາງນີ້, ຄວນປະກອບອຸປະກອນ ແລະສອນນັກຮຽນໃຫ້ມີຄວາມຮູ້ພື້ນຖານຂອງການນຳໃຊ້.

**ການນຳໃຊ້ອິນເຕີແນັດມີຜົນດີດັ່ງນີ້:**

- ນັກຮຽນມີຄວາມຮູ້ພື້ນຖານກ່ຽວກັບໜ້າທີ່ສຳຄັນຂອງລະບົບເຄືອຂ່າຍ.
- ນັກຮຽນຮູ້ນຳໃຊ້ຄອມພິວເຕີ ເພື່ອຄົ້ນຄວ້າກ່ຽວກັບມໍລະດົກໂລກ.
- ເຂົ້າເຖິງລະບົບຂ່າວສານ, ໜັງສືພິມເອເລັກໂຕຣນິກ, ຊອບແວ ແລະ ພາຫະນະການແລກປ່ຽນຂ່າວສານອື່ນໆເພື່ອຮັບເອົາຂໍ້ມູນໃນຫົວເລື່ອງຕ່າງໆຂອງມໍລະດົກໂລກ.
- ສົ່ງເສີມການຮຽນດ້ວຍການແລກປ່ຽນວັດທະນະທຳຍ້ອນວ່ານັກຮຽນສາມາດຕິດຕໍ່ພົວພັນກັບໝູ່ເພື່ອນໃນພູມິພາກຕ່າງໆຂອງໂລກ.
- ຊຸກຍູ້ນັກຮຽນໃຫ້ນຳໃຊ້ຄອມພິວເຕີ ເພື່ອແກ້ບັນຫາສະເພາະໃດໜຶ່ງ.

ນັກຮຽນສາມາດນຳໃຊ້ເວັບໄຊ ແລະຈົດໝາຍເອເລັກໂຕຣນິກເພື່ອແນະນຳຕົນເອງກັບຊາວໜຸ່ມໃນຂົງເຂດຫ່າງໄກໃຫ້ຮູ້ຈັກວັດທະນະທຳ, ຮີດຄອງປະເພນີ, ຄ່ານິຍົມ ແລະ ມໍລະດົກຂອງເຂົາເຈົ້າ. ຢາກຮູ້ຈັກຊົນຊາດອື່ນພ້ອມດ້ວຍວັດທະນະທຳ, ອະລິຍະທຳ ແລະ ມໍລະດົກຂອງເຂົາເຈົ້າ, ນັກຮຽນສາມາດຕິດຕໍ່ພົວພັນໂດຍບໍ່ຈຳເປັນອອກຈາກຫ້ອງຮຽນກໍໄດ້. ອຸປະກອນເຫຼົ່ານີ້ ສ້າງເງື່ອນໄຂໃຫ້ໂຮງຮຽນໃນຂົງເຂດຕ່າງໆຂອງໂລກຮ່ວມກັນປະຕິບັດໂຄງການປົກປັກຮັກສາມໍລະດົກຂອງມວນມະນຸດທີ່ຈະຖືກທຳລາຍດ້ວຍມົນພາວະ, ການພັດທະນາຕົວເມືອງ, ສົງຄາມ ຫຼື ຄວາມບໍ່ເອົາໃຈໃສ່.

**ກິດຈະກຳ.**

1. ເປີດເວັບໄຊມໍລະດົກໂລກຂອງອຸຍແນດສະໂກເພື່ອກວດເບິ່ງວ່າອົງການໄດ້ເຮັດຫຍັງແດ່ ເພື່ອປົກປັກຮັກສາມໍລະດົກໂລກ.

2. ກວດເບິ່ງເວັບໄຊຂອງລະບົບເຄືອຂ່າຍໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດເພື່ອຊອກຮູ້ໂຮງຮຽນທີ່ມີຜົນງານໃນການປົກປັກຮັກສາມໍລະດົກໂລກ.
3. ສ້າງໂຄງການການສຶກສາກ່ຽວກັບມໍລະດົກໂລກ ຕົວຢ່າງ ເພື່ອສົມທຽບການທ່ອງທ່ຽວໃນສະຖານທີ່ມໍລະດົກໂລກຢູ່ສອງປະເທດ.
4. ເຮັດລາຍການການຮຽນການສອນກ່ຽວກັບມໍລະດົກໂລກທີ່ຢູ່ໃນບັນຊີມໍລະດົກໂລກເພື່ອແລກປ່ຽນກັບໂຮງຮຽນຂອງຫຼາຍປະເທດ.
5. ແຕ້ມຮູບກາຕູນເພື່ອເລົ່າເລື່ອງການຢ້ຽມຢາມສະຖານທີ່ມໍລະດົກໂລກໃນປະເທດຂອງທູດແຫ່ງມໍລະດົກໂລກແລ້ວສົ່ງໃຫ້ໂຮງຮຽນອື່ນ.
6. ກວດເບິ່ງຫໍສະໝຸດມະຫາວິທະຍາໄລຕ່າງປະເທດ ເພື່ອກຽມບັນນານຸກົມກ່ຽວກັບສະຖານທີ່ມໍລະດົກໂລກສະເພາະ.
7. ຂໍບໍລິຈາກແຫຼ່ງທຶນເພື່ອປະກອບອຸປະກອນໃຫ້ໂຮງຮຽນທີ່ຕ້ອງການຮຽນກ່ຽວກັບມໍລະດົກໂລກທາງອິນເຕີແນັດ ແຕ່ຍັງຂາດອຸປະກອນ.
8. ສ້າງເວັບໄຊຂອງໂຮງຮຽນ ແລະ ໂຄງການທີ່ກ່ຽວຂ້ອງກັບມໍລະດົກໂລກ.
9. ຕິດຕໍ່ກັບຄູຢູ່ຕ່າງປະເທດດ້ວຍເຄືອຂ່າຍອິນເຕີແນັດ ເພື່ອສົນທະນາການຮຽນການສອນກ່ຽວກັບມໍລະດົກໂລກ.
10. ສັ່ງຈອງວາລະສານ La lettre du patrimoine mondial ທາງອິນເຕີແນັດ WHNEWS ຕິດຕໍ່ພົວພັນກັບລະບົບໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດ.

ໃນກອງປະຊຸມຊາວໜຸ່ມເອີຣົບຄັ້ງທີ 1 ກ່ຽວກັບມໍລະດົກໂລກ ຢູ່ ດູໂບຼນິກ (Dubronik) ປະເທດໂກຼອາຊີ ຊາວໜຸ່ມໄດ້ມີໂອກາດນຳໃຊ້ອິນເຕີແນັດເພື່ອຕິດຕໍ່ພົວພັນກັບຊາວໜຸ່ມ ແລະ ຊ່ຽວຊານດ້ານມໍລະດົກໃນທົ່ວໂລກ. ສານທີ່ເຂົາໄດ້ຮັບຂຽນມາດັ່ງລຸ່ມນີ້:

ພວກເຮົາຫວັງວ່າກອງປະຊຸມຂອງພວກເຈົ້າຄົງມີສິ່ງທີ່ເປັນໜ້າສົນໃຈ. ພວກເຈົ້າມີຄວາມຮູ້ສຶກຄືກັບ ຢູ່ແບກເກນບໍ່? ພວກເຈົ້າເຮັດກິດຈະກຳຫຍັງແດ່? ພວກເຈົ້າໄດ້ຢ້ຽມຢາມຕົວເມືອງບໍ່? ມັນຍັງບໍ່ທັນໄດ້ຮັບການປັບແປງຄືນແລ້ວເບາະ? ນັກຮຽນມີຄວາມຮູ້ສຶກແນວໃດກັບແຜນໂຄສະນາຂອງພວກເຮົາ?

**ຈາກນັກຮຽນຝຣັ່ງທີ່ເຂົ້າຮ່ວມກອງປະຊຸມຊາວໜຸ່ມທີ່ແບກເກນ**

ໂຮງຮຽນ 101 ໃນລະບົບເຄືອຂ່າຍຂອງໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດຢູ່ເຢຍລະມັນ ຂໍອວຍພອນໃຫ້ກອງປະຊຸມຈົ່ງປະສົບຜົນສຳເລັດ ແລະ ໃຫ້ໝາກຜົນທີ່ປະກອບສ່ວນເຂົ້າໃນການສົ່ງເສີມການສຶກສາ ກ່ຽວກັບມໍລະດົກໂລກ. ພວກເຮົາພວມກະກຽມກິດຈະກຳສຳລັບການສຶກສາ ກ່ຽວກັບມໍລະດົກ ໃນໂອກາດກອງປະຊຸມປະຈຳປີ ຂອງໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດທີ່ຈະໄຂຂຶ້ນໃນເດືອນກັນຍານີ້ ແລະ ພວກເຮົາຫວັງວ່າພວກ

ເຈົ້າຄຶງສິ່ງບາງຂໍ້ມູນ ກ່ຽວກັບກອງປະຊຸມສິ່ງທີ່ພວກເຈົ້າໄດ້ເຮັດມາໃນເວລານັ້ນ ໃຫ້ພວກເຮົາຮູ້ນຳ. ຜູ້ປະສານງານຂອງລະບົບໂຮງຮຽນ ເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດທີ່ເຢຍລະມັນ.

## ເມື່ອນັກຮຽນຖືກຖາມເຖິງຄວາມເຫັນກ່ຽວກັບ ອິນເຕີແນັດ, ເຂົາເຈົ້າຕອບວ່າ:

ຂ້ອຍສົນໃຈຄອມພິວເຕີ ແລະຂ້ອຍເຫັນວ່າອິນເຕີແນັດໃຫ້ຄວາມສົນໃຈກວ່າ ຍ້ອນວ່າຂ້ອຍບໍ່ໄດ້ໃຊ້ມັນມາກ່ອນ... ແລະ ຂ້ອຍສາມາດຮັບຂ່າວສານກ່ຽວກັບມໍລະດົກໂລກໃນເອີຣົບໄດ້.
**ນັກຮຽນສະຫະພາບລາຊະອານາຈັກ.**

ຂ້ອຍມັກໃຊ້ຄອມພິວເຕີເພາະວ່າຂ້ອຍສາມາດຮັບຂ່າວສານຫຼາຍຢ່າງ.ຈັ່ງແມ່ນຂ້ອຍມ່ວນຊື່ນກັບສິ່ງເຫຼົ່ານີ້.
**ນັກຮຽນລັດເວັຍ.**

## ມໍລະດົກໂລກໃນອິນເຕີແນັດ.

ສູນກາງມໍລະດົກໂລກຂອງອຸຍແນດສະໂກສະໜອງຂ່າວສານກ່ຽວກັບສົນທິສັນຍາວ່າດ້ວຍມໍລະດົກໂລກ ແລະ ສະຖານທີ່ມໍລະດົກໂລກຢູ່ອິນເຕີແນັດ. ເວັບໄຊປະກອບດ້ວຍສອງພັນກວ່າໜ້າທີ່ສັບຊ້ອນເປັນຫ້າໝວດພ້ອມດ້ວຍຮູບປະກອບເພື່ອແຈ້ງຂ່າວກ່ຽວກັບການພິມຈຳໜ່າຍ ແລະ ໂຄງການທີ່ພວມປະຕິບັດຢູ່ ເຊັ່ນ:

- ມໍລະດົກໂລກ
- ການດຳເນີນງານ
- ບັນຊີລາຍຊື່
- ຂ່າວສານ
- ເນື້ອຫາ

## ຂ່າວສານກ່ຽວກັບມໍລະດົກໂລກ (WHIN)

ສູນຂ່າວສານກ່ຽວກັບມໍລະດົກໂລກ (WHIN) ແມ່ນການຮ່ວມງານລະຫວ່າງສູນກາງມໍລະດົກໂລກຂອງອຸຍແນດສະໂກ ແລະ ອົງການຈັດຕັ້ງຕ່າງໆທີ່ເຮັດວຽກປົກປັກຮັກສາມໍລະດົກໂລກ. ຈາກການປະສານງານກັບສູນກາງໂລກ ເພື່ອການອະນຸລັກຕໍ່ເນື່ອງ (WCMC), ສູນຂ່າວສານກ່ຽວກັບມໍລະດົກໂລກ (WHIN) ໄດ້ມີເຄື່ອງມືເພື່ອຄົ້ນຄວ້າຫາຂ່າວສານສຳຄັນກ່ຽວ

ກັບມໍລະດົກໂລກໃນເວັບໄຊຕ່າງໆ. ຢາກຮັບເອົາຂ່າວສານລະອຽດໃຫ້ກວດໃນເວັບໄຊຕາມທີ່ຢູ່ເອເລັກໂຕຣນິກ ດັ່ງນີ້: whin@unesco.org

## ລະບົບໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດໃນອິນເຕີແນັດ.

ເວັບໄຊຂອງລະບົບໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດຂອງອຸຍແນດ ສະໂກສະໜອງຂ່າວສານທົ່ວໄປ, ວັດຖຸປະສົງ, ຈຳນວນໂຮງຮຽນທີ່ເປັນສະມາຊິກ ແລະ ປະເທດ, ໂຄງການເຮືອທຸງ, ເອກະສານ, ປື້ມ ແລະ ຄູ່ມືການປະຕິບັດໜ້າທີ່ຂອງ ASP net ແລະ ໜັງສື. ຢາກຮັບເອົາຂ່າວສານລະອຽດ ໃຫ້ຊຸບຈົດໝາຍຕາມທີ່ຢູ່ ເອເລັກໂຕຣນິກ ດັ່ງນີ້: aspnet@unesco. Org

### ທີ່ຢູ່ສຳຄັນໃນອິນເຕີແນັດ.

ຂ່າວສານຂອງລະບົບໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດ
http://www.education.unesco.org/educprog/asp
ຂ່າວສານການສຶກສາຂອງອຸຍແນດສະໂກ
http://www.education.unesco.org
ສູນກາງມໍລະດົກໂລກຂອງອຸຍແນດສະໂກ
http://www.unesco.org/whc/e-mail: wh.info@unesco.org
ອົງການອະນຸລັກທຳມະຊາດໂລກ (IUCN)
http://www.iucn.org
ສະພາພິພິດທະພັນໂລກ (ICOM)
http://www.icom.org
ສະພາອະນຸສາວະລີ ແລະບູຮານສະຖານໂລກ (ICOMOS)
http://www.icomos.org
ສູນກາງການຄົ້ນຄວ້າສາກົນເພື່ອການອະນຸລັກ ແລະ ການປະຕິສັງຂອນວັດຖຸວັດທະນະທຳ (ICCROM)
http://www.iccrom.org
ສູນເອກະສານກ່ຽວກັບການອະນຸລັກມໍລະດົກໃນອິນເຕີແນັດ
http://www.cr.nps.gov/ncptt/irg
ອົງການຕົວເມືອງມໍລະດົກໂລກ (OWHC)
http://www.ovpm.org

# ສົນທິສັນຍາວ່າດ້ວຍມໍລະດົກໂລກ

« ການຂຸດໂຊມ ແລະ ການຫາຍສາບສູນຂອງມໍລະດົກວັດທະນະທຳ ແລະ ທຳມະຊາດສ້າງຄວາມທຸກຈົນອັນຮ້າຍແຮງຕໍ່ມໍລະດົກຂອງບັນດາປະຊາຊາດໃນທົ່ວໂລກ»

ອະລຳພະບົດຂອງສົນທິສັນຍາວ່າດ້ວຍມໍລະດົກໂລກ

# ສົນທິສັນຍາວ່າດ້ວຍມໍລະດົກໂລກ


## ວັດຖຸປະສົງ 29

ດ້ານຄວາມຮູ້

ດ້ານທ່າທີ

ດ້ານຄວາມສາມາດ

## ສ້າງຈິດສຳນຶກກ່ຽວກັບມໍລະດົກໂລກ 30

ມໍລະດົກໂລກແມ່ນຫຍັງ?

ກິດຈະກຳທີ 2 ສຳລັບນັກຮຽນ: ຄວາມໝາຍຂອງມໍລະດົກໂລກ 31

ການຟື້ນຟູມໍລະດົກຂອງພວກເຮົາທີ່ພວມຈະຫາຍສາບສູນ 31

## ຊ່ວຍກອບກູ້ມໍລະດົກໂລກ 32

ໄຊຊະນະຂອງຂະບວນການອາບູຊິມແບວ 33

ກິດຈະກຳທີ 3 ສຳລັບນັກຮຽນ: ເຈັດສິ່ງມະຫັດສະຈັນຂອງໂລກ 34

ໂຄງການຮ່າງສົນທິສັນຍາເພື່ອຊ່ວຍກູ້ມໍລະດົກໂລກຂອງພວກເຮົາ 35

ກິດຈະກຳທີ 4 ສຳລັບນັກຮຽນ: 35

ນິຍາມຂອງມໍລະດົກໂລກ ແລະ ການອະນຸລັກ

## ສົນທິສັນຍາວ່າດ້ວຍມໍລະດົກໂລກ 36

ສົນທິສັນຍາວ່າດ້ວຍມໍລະດົກໂລກ

ກິດຈະກຳທີ 5 ສຳລັບນັກຮຽນ: 37

ການອະນຸລັກມໍລະດົກ: ກົດໝາຍແຫ່ງຊາດ ແລະ ສາກົນ

ທຳມະຊາດ ແລະ ວັດທະນະທຳຕິດພັນກັນຢ່າງສະໜິດແໜ້ນ 37

ມໍລະດົກວັດທະນະທຳ ແລະ ທຳມະຊາດ 38

ທິວທັດວັດທະນະທຳ

ຂະບວນວິວັດຂອງການອະນຸລັກມໍລະດົກໂລກ 38

ບັນຊີລາຍຊື່ມໍລະດົກໂລກ: 39

ສະຖານທີ່ອັນຊົງຄຸນຄ່າພິເສດລະດັບໂລກ

ຍຸດທະສາດລວມເພື່ອໃຫ້ບັນຊີລາຍຊື່ມໍລະດົກໂລກ

ມີລັກສະນະຕົວແທນ ແລະ ສົມສ່ວນ

ກິດຈະກຳທີ 6 ສຳລັບນັກຮຽນ: 41
ຮູບຈຳລອງຂະໜາດນ້ອຍສະຖານທີ່ມໍລະດົກໂລກ
**ກິດຈະກຳທີ 7 ສຳລັບນັກຮຽນ :** 41
**ການກຳນົດສະຖານທີ່ມໍລະດົກໂລກໃນທ້ອງຖິ່ນຂອງຕົນ**
ກິດຈະກຳເພື່ອການສຶກສາ: 42
ການກຳນົດສະຖານທີ່ມໍລະດົກໂລກໃນທ້ອງຖິ່ນຂອງຕົນ

## ມາດຖານການຄັດເລືອກສະຖານທີ່ມໍລະດົກໂລກ 42

ມາດຖານການຄັດເລືອກສະຖານທີ່ມໍລະດົກໂລກ 43
ດ້ານວັດທະນະທຳ
ມາດຖານການຄັດເລືອກສະຖານທີ່ມໍລະດົກໂລກ 44
ດ້ານທຳມະຊາດ
ມາດຖານການຄັດເລືອກສະຖານທີ່ປະສົມຂອງມໍລະດົກໂລກ 44
ການປະຕິບັດຕາມາດຖານ
ກິດຈະກຳທີ 8 ສຳລັບນັກຮຽນ: 45
ຊອກທີ່ຕັ້ງສະຖານທີ່ຂອງມໍລະດົກໂລກ
ກິດຈະກຳເພື່ອການສຶກສາ: 47
ຊອກທີ່ຕັ້ງສະຖານທີ່ຂອງມໍລະດົກໂລກ
ກິດຈະກຳທີ 9 ສຳລັບນັກຮຽນ: 48
ຄວາມເຂົ້າໃຈກ່ຽວກັບມາດຖານຂອງມໍລະດົກໂລກ
ຮ່າງກິດຈະກຳເພື່ອການສຶກສາ: 49-50-51
ຄວາມເຂົ້າໃຈກ່ຽວກັບມາດຖານຂອງມໍລະດົກໂລກ
ກິດຈະກຳທີ 10 ສຳລັບນັກຮຽນ: 52
ການສະເໜີຂຶ້ນທະບຽນສະຖານທີ່ວັດທະນະທຳ
ແລະ ທຳມະຊາດ
ຮ່າງກິດຈະກຳເພື່ອການສຶກສາ: 54
ການສະເໜີຂຶ້ນທະບຽນສະຖານທີ່ວັດທະນະທຳ
ແລະ ທຳມະຊາດ

**ຄະນະກຳມະການມໍລະດົກໂລກ ແລະ ສູນກາງມໍລະດົກໂລກອຸຍແນດສະໂກ** 55

ກິດຈະກຳທີ 11 ສຳລັບນັກຮຽນ: ກອງປະຊຸມຄະນະກຳມະການມໍລະດົກແຫ່ງຊາດ 56
ກິດຈະກຳທີ 12 ສຳລັບນັກຮຽນ: ສູນກາງປະຫວັດສາດຂອງຊັງຕາ ກະຣຸດເຊີ ຢູ່ເມືອງມົມປອກເຊີ ປະເທດໂກລົມບີ 57

**ການຕິດຕາມສະພາບການປົກປັກຮັກສາສະຖານທີ່ມໍລະດົກໂລກ** 61

ບັນຊີລາຍຊື່ມໍລະດົກໂລກໃນຂັ້ນອັນຕະລາຍ 61
ກິດຈະກຳທີ 13 ສຳລັບນັກຮຽນ: ອຸທະຍານແຫ່ງຊາດແຢນໂລສະໂຕນ, ສະຫະລັດອາເມລິກາ 64
ກິດຈະກຳທີ 14 ສຳລັບນັກຮຽນ: ສ້າງລາຍການວິທະຍຸກ່ຽວກັບມໍລະດົກໂລກ ກອງທຶນມໍລະດົກໂລກ 68
ກິດຈະກຳທີ 15 ສຳລັບນັກຮຽນ: ການປູກລະດົມ 70

**ສົນທິສັນຍາມໍລະດົກໂລກຕາມຫຼັກສູດຂອງລາຍວິຊາ** 70

# ວັດຖຸປະສົງ:

## ດ້ານຄວາມຮູ້:

ເຮັດໃຫ້ນັກຮຽນຮູ້ຈັກແລະເຂົ້າໃຈ:

- ຄວາມໝາຍຂອງມໍລະດົກ ແລະ ມໍລະດົກໂລກ
- ໄພອັນຕະລາຍທີ່ຂົ່ມຂູ່ມໍລະດົກໂລກ
- ຄວາມສຳຄັນຂອງສົນທິສັນຍາວ່າດ້ວຍມໍລະດົກໂລກ
- ມາດຖານເພື່ອຮັບຮອງເປັນມໍລະດົກໂລກ
- ກົນໄກພື້ນຖານຂອງການອະນຸລັກມໍລະດົກໂລກ

## ດ້ານທ່າທີ:

ຊຸກຍູ້ນັກຮຽນໃຫ້:

- ປຸກລະດົມກັນເພື່ອປົກປັກຮັກສາມໍລະດົກທ້ອງຖິ່ນ
- ເຄົາລົບ ແລະ ໃຫ້ຄຸນຄ່າສະຖານທີ່ມໍລະດົກໂລກ
- ສ້າງຈິດສຳນຶກ ແລະ ສົນໃຈກັບວັດທະນະທຳອື່ນ
- ເຄົາລົບຄວາມແຕກຕ່າງດ້ານວັດທະນະທຳ ແລະ ທຳມະຊາດ

## ດ້ານຄວາມສາມາດ:

ຊ່ວຍນັກຮຽນໃຫ້ພັດທະນາຄວາມຊຳນິຊຳນານໃນການ:

- ຕັດສິນບັນຫາດ້ວຍຄວາມຮັບຜິດຊອບ ເພື່ອປົກປັກຮັກສາມໍລະດົກທ້ອງຖິ່ນ ແລະ ມໍລະດົກໂລກ.
- ສະເໜີຄຳເຫັນ ແລະ ປະກອບສ່ວນໃນການແກ້ໄຂບັນຫາທີ່ກ່ຽວພັນກັບມໍລະດົກ.
- ເຂົ້າຮ່ວມການອະນຸລັກມໍລະດົກ.
- ນຳພາການຄົ້ນຄວ້າ ແລະ ນຳໃຊ້ເຕັກນິກການວິເຄາະເພື່ອເຂົ້າໃຈມໍລະດົກໂລກຢ່າງເລິກເຊິ່ງ.

2. ກວດເບິ່ງເວັບໄຊຂອງລະບົບເຄືອຂ່າຍໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດເພື່ອຊອກຮູ້ໂຮງຮຽນທີ່ມີຜົນງານໃນການປົກປັກຮັກສາມໍລະດົກໂລກ.
3. ສ້າງໂຄງການການສຶກສາກ່ຽວກັບມໍລະດົກໂລກ ຕົວຢ່າງ ເພື່ອສົມທຽບການທ່ອງທ່ຽວໃນສະຖານທີ່ມໍລະດົກໂລກຢູ່ສອງປະເທດ.
4. ເຮັດລາຍການການຮຽນການສອນກ່ຽວກັບມໍລະດົກໂລກທີ່ຢູ່ໃນບັນຊີມໍລະດົກໂລກເພື່ອແລກປ່ຽນກັບໂຮງຮຽນຂອງຫຼາຍປະເທດ.
5. ແຕ້ມຮູບກາຕູນເພື່ອເລົ່າເລື່ອງການຢ້ຽມຢາມສະຖານທີ່ມໍລະດົກໂລກໃນປະເທດຂອງທູດແຫ່ງມໍລະດົກໂລກແລ້ວສົ່ງໃຫ້ໂຮງຮຽນອື່ນ.
6. ກວດເບິ່ງຫໍສະໝຸດມະຫາວິທະຍາໄລຕ່າງປະເທດ ເພື່ອກຽມບັນນານຸກົມກ່ຽວກັບສະຖານທີ່ມໍລະດົກໂລກສະເພາະ.
7. ຊອກຂວາຍແຫຼ່ງທຶນເພື່ອປະກອບອຸປະກອນໃຫ້ໂຮງຮຽນທີ່ຕ້ອງການຮຽນກ່ຽວກັບມໍລະດົກໂລກທາງອິນເຕີແນັດ ແຕ່ຍັງຂາດອຸປະກອນ.
8. ສ້າງເວັບໄຊຂອງໂຮງຮຽນ ແລະ ໂຄງການທີ່ກ່ຽວຂ້ອງກັບມໍລະດົກໂລກ.
9. ຕິດຕໍ່ກັບຄູຢູ່ຕ່າງປະເທດດ້ວຍເຄືອຂ່າຍອິນເຕີແນັດ ເພື່ອສົນທະນາການຮຽນການສອນກ່ຽວກັບມໍລະດົກໂລກ.
10. ສັ່ງຈອງວາລະສານ La lettre du patrimoine mondial ທາງອິນເຕີແນັດ WHNEWS ຕິດຕໍ່ພົວພັນກັບລະບົບໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດ.

ໃນກອງປະຊຸມຊາວໜຸ່ມເອີຣົບຄັ້ງທີ 1 ກ່ຽວກັບມໍລະດົກໂລກ ຢູ່ ດູໂບນິກ (Dubronik) ປະເທດໂກຼອາຊີ ຊາວໜຸ່ມໄດ້ມີໂອກາດນຳໃຊ້ອິນເຕີແນັດເພື່ອຕິດຕໍ່ພົວພັນກັບຊາວໜຸ່ມ ແລະ ຊ່ຽວຊານດ້ານມໍລະດົກໃນທົ່ວໂລກ. ສານທີ່ເຂົາໄດ້ຮັບຂຽນມາດັ່ງລຸ່ມນີ້:

ພວກເຮົາຫວັງວ່າກອງປະຊຸມຂອງພວກເຈົ້າຄົງມີສິ່ງທີ່ເປັນໜ້າສົນໃຈ. ພວກເຈົ້າມີຄວາມຮູ້ສຶກຄືກັບ ຢູ່ແບກເກນບໍ່? ພວກເຈົ້າເຮັດກິດຈະກຳຫຍັງແດ່? ພວກເຈົ້າໄດ້ຢ້ຽມຢາມຕົວເມືອງບໍ່? ມັນຍັງບໍ່ທັນໄດ້ຮັບການປົວແປງຄືນແລ້ວເບາະ? ນັກຮຽນມີຄວາມຮູ້ສຶກແນວໃດກັບແຜນໂຄສະນາຂອງພວກເຮົາ?

**ຈາກນັກຮຽນຝຣັ່ງທີ່ເຂົ້າຮ່ວມກອງປະຊຸມຊາວໜຸ່ມທີ່ແບກເກນ**

ໂຮງຮຽນ 101 ໃນລະບົບເຄືອຂ່າຍຂອງໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດຢູ່ເຢຍລະມັນ ຂໍອວຍພອນໃຫ້ກອງປະຊຸມຈົ່ງປະສົບຜົນສຳເລັດ ແລະ ໃຫ້ໝາກຜົນທີ່ປະກອບສ່ວນເຂົ້າໃນການສົ່ງເສີມການສຶກສາ ກ່ຽວກັບມໍລະດົກໂລກ. ພວກເຮົາພວມກະກຽມກິດຈະກຳສຳລັບການສຶກສາ ກ່ຽວກັບມໍລະດົກ ໃນໂອກາດກອງປະຊຸມປະຈຳປີ ຂອງໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດທີ່ຈະໄຂຂຶ້ນໃນເດືອນກັນຍານີ້ ແລະ ພວກເຮົາຫວັງວ່າພວກ

## ສ້າງຈິດສຳນຶກກ່ຽວກັບມໍລະດົກຂອງພວກເຮົາ.

### ມໍລະດົກແມ່ນຫຍັງ?

ຕາມຄວາມສຳນຶກໂດຍທົ່ວໄປຂອງພວກເຮົາ, ມໍລະດົກແມ່ນສິ່ງສືບທອດມາແຕ່ອະດີດ ແລະ ປັດຈຸບັນ ພວກເຮົາໄດ້ເພິ່ງພາອາໄສເພື່ອດຳລົງຊີວິດ. ມັນແມ່ນບໍ່ເກີດຂອງການຄົ້ນຄິດ, ຄວາມມ່ວນຊື່ນ ແລະ ຄວາມພໍໃຈທີ່ພວກເຮົາຈະຖ່າຍທອດໃຫ້ຮຸ່ນຄົນຕໍ່ໆໄປ.

**ຕາມວັດຈະນານຸກົມ ມໍລະດົກແມ່ນທຸກສິ່ງທີ່ສືບທອດຈາກຄົນຮຸ່ນກ່ອນ.**

ມໍລະດົກ:

1. ສິ່ງທີ່ໄດ້ມາ ຫຼື ມອບໃຫ້ຕາມການສືບແທນ
2. ພຶດຕິກຳຂອງການສືບທອດ, ສິ່ງທີ່ສືບທອດ
3. ສິ່ງທີ່ໄດ້ຮັບໂດຍບັງເອີນ ຕາມວິທີການສືບທອດ
4. ກອງມໍລະດົກ ຫຼື ສ່ວນແບ່ງ.

ມໍລະດົກສາມາດກວມເອົາສະຖານທີ່ ແລະ ສິ່ງຂອງທີ່ພວກເຮົາຕ້ອງການອະນຸລັກ. ໃນນີ້ ແມ່ນສິ່ງຂອງ ແລະ ສະຖານທີ່ວັດທະນະທຳ ແລະ ທຳມະຊາດທີ່ຕິດພັນກັບພວກເຮົາ ຍ້ອນວ່າມັນແມ່ນສິ່ງສືບທອດມາແຕ່ປູ່ ຍ່າ ຕາ ຍາຍ, ສວຍສົດງົດງາມ ມີຄວາມສຳຄັນໃນທັດສະນະວິທະຍາສາດ ແລະ ຍ້ອນວ່າມັນເປັນຕົວຢ່າງ ແລະ ເປັນບໍ່ເກີດຂອງສິ່ງທີ່ມີຊີວິດ ແລະ ການຄົ້ນຄິດທີ່ບໍ່ສາມາດປ່ຽນແທນໄດ້. ສິ່ງເຫຼົ່ານີ້ ເປັນສັນຍາລັກ, ບ່ອນອ້າງອີງ ແລະ ເອກະລັກຂອງພວກເຮົາ. ມໍລະດົກສ່ອງແສງການດຳລົງຊີວິດໃນສະໄໝດຶກດຳບັນ ແລະ ຈະຖືກດັບສູນ ຖ້າພວກເຮົາບໍ່ອອກແຮງອະນຸລັກມັນຢ່າງຕັ້ງໜ້າ.

ພວກເຮົາສາມາດວາດພາບບ່ອນຢູ່ຂອງພວກເຮົາທີ່ບໍ່ມີມໍລະດົກບໍ່? ຕົວຢ່າງຄິດຫາສະຖານທີ່ຊື່ງນັກຮຽນ ແລະ ຄູເອງອາໄສຢູ່. ສິ່ງໃດເປັນຕົວແທນຂອງອະດີດ, ປັດຈຸບັນ ແລະ ອະນາຄົດ? ຕ້ອງປົກປັກຮັກສາສິ່ງໃດ? ມີສິ່ງໃດທີ່ປ່ຽນແທນໄດ້? ມີສິ່ງໃດທີ່ປ່ຽນແທນບໍ່ໄດ້?

ມໍລະດົກຂອງມວນມະນຸດ ໝາຍເຖິງວັດທະນະທຳ ແລະ ທຳມະຊາດ. ຢູ່ທ້ອງຖິ່ນຂອງພວກເຮົາ ບາງທີພວກເຮົາເຄີຍໄດ້ຍິນເພິ່ນເວົ້າເຖິງບູຮານສະຖານ, ຮູບແຕ້ມໃນຖ້ຳ, ໂບດ, ສະຖານທີ່ສັກສິດ ຫຼື ສາສະໜາສະຖານ ແລະ ເມືອງປະຫວັດສາດ. ສິ່ງເຫຼົ່ານີ້ ແມ່ນ<u>**ມໍລະດົກວັດທະນະທຳ**</u>.ຖ້າແມ່ນແຄມປ່າ ຫຼື ຝັ່ງທະເລ ທີ່ສວຍສົດງົດງາມ ເພິ່ນເອີ້ນວ່າ <u>**ມໍລະດົກທຳມະຊາດ**</u>. ມໍລະດົກປະເພດນີ້ ປະກອບດ້ວຍອະສັງຫາລິມະຊັບ. ສິ່ງຂອງທີ່ເປັນມໍລະດົກ ເຊັ່ນ: ເງິນຫຼຽນເກົ່າ, ຕົວຢ່າງຂອງຕະກູນພືດ, ຮູບແຕ້ມ ຫຼື ວັດຖຸບູຮານ ເອີ້ນວ່າສັງຫາລິມະຊັບ.

## ກິດຈະກຳ ທີ 2 ສຳລັບນັກຮຽນ

## ຄວາມໝາຍຂອງມໍລະດົກ.

ວັດຖຸປະສົງ: ເຂົ້າໃຈຄວາມໝາຍ, ຄຸນຄ່າ ແລະ ປະເພດຂອງມໍລະດົກ.

ມໍລະດົກທີ່ເປັນສັງຫາລິມະຊັບ.

- ເອົາເຄື່ອງບູຮານທີ່ລູຮູ້ຄຸນຄ່າ ແລະ ຊິ້ນຊິມຊຶ່ງສືບທອດມາຈາກຕະກຸນຄອບຄົວ ເຊັ່ນ: ຮູບແຕ້ມ, ເຄື່ອງເອ້, ຜ້າພິມ ຫຼື ເຄື່ອງປັ້ນດິນເຜົາໃຫ້ນັກຮຽນເບິ່ງ. ອະທິບາຍເພື່ອໃຫ້ເຂົາເຈົ້າເຂົ້າໃຈຄວາມໝາຍຂອງສັງຫາລິມະຊັບດ້ວຍການແນະນຳວັດຖຸດິບທີ່ນຳມາຜະລິດ ແລະ ຄວາມສະດວກສະບາຍໃນການເຄື່ອນຍ້າຍ. ຖາມເຂົາເຈົ້າວ່າແມ່ນມໍລະດົກວັດທະນະທຳ ຫຼື ທຳມະຊາດ.
- ຄຳຖາມເພື່ອການສົນທະນາ.
  - ອັນນີ້ແມ່ນຫຍັງ?
  - ເປັນຫຍັງມັນຈຶ່ງມີຄຸນຄ່າ ແລະ ດ້ວຍສາເຫດໃດພວກເຈົ້າຈຶ່ງຢາກອະນຸລັກມັນ?
  - ຖ້າພວກເຈົ້າຢາກຮັກສາສິ່ງນີ້ໄວ້ໃຫ້ລູກໃຫ້ຫຼານພວກເຈົ້າຕ້ອງເຮັດຫຍັງເພື່ອປົກປັກຮັກສາມັນ?
  - ບອກນັກຮຽນໃຫ້ເອົາເຄື່ອງບູຮານທີ່ເຂົາເຈົ້າມັກມາໂຮງຮຽນເພື່ອສ້າງເປັນພິພິດທະພັນຊົ່ວຄາວແລ້ວຈັດການສົນທະນາກ່ຽວກັບວັດຖຸທີ່ນຳມາສະແດງ. ຕັ້ງຄຳຖາມເຈາະຈີ້ມຄຸນຄ່າຂອງວັດຖຸເພື່ອໃຫ້ນັກຮຽນຢາກປົກປັກຮັກສາສິ່ງເຫຼົ່ານັ້ນໄວ້ໃຫ້ຮຸ່ນຄົນຕໍ່ໄປ.
- ອະທິບາຍໃຫ້ນັກຮຽນຮູ້ວ່າ ອຸຍແນດສະໂກ ຄຸ້ມຄອງສົນທິສັນຍາສາກົນວ່າດ້ວຍການປົກປັກຮັກສາມໍລະດົກວັດທະນະທຳທີ່ເປັນສັງຫາລິມະຊັບ (ສົນທິສັນຍາ 14 ພະຈິກ 1970 ວ່າດ້ວຍມາດຕະການເພື່ອເກືອດຫ້າມ ແລະ ສະກັດກັ້ນການຂາເຂົ້າ ແລະ ອອກ, ການມອບໂອນຊັບສິນດ້ານວັດທະນະທຳທີ່ບໍ່ຖືກກົດໝາຍ).

**ມໍລະດົກທີ່ເປັນອະສັງຫາລິມະຊັບ:**

- ອະທິບາຍໃຫ້ນັກຮຽນຮູ້ວ່າສະຖານທີ່ຊຶ່ງຂຶ້ນທະບຽນເປັນມໍລະດົກໂລກຂອງອຸຍແນດສະໂກລ້ວນແຕ່ແມ່ນຊັບສິນທີ່ເປັນອະສັງຫາລິມະຊັບ ໝາຍຄວາມວ່າ ຊັບສິນທີ່ບໍ່ສາມາດເຄື່ອນຍ້າຍໄດ້ຢ່າງສະດວກສະບາຍ. ເອົາຮູບໃຫ້ເຂົາເຈົ້າເບິ່ງ 2-3 ແຜ່ນ ເພື່ອເປັນຕົວຢ່າງ.
- ຄຳຖາມເພື່ອການສົນທະນາ.
  - ບອກນັກຮຽນໃຫ້ຄົ້ນຄິດກ່ຽວກັບສະຖານໃນປະເທດ ຫຼື ຕ່າງປະເທດທີ່ຊຶ່ງເຂົາເຈົ້າໄດ້ເຫັນຫຼື ໄດ້ຮຽນຜ່ານມາແລ້ວສະເໜີຂ່າວສານ ແລະ ຄວາມໝາຍ ຕົວຢ່າງ ເອກະລັກດ້ານສະຖານປັດຕະຍະກຳ, ຕະກູນຂອງສັດ ແລະ ພືດທີ່ຫາຍາກ.
  - ບອກນັກຮຽນໃຫ້ຄິດຫາສະຖານທີ່ທຳມະຊາດໃນທ້ອງຖິ່ນ ຂອງເຂົາເຈົ້າຊຶ່ງຢາກຮັກສາເປັນເຂດຫວງຫ້າມ ແລະ ປົກປັກຮັກສາໃນອະນາຄົດ. ສະເໜີເຂົາເຈົ້າໃຫ້ບອກເຫດຜົນຂອງການຢາກອະນຸລັກພ້ອມທັງອະທິບາຍ.

## ການຟື້ນຟູມໍລະດົກຂອງພວກເຮົາທີ່ພວມຈະຫາຍສາບສູນ.

ມໍລະດົກວັດທະນະທຳ ແລະ ທຳມະຊາດອ່ອນໄຫວ ແລະ ຖືກຂົ່ມຂູ່ຢ່າງໜັກໜ່ວງ ໂດຍສະເພາະໃນຮ້ອຍປີຜ່ານມານີ້. ເມືອງ ແລະ ບ້ານເກົ່າແກ່ຖືກທຳລາຍເປັນຈຳນວນຫຼາຍໃນສະໄໝສົງຄາມໂລກຄັ້ງທີໜຶ່ງ ແລະຄັ້ງທີສອງ. ອານຸສາວະລີ ວັດທະນະທຳທີ່ສຳຄັນຫຼາຍແຫ່ງຖືກເປເພ ຫຼື ຖືກທຳລາຍກ້ຽງ. ນອກນີ້ ມໍລະດົກຂອງພວກເຮົາຍັງຖືກເສຍຫາຍຈາກການຂະຫຍາຍຕົວເມືອງ, ຄວາມອຶດຢາກ, ໄພພິບັດທຳມະຊາດ ແລະ ສະພາບແວດລ້ອມເປັນພິດ, ການຂະຫຍາຍຕົວຂອງການທ່ອງທ່ຽວເປັນໝູ່ຄະນະໃຫຍ່ອາດເຮັດໃຫ້ສະຖານທີ່ ແລະ ອານຸສາວະລີຫຼາຍແຫ່ງຊຸດໂຊມອັນຕະລາຍ ໃນການຟື້ນຟູມໍລະດົກສ່ວນໜຶ່ງມາຈາກຄວາມບໍ່ເອົາໃຈໃສ່ ຂອງປະຊາກອນໂລກ.

ຕໍ່ໜ້າຄວາມເສຍຫາຍຂອງມໍລະດົກ ໃນໄລຍະສົງຄາມໂລກຄັ້ງທີໜຶ່ງ ແລະ ຄັ້ງທີສອງ, ສະມາຄົມປະຊາຊາດທີ່ເປັນຕົ້ນກຳເນີດຂອງອົງການສະຫະປະຊາຊາດໄດ້ເລີ່ມຕົ້ນຄິດຫາວິທີປົກປັກຮັກສາໂດຍໄດ້ຮຽກຮ້ອງໃຫ້ທຸກປະເທດໃນໂລກຈົ່ງພ້ອມກັນອອກແຮງເພື່ອອະນຸລັກມໍລະດົກຂອງຕົນໄວ້.

ນັບແຕ່ການສ້າງຕັ້ງ ອົງການສະຫະປະຊາຊາດເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳໃນປີ 1945 ຄືຫຼັງສົງຄາມໂລກຄັ້ງທີສອງເປັນຕົ້ນມາ ອົງການໄດ້ໃຫ້ຄວາມສຳຄັນແກ່ວຽກງານດັ່ງກ່າວຕື່ມອີກ ໂດຍໄດ້ປຸກລະດົມການອະນຸລັກສະຖານທີ່ສຳຄັນ ແລະ ການຜັນຂະຫຍາຍຄຳຮຽກຮ້ອງ ແລະ ສົນທິສັນຍາສາກົນ ວ່າດ້ວຍການປົກປັກຮັກສາມໍລະດົກວັດທະນະທຳໃນຍາມສົງຄາມ ຄື: ສົນທິສັນຍາວ່າດ້ວຍການປົກປັກຮັກສາວັດຖຸວັດທະນະທຳໃນກໍລະນີການຕໍ່ສູ້ກັນດ້ວຍກຳລັງອາວຸດ ຊຶ່ງມີຊື່ທີ່ຮູ້ຈັກດີວ່າສົນທິສັນຍາລາໄຮ 1954.

## ຊ່ວຍກູ້ມໍລະດົກໂລກ.

ການຕັດສິນໃຈສ້າງເຂື່ອນໄຟຟ້າ ອັດຊວນ (*Aswan*) ຢູ່ປະເທດເອຢິບໄດ້ຊັກຈູງໃຫ້ອົງການອຸຍແນດສະໂກຈັດຕັ້ງຂະບວນການສາກົນເພື່ອອະນຸລັກສະຖານທີ່ສຳຄັນຂອງມໍລະດົກໂລກຂຶ້ນໃນປີ 1950. ການກໍ່ສ້າງເຂື່ອນນີ້ ສາມາດເຮັດໃຫ້ນ້ຳຖ້ວມຮ່ອມແມ່ນ້ຳນິນ ແລະ ໂບດອາບູ ຊິມແບວ ຊຶ່ງແມ່ນຄັງອະລິຍະທຳສະໄໝບູຮານອັນສຳຄັນຂອງປະເທດເອຢິບ. ເຫດການດັ່ງກ່າວໄດ້ສ້າງຂະບວນການສາກົນ ແລະ ປຸກລະດົມແນວຄິດສາທາລະນະຊົນ ເພື່ອໃຫ້ມີມາດຕະການຈຳເປັນຮີບດ່ວນ ແລະ ປະສານງານກັນຢ່າງແໜ້ນແຟ້ນໃນການປົກປັກຮັກສາມໍລະດົກໂລກ. ຕອບສະໜອງຕາມຄຳຮຽກຮ້ອງຂອງລັດຖະບານເອຢິບ ແລະ ຊູດັງ, ອຸຍແນດສະໂກ ໄດ້

ສ້າງຂະບວນການສາກົນໃນປີ 1959 ເພື່ອປົກປັກຮັກສາໂບດອາບູຊິມແບວ. ໃນໄລຍະສິບແປດປີ ຂອງຂະບວນການປົກປັກຮັກສາມໍລະດົກນີ້, ຫ້າສິບກວ່າປະເທດໄດ້ໃຫ້ການຊ່ວຍເຫຼືອອຸຍແບດສະໂກ 80 ລ້ານໂດລາສະຫະລັດ. ໃນການທົດສອບກຳລັງຢ່າງແທ້ຈິງນີ້, ເພິ່ນໄດ້ມ້າງໂບດທີ່ຢູ່ດອນຟີແລ ເທື່ອລະກ້ອນເພື່ອຈະນຳໄປສ້າງຄືນຢູ່ດອນອາຊິນກິອາ ທີ່ຢູ່ໃກ້ກັນ ແລະ ບໍ່ຖືກນ້ຳນິນຖ້ວມ. ເພື່ອເຮັດໄດ້ແນວນີ້, ເພິ່ນຕ້ອງລະເບີດໜ້າໂງ່ນຫີນເພື່ອເອົາກ້ອນຫີນແຕ່ລະກ້ອນທີ່ມ້າງອອກຈາກໂບດມາອີງໃສ່. ຫີນແຕ່ລະກ້ອນມີນ້ຳໜັກແຕ່ເຄິ່ງໂຕນຫາສິບສອງໂຕນ. ເພິ່ນຕ້ອງເຄື່ອນຍ້າຍຫີນ 40.000 ກ້ອນ. ແຕ່ລະກ້ອນຕ້ອງໝາຍເລກລຳດັບເພື່ອໃຫ້ສາມາດປະກອບເຂົ້າກັນໄດ້ຢ່າງຖືກຕ້ອງຢູ່ສະຖານທີ່ໃໝ່.

ການສ້າງເຂື່ອນອັດຊວນ ສາມາດເຮັດໃຫ້ໂບດອາບູຊິມແບວ ຈົມຢູ່ໃຕ້ແມ່ນ້ຳນິນຕະຫຼອດການ. ການມ້າງ ແລະ ການເຄື່ອນຍ້າຍວິຫານແມ່ນວິທີດຽວເພື່ອຊ່ວຍກູ້ເອົາໂບດເຫຼົ່ານີ້ (ເປັນຕົວຢ່າງຂອງຊັບສິນດ້ານວັດທະນະທຳທີ່ເປັນອະສັງຫາລິມະຊັບ). ປັດຈຸບັນຊຸ່ງວຊານສາກົນດ້ານການອະນຸລັກມໍລະດົກ ຖືວ່າ ການເຄື່ອນຍ້າຍບູຮານສະຖານແມ່ນສິ່ງທີ່ບໍ່ປາຖະໜາ, ຍົກເວັ້ນແຕ່ບໍ່ມີທາງເລືອກອື່ນຄືກັນກັບກໍລະນີຂອງອາບູຊິມແບວ.

## ໄຊຊະນະຂອງຂະບວນການອາບູຊິມແບວ(Abou Simbel).

ຂະບວນການປົກປັກຮັກສາອາບູຊິມແບວ ໄດ້ຊີ້ບອກວ່າໃນໂລກຂອງພວກເຮົານີ້ມີສະຖານທີ່ຊຶ່ງມີຄຸນຄ່າພິເສດລະດັບໂລກ ແລະ ແມ່ນສິດຜົນປະໂຫຍດຂອງປະຊາຊາດທີ່ຢູ່ຫ່າງໄກຈາກທີ່ນີ້ ແລະ ມັນຍັງໄດ້ຊີ້ບອກຄວາມສຳຄັນຂອງການແບ່ງປັນຄວາມຮັບຜິດຊອບ ແລະ ຄວາມສາມັກຄີຂອງປະຊາຊາດເພື່ອປົກປັກຮັກສາມໍລະດົກໂລກ. ໄຊຊະນະນີ້ ຊຸກຍູ້ຂະບວນການສາກົນເພື່ອອະນຸລັກມໍລະດົກຢູ່ ເວນິດ ທີ່ປະເທດອີຕາລີ, ຢູ່ໂມເຮັນໂຈ ດາໂຣ ທີ່ປະເທດປາກິດສະຖານ ແລະ ຢູ່ໂບໂຣບູດົວ ທີ່ປະເທດອິນໂດເນເຊຍ, ໃນນີ້ ບາງຂະບວນການຍັງສືບຕໍ່ຕາມຕົວຢ່າງຂອງໂຄງການສາກົນ ເພື່ອອະນຸລັກອັງກໍວັດຢູ່ກຳປູເຈຍ.

ກິດຈະກຳທີ 3 ສຳລັບນັກຮຽນ

## ເຈັດສິ່ງມະຫັດສະຈັນຂອງໂລກ.

ວັດຖຸປະສົງ: ຄົ້ນຄິດກ່ຽວກັບສະຖານທີ່ມະຫັດສະຈັນໃດໜຶ່ງແຕ່ສະໄໝດຶກດຳບັນຈົນເຖິງປະຈຸບັນ.

ເຮັດບັນຊີລາຍຊື່ຂອງສະຖານທີ່ສຳຄັນບໍ່ແມ່ນແນວຄິດທີ່ເກີດຂຶ້ນມື້ວານນີ້. ຊາວກະເລັກສະໄໝບູຮານອີງໃສ່ເຈັດສິ່ງມະຫັດສະຈັນຂອງໂລກຄື:

- ທາດຈອມຫູ່ງມຢູ່ເອຢິບ (les Pyramides d'Egypte)
- ສວນຫ້ອຍ ຢູ່ບາບີລອນ (les Jardins suspendus a Babylone).
- ໂບດອາກເຕມີ ຢູ່ເອແຟເຊີ (le Temple d'Artemis à Ephèse)
- ທຳເທບພະເຈົ້າ ເຊອຸສຢູ່ພູໂອແລມເປີ *(Zeus sur le mont* Olympe)
- ສຸສານໂມໂຊເລຢູ່ຮາລີກາກນັດເຊີ (le Mausolée d'Halicarnasse)
- ຮູບປັ້ນຢູ່ໂຣດເດີ (le Colosse de Rhodes)
- ທຳໂຄມໄຟ ຢູ່ອາເລັກຊັງດຣີ (le Phare d'Alexandrie)

ໃນຂະນະທີ່ທາດຈອມຫູ່ງມ ຍັງຄົງຕົວຢູ່ຕໍ່ໄປ ແຕ່ມາເຖິງວັນນີ້ ທຸກສິ່ງມະຫັດສະຈັນທີ່ຮູ້ຈັກມາແຕ່ດຶກດຳບັນເກືອບທາຍສາບສູນໄປແລ້ວ ແລະ ຍັງຄົງເຫຼືອແຕ່ຮ່ອງຮອຍໄວ້ໃນເອກະສານບູຮານຄະດີວິທະຍາເທົ່ານັ້ນ.

ຊາວກະເລັກສະໄໝບູຮານພິຈາລະນາເຫັນວ່າ ເຈັດສິ່ງມະຫັດສະຈັນແມ່ນຕົວຢ່າງ ຂອງສະຖານທີ່ວັດທະນະທຳ ປະຈຳພາກພື້ນທະເລເມດີແຕຣານເນ. ບັນຊີລາຍຊື່ມໍລະດົກໂລກ ບັນທຶກສະຖານທີ່ມໍລະດົກວັດທະນະທຳ ແລະ ທຳມະຊາດ ຂອງໂລກ ແລະ ສິ່ງສຳຄັນກວ່ານີ້ແມ່ນສົນທິສັນຍາວ່າດ້ວຍມໍລະດົກໂລກຊຶ່ງແມ່ນເອກະສານດ້ານຍຸຕິທຳຂອງການປົກປັກຮັກສາ. ພວກເຮົາຫວັງວ່າໃນສະຕະວັດຈະມາເຖິງ ພວກເຮົາຈະສາມາດອະນຸລັກທຸກສະຖານທີ່ມໍລະດົກໂລກ ຊຶ່ງກົງກັນຂ້າມກັບເຈັດສິ່ງມະຫັດສະຈັນ.

ບອກໃຫ້ນັກຮຽນຂຽນບັນຊີລາຍຊື່ໃໝ່ ຂອງເຈັດສິ່ງມະຫັດສະຈັນ ທີ່ເຂົາເຈົ້າເຫັນວ່າສຳຄັນ. ເມື່ອເຂົາເຈົ້າຮັບຮອງເອົາແລ້ວ ໃຫ້ລົມທຽບກັບ ສະຖານທີ່ງໄດ້ບັນຈຸເຂົ້າໃນບັນຊີມໍລະດົກໂລກ. ວິເຄາະຄຳຕອບ.

- ໂຄງການຮ່າງສົນທິສັນຍາເພື່ອຊ່ວຍກູ້ມໍລະດົກໂລກຂອງພວກເຮົາ.

ຂະບວນການເພື່ອປົກປັກຮັກສາອາບູຊິມແບວໄດ້ມີຜົນກະທົບໂດຍກົງໃຫ້ອຸຍແນດສະໂກ ໂດຍໄດ້ຮັບການຊ່ວຍເຫຼືອຈາກສະພາອານຸສອນສະຖານ ແລະ ທີ່ວທັດທຳມະຊາດສາກົນ (icomos) ສ້າງໂຄງການຮ່າງສົນທິສັນຍາວ່າດ້ວຍການປົກປັກຮັກສາມໍລະດົກວັດທະນະທຳ. ສະຫະລັດອາເມລິກາ ແລະ ສະມາຄົມສາກົນເພື່ອອະນຸລັກທຳມະຊາດ UICN ຊຶ່ງແມ່ນອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ປັດຈຸບັນຊື່ວ່າ ສະມາຄົມໂລກເພື່ອທຳມະຊາດ (union mondiale pour la nature) ໄດ້ສະເໜີໃຫ້ເຕົ້າໂຮມການອະນຸລັກທຳມະຊາດ ແລະ ວັດທະນະທຳເຂົ້າເປັນເອກະສານດ້ານຍຸຕິທຳສະບັບດຽວ. ໃນເດືອນ ສິງຫາ 1972 ໄດ້ສະເໜີໂຄງການຢູ່ກອງປະຊຸມຂອງອົງການສະຫະປະຊາຊາດ ວ່າດ້ວຍສະພາບແວດລ້ອມຂອງມະນຸດຢູ່ສະໂຕກໂຮມ ທີ່ປະເທດຊູແອດ ແລະ ຊາວປີຕໍ່ມາ ໃນ 1992 ໄດ້ສະເໜີຢູ່ກອງປະຊຸມສຸດຍອດຂອງໂລກຢູ່ ຣີໂອທີ່ປະເທດເບຼຊິນ. ສະນັ້ນ ຈຶ່ງໄດ້ວາງພື້ນຖານຂອງເອກະສານສາກົນວ່າດ້ວຍການປົກປັກຮັກສາມໍລະດົກວັດທະນະທຳ ແລະ ທຳມະຊາດ ທີ່ມີຄຸນຄ່າພິເສດລະດັບໂລກ. ກອງປະຊຸມສະໂຕກໂຮມໄດ້ມອບໝາຍໃຫ້ອຸຍແນດສະໂກເປັນຜູ້ຮ່າງສົນທິສັນຍາວ່າດ້ວຍອະນຸລັກມໍລະດົກວັດທະນະທຳ ແລະ ທຳມະຊາດ ຍ້ອນວ່າ ອົງການອຸຍແນດສະໂກແມ່ນການຈັດຕັ້ງດຽວຂອງອົງການສະຫະປະຊາຊາດ ທີ່ປະຕິບັດໜ້າທີ່ໃນຂະແໜງວຽກງານກວ້າງຂວາງເຊັ່ນ: ການສຶກສາວິທະຍາສາດ ແລະ ວັດທະນະທຳ.

ກິດຈະກຳທີ 4 ສຳລັບນັກຮຽນ

## ນິຍາມຂອງມໍລະດົກ ແລະ ການອະນຸລັກ

**ວັດຖຸປະສົງ: ເພື່ອໃຫ້ເຂົ້າໃຈດີ ຄວາມໝາຍຂອງມໍລະດົກ ແລະ ການອະນຸລັກ**

- ບອກໃຫ້ນັກຮຽນນິຍາມມໍລະດົກ ແລະ ການອະນຸລັກ ແລະ ໃຫ້ເຂົາເຈົ້າຂຽນບົດກ່ຽວກັບສອງຄຳສັບນີ້. ໃຫ້ລາງວັນຢ່າງໃດຢ່າງໜຶ່ງແກ່ຜູ້ຂຽນດີ. ຖາມເຂົາເຈົ້າວ່າເຄີຍໄດ້ຍິນເພິ່ນເວົ້າໂຄງການອະນຸລັກມໍລະດົກ ຢູ່ທ້ອງຖິ່ນຂອງເຂົາເຈົ້າບໍ່ ແລະ ເຂົາເຈົ້າຢາກສະເໜີໂຄງການອື່ນຕື່ມອີກ ບໍ່?

# ສົນທິສັນຍາວ່າດ້ວຍມໍລະດົກໂລກ.

ຫຼາຍເດືອນຕໍ່ມາ ຫຼັງຈາກກອງປະຊຸມກ່ຽວກັບສິ່ງແວດລ້ອມ ສະໂຕກໂຮມຄື ໃນວັນ ທີ 16 ພະຈິກ 1972, ກອງປະຊຸມ ສະມັດຊາໃຫຍ່ ຄັ້ງທີ່ 17 ຂອງອົງການອຸຍແນດ ສະໂກ ຢູ່ສຳນັກງານໃຫຍ່ທີ່ ປາຣີ ໄດ້ຮັບຮອງເອົາສົນທິສັນຍາ ວ່າດ້ວຍການປົກປັກຮັກສາມໍລະດົກວັດທະນະທຳ ແລະ ທຳມະຊາດຂອງໂລກ.

ສົນທິສັນຍາແມ່ນເອກະສານທາງການຂອງສາກົນສະບັບທຳອິດທີ່ບັນຍັດຄວາມຕ້ອງການຮີບດ່ວນໃນການກຳນົດ ແລະ ປົກປັກຮັກສາມໍລະດົກວັດທະນະທຳ ແລະ ທຳມະ ຊາດ ອັນຊົງຄຸນຄ່າພິເສດລະດັບໂລກ ແລະ ບໍ່ສາມາດປ່ຽນແທນໄດ້.

ສົນທິສັນຍາຢັ້ງຢືນຢ່າງແຮງກ້າວ່າ ພວກເຮົາຈະແບ່ງປັນຄວາມຮັບຜິດຊອບດ້ານຄຸນະທຳ ແລະ ການເງິນເພື່ອປົກປັກຮັກສາສິ່ງທີ່ພິຈາລະນາເຫັນວ່າແມ່ນ ມໍລະດົກສ່ວນລວມດ້ານວັດທະນະທຳ ແລະ ທຳມະຊາດດ້ວຍການຮ່ວມມືສາກົນ.

ຄວາມຮູ້ເບື້ອງຕົ້ນ ກ່ຽວກັບມໍລະດົກໂລກ:

- ການອະນຸລັກມໍລະດົກ ທີ່ມີຄຸນຄ່າພິເສດລະດັບໂລກ
- ມໍລະດົກວັດທະນະທຳ ແລະ ທຳມະຊາດ
- ມໍລະດົກທີ່ເປັນອະສັງຫາລິມະຊັບ
- ການອະນຸລັກມໍລະດົກທີ່ບໍ່ສາມາດປ່ຽນແທນໄດ້
- ການອະນຸລັກມໍລະດົກໂລກຂຶ້ນກັບພຶດຕິກຳລວມຂອງສາກົນ.

### ກິດຈະກຳທີ 5 ສຳລັບນັກຮຽນ

## ການອະນຸລັກມໍລະດົກ:ກົດໝາຍແຫ່ງຊາດ ແລະ ສົນທິສັນຍາສາກົນ

**ວັດຖຸປະສົງ: ເພີ່ມທະວີການປຸກລະດົມ ເພື່ອການອະນຸລັກມໍລະດົກແຫ່ງຊາດ ແລະ ສາກົນ.**

- ສັບຊ້ອນນັກຮຽນເປັນສອງຈຸ ເພື່ອຄົ້ນຄວ້າຄຳຖາມລຸ່ມນີ້:

1. ຖາມຈຸທີ 1 ວ່າ ປະເທດລາວໄດ້ເປັນສະມາຊິກ ຂອງສົນທິສັນຍານີ້ບໍ່ ແລະ ໃນເວລາໃດ (ເບິ່ງປີເຂົ້າເປັນສະມາຊິກຂອງແຕ່ລະປະເທດຢູ່ແຜນທີ່ ມໍລະດົກໂລກ). ສາເຫດ ແລະ ຜົນ ໄດ້ຮັບຂອງການເຂົ້າເປັນສະມາຊິກສົນທິສັນຍາມີຫຍັງແດ່?
2. ບອກຈຸທີ 2 ໃຫ້ສະເໜີຫຼາຍໆເຫດຜົນທີ່ພາໃຫ້ອຸຍແນດສະໂກຮັບຮອງເອົາ ສົນທິສັນຍາ ວ່າດ້ວຍ ມໍລະດົກໂລກ.
3. ບອກໃຫ້ນັກຮຽນອ່ານສົນທິສັນຍາມໍລະດົກໂລກ, ສະຫຼຸບຫຍໍ້ ແລະ ສົນທະນາກັນ.

ມັນມີຄວາມສຳຄັນທີ່ສຸດໃນການສັບຊ້ອນມໍລະດົກໂລກ ເຂົ້າໃນຫຼັກສູດການຮຽນການສອນໃນທົ່ວໂລກ ດັ່ງມາດຕາ 27 ຂອງຈຸດທີ VI ໃນສົນທິສັນຍາທີ່ຮຽກຮ້ອງໃຫ້ປະເທດສະມາຊິກ "ຈົ່ງອອກແຮງ ນຳໃຊ້ທຸກພາຫະນະທີ່ເໝາະສົມ ໂດຍສະເພາະດ້ວຍຫຼັກສູດການສຶກສາ ແລະ ການຂ່າວເພື່ອເຮັດໃຫ້ປະຊາຊົນເຄົາລົບ ແລະ ຫວງແຫນມໍລະດົກວັດທະນະທຳ ແລະ ທຳມະຊາດຫຼາຍຂຶ້ນ".

- **ທຳມະຊາດ ແລະ ວັດທະນະທຳຕິດພັນກັນຢ່າງສະໜິດແໜ້ນ.**

ຈຸດພິເສດທີ່ບົ່ມຊ້ອນໃນສົນທິສັນຍາ ແມ່ນການຄວບຄູ່ກັນ ລະຫວ່າງທຳມະຊາດ ແລະ ວັດທະນະທຳ. ມີກົດໝາຍແຫ່ງຊາດຈຳນວນນ້ອຍ ແລະ ບໍ່ມີສົນທິສັນຍາສາກົນສະບັບອື່ນໃດທີ່ເຂົ້າໃຈເຖິງການຕິດພັນກັນຢ່າງສະໜິດແໜ້ນ ລະຫວ່າງການອະນຸລັກມໍລະດົກວັດທະນະທຳ ແລະ ທຳມະຊາດ. ໃນຕົວຈິງທຳມະຊາດ ແລະ ວັດທະນະທຳເພີ່ມເຕີມກັນ: ບຸກຄະລິກະພາບດ້ານວັດທະນະທຳ ຂອງປະຊາຊາດໄດ້ຮັບການຫຼໍ່ຫຼອມ ຈາກການສຳພັດກັບສະພາບແວດລ້ອມທຳມະຊາດ, ສ່ວນອານຸສອນສະຖານ, ອາຄານ ແລະ ທິວທັດທຳມະຊາດທີ່ສວຍສົດງົດງາມກໍໄດ້ສ້າງຄວາມອະລັງການໃຫ້ແກ່ສະພາບແວດລ້ອມທຳມະຊາດເຊັ່ນກັນ. ຍິ່ງໄປກວ່ານີ້ ທິວທັດທຳມະຊາດອັນມະຫັດສະຈັນ ຍັງບົ່ງບອກກິດຈະກຳ ຂອງມວນມະນຸດໃນຫຼາຍສະຕະ

ວັດຜ່ານມາ ຫຼື ຊົງຄຸນຄ່າ ມະຫາສານດ້ານຄວາມເຊື່ອຖື, ວັດທະນະທຳ ແລະ ສິລະປະກຳ ໃນສາຍຕາຂອງປະຊາຊາດ. ເຄື່ອງໝາຍ (ສັນຍາລັກ) ຂອງມໍລະດົກໂລກບົ່ງບອກ ການພົວພັນ ຢ່າງແໜ້ນແຟ້ນ ລະຫວ່າງ ສະຖານທີ່ວັດທະນະທຳ ແລະ ທຳມະຊາດ.

- **ມໍລະດົກວັດທະນະທຳ ແລະ ທຳມະຊາດ.**

ສົນທິສັນຍາ ນິຍາມມໍລະດົກວັດທະນະທຳໃນມາດຕາ 1 ແລະ ມໍລະດົກທຳມະ ຊາດ ໃນມາດຕາ 2.

## ທິວທັດວັດທະນະທຳ

ຕັ້ງແຕ່ 1992 ເປັນຕົ້ນມາ ຄະນະກຳມະການມໍລະດົກໂລກຮັບຮູ້ການເພີ່ມເຕີມ ຊຶ່ງກັນແລະກັນຢ່າງມີຄວາມໝາຍ ລະຫວ່າງວັດທະນະທຳ ແລະ ທຳມະຊາດ ຊຶ່ງຊື່ວ່າ ທິວທັດວັດທະນະ ທຳ.

ທິວທັດວັດທະນະທຳ ເຊັ່ນ: ອຸທິຍານແຫ່ງຊາດ ຕົງກາຣີໂຣຢູ່ນິວຊີແລນ, ອຸທິຍານ ແຫ່ງຊາດອູລູຣູກາຕາ-ຈູຕາຢູ່ອົດສະຕາຣີ, ນາຂັ້ນໃດຢູ່ຟີລິບປິນ, ທິວທັດວັດທະນະທຳ ຊິນຕຼາ ຢູ່ປອກຕຸຍການ, ທິວທັດວັດທະນະທຳເລດນີດເຊີ-ວານຕິດາຊີ ຢູ່ສາທາລະນະເຊັກ, ທິວທັດ ວັດທະນະທຳໂຮນສະຕັດ-ດັກສະຕາຍ/ຊານສະກຳເມີກຸດຢູ່ໂອຕຼີສເຊີ ແລະ ສາຍພູປີເຣເນ-ພູ ແປກດຸຍ ຢູ່ແອດສະປາຍ ແລະ ຝະຣັ່ງ... ໄດ້ຂຶ້ນທະບຽນເປັນມໍລະດົກໂລກ. ຢາກໄດ້ຂໍ້ມູນ ລະອຽດກ່ຽວກັບ ທິວທັດວັດທະນະທຳຂອງມໍລະດົກໂລກ ໃຫ້ຕິດຕໍ່ພົວພັນນຳສູນກາງມໍລະດົກ ໂລກ ຂອງອຸຍແນດສະໂກ ແລະ ຢູ່ເວບໄຊຂອງອິນເຕີແນດ.

## ຂະບວນວິວັດຂອງການອະນຸລັກມໍລະດົກໂລກ.

ການອະນຸລັກມໍລະດົກໂລກ ແມ່ນຂະບວນວິວັດຕໍ່ເນື່ອງ ແລະ ມີຂັ້ນຕອນສຳຄັນ ຈຳນວນໜຶ່ງ. ທຳອິດ ປະເທດທີ່ອາສາອະນຸລັກມໍລະດົກໂລກ ຕ້ອງເປັນສະມາຊິກຂອງສົນທິ ສັນຍາ, ຕໍ່ມາຕ້ອງ ສະເໜີມໍລະດົກທີ່ຈະຂຶ້ນທະບຽນເປັນມໍລະດົກໂລກ.

1. ປະເທດທີ່ເຂົ້າເປັນສະມາຊິກຕ້ອງເຊັນຮັບຮູ້ສົນທິສັນຍາວ່າດ້ວຍ ມໍລະດົກໂລກ ແລະ ປະຕິບັດພັນທະປົກປັກຮັກສາມໍລະດົກ ທຳມະຊາດ ແລະ ວັດທະນະທຳ.

2. ປະເທດສະມາຊິກກະກຽມບັນຊີລາຍຊື່ສະຖານທີ່ມໍລະດົກວັດທະນະທຳ ແລະ ທຳມະຊາດ ຊຶ່ງເຫັນວ່າມີຄຸນຄ່າຢ່າງມະຫາສານ.
3. ປະເທດສະມາຊິກເລືອກສະຖານທີ່ຊຶ່ງເຫັນວ່າມີຄຸນຄ່າລະດັບໂລກ, ແລ້ວນຳສະເໜີຂໍຂຶ້ນທະບຽນໃນບັນຊີຂອງມໍລະດົກໂລກ.
4. ສົ່ງໃບສະເໜີທີ່ຂຽນຄົບຖ້ວນແລ້ວນັ້ນ ໄປຍັງສູນກາງມໍລະດົກໂລກຂອງ ອຸຍແນດສະໂກ.
5. ສູນກາງມໍລະດົກໂລກຂອງອຸຍແນດສະໂກ ກວດເບິ່ງວ່າ ຖ້າການສະເໜີຂຶ້ນທະບຽນຄົບ ຖ້ວນແລ້ວຈາກນັ້ນ ຈຶ່ງສົ່ງເຖິງ UICN ແລະ/ຫຼື ICOMOS ເພື່ອປະເມີນຜົນ.
6. ຊ່ຽວຊານໄປຢ້ຽມຢາມສະຖານທີ່ ເພື່ອປະເມີນຜົນການປົກປັກຮັກສາ ແລະ ການຄຸ້ມຄອງ.
7. ICOMOS ແລະ/ຫຼື UICN ປະເມີນການສະເໜີຂຶ້ນທະບຽນບົນພື້ນຖານມາດຖານຂອງມໍລະດົກວັດທະນະທຳ ແລະ ທຳມະຊາດ.
8. ICOMOS ແລະ/ຫຼື UICN ເຮັດບົດສະຫຼຸບການປະເມີນຜົນ
9. ສະມາຊິກຂອງຫ້ອງການມໍລະດົກໂລກກວດເບິ່ງການສະເໜີ ແລະ ການປະເມີນຜົນແລ້ວເຮັດຄຳຮັບຮອງຕໍ່ຄະນະກຳມະການ.
10. ສະມາຊິກຂອງຄະນະກຳມະການ ມໍລະດົກໂລກ 21 ທ່ານ ລົງຄຳເຫັນ: ຮັບຮອງເອົາ, ເລື່ອນເວລາຮັບຮອງເອົາ-ບໍ່ຮັບຮອງເອົາ.

## - ບັນຊີລາຍຊື່ ມໍລະດົກໂລກ : ສະຖານທີ່ອັນຊີ້ງຄຸນຄ່າພິເສດລະດັບໂລກ

ທຸກປະເທດທີ່ເຊັນ ຮັບຮອງສົນທິສັນຍາ ວ່າດ້ວຍມໍລະດົກໂລກ ໄດ້ປະຕິຍານຕົນວ່າຈະອະນຸລັກມໍລະດົກວັດທະນະທຳ ແລະ ທຳມະຊາດ ພາຍໃນປະເທດໄວ້ສຳລັບຮຸ່ນຄົນປັດຈຸບັນ ແລະ ອະນາຄົດ.

ປະເທດທີ່ເຊັນຮັບຮອງສົນທິສັນຍາ ສາມາດເລີ່ມຕົ້ນປະຕິບັດຂັ້ນຕອນ ການຂຶ້ນທະບຽນສະຖານທີ່ພາຍໃນປະເທດ ເຂົ້າໃນບັນຊີລາຍຊື່ມໍລະດົກໂລກ. ການສະເໜີຂຶ້ນບັນຊີໃນເບື້ອງຕົ້ນອາດມາຈາກປະຊາຊົນທ້ອງຖິ່ນນັ້ນ, ແຕ່ຄຳຮ້ອງຂໍຂຶ້ນທະບຽນຕ້ອງແມ່ນ ລັດຖະບານ ເປັນຜູ້ສົ່ງເປັນທາງການໄປໃຫ້ອຸຍແນດສະໂກ. ທຳອິດ, ປະເທດສະມາຊິກຕ້ອງເລືອກເຟັ້ນສະຖານທີ່ບ່ອນທີ່ຕົນຈະສະເໜີຂຶ້ນທະບຽນ. ເພິ່ນມັກຮ້ອງຂັ້ນຕອນການເລືອກເຟັ້ນຢູ່ນີ້ວ່າ ຂັ້ນຕອນ "ການກຳນົດ". ສົນທິສັນຍາຮຽກຮ້ອງໃຫ້ປະເທດສະມາຊິກເຮັດບັນຊີລາຍຊື່ ສະຖານທີ່ວັດທະນະທຳ ແລະ ທຳມະຊາດໃນປະເທດຕົນທີ່ເຫັນວ່າມີຄຸນຄ່າລະດັບໂລກ. ຫຼັງການກຳນົດສະຖານທີ່ຊຶ່ງຕົນມີຈຸດປະສົງຢາກຂຶ້ນທະບຽນເຂົ້າໃນບັນຊີລາຍຊື່ມໍລະດົກໂລກ, ປະເທດສະມາຊິກຕ້ອງຍື່ນຄຳຮ້ອງຕໍ່ສູນກາງ ມໍລະດົກໂລກຂອງອຸຍແນດສະໂກໃນຮູບແບບການສະເໜີ.

ປະເທດສະມາຊິກທີ່ຕົກລົງສະເໜີຂຶ້ນທະບຽນສະຖານທີ່ໃດໜຶ່ງ ຕ້ອງຂຽນຄຳຮ້ອງຕາມຮ່າງໃບສະໝັກ. ຕ້ອງຊີ້ແຈງຄວາມສຳຄັນ ຂອງສະຖານທີ່ຊຶ່ງຕົນສະເໜີຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ ຕາມມາດຖານການເລືອກເຟັ້ນຂອງຄະນະກຳມະການມໍລະດົກ ແລະ ບອກສາເຫດທີ່ພາໃຫ້ຍາກປົກປັກຮັກສາ ແລະ ວິທີຄຸ້ມຄອງສະຖານທີ່ຢ່າງຖືກຕ້ອງອີກດ້ວຍ. ພ້ອມນີ້ ມັນມີຄວາມສຳຄັນທີ່ຈະຕ້ອງສະເໜີການວິເຄາະ ເພື່ອປຽບທຽບການອະນຸລັກສະຖານທີ່ອື່ນໃນລັກສະນະດຽວກັນນັ້ນ. ICOMOS ແລະ/ຫຼື UICN ຄົ້ນຄວ້າການສະເໜີແລ້ວສົ່ງຄຳຮັບຮອງ ມາຍັງຄະນະກຳມະການມໍລະດົກໂລກ ເພື່ອທີ່ຕັດສິນຂັ້ນສຸດທ້າຍໃນການຮັບຮອງເອົາຂຶ້ນທະບຽນເຂົ້າໃນບັນຊີລາຍຊື່ມໍລະດົກໂລກ.

ໃນ 1997, ມີ 552 ສະຖານທີ່ ຊຶ່ງປະກອບດ້ວຍ 418 ສະຖານທີ່ວັດທະນະທຳ, 114 ສະຖານທີ່ທຳມະຊາດ ແລະ 20 ສະຖານທີ່ປະສົມໃນ 112 ປະເທດ ທີ່ຂຶ້ນທະບຽນເຂົ້າໃນບັນຊີລາຍຊື່ມໍລະດົກໂລກ.

## - ຍຸດທະສາດລວມເພື່ອໃຫ້ບັນຊີລາຍຊື່ມໍລະດົກໂລກມີລັກສະນະຕົວແທນ ແລະ ສົມສ່ວນ.

ຄະນະກຳມະການມໍລະດົກໂລກອອກແຮງເພື່ອຮັບປະກັນການແຈກຢາຍສະຖານທີ່ມໍລະດົກໂລກ ໃນຂົງເຂດອາຟຣິກາ, ລັດອາຣັບ, ອາຊີ ແລະ ປາຊີຟິກ, ເອີຣົບ ແລະ ອາເມລິກາເໜືອ, ອາເມລິກາລາຕິນ ແລະ ເຂດທະເລກາຣາອິບເບີ ໃຫ້ສົມສ່ວນ. ສະນັ້ນ ໃນປີ 1994 ຄະນະກຳມະການຈຶ່ງຕົກລົງເຫັນດີ ໃຫ້ເຄົາລົບຄວາມຫຼາກຫຼາຍ ຂອງຂົງເຂດຕ່າງໆໃນດ້ານວັດທະນະທຳ ແລະ ທຳມະຊາດໃນບັນຊີລາຍຊື່ ມໍລະດົກໂລກ ແລະ ຮັບຮອງເອົາ "ຍຸດທະສາດລວມ ເພື່ອໃຫ້ບັນຊີລາຍຊື່ ມໍລະດົກໂລກມີລັກສະນະຕົວແທນ ແລະສົມສ່ວນ".

### ກິດຈະກຳທີ 6 ສຳລັບນັກຮຽນ

## ສ້າງຮູບຈຳລອງຂະໜາດນ້ອຍ ສະຖານທີ່ມໍລະດົກໂລກ

**ວັດຖຸປະສົງ:** ສົ່ງເສີມທັດສະນະຄິດປະດິດສ້າງຂອງນັກຮຽນ ແລະ ເຮັດໃຫ້ເຂົາເຈົ້າມີຄວາມຮູ້ກ່ຽວກັບ ມໍລະດົກ ໂລກຢ່າງເລິກເຊິ່ງ.

- ເອົາຮູບໃຫ້ນັກຮຽນເບິ່ງ. ບອກໃຫ້ເຂົາເຈົ້າເລືອກສະຖານທີ່ມໍລະດົກໂລກ ບ່ອນໃດບ່ອນໜຶ່ງ ແລ້ວສ້າງຮູບຈຳລອງຂະໜາດນ້ອຍ. ຄູເລກອາດຈະອະທິບາຍວິທີຄິດໄລ່ມາດຕາສ່ວນ. ຄູສິລະປະ ຫຼື ຈິດຕະກອນ ຫຼື ນັກສະຖາປານິກອາດຈະແນະນຳວິທີສ້າງ. ຄູປະຫວັດສາດອາດຈະແນະນຳ ຄວາມສັດເຈນດ້ານປະຫວັດສາດ. ເມື່ອການດຳເນີນງານສຳເລັດຈັດງານວາງສະແດງ ແລ້ວເຊີນ ພໍ່ແມ່ນັກຮຽນ ແລະ ປະຊາຊົນໃນ ທ້ອງຖິ່ນນັ້ນເຂົ້າຊົມ.

### ກິດຈະກຳທີ 7 ສຳລັບນັກຮຽນ

## ການກຳນົດສະຖານທີ່ ມໍລະດົກໂລກໃນທ້ອງຖິ່ນຂອງຕົນ

**ວັດຖຸປະສົງ:** ຮັບຮູ້ສະຖານທີ່ມໍລະດົກໂລກໃນທ້ອງຖິ່ນຂອງຕົນ.

- ເອົາຮູບມໍລະດົກໂລກໃຫ້ນັກຮຽນເບິ່ງ. ບອກໃຫ້ເຂົາເຈົ້າຂຽນບັນຊີລາຍຊື່ ມໍລະດົກໂລກສິບແຫ່ງ.

- ຖາມເຂົາເຈົ້າວ່າ:
  - ປະເທດເຮົາເປັນສະມາຊິກຂອງສົນທິສັນຍາ ມໍລະດົກໂລກບໍ່?
  - ອົງການຈັດຕັ້ງ ຫຼື ອຳນາດການປົກຄອງໃດຮັບຜິດຊອບການປະຕິບັດ ຕາມສົນທິສັນຍາວ່າດ້ວຍມໍລະດົກໂລກຢູ່ປະເທດເຮົາ? (ມໍລະດົກວັດທະນະທຳ ແລະ ມໍລະດົກທຳມະຊາດ).
  - ປະເທດເຮົາມີຄວາມສຳພັນກັບ ອຸຍແນດສະໂກ ແນວໃດ?
  - **ຢູ່ປະເທດເຮົາມີຄະນະກຳມາທິການແຫ່ງຊາດເພື່ອອຸຍແນດສະໂກບໍ່?**

## ກິດຈະກຳເພື່ອການສຶກສາ.

ແຜນທີ່ຂອງມໍລະດົກໂລກ ສະແດງບັນຊີລາຍຊື່ປະເທດສະມາຊິກ ແລະ 552 ສະຖານທີ່ຊຶ່ງຂຶ້ນທະບຽນໃນບັນຊີລາຍຊື່ຂອງ ມໍລະດົກໂລກ.

ໃຫ້ນັກຮຽນຊອກຫາສະຖານທີ່ມໍລະດົກໂລກ 10 ແຫ່ງແລ້ວຂຽນຊື່, ທີ່ຕັ້ງ ແລະ ລັກສະນະໃສ່ໃນຮ່າງຄຳຕອບດັ່ງນີ້:

| ເລກລຳດັບ | ຊື່ ສະຖານທີ່ | ວັນເດືອນປີ ຂຶ້ນທະບຽນ | ປະເທດ (ທີ່ຕັ້ງ) | ລັກສະນະ (ວັດທະນະທຳ, ທຳມະຊາດ, ປະສົມ |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |

## ມາດຖານການຄັດເລືອກສະຖານທີ່ມໍລະດົກໂລກ.

### ຂໍ້ແນະນຳສຳລັບຄູກ່ຽວກັບມາດຖານຂອງມໍລະດົກໂລກ

ມາດຖານແມ່ນເອກະລັກຕົ້ນຕໍ ຂອງການອະນຸລັກມໍລະດົກໂລກທີ່ຄູຕ້ອງຄຳນຶງເຖິງທຸກໆເວລາທີ່ຕົບເຮັດວຽກມໍລະດົກໂລກ.

ການສ້າງບັນຊີລາຍຊື່ມໍລະດົກໂລກ ແມ່ນຄວາມທ້າທາຍສຳຄັນສຳລັບວົງສາຄະນະຍາດສາກົນ ຍ້ອນວ່າ ຈະຕີລາຄາແນວໃດ ເພື່ອກຳນົດວ່າສະຖານທີ່ນີ້, ເຂດອານຸສອນສະຖານ

ທັງໝົດ ຫຼື ອານຸສອນນີ້ຢ່າງດຽວ ຄວນຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ ແທນທີ່ຈະແມ່ນສະຖານທີ່ອະນຸສອນສະຖານນັ້ນ? ເວົ້າຢ່າງໜຶ່ງ, ແມ່ນຫຍັງທີ່ຢັ້ງຢືນວ່າສະຖານທີ່ວັດທະນະທຳ ຫຼື ທຳມະຊາດມີຄຸນຄ່າພິເສດລະດັບໂລກ ຫຼື ຄຸນຄ່າໃນຕຳແໜ່ງມໍລະດົກໂລກ?

ທິດທາງເພື່ອຊີ້ນຳການປະຕິບັດສົນທິສັນຍາ ວ່າດ້ວຍມໍລະດົກໂລກ ໄດ້ຮັບການປັບປຸງເປັນປະຈຳຈາກ ຄະນະກຳມະການມໍລະດົກໂລກ. ທິດທາງດັ່ງກ່າວອະທິບາຍຂັ້ນຕອນທີ່ຄວນປະຕິບັດໃນການຍື່ນຄຳຮ້ອງຂຶ້ນທະບຽນໃນບັນຊີລາຍຊື່ ມໍລະດົກໂລກ ແລະ ມາດຖານຕ່າງໆທີ່ຄວນມີ.

## - ມາດຖານການຄັດເລືອກສະຖານທີ່ມໍລະດົກໂລກດ້ານວັດທະນະທຳ.

ທິດທາງກຳນົດຫົກມາດຖານກ່ຽວກັບການຄັດເລືອກ ເພື່ອຂຶ້ນທະບຽນອານຸສອນສະຖານ, ສິ່ງກໍ່ສ້າງ ແລະ ສະຖານທີ່ຂອງມໍລະດົກໂລກດ້ານວັດທະນະທຳໃນບັນຊີລາຍຊື່ ມໍລະດົກໂລກ.

### ສະຖານທີ່ວັດທະນະທຳ ທີ່ສະເໜີຂຶ້ນທະບຽນຕ້ອງ:

1. ເປັນຜົນງານຊັ້ນເອກ ຈາກອັດສະລິຍະ ຂອງຜູ້ປະດິດຄິດແຕ່ງ;
2. ເປັນສັນຍາລັກການແລກປ່ຽນໃຫຍ່ ໃນເວລາໃດໜຶ່ງ ຫຼື ໃນຂົງເຂດວັດທະນະທຳໃດໜຶ່ງ ທີ່ມີຜົນກະທົບຕໍ່ການພັດທະນາດ້ານສະຖາປັດຕິຍະກຳ, ສິລະປະການຕົບແຕ່ງ, ການຈັດສັນຕົວເມືອງ ຫຼື ການສ້າງທິວທັດທຳມະຊາດ;
3. ເປັນຫຼັກຖານດຽວ ຫຼື ພິເສດກ່ຽວກັບການສືບທອດດ້ານວັດທະນະທຳ ຫຼື ອະລະຍະທຳ ທີ່ຍັງຄົງຕົວຢູ່ ຫຼື ຫາຍສາບສູນແລ້ວ.
4. ເປັນຕົວຢ່າງດີເດັ່ນຂອງລັກສະນະການກໍ່ສ້າງ ຫຼື ຮູບໂສມດ້ານສະຖາປັດຕິຍະກຳ ຫຼື ທິວທັດທຳມະຊາດທີ່ຊີ້ບອກໄລຍະປະຫວັດສາດທີ່ມີຄວາມໝາຍຂອງມວນມະນຸດ.
5. ປະກອບເປັນຕົວຢ່າງດີເດັ່ນໃນການຕັ້ງຖິ່ນຖານຂອງຄົນ ຫຼື ການຄອບຄອງດິນແດນແຫ່ງວັດທະນະທຳ ຫຼື ດິນແດນທີ່ເປັນຕົວແທນດ້ານວັດທະນະທຳ, ໂດຍສະເພາະໃນເວລາດິນແດນນັ້ນພວມສ່ຽງຕໍ່ການຖືກທຳລາຍຈາກການປ່ຽນແປງທີ່ບໍ່ສາມາດຕ່າວປີ້ນຄືນໄດ້.
6. ປະກອບໂດຍກົງ ຫຼື ໃນດ້ານວັດຖຸເຂົ້າກັບເຫດການ ຫຼື ປະເພນີທີ່ຍັງສືບທອດຕໍ່ກັນ, ກັບແນວຄິດ, ການເຊື່ອຖື ຫຼື ຜົນງານດ້ານສິລະປະ ແລະ ວັນນະຄະດີ ທີ່ມີຄວາມໝາຍພິເສດລະດັບໂລກ (ຄະນະກຳມະການພິຈາລະນາວ່າມາດຖານນີ້ ຕ້ອງຢັ້ງຢືນເຫດຜົນການຂຶ້ນທະບຽນໃນບັນຊີລາຍຊື່ ມໍລະດົກໂລກໃນກໍລະນີພິເສດ ແລະ ຕ້ອງສົມທຽບກັບມາດຖານດ້ານວັດທະນະທຳ ແລະ ທຳມະຊາດອື່ນໆ).

ລັກສະນະດັ້ງເດີມຂອງມໍລະດົກວັດທະນະທຳມີຄວາມສຳຄັນ ສະນັ້ນ ການປົກປັກຮັກສາ ແລະ ການຄຸ້ມຄອງຈຶ່ງມີຄວາມສຳຄັນຄືກັນ.

## ມາດຖານການຄັດເລືອກສະຖານທີ່ມໍລະດົກໂລກ ດ້ານທຳມະຊາດ.

ທິດທາງກຳນົດສີ່ມາດຖານກ່ຽວກັບການຄັດເລືອກສະຖານທີ່ທຳມະຊາດ ຊຶ່ງມີຄຸນຄ່າຍອມຮັບໃຫ້ເປັນມໍລະດົກໂລກ.

1. ເປັນຕົວຢ່າງດີເດັ່ນເພື່ອສະແດງໄລຍະປະຫວັດສາດຂອງໂລກ, ໃນນີ້ ມີຫຼັກຖານຂອງສິ່ງທີ່ມີຊີວິດ, ຂະບວນວິວັດດ້ານທໍລະນີສາດໃນການປ່ຽນຮູບຂອງໜ້າໂລກ ຫຼື ສ່ວນປະກອບ ຫຼື ສະລິລະຂອງຫີນທີ່ມີຄວາມໝາຍທີ່ສຸດ; ຫຼື
2. ເປັນຕົວຢ່າງດີເດັ່ນ ເພື່ອສະແດງຂະບວນວິວັດ ດ້ານນິເວດວິທະຍາ ແລະ ຊີວະວິທະຍາ ໃນວິວັດທະນາການ ແລະ ການຂະຫຍາຍຕົວຂອງລະບົບນິເວດວິທະຍາ, ວົງຄະນະຍາດຂອງພືດ ແລະ ສັດບົກ, ພືດ ແລະ ສັດຝັ່ງທະເລ ແລະ ທະເລ; ຫຼື
3. ເປັນຕົວແທນປະກົດການທຳມະຊາດ ຫຼື ປະກອບເປັນເຂດແດນທີ່ມີຄວາມງາມຕາມທຳມະຊາດ ແລະ ມີທັດສະນີພາບສຳຄັນ ແລະ ພິເສດ; ຫຼື
4. ມີບ່ອນຢູ່ທຳມະຊາດທີ່ເປັນຕົວແທນກວ່າໝູ່ ແລະ ສຳຄັນກວ່າໝູ່ ເພື່ອອະນຸລັກຄວາມຫຼາກຫຼາຍດ້ານຊີວິສາດຕາມທຳມະຊາດ, ລວມທັງຕະກຸນຂອງພືດ ແລະ ສັດທີ່ໃກ້ຈະສູນພັນແຕ່ຍັງເຫຼືອຢູ່ ແລະ ມີຄຸນຄ່າພິເສດລະດັບໂລກຕາມທັດສະນະວິທະຍາສາດ ຫຼື ການອະນຸລັກ.

**ມໍລະດົກທຳມະຊາດອັນຄົບຖ້ວນມີຄວາມສຳຄັນຫຼາຍ, ສະນັ້ນ ການປົກປັກຮັກສາ ແລະ ການຄຸ້ມຄອງຈຶ່ງມີຄວາມສຳຄັນຄືກັນ.**

- ### ມາດຖານການຄັດເລືອກສະຖານທີ່ປະສົມຂອງມໍລະດົກໂລກ

  ສະຖານທີ່ປະສົມທີ່ລວມຄຸນຄ່າພິເສດຂອງມໍລະດົກ ດ້ານວັດທະນະທຳ ແລະ ທຳມະຊາດ ໄດ້ຂຶ້ນທະບຽນໃນບັນຊີລາຍຊື່ຂອງມໍລະດົກໂລກຕາມສອງມາດຖານດັ່ງກ່າວ. ໃນບັນຊີລາຍຊື່ຂອງມໍລະດົກໂລກປັດຈຸບັນມີ 19 ສະຖານທີ່ປະສົມ (ຕົວຢ່າງປະຫວັດສາດສະຖານທີ່ສັກສິດ ຂອງເມືອງມັກຊູປິກຊູ ທີ່ປະເທດເປຣູ ແລະ ເຂດລາໂປນີສະຖານທີ່ ທີ່ປະເທດຊູແອດ).

### ການປະຕິບັດຕາມມາດຖານ

ມາດຖານຕ້ອງໄດ້ຮັບການປະຕິບັດຢ່າງເຄັ່ງຄັດເພື່ອຫຼີກເວັ້ນການເຮັດໃຫ້ບັນຊີລາຍຊື່ມໍລະດົກໂລກຍາວຢຽດ ຫຼື ກາຍເປັນບັນຊີການນັບຊື່ສະຖານທີ່ ຊຶ່ງແຕ່ລະປະເທດຕ້ອງການເຫັນ.

ແຕ່ລະປະເທດມີສະຖານທີ່ ຊຶ່ງແມ່ນຜົນປະໂຫຍດຂອງທ້ອງຖິ່ນ ແລະ ຂອງຊາດທີ່ຕົນເອງມີຄວາມພາກພູມໃຈ, ສະນັ້ນ ສົນທິສັນຍາຈຶ່ງໄດ້ຊຸກຍູ້ ແຕ່ລະປະເທດໃຫ້ກຳນົດ ແລະ ປົກປັກຮັກສາມໍລະດົກຂອງຕົນໄວ້ ເຖິງວ່າມັນຈະບໍ່ຂຶ້ນທະບຽນເຂົ້າໃນບັນຊີລາຍຊື່ ມໍລະດົກໂລກກໍຕາມ.

### ກິດຈະກຳທີ 8 ສຳລັບນັກຮຽນ

## ຊອກທີ່ຕັ້ງຂອງສະຖານທີ່ຂອງມໍລະດົກໂລກ

**ວັດຖຸປະສົງ: ຮຽນຮູ້ທີ່ຕັ້ງພູມສາດ ແລະ ປະເພດຂອງສະຖານທີ່ມໍລະດົກໂລກ.**

- ນຳໃຊ້ຮ່າງກິດຈະກຳ ເພື່ອການສຶກສາ.
- ບອກນັກຮຽນໃຫ້ຈັບຄູ່ ສະຖານທີ່ມໍລະດົກໂລກແຕ່ (A-J) ທີ່ພິມຢູ່ແຜນທີ່ ກັບສະຖານທີ່ 10 ແຫ່ງລຸ່ມນີ້ ແລ້ວໃຫ້ບອກວ່າເປັນສະຖານທີ່ວັດທະນະທຳ, ທຳມະຊາດ ຫຼື ປະສົມ.
- ໃຫ້ນັກຮຽນແລກປ່ຽນຄຳຕອບ ລະຫວ່າງກັນ ເພື່ອກວດເບິ່ງຜົນຄວາມເຂົ້າໃຈ ແລະ ເພື່ອຊອກຮູ້ວ່ານັກຮຽນທັງໝົດໃນຫ້ອງຮຽນເຂົ້າໃຈໄດ້ດີປານໃດ! ມອບຂອງຂວັນໃຫ້ຜູ້ຊະນະເລີດ ເຊັ່ນເຄື່ອງໝາຍ Patrimonito.

ຫຼັງຈາກນັ້ນ ສອງ ຫຼື ສາມອາທິດ ຄູອາດທວນຄືນໂດຍເພີ່ມສະຖານທີ່ມໍລະດົກໂລກແຫ່ງໃໝ່ເຂົ້າໃນແຜນທີ່ຕື່ມອີກ 10 ແຫ່ງ, ບົດຝຶກຫັດສາມາດທວນຄືນໄດ້ຫຼາຍເທື່ອ.

**ສະຖານທີ່ມໍລະດົກໂລກ.**

1. ຈີເລ: ອຸທະຍານແຫ່ງຊາດ ຣາປານູອີ (ເກາະປັກເກົາ)
2. ກູບາ: ເມືອງເກົ່າຂອງນະຄອນລາຮາວານ ແລະ ກຳແພງເມືອງ
3. ເມັກຊິໂກ: ເຂດປາບາແລນ (ປາວານ) ຢູ່ຊາຍຝັ່ງແອນວິດສະແກໂນ.
4. ການາ: ກຳແພງ ແລະ ຄະລືຫາດໂວນຕາ, ອັກກະຣາ ແລະ ແວດລ້ອມ, ເຂດພາກກາງ ແລະ ເຂດຕາເວັນຕົກ.

5. ຍີ່ປຸ່ນ: ອານຸສອນສະຖານປະຫວັດສາດຂອງນະຄອນກຽວໂຕເກົ່າ (ເມືອງກຽວໂຕ, ອູຊິແລະ ອົດຊູ)
6. ຈໍແດນ: ເມືອງເກົ່າແກ່ເປຕະຣາ
7. ຝຣັ່ງ: ໂບດມົງແຊັງມີແຊນ ແລະ ອ່າວທະເລ
8. ຈີນ: ສາຍພູຕາຍຊານ
9. ສະຫະພາບສາທາລະນະລັດຕັງຊານີ: ອຸທິຍານແຫ່ງຊາດເຊເຣນເກຕີ
10. ນີແຊ: ເຂດອະນຸລັກທຳມະຊາດ ແອ ແລະ ເຕເນເຣ

## ຮ່າງກິດຈະກຳເພື່ອການສຶກສາ.

ແຜນທີ່ໂລກຊີ້ບອກສິບສະຖານທີ່ຊຶ່ງໄດ້ຂຶ້ນທະບຽນໃນບັນຊີລາຍຊື່ ມໍລະດົກໂລກ.

ບອກນັກຮຽນຈັບຄູ່ສະຖານທີ່ມໍລະດົກໂລກ ຊຶ່ງໝາຍດ້ວຍອັກສອນ A ຫາ J ກັບລາຍຊື່ແຕ່ 1 ຫາ10 ທີ່ໃຫ້ນີ້ ແລ້ວຕື່ມໃສ່ຕາຕະລາງໃຫ້ຄົບຖ້ວນ ແລະ ຈົ່ງຊີ້ບອກວ່າ ແຕ່ລະສະຖານທີ່ ແມ່ນມໍລະດົກວັດທະນະທຳ, ທຳມະຊາດ ຫຼື ປະສົມ.

| ອັກສອນ | ເລກລຳດັບ | ຊື່ສະຖານທີ່ມໍລະດົກໂລກ | ປະເທດ | ປະເພດຂອງສະຖານທີ່ (ວັດທະນະທຳ, ທຳມະຊາດ ຫຼື ປະສົມ. |
|---|---|---|---|---|
| A | | | | |
| B | | | | |
| C | | | | |
| D | | | | |
| E | | | | |
| F | | | | |
| G | | | | |
| H | | | | |
| I | | | | |
| J | | | | |

# ກິດຈະກຳເພື່ອການສຶກສາ



### ກິດຈະກຳທີ 9 ສຳລັບນັກຮຽນ

## ຄວາມເຂົ້າໃຈກ່ຽວກັບມາດຖານຂອງມໍລະດົກໂລກ

ວັດຖຸປະສົງ: ເຂົ້າໃຈດີມາດຖານເພື່ອຕົກລົງຮັບຮອງການຂຶ້ນທະບຽນ ຂອງສະຖານທີ່ໃນບັນຊີລາຍຊື່ມໍລະດົກໂລກ.

ສະຖານທີ່ໃດໜຶ່ງຖືກຮັບຮອງໃຫ້ຂຶ້ນທະບຽນໃນບັນຊີລາຍຊື່ ຂອງມໍລະດົກໂລກ ຖ້າສະຖານທີ່ນັ້ນຫາກມີມາດຖານຄົບຖ້ວນຕາມຄະນະກຳມະການມໍລະດົກໂລກກຳນົດໄວ້.

- ສັບຊ້ອນນັກຮຽນເປັນຫຼາຍຈຸບອກໃຫ້ເຂົາເຈົ້າເບິ່ງແຜນທີ່ມໍລະດົກໂລກ ແລະ ອ່ານບົດພັນລະນາໂດຍສັງເຂບ ແລ້ວໃຫ້ຂຽນໃສ່ຊ່ອງວ່າງຂອງຕາຕະລາງກິດຈະກຳທີ່ຢາຍໃຫ້ນັ້ນ, ສະຖານທີ່ໜຶ່ງຕໍ່ເຂດໜຶ່ງ ອີງຕາມມາດຕະຖານຂອງແຕ່ລະສະຖານທີ່. ສ່ວນຫຼາຍບັນຊີລາຍຊື່ຂອງມໍລະດົກໂລກທີ່ໄດ້ຂຶ້ນທະບຽນເຂົ້າໃນມໍລະດົກໂລກມີຫຼາຍກວ່າໜຶ່ງມາດຕະຖານ.
- ສຳລັບສະຖານທີ່ປະສົມ, ໃຫ້ຂຽນໜຶ່ງສະຖານທີ່ ຫຼື ສອງຕໍ່ເຂດ ແລະ ໃຫ້ບອກລາຍຊື່ຂອງແຕ່ລະສະຖານທີ່.
- ສົນທະນາກ່ຽວກັບນັກຮຽນຄົ້ນພົບ.

# ຮ່າງກິດຈະກຳເພື່ອການສຶກສາ

| ສະຖານທີ່ | ມາດຖານທີ 1 ຜົນງານຊັ້ນເອກຈາກອັດສະລິຍະຂອງຜູ້ປະດິດຄິດແຕ່ງ | ມາດຖານທີ 2 ການແລກປ່ຽນໃຫຍ່ທີ່ມີຜົນກະທົບ | ມາດຖານທີ 3 ເປັນຫຼັກຖານດຽວກ່ຽວກັບການສືບທອດດ້ານວັດທະນະທຳ ຫຼື ອະລະຍະທຳທີ່ຍັງຄົງຕົວ ຫຼື ຫາຍສາບສູນແລ້ວ | ມາດຖານທີ 4 ຕົວຢ່າງດີເດັ່ນຂອງການກໍ່ສ້າງ ຫຼື ຮູບໂສມດ້ານສະຖານປັດຕິຍະກຳ ຫຼື ທິວທັດທຳມະຊາດ | ມາດຖານທີ 5 ຕົວຢ່າງດີເດັ່ນຂອງການຕັ້ງຖິ່ນຖານ ຫຼື ການຄອບຄອງດິນແດນ | ມາດຖານທີ 6 ປະກອບເຂົ້າກັບເຫດການ ຫຼື ປະເພນີທີ່ຍັງຄົງຕົວ, ແນວຄິດ, ຄວາມເຊື່ອຖື, ຜົນງານດ້ານສິລະປະ ແລະ ວັນນະຄະດີ. |
|---|---|---|---|---|---|---|
| ອາຟຣິກາ | | | | | | |
| ອາເມລິກາລາຕິນແລະເຂດກາລາອິບ | | | | | | |
| ລັດອາຣັບ | | | | | ເມືອງເກົ່າແກ່ກາດາແມັດາຊີ (ຊາມາຮີຣິຊາອາຣັບລີບີ ) | |
| ອາຊີ ແລະປາຊີຟິກ | | | | | | |
| ເອີຣົບແລະອາເມລິກາເໜືອ | | | | | | |

# ຮ່າງກິດຈະກຳເພື່ອການສຶກສາ.

| ເຂດ | ຊື່ ສະຖານທີ່ປະສົມ | ມາດຖານຂອງ ມໍລະດົກທຳມະຊາດ 1,2,3,4,5 ແລະ ຫຼື 6 | ມາດຖານ ມໍລະດົກວັດທະນະທຳ 1,2,3,4,5, ແລະ ຫຼື 6 |
|---|---|---|---|
| ອາຟຣິກາ | | | |
| ອາເມລິກາລາຕິນແລະເຂດກາລາອິບ | | | |
| ລັດອາຣັບ | | | |
| ອາຊີ ແລະປາຊີຟິກ | | | |
| ເອີຣົບແລະອາເມລິກາເໜືອ | ອຸທິຍານແຫ່ງຊາດ ໂກແຣມ ແລະ *ປ່າໂຄກ ກັບປາດົດເຊີ ທີ່ຕວກກີ* | | |

| ສະຖານທີ່ ທຳມະຊາດ | ມາດຖານທີ 1 ໄລຍະປະຫວັດສາດຂອງໂລກ | ມາດຖານທີ 2 ຂະບວນວິວັດດ້ານນິເວດວິທະຍາ ແລະ ຊີວະວິທະຍາ | ມາດຖານທີ 3 ປະກົດການທຳມະຊາດ ຫຼື ເຂດແດນແຫ່ງຄວາມງາມຕາມທຳມະຊາດ ແລະ ທັດສະນີຍະພາບພິເສດ | ມາດຖານທີ 4 ບ່ອນຢູ່ທຳມະຊາດສຳຄັນເພື່ອການອະນຸລັກຄວາມຫຼາກຫຼາຍດ້ານຊີວະສາດ |
|---|---|---|---|---|
| ອາຟະຣິກກາ | | ອຸທິຍານແຫ່ງຊາດມາໂນໂວ-ກູດາແຊໂຟຣິດເຊີ (ສາທາລະນະລັດອາຟະຣິກກາກາງ) | | |
| ອາເມລິກາລາຕິນ ແລະ ເຂດກາຣາອິບ | | | | |
| ລັດອາຣັບ | | | | |
| ອາຊີ ແລະ ປາຊີຟິກ | | | | |
| ເອີລົບ ແລະ ອາເມລິກາເໜືອ | | | | |

### ກິດຈະກຳທີ 10 ສຳລັບນັກຮຽນ.

## ການສະເໜີຂຶ້ນທະບຽນສະຖານທີ່ ວັດທະນະທຳ ແລະ ທຳມະຊາດ.

**ວັດຖຸປະສົງ:** ເຂົ້າໃຈວິທີການ ເພື່ອສະເໜີຂຶ້ນທະບຽນສະຖານທີ່ເຂົ້າໃນບັນຊີການປົກປັກຮັກສາມໍລະດົກ.

- ນຳໃຊ້ຮ່າງກິດຈະກຳ ເພື່ອການສຶກສາ ແລະ ທິດທາງເພື່ອໃຫ້ນັກຮຽນມີສ່ວນຮ່ວມເຂົ້າໃນການກະກຽມໃບສະເໜີການຂຶ້ນທະບຽນສະຖານທີ່ມໍລະດົກທ້ອງຖິ່ນ ຫຼື ພາກພື້ນເພື່ອເອົາເຂົ້າໃນບັນຊີລາຍຊື່ມໍລະດົກແຫ່ງຊາດ.
- ສັບຊ້ອນນັກຮຽນເປັນຫຼາຍຈຸ. ໃຫ້ເຂົາເຈົ້າສະເໜີການຂຶ້ນທະບຽນ ສະຖານທີ່ໃດໜຶ່ງຂອງທ້ອງຖິ່ນ.
- ເຕົ້າໂຮມຮູບປະກອບຂອງສະຖານທີ່ ຊຶ່ງຈະຂຶ້ນທະບຽນເປັນແຜ່ນໃຫຍ່ ເພື່ອຫ້ອຍໃສ່ຝາ ຫຼື ສ້າງເປັນປຶ້ມ. ສິ່ງສະບັບໜຶ່ງໃຫ້ອຳນາດການປົກຄອງທ້ອງຖິ່ນ ຫຼື ພູມີພາກພ້ອມດ້ວຍບົດແນະນຳ ແລະ ບົດວິເຄາະໃນກອງປະຊຸມ ຂອງຄະນະກຳມະການມໍລະດົກແຫ່ງຊາດ.

## ຮ່າງກິດຈະກຳ ເພື່ອການສຶກສາ

### ທິດທາງສຳລັບນັກຮຽນ

ການສະເໜີຂຶ້ນທະບຽນສະຖານທີ່ໃດໜຶ່ງຂອງປະເທດໃນບັນຊີລາຍຊື່ຂອງມໍລະດົກໂລກ.

ມີການຕົກລົງໃຫ້ສ້າງບັນຊີລາຍຊື່ ສະຖານທີ່ວັດທະນະທຳ ແລະ ທຳມະຊາດຂອງຊາດ. ທ້ອງພວກເຈົ້າໄດ້ຮັບການມອບໝາຍໃຫ້ກະກຽມສະເໜີຂຶ້ນທະບຽນສອງ ຫຼື ສາມສະຖານທີ່ວັດທະນະທຳ ແລະ/ຫຼື ທຳມະຊາດໃນບັນຊີລາຍຊື່ນັ້ນ. ກິດຈະກຳນີ້ອາດຈະຈັດໃນໂຮງຮຽນ ຫຼື ນອກໂຮງຮຽນ (ຕົວຢ່າງການຢ້ຽມຢາມສະຖານທີ່).

### ທິດທາງສຳລັບການຮຽບຮຽງຄຳຮ້ອງຂຶ້ນທະບຽນ.

ກະກຽມເອກະສານສະເໜີຂຶ້ນທະບຽນໂດຍອາໃສຮ່າງຄຳຮ້ອງ ແລະ ໃຫ້ສັງເກດຈຸດຕ່າງໆດັ່ງນີ້:
ພາກພັນລະນາ ຕ້ອງປະກອບດ້ວຍ:

- ການພັນລະນາສະຖານທີ່ພ້ອມດ້ວຍບັນຊີ ອົງປະກອບຕ່າງໆ ແລະ ເອກະລັກສຳຄັນ ເຊັ່ນ: ປະເພດຂອງນົກ, ພືດ ແລະ ສັດ ຖ້າແມ່ນສະຖານທີ່ທຳມະຊາດ, ປະເພດການກໍ່ສ້າງ ແລະ ໂຄງສ້າງໃນລັກສະນະບູຮານວິທະຍາ ຖ້າແມ່ນສະຖານທີ່ວັດທະນະທຳ;
- ປະຫວັດສາດຂອງສະຖານທີ່;
- ແຜນທີ່ພູມສາດ
- ຮູບ;
- ບັນນານຸກົມຫຍໍ້ ເພື່ອສະແດງແຫຼ່ງຂໍ້ມູນຂ່າວສານກ່ຽວກັບສະຖານທີ່;

ພາກສະເໜີເຫດຜົນຂອງການສະເໜີຂຶ້ນທະບຽນສະຖານທີ່ເຂົ້າໃນບັນຊີລາບຊື່ມໍລະດົກແຫ່ງຊາດດ້ານວັດທະນະທຳ ແລະ ທຳມະຊາດຕ້ອງຊີ້ແຈງ:

- ເຫດຜົນທີ່ຢັ້ງຢືນວ່າ ສະຖານທີ່ມີຄວາມສຳຄັນແກ່ຊາດ. ຖ້າມີມາດຕະຖານແຫ່ງຊາດ, ໃຫ້ໃຊ້ເຂົ້າໃນການປະເມີນສະຖານທີ່.

ພາກອະນຸລັກສະຖານທີ່ຕ້ອງມີ:

- ບຸກຄົນທີ່ຮັບຜິດຊອບການປົກປັກຮັກສາສະຖານທີ່.
  ການອະນຸລັກສະຖານທີ່ໄດ້ມອບໝາຍ ໃຫ້ປະຊົນໃນທ້ອງຖິ່ນ ຫຼື ໃຫ້ອີງກອນທ້ອງຖິ່ນ, ເຂດ ຫຼື ແຫ່ງຊາດ? ບຸກຄະລາກອນທີ່ປົກປັກຮັກສາສະຖານທີ່ມີຄວາມສາມາດພຽງພໍເພື່ອຮັບປະກັນການອະນຸລັກບໍ່? ເຂົາເຈົ້າມີເງິນ ແລະ ວິຊາການບໍ່? ມີກົດໝາຍເພື່ອປົກປັກຮັກສາສະຖານທີ່ບໍ່?

ພາກການສົມທຽບກັບສະຖານທີ່ອື່ນຕ້ອງມີ:

- ລາຍລະອຽດກ່ຽວກັບ ສະຖານທີ່ອື່ນ ທີ່ຄ້າຍຄືກັນຢູ່ໃນປະເທດ ແລະ ເຂດອື່ນຂອງປະເທດ.
- ການປະເມີນຜົນເພື່ອສົມທຽບ ສະພາບການອະນຸລັກສະຖານທີ່ນີ້ກັບສະຖານທີ່ອື່ນ ທີ່ຄ້າຍ ຄືກັນ ຢູ່ພາຍໃນປະເທດ.

ສະຖານທີ່ມີຄວາມສ່ຽງຕໍ່ການຊຸດໂຊມ ທີ່ບໍ່ສາມາດບູລະນະຄືນບໍ່? ຕົວຢ່າງໃນກໍລະນີສະຖານທີ່ທຳມະຊາດໃຫ້ຖາມນັກຮຽນເບິ່ງວ່າ ມັນເປັນໄປໄດ້ບໍ່ທີ່ຕະກຸນສັດ ແລະ ພືດບາງຊະນິດ ພວມຢູ່ໃນຂັ້ນອັນຕະລາຍຂອງການຫາຍສາບສູນໄປ.

**ຮ່າງກິດຈະກຳເພື່ອການສຶກສາ.**

ຊື່ປະເທດບ່ອນທີ່ສະຖານທີ່ຕັ້ງຢູ່:

ຊື່ຜູ້ກະກຽມເອກະສານ:

ວັນ ເດືອນ ປີ:

ຊື່ສະຖານທີ່:

ທີ່ຕັ້ງພູມສາດຂອງສະຖານທີ່:

ການພັນລະນາສະຖານທີ່:

ເຫດຜົນຂອງການຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກແຫ່ງຊາດ ດ້ານວັດທະນະທຳ ແລະ ທຳມະຊາດ:

ມາດຖານຄົບຖ້ວນ:

ການອະນຸລັກສະຖານທີ່:

ການສົມທຽບກັບສະຖານທີ່ອື່ນທີ່ຄ້າຍຄືກັນ:

## ຄະນະກຳມະການມໍລະດົກໂລກ ແລະ ສູນກາງມໍລະດົກໂລກ ອຸຍແນດສະໂກ.

ຄະນະກຳມະການມໍລະດົກໂລກ ຈະເປັນຜູ້ຕັດສິນຮັບຮອງ ຫຼື ບໍ່ຮັບຮອງການຂຶ້ນທະບຽນສະຖານທີ່ ເຂົ້າໃນບັນຊີ ລາຍຊື່ຂອງມໍລະດົກໂລກ.

ຄະນະກຳມະການມໍລະດົກໂລກປະຊຸມກັນປີລະໜຶ່ງຄັ້ງ ແລະ ມີສິ່ໜ້າທີ່ຕົ້ນຕໍຄື:

- ກຳນົດມໍລະດົກໂລກ ດ້ວຍການເລືອກເຟັ້ນສະຖານທີ່ວັດທະນະທຳ ແລະ ທຳມະຊາດ ເພື່ອຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ. ຄະນະກຳມະການມີອົງການ ICOMOS ແລະ UICN ເປັນຜູ້ຊ່ວຍຄົ້ນຄວ້າ ແລະ ເຮັດບົດປະເມີນການຂຶ້ນທະບຽນ ທີ່ປະເທດສະມາຊິກສະເໜີ. ສູນກາງຄົ້ນຄວ້າເພື່ອການອະນຸລັກ ແລະ ການບູລະນະມໍລະດົກວັດທະນະທຳ (ICCROM) ມີຄວາມເຫັນໃຫ້ຄະນະກຳມະການ (ຕົວຢ່າງ: ໃນການຝຶກອົບຮົມກ່ຽວກັບ ມໍລະດົກວັດທະນະທຳ ແລະ ເຕັກນິກການອະນຸລັກ).
- ພິຈາລະນາບົດລາຍງານກ່ຽວກັບ ສະພາບການອະນຸລັກສະຖານທີ່ມໍລະດົກໂລກ ແລະ ຮຽກຮ້ອງໃຫ້ປະເທດສະມາຊິກ ວາງມາດຕະການສະເພາະ ເພື່ອການອະນຸລັກໃນເມື່ອສະຖານທີ່ ນັ້ນຫາກບໍ່ໄດ້ຮັບການຄຸ້ມຄອງ ແລະ ປົກປັກຮັກສາຢ່າງຖືກຕ້ອງ.
- ຕັດສິນຮັບຮອງ ຫຼື ບໍ່ຮັບຮອງສະຖານທີ່ໃນບັນຊີລາຍຊື່ ມໍລະດົກໂລກ ຊຶ່ງມີຄວາມສ່ຽງຕໍ່ການຖືກທຳລາຍ ຫຼັງການປຶກສາຫາລືກັບປະເທດສະມາຊິກ.
- ບໍລິຫານກອງທຶນຂອງມໍລະດົກ ແລະ ກຳນົດວິທີຊ່ວຍເຫຼືອດ້ານເຕັກນິກ ແລະ ດ້ານການເງິນແກ່ປະເທດທີ່ຮ້ອງຂໍການຊ່ວຍເຫຼືອ ເພື່ອອະນຸລັກມໍລະດົກແຫ່ງຊາດຂອງຕົນ.

ອົງການອຸຍແນດສະໂກ ປະກອບກອງເລຂາຂຶ້ນເພື່ອປະຕິບັດສົນທິສັນຍາ ຊຶ່ງເອີ້ນສູນກາງມໍລະດົກໂລກ ແລະມີໜ້າທີ່ຊ່ວຍປະເທດສະມາຊິກ ໃນການປະຕິບັດສົນທິສັນຍາໃນແຕ່ລະວັນ, ນອກນີ້ ສູນດັ່ງກ່າວຍັງສະເໜີ ແລະ ປະຕິບັດຕາມການຕົກລົງ ຂອງຄະນະກຳມະການມໍລະດົກໂລກຄືກັນ.

## ກິດຈະກຳ ທີ 11 ສຳລັບນັກຮຽນ

## ກອງປະຊຸມຄະນະກຳມະການມໍລະດົກແຫ່ງຊາດ.

### ວັດຖຸປະສົງ: ເຂົ້າໃຈວິທີການໃນການຕັດສິນກ່ຽວກັບການສະເໜີຂຶ້ນທະບຽນສະຖານທີ່ມໍລະດົກ.

ຈັດກິດຈະກຳນີ້ ເພື່ອໃຫ້ນັກຮຽນສະແດງບົດບາດ ເປັນຄະນະກຳມະການມໍລະດົກແຫ່ງຊາດ. ຄະນະກຳມະການຄົ້ນຄວ້າຄຳຮ້ອງສະເໜີໂດຍໝູ່ນັກຮຽນໃນຫ້ອງ ເພື່ອຂຶ້ນທະບຽນສະຖານທີ່ໃນທ້ອງຖິ່ນ ຫຼື ເຂດຂອງເຂົາເຈົ້າເພື່ອ ຕັດສິນວ່າຄວນປົກປັກຮັກສາ ຫຼື ບໍ່.

- ເລືອກຕັ້ງປະທານໜຶ່ງທ່ານ, ຮອງປະທານສອງທ່ານ ແລະ ສະໝຽນໜຶ່ງທ່ານ. ຄວນພະຍາຍາມໃຫ້ມີຜູ້ຊາຍ ແລະ ຜູ້ຍິງເທົ່າກັນ. ນັກຮຽນສາມຄົນນັ້ນຕ້ອງກຽມເນື້ອໃນການສົນທະນາແລ້ວ ໂຕ້ວາທີກັນ.
- ສັບຊ້ອນນັກຮຽນທີ່ເຫຼືອເປັນຫຼາຍຈຸແລ້ວບອກໃຫ້ແຕ່ລະຈຸຂຽນຄຳຮຽກຮ້ອງ ເພື່ອສົ່ງໃຫ້ຄະນະກຳມະການທີ່ປະຊຸມກັນຄົບຄະນະເພື່ອຕັດສິນວ່າ ຄວນຂຶ້ນທະບຽນໃນບັນຊີລາຍຊື່ ມໍລະດົກແຫ່ງຊາດ ຫຼື ບໍ່.
- ຄົ້ນຄວ້າຄຳຮ້ອງຂຶ້ນທະບຽນ ແລະ ວິເຄາະຈຸດຕ່າງໆດັ່ງນີ້:

- ສະຖານທີ່ມີຄຸນຄ່າສຳລັບທ້ອງຖິ່ນ, ຂົງເຂດ, ປະເທດ ຫຼື ສາກົນບໍ່?
- ສະຖານທີ່ໄດ້ຮັບການປົກປັກຮັກສາພຽງພໍບໍ່?
- ມີກົດໝາຍເພື່ອປົກປັກຮັກສາສະຖານທີ່ສະເພາະໃດໜຶ່ງ?
- ມີແຜນການການຄຸ້ມຄອງ ແລະ ການອະນຸລັກສະຖານທີ່ສະເພາະໃດໜຶ່ງບໍ່?
- ໄດ້ເປີກສານຳປະຊາຊົນທ້ອງຖິ່ນເພື່ອຮູ້ຈັກວ່າເຂົາເຈົ້າຮັບຮູ້ນຳການສະເໜີຂຶ້ນທະບຽນສະຖານທີ່ບໍ່?

- ສະເໜີການປະເມີນຜົນຂອງຈຸເພື່ອໂຕ້ວາທີກັນ. ຕັດສິນວ່າ ສະຖານທີ່ໃດມີຄຸນຄ່າລະດັບຊາດ. ໃຫ້ນັກຮຽນລົງມະຕິວ່າ ຄວນຈະເອົາສະຖານທີ່ແຫ່ງໃດຕື່ມ ເຂົ້າໃນບັນຊີລາຍຊື່ມໍລະດົກແຫ່ງຊາດ. ຈາກນັ້ນ ຖາມເຂົາເຈົ້າວ່າ ຄວນບັນຈຸສະຖານທີ່ໜຶ່ງ ຫຼື ສອງແຫ່ງໃນບັນຊີລາຍຊື່ມໍລະດົກໂລກ ຫຼື ບໍ່.

ກິດຈະກຳທີ 12 ສຳລັບນັກຮຽນ

## ສູນກາງປະຫວັດສາດຂອງຊັງຕາ ກະຣຸດເຊີຢູ່ເມືອງ ມົມປອກເຊີ ປະເທດໂກລົມບີ (Santa Cruz de Mompox, Colombie).

ວັດຖຸປະສົງ: ເຂົ້າໃຈດີ ຂັ້ນຕອນຂອງວິທີການເພື່ອຂຶ້ນທະບຽນສະຖານທີ່ເຂົ້າ ໃນບັນຊີລາຍຊື່ ມໍລະດົກໂລກ.

ເພື່ອໃຫ້ນັກຮຽນເຂົ້າໃຈຂັ້ນຕອນ ການສະເໜີຂຶ້ນທະບຽນ ສະຖານທີ່ເຂົ້າໃນບັນຊີລາຍຊື່ມໍລະດົກໂລກ, ພວກເຮົາຈະຄົ້ນຄວ້າລະອຽດຄຳຮ້ອງຂໍຂຶ້ນທະບຽນ ຊຶ່ງປະເທດໂກລົມບີຍື່ນໃນ 1994 ແລະ ໄດ້ຮັບການຕົກລົງເຫັນດີໃນ 1995.

- ໃຫ້ຄຳຊີ້ແຈງແກ່ນັກຮຽນ ດັ່ງນີ້:

ເຫດຜົນຂອງການຂຶ້ນທະບຽນສະຖານທີ່ໃນບັນຊີລາຍຊື່ມໍລະດົກໂລກ ມີຜົນງານດ້ານສິລະປະອັນໂດດເດັ່ນຫຼາຍຢ່າງ ຢູ່ອາເມລິກາ ລາຕິນໃນສະໄໝຫົວເມືອງຂຶ້ນຂອງແອດສະປາຍ. ເມືອງມົມປອກເຊີແມ່ນຕົວຢ່າງດຽວຂອງຜັງເມືອງທີ່ບໍ່ສາມາດພົບເຫັນຢູ່ບ່ອນອື່ນ ໃນຂົງເຂດນີ້.

ປະເພດຂອງມໍລະດົກດ້ານວັດທະນະທຳ (ມາດຕາ 1 ຂອງສົນທິສັນຍາ): ກຸ່ມອາຄານ

ປະຫວັດຄວາມເປັນມາ

ຊູອັນເດີ ຊັງຕາກະຣຸດເຊີ ຊຶ່ງເປັນຜູ້ປົກຄອງເມືອງກາກຕາແຊນ (Carthagène) ໄດ້ສ້າງຕັ້ງເມືອງມົມປອກເຊີ (Mompox) ໃນປີ 1540 ແລະ ໄດ້ຕັ້ງຊື່ເມືອງຕາມຊື່ຂອງຕົນເອງ. ຕົວເມືອງໄດ້ຂະຫຍາຍອອກຕາມແຄມຝັ່ງແມ່ນ້ຳມັກດາເລນາ (Magdalena) ແລະ ມີຄວາມສຳຄັນດ້ານການຂົນສົ່ງ ແລະ ການຄ້າ: ແມ່ນ້ຳ ເປັນເສັ້ນທາງການແລກປ່ຽນລະຫວ່າງ ທ່າເຮືອຢູ່ ກາກຕາແຊນ ກັບໃຈກາງຂອງປະເທດ. ພ້ອມກັນນີ້ ຕົວເມືອງຍັງແມ່ນສູນລວມຂອງຕາໜ່າງການຂົນສົ່ງທາງບົກຕື່ມອີກ. ເມືອງມົມປອກເຊີ ໄດ້ຮັບການພັດທະນາຈາກການປະກົດຕົວຂອງຊົນຊັ້ນໃນສັງຄົມທີ່ນຳພາຄົນພື້ນເມືອງ ແລະ ຮັບໃຊ້ລະບອບຫົວເມືອງຂຶ້ນ, ພວກເຂົາດຳລົງຊີວິດດ້ວຍອະພິສິດໃນການຄອບຄອງດິນ ແລະ ໃຊ້ຊາວອິນເດຍແດງເປັນແຮງງານຜະລິດໃນຮູບແບບຂ້າທາດ. ຈາກການສູນເສຍທີ່ດິນ ຊາວອິນເດຍແດງຈຶ່ງຖືກກີດກັ້ນໃຫ້ຕັ້ງຖິ່ນຖານຢູ່ຕາມພື້ນທີ່ຈຳກັດ. ສະພາບເຊັ່ນນີ້ ບອກກັບເງື່ອນໄຂດ້ານພູມອາກາດ ແລະ ພູມສາດບໍ່ເອື້ອອຳນວຍໃຫ້ກະສິກຳຂະຫຍາຍຕົວ, ເຖິງວ່າຕົວເມືອງບໍ່ມີພື້ນຖານເສດຖະກິດ-ສັງຄົມແໜ້ນໜາ ແລະ ຂະຫຍາຍຕົວຊ້າທີ່ສຸດກໍ່ຕາມ. ແຕ່ໃນດ້ານອື່ນ ຕົວເມືອງໄດ້ດຶງດູດເອົາ ພາກສ່ວນຂອງພົນລະເມືອງຊຶ່ງເປັນກຸ່ມ ຄົນທີ່ບໍ່ເພິ່ງປາຖະໜາ ແລະ ດຳລົງຊີວິດດ້ວຍການຄ້າຂາຍເຖື່ອນ. ເມືອງໄດ້ຂະຫຍາຍຕົວໃນໄລຍະລ່າເມືອງຂຶ້ນ ຍ້ອນວ່າກຸ່ມຊາວເມືອງຈຳນວນໜຶ່ງທີ່ອຸດົມຮັ່ງມີໄດ້ມາຈາກການເຮັດກະສິກຳ ແລະ ການຄ້າ. ຈຳນວນໜຶ່ງໄດ້ຈາກກາກຕາແຊນ ເພື່ອມາຕັ້ງຖິ່ນຖານຢູ່ມົມປອກເຊີ ແລະ ໄດ້ນຳເອົາຊ່າງຫັດຖະກຳ ແລະ ກຳມະກອນທີ່ຕອບສະໜອງຄວາມສຸກສະບາຍຂອງຕົນມາດ້ວຍ. ນັກບວດ ແລະ ສາສະນິກະຊົນ ໄດ້ປະກອບເຂົ້າກັບພາກສ່ວນອື່ນເປັນຊົນຊັ້ນປົກຄອງ.

## ການຄຸ້ມຄອງ ແລະ ການປົກປັກຮັກສາ.

**ຂໍ້ກຳນົດ:** ບຸກຄົນ, ການຈັດຕັ້ງ, ໂບດໂຣມັນກາໂຕລິກ ແລະ ອຳນາດການປົກຄອງທ້ອງຖິ່ນ ເປັນເຈົ້າຂອງຊັບສິນບັດ. ສູນກາງປະຫວັດນີ້ ໄດ້ຮັບການສະຖາປະນາໃຫ້ເປັນອານຸສອນສະຖານແຫ່ງຊາດ ແລະ ກົດລະບຽບກ່ຽວກັບຕົວເມືອງໄດ້ຮັບການປະຕິບັດຕາມຂໍ້ກຳນົດກ່ຽວກັບການກໍ່ສ້າງ ຂອງເທດສະບານ ແຕ່ 1970.

**ການຄຸ້ມຄອງ:** ບໍ່ມີແຜນການຄຸ້ມຄອງສູນກາງປະຫວັດສາດແນວໃດກໍ່ຕາມ ຂໍ້ກຳນົດກ່ຽວກັບການກໍ່ສ້າງ ແລະ ກົດລະບຽບກ່ຽວກັບຕົວເມືອງທີ່ມີຜົນສັກສິດເຮັດໃຫ້ຕົວເມືອງໄດ້ຮັບການຄຸ້ມຄອງເປັນຢ່າງດີ.

**ການອະນຸລັກ:** ວຽກງານໃຫຍ່ຂອງການບູລະນະ ແລະ ການອະນຸລັກໄດ້ສຳເລັດໃນທົດສະວັດ ທີ່ຜ່ານມາ. ສູນກາງປະຫວັດສາດໄດ້ຮັບການປົກປັກຮັກສາໄວ້ເປັນສ່ວນໃຫຍ່. ສ່ວນບຸກຄົນມີຄວາມພາກພູມໃຈກັບກຳມະສິດ ທີ່ຕົນປົກປັກຮັກສາໄວ້ໃຫ້ຢູ່ໃນສະພາບດີໂດຍລັດຖະບານບໍ່ໄດ້ເຂົ້າຮ່ວມນຳ.

**ລັກສະນະດັ່ງເດີມ:** ການທີ່ເມືອງມົມປອກເຊີ ໄດ້ສູນເສຍຄວາມສຳຄັນ ດ້ານເສດຖະກິດ ໃນສະຕະວັດ ທີ 19 ບໍ່ໄດ້ໝາຍວ່າເມືອງນີ້ ໄດ້ຮັບຄວາມກົດດັນຈາກກະແສການສ້າງຕັ້ງສູນກາງປະຫວັດສາດ ຢູ່ເມືອງອື່ນໆ ທີ່ຄ້າຍຄືກັນ ໃນທະວີບອາເມລິກາລາຕິນ. ຖະໜົນຫົນທາງແລະວັດສະດຸຂອງການກໍ່ສ້າງໃນເບື້ອງຕົ້ນໄດ້ຮັບການອະນຸລັກໄວ້. ຮູບແບບດ້ານສະຖາປັດຕະຍະກຳ ແລະ ວັດສະດຸຕ່າງໆ ຍັງຄົງຮັກສາໄວ້ ລັກສະນະດັ່ງເດີມຂອງສູນກາງປະຫວັດສາດແຫ່ງນີ້.

### ການປະເມີນຜົນໂດຍ ອີໂກມົດເຊີ

ອີໂກມົດເຊີ (ICOMOS) ໄດ້ໄປຢ້ຽມຢາມມົມປອກເຊີໃນເດືອນ ກຸມພາ 1995 ແລະ ໄດ້ສະເໜີແນະຕໍ່ຄະນະກຳມະການມໍລະດົກໂລກ ໃຫ້ຂຶ້ນທະບຽນບັນຊີມໍລະດົກໂລກ ບົນພື້ນຖານຂອງມາດຖານ ຂໍ້ (IV) ແລະ (V).

ອີໂກມົດເຊີ (ICOMOS) ໄດ້ສະເໜີຄຳແນະນຳຫຼາຍຢ່າງກ່ຽວກັບການອະນຸລັກເມືອງມົມປອກເຊີ ຕໍ່ອຳນາດການປົກຄອງຂອງໂກລົມບີ. ຂໍ້ສະເໜີທີ່ໄດ້ກາຍເປັນບ່ອນອີງໃຫ້ແກ່ຄະນະກຳມະການມໍລະດົກໂລກ ກວມເອົາການບູລະນະຮູບແຕ້ມຢູ່ດ້ານນອກຂອງຕຶກ ແລະ ອາ

ຄານຕ່າງໆ ຂອງສູນກາງປະຫວັດສາດ, ການລຶບລ້າງຕະຫຼາດໃໝ່ ແລະ ການມ້າງສິ່ງປຸກສ້າງຫຼັງການສ້າງຕະຫຼາດ, ການຫັນອາຄານຢູ່ຕະຫຼາດເປັນດ່ານເຮືອ ແລະ ຫ້ອງການທ່ອງທ່ຽວ, ການສືບຕໍ່ວຽກງານທຳຄວາມສະອາດແຄມຝັ່ງແມ່ນ້ຳ, ການເລືອກວັດສະດຸ ເພື່ອປູຖະໜົນຢູ່ສູນກາງປະຫວັດສາດ, ການສ້າງແຜນທີ່ທ່ອງທ່ຽວຢ່າງລະອຽດ ແລະ ການກຳນົດຄືນເຂດແດນໃຕ້ຂອງສະຖານທີ່ມໍລະດົກ.

ກ່ອນກອງປະຊຸມໃນເດືອນກໍລະກົດ 1995 ຂອງຄະນະກຳມະການມໍລະດົກໂລກ ICOMOS ໄດ້ຮັບຮອງເອົາທຸກຂໍ້ສະເໜີ ຈາກອຳນາດການປົກຄອງຢູ່ໂກລົມບີ.

## ກອງປະຊຸມຂອງຫ້ອງການຄະນະກຳມະການມໍລະດົກໂລກ, ກໍລະກົດ 1995 .

ICOMOS ໄດ້ແຈ້ງໃຫ້ແຈ້ງການຄະນະກຳມະການຮູ້ວ່າ ຕົນໄດ້ຮັບແຜນຜັງເມືອງໃໝ່ ຈາກອຳນາດການປົກຄອງໂກລົມບີ ທີ່ໄດ້ປັບປຸງຂອບເຂດຂອງສະຖານທີ່ ມໍລະດົກຕາມການສະເໜີແນະຂອງ ICOMOS. ຫ້ອງການຕົກລົງໃຫ້ຄະນະກຳມະການຂຶ້ນທະບຽນສູນກາງປະຫວັດສາດ Santa Cruz de Mompox ເຂົ້າໃນບັນຊີລາຍຊື່ມໍລະດົກໂລກຕາມມາດຖານມໍລະດົກດ້ານວັດທະນະທຳ.

## ກອງປະຊຸມຂອງຄະນະກຳມະການມໍລະດົກໂລກ, ທັນວາ 1995 .

ຄະນະກຳມະການສະຫຼຸບວ່າ ສູນກາງປະຫວັດສາດຊັງຕາກະຣຸດເຊີມົມປອກເຊີ ເປັນຕົວຢ່າງດີເລີດ ໃນການສ້າງອະນານິຄົມ ຂອງແອດສະປາຍຢູ່ແຄມຝັ່ງຂອງແມ່ນ້ຳໃຫຍ່ ຊຶ່ງເປັນຈຸດຍຸດທະສາດ ແລະ ສູນກາງການຄ້າທີ່ຟຸ່ງເຟືອງ ແລະ ພາບພົດດັ່ງກ່າວນີ້ ຍັງຖືກຮັກສາໄວ້ຈົນເຖິງເທົ່າທຸກວັນນີ້. ຄະນະກຳມະການຕົກລົງຂຶ້ນທະບຽນສູນກາງປະຫວັດສາດຊັງຕາກະຣຸດເຊີ ມົມປອກເຊີ ເຂົ້າໃນບັນຊີລາຍຊື່ມໍລະດົກໂລກ ຕາມມາດຖານ (IV) ແລະ (V) ຂອງມໍລະດົກດ້ານວັດທະນະທຳ.

ອຳນາດການປົກຄອງຢູ່ໂກລົມບີ ໄດ້ເຮັດຄຳຮ້ອງຂໍເງິນ 30,000 ໂດລາສະຫະລັດນຳກອງທຶນມໍລະດົກໂລກ ເພື່ອສຶກສາຜົນກະທົບຂອງການທ່ອງທ່ຽວຕໍ່ສະຖານທີ່ມໍລະດົກໂລກແຫ່ງນີ້. ຄະນະກຳມະການມໍລະດົກໂລກເຫັນດີຕາມຄຳສະເໜີ.

## ຂັ້ນຕອນ:

1994 : ປະເທດໂກລົມບີ ຍື່ນຄຳສະເໜີຂຶ້ນທະບຽນເມືອງມົມປອກເຊີ ຕໍ່ສູນກາງມໍລະດົກໂລກຂອງອຸຍແນດສະໂກ.

ກຸມພາ 1995: ການປະເມີນຜົນຂອງ ICOMOS

ກໍລະກົດ 1995: ຫ້ອງການມໍລະດົກໂລກ ຄົ້ນຄວ້າຄຳສະເໜີຂຶ້ນທະບຽນ.

ທັນວາ 1995: ຄະນະກຳມະການມໍລະດົກໂລກຂຶ້ນທະບຽນເມືອງມົມປອກເຊີ ເຂົ້າໃນບັນຊີລາຍຊື່ມໍລະດົກໂລກ ຕາມມາດຖານ (IV) ແລະ (V) ຂອງມໍລະດົກວັດທະນະທຳ.

ຄະນະກຳມະການອະນຸມັດເງິນ 30.000 ໂດລາ ເພື່ອສຶກສາຜົນກະທົບຂອງການທ່ອງທ່ຽວຕໍ່ສະຖານທີ່ມໍລະດົກໂລກ.

- ສົນທະນາກັບນັກຮຽນວ່າດ້ວຍຂັ້ນຕອນຕ່າງໆ ຂອງການສະເໜີຂຶ້ນທະບຽນສະຖານທີ່ ໃນບັນຊີ ລາຍຊື່ມໍລະດົກໂລກ. ຮ່ວມກັບນັກຮຽນເລືອກສະຖານທີ່ໃດໜຶ່ງຂອງທ້ອງຖິ່ນ ຫຼື ຂອງປະເທດທີ່ອາດມີຄຸນຄ່າພິເສດລະດັບໂລກແລ້ວ ສະເໜີໃຫ້ເຂົາເຈົ້າສ້າງແຜນປະຕິບັດງານ ເພື່ອສາມາດຂຶ້ນທະບຽນສະຖານທີ່ນັ້ນ ເຂົ້າໃນບັນຊີລາຍຊື່ມໍລະດົກໂລກ.

ສະຫຼຸບຫຍໍ້:

ພາຍຫຼັງທີ່ໄດ້ກຽມບັນຊີການສະເໜີແລ້ວ, ລັດທີ່ກ່ຽວຂ້ອງສະເໜີການຂຶ້ນທະບຽນສະຖານທີ່ເຂົ້າໃນບັນຊີລາຍຊື່ມໍລະດົກໂລກ ໂດຍສົ່ງສຳນວນຄຳຮ້ອງຄົບຊຸດໃຫ້ສູນກາງມໍລະດົກໂລກ. ICOMOS ແລະ/ຫຼື IUCN ປະເມີນຄຳສະເໜີ ແລະ ໃຫ້ຄຳແນະນຳ. ຄະນະກຳມະການມໍລະດົກໂລກ ຕັດສິນໃຈຂັ້ນສຸດທ້າຍການບັນຈຸສະຖານທີ່ເຂົ້າໃນບັນຊີລາຍຊື່ມໍລະດົກໂລກ.

ມາດຖານຕົ້ນຕໍໃນການຄັດເລືອກທີ່ນຳໃຊ້ ເພື່ອຕົກລົງຮັບຮອງເອົາສະຖານທີ່ໃດໜຶ່ງ ຊຶ່ງມີເງື່ອນໄຂຂຶ້ນທະບຽນເຂົ້າໃນບັນຊີລາຍຊື່ມໍລະດົກໂລກ. ນອກນີ້ ສະຖານທີ່ຕ້ອງໄດ້ຮັບການປົກປັກຮັກສາ ທີ່ຕອບສະໜອງຕາມມາດຖານວ່າດ້ວຍລັກສະນະດັ້ງເດີມ ສຳລັບ ວັດທະນະທຳສະຖານ ແລະ ຕາມເງື່ອນໄຂຄວາມຄົບຖ້ວນ ສຳລັບທິວທັດທຳມະຊາດ.

## ການຕິດຕາມສະພາບການປົກປັກຮັກສາສະຖານທີ່ມໍລະດົກໂລກ.

ການປົກປັກຮັກສາມໍລະດົກໂລກ ແມ່ນຂະບວນການຕໍ່ເນື່ອງ. ປະເທດສະມາຊິກຂອງສົນທິສັນຍາ, ICOMOS ແລະ/ຫຼື IUCN ຕ້ອງເຮັດບົດສະຫຼຸບວ່າດ້ວຍການປົກປັກຮັກສາສະຖານທີ່, ມາດຕະການເພື່ອປົກປັກຮັກສາ ແລະ ຄວາມພະຍາຍາມເພື່ອສ້າງຈິດສຳນຶກຂອງມວນຊົນ ກ່ຽວກັບຄຸນຄ່າຂອງມໍລະດົກວັດທະນະທຳ ແລະ ທຳມະຊາດ ແລະ ການອະນຸລັກໃຫ້ຄະນະກຳມະການມໍລະດົກໂລກຢ່າງສະໝ່ຳສະເໝີ.

ສະນັ້ນ, ປະເທດສະມາຊິກຂອງສົນທິສັນຍາ ຕ້ອງມີຄວາມຮັບຜິດຊອບຢ່າງເຂັ້ມງວດ. ຖ້າບໍ່ປະຕິບັດພັນທະຂອງຕົນຕາມສົນທິສັນຍາ ແລະ ສະຖານທີ່ໃນບັນຊີລາຍຊື່ມໍລະດົກໂລກ ແມ່ນຢູ່ຂັ້ນອັນຕະລາຍ. ມັນສົ່ງຜົນຕໍ່ການຖືກລົບອອກຈາກບັນຊີລາຍຊື່ມໍລະດົກໂລກ. ສົນທິສັນຍາ ມີຂໍ້ກຳນົດການລົງໂທດໄວ້ຢ່າງຈະແຈ້ງ. ມາເຖິງປະຈຸບັນຍັງບໍ່ທັນມີສະຖານທີ່ໃດຖືກລົບຊື່ອອກຈາກບັນຊີລາຍຊື່ນີ້ເທື່ອ.

ເມື່ອອຸຍແນດສະໂກໄດ້ຮັບຄຳກ່າວເຕືອນວ່າ ສະຖານທີ່ຂອງມໍລະດົກໂລກ ພວມປະເຊີນກັບໄພທີ່ອາດເປັນອັນຕະລາຍ ແລະ ຖ້າຄຳກ່າວເຕືອນຫາກມີເຫດຜົນ ແລະ ການຂົ່ມຂູ່ນັ້ນຫາກຮ້າຍແຮງ, ສະຖານທີ່ນັ້ນ ຈະຖືກຈັດເຂົ້າໃນບັນຊີລາຍຊື່ສະຖານທີ່ມໍລະດົກໂລກ ທີ່ພວມຢູ່ໃນຂັ້ນອັນຕະລາຍ. ບັນຊີລາຍຊື່ນີ້ ມີຈຸດປະສົງເພື່ອດຶງດູດຄວາມສົນໃຈຂອງວົງຄະນະຍາດສາກົນຕໍ່ປັດໃຈທຳມະຊາດ ຫຼື ພຶດຕິກຳຂອງມະນຸດທີ່ທຳລາຍເອກະລັກ ຂອງສະຖານທີ່ ຊຶ່ງໄດ້ກຳນົດໄວ້ກ່ອນການຂຶ້ນທະບຽນ. ສະຖານທີ່ໃນຂັ້ນອັນຕະລາຍ ທີ່ບັນທຶກໄວ້ໃນບັນຊີລາຍຊື່ໄດ້ຮັບມາດຕະການ ເພື່ອການຊ່ວຍເຫຼືອຮີບດ່ວນ ແລະ ການປົກປັກຮັກສາພິເສດ.

ຖ້າແມ່ນໃນສະຖານະການຮີບດ່ວນ ແລະ ພິເສດດັ່ງຢູ່ເມືອງ ດູບຣົບນິກ (Dubrovnik) ໃນ 1991, ຕົວຢ່າງໃນກໍລະນີການປະກາດສົງຄາມ, ຄະນະກຳມະການມໍລະດົກໂລກ ມີສິດຂຶ້ນທະບຽນສະຖານທີ່ໃນບັນຊີລາຍຊື່ມໍລະດົກໃນຂັ້ນອັນຕະລາຍ ໂດຍປະສະຈາກຄຳຂໍຮ້ອງຢ່າງເປັນທາງການ ຂອງປະເທດສະມາຊິກທີ່ກ່ຽວຂ້ອງ.

## ບັນຊີລາຍຊື່ມໍລະດົກໂລກໃນຂັ້ນອັນຕະລາຍ.

ການຂຶ້ນທະບຽນສະຖານທີ່ໃດໜຶ່ງ ໃນບັນຊີລາຍຊື່ມໍລະດົກໂລກ ໃນຂັ້ນອັນຕະລາຍ ແມ່ນການກະທຳ ເພື່ອດຶງດູດຄວາມສົນໃຈຂອງໂລກຕໍ່ສະຖານທີ່ນັ້ນ ລວມທັງມາດຕະການເພື່ອ

ການຊ່ວຍເຫຼືອຮີບດ່ວນໃນການປົກປັກຮັກສາ ຖ້າຄຸນຄ່າທີ່ກຳນົດໃຫ້ຂຶ້ນທະບຽນ ຫາກຕົກຢູ່ໃນຂັ້ນອັນຕະລາຍ.

ໃນເດືອນທັນວາ 1997, ໃນບັນຊີລາຍຊື່ມໍລະດົກໂລກມີຊາວຫ້າສະຖານທີ່ (ເກົ້າວັດທະນະທຳສະຖານ ແລະ ສິບຫົກທຳມະຊາດ) ຕົກໃນຂັ້ນອັນຕະລາຍເຊັ່ນ:

| | |
|---|---|
| ອານບານີ | ບູແຕຣງຕີ (Butrinti) |
| ເບແນັງ | ພະລາຊະວັງອາໂບເມ (Palais royaux d'Abomey) |
| ບູນກາລີ | ປ່າສະຫງວນ ຊະເຣບານາ (Réserve naturelle de Srebarna) |
| ກຳປູເຈຍ | ອັງກໍວັດ (Angkor) |
| ກິດຕີວົວ ແລະ ກີເນ | ປ່າສະຫງວນຂອງໜົດໜ່ວຍພູນິມບາ (Réserve naturelle integrale du Mont Nimba). |
| ໂກຣອາຊີ | ຕົວເມືອງເກົ່າຂອງດຸຍບຣົບນິກ (Vieille ville de Dubrovnick) |
| ເອກົວດໍ | ອຸທິຍານແຫ່ງຊາດ ຊັງເກ (Parc national Sangay) |
| ສະຫະລັດອາເມລິກາ | ອຸທິຍານແຫ່ງຊາດ ແອເວີເກລດ (Parc national des Everglades)<br>ອຸທິຍານແຫ່ງຊາດ ແຢນໂລສະໂຕນ (Parc national de Yellow stone) |
| ເອຕີໂອປີ | ອຸທິຍານແຫ່ງຊາດໄຊແມນ (Parc national du Simen) |
| ຮົງດູຣັດ | ເຂດອະນຸລັກ ຊີວະໂລກ ຣີໂອປລາຕາໂນ<br>(Réserve de la biosphere de Rio Platano) |
| ອິນເດຍ | ເຂດອະນຸລັກສັດຢູ່ມານັດເຊີ (Sanctuaire de faune de Manas) |
| ເຊຣູຊາແຣມ<br>(ສະຖານທີ່ສະເໜີໂດຍ ປະເທດຊອກດານີ) | ຕົວເມືອງເກົ່າ ແລະ ກຳແພງຂອງເຊຣູຊາແຣມ<br>(Vieille ville de Jérusalem et ses remparts) |

| | |
|---|---|
| ມາລີ | ເມືອງຕົມບຸກຕູ (Tombouctou) |
| ນີແຊ | ເຂດອະນຸລັກທຳມະຊາດ ແອ ແລະ ເຕເຣເນ (Réserves naturelles de l'Aïr et du Ténéré) |
| ໂອມານ | ປ້ອມ ບາລາ (Fort de Bahla) |
| ເປຣູ | ເຂດບູຮານວິທະຍາ ຊານຊານ (Zone archéologique de ChanChan) |
| ໂປໂລຍ | ບໍ່ເກືອ ຢູ່ເມືອງວີລິດສະກາ (Mines de sel de Wieliczka) |
| ສາທາລະນະລັດອາຟຣິກາກາງ | ອຸທິຍານແຫ່ງຊາດ ມາໂນໂວ-ກຸນດາ-ແຊງຟະລໍຣິດເຊີ (Parc national du Manovo-Gounda-St Floris) |
| ສາທາລະນະລັດກົງໂກ ປະຊາທິປະໄຕ | ອຸທິຍານແຫ່ງຊາດ ວີຣຸງກາ(Parc national des Virunga)<br>ອຸທິຍານແຫ່ງຊາດ ກາຣັມກາ(Parc national de la Garamba)<br>ເຂດອະນຸລັກສັດຢູ່ ໂອກາປີ (Réserve de faune a Okapis)<br>ອຸທິຍານແຫ່ງຊາດ ກາຮູຊີ-ບີເອກາ (Parc national de kahuzi-Biega) |
| ຕູຍເນຊີ | ອຸທິຍານແຫ່ງຊາດ ອິດສະເກີນເລີ (Parc national de l'Ichkeul) |
| ຢູໂກດສະລາວີ | ເຂດທຳມະຊາດ ແລະ ວັດທະນະທຳ-ປະຫວັດສາດຂອງເມືອງໂກຕໍ (Contrée naturelle et culturo-historique de Kotor) |

ອຸທິຍານແຫ່ງຊາດ ແຢນໂລສະໂຕນ ຢູ່ສະຫະລັດອາເມລິກາ ເປັນຕົວຢ່າງທີ່ດີຂອງວິທີການຂຶ້ນທະບຽນສະຖານທີ່ໃນບັນຊີລາຍຊື່ມໍລະດົກໂລກ ໃນຂັ້ນອັນຕະລາຍຊຶ່ງສາມາດດຶງດູດຄວາມສົນໃຈ ຂອງ ມວນຊົນໃນປະເທດ ແລະ ສາກົນ ຕໍ່ຄວາມຕ້ອງການຮີບດ່ວນໃນການປົກປັກຮັກສາອຸທິຍານແຢນໂລສະໂຕນທີ່ຕົກຢູ່ໃນອັນຕະລາຍຮ້າຍແຮງຍິ່ງໆຂຶ້ນ (ໂດຍສະເພາະຍ້ອນການທ່ອງທ່ຽວ ແລະ ໂຄງການຂຸດຄົ້ນບໍ່ແຮ່ຢູ່ໃກ້ກັບອຸທິຍານ).

ກິດຈະກຳທີ 13 ສຳລັບນັກຮຽນ

## ອຸທິຍານແຫ່ງຊາດ ແຢນໂລສະໂຕນ, ສະຫະລັດອາເມລິກາ

ວັດຖຸປະສົງ: ເຂົ້າໃຈດີ ສາຍເຫດ ແລະ ເປັນຫຍັງສະຖານທີ່ມໍລະດົກໂລກຈຶ່ງບັນຈຸເຂົ້າ ໃນບັນຊີລາຍຊື່ ມໍລະດົກໂລກໃນຂັ້ນອັນຕະລາຍ.

ໃຫ້ຄຳຊີ້ແຈງແກ່ນັກຮຽນດັ່ງນີ້:

### ລຳດັບເຫດການ (Chronologie)

1973 ສະຫະລັດອາເມລິກາເປັນປະເທດທຳອິດທີ່ຮັບຮູ້ ສັດຕະຍາບັນ ວ່າດ້ວຍສົນທິສັນຍາ ມໍລະດົກໂລກ.

1978 ອຸທິຍານແຫ່ງຊາດ ແຢນໂລສະໂຕນ ແມ່ນອະທິຍານທຳອິດຂອງໂລກ ໃນສິບສອງອຸທິຍານ ທີ່ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ.

1995 ຄະນະກຳມະການ ມໍລະດົກໂລກ ຕັດສິນໃຈຂຶ້ນທະບຽນສະຖານທີ່ນີ້ ເຂົ້າໃນບັນຊີລາຍຊື່ມໍລະດົກໂລກ ໃນຂັ້ນອັນຕະລາຍ.

### ຄຸນຄ່າຂອງສາຍພູແຢນໂລສະໂຕນ ໃນຖານະມໍລະດົກໂລກ.

ອຸທິຍານແຫ່ງຊາດ ແຢນໂລສະໂຕນມີເນື້ອທີ່ກວ້າງໃຫຍ່ ແຕ່ຕາເວັນຕົກ-ສຽງເໜືອ ຂອງ ໄວໂອມິງ ແລະ ໃກ້ກັບ ລັດມົນຕານາ ແລະ ໄອດາໂຮ. ສ່ວນໃຫຍ່ຂອງເນື້ອທີ່ປະກອບດ້ວຍພູພຽງທີ່ເປັນພູໄຟ ແລະ ມີພູຫີນປູນຢັ້ງຢາຍຢູ່ທົ່ວໄປນ້ອຍໜຶ່ງ. ມີຫຸບຜາ, ນ້ຳຕົກຕາດ ແລະ ເຫວເລິກອັນອະລັງການ. ພູໄຟທີ່ຍັງບໍ່ທັນດັບມອດເຮັດໃຫ້ມີນ້ຳພຸຮ້ອນຫຼາຍສິບພັນແຫ່ງ ແລະ ບໍ່ນ້ຳຮ້ອນທີ່ເປັນບ່ອນດຳລົງຄົງຕົວຂອງພືດແລະສັດ ນາໆຊະນິດອັນອຸດົມຮັ່ງມີ. ຢູ່ໃຈກາງຂອງອຸທິຍານ ມີປາກພູໄຟ ທີ່ໃຫຍ່ກວ່າພູໄຟກຣາກາໂຕອາ (krakatoa) ຢູ່ອິນໂດເນເຊຍຮ້ອຍເທື່ອ. ຫີນເກົ່າແກ່ທີ່ສຸດ ມີອາຍຸ 2,7 ຕື້ປີ ແຕ່ຫີນໃໝ່ທີ່ສຸດຍັງຫາກຳເລີ່ມສ້າງຕົວ. ພາຍໃນປາກຂອງພູໄຟກວມເອົາຊາວເຈັດຊາກຂອງປ່າໄມ້.

### ຕະກຸນສັດໃນຂັ້ນສູນພັນ.

ອຸທິຍານມີລະບົບນິເວດທີ່ປະກອບດ້ວຍສະພາບແວດລ້ອມທຳມະຊາດ ທີ່ອຸດົມສົມບູນ ເພື່ອການຢູ່ລອດຊີວິດ ຂອງສັດທີ່ໃກ້ຈະສູນພັນ ເຊັ່ນ: ໝີ ກຣິດສະລີ (ours grizzly), ເສືອປູມາ (puma), ແຫຼວຫາງຂາວ(pygargue) ຕະຫຼອດເຖິງໝາໄນ ທີ່ຍັງເຫຼືອຢູ່ໃນໂລກ.

## ອຸທິຍານແຢນໂລສະໂຕນໃນຂັ້ນອັນຕະລາຍ.

ໃນເດືອນ ກຸມພາ 1995, ສູນກາງມໍລະດົກໂລກຂອງອຸຍແນດສະໂກໄດ້ຮັບຂ່າວວ່າ ອຸທິຍານໄດ້ຮັບອັນຕະລາຍຫຼາຍຢ່າງໂດຍສະເພາະຈາກໂຄງການຂຸດຄົ້ນບໍ່ແຮ່ ແລະ ການຕັດໄມ້, ຜົນກະທົບຂອງການທ່ອງທ່ຽວ ແລະ ນະໂຍບາຍກ່ຽວກັບສັດປ່າ ແລະ ພືດ.

ກອງປະຊຸມຄັ້ງທີ 19, ປະເທດພາຄີຂອງສົນທິສັນຍາ (ສະຫະລັດອາເມລິກາ) ຍື່ນຈົດໝາຍຕໍ່ກອງປະຊຸມຂອງຫ້ອງການມໍລະດົກໂລກ ທີ່ສຳນັກງານອຸຍແນດສະໂກ ເພື່ອສະແດງຄວາມວິຕົກກັງວົນຕໍ່ໄພອັນຕະລາຍ ທີ່ຄຸກຄາມອຸທິຍານແຢນໂລສະໂຕນ ແລະ ເຊື້ອເຊີນຜູ້ຕາງໜ້າຄະນະກຳມະການມໍລະດົກໂລກ ແລະ UICN ໃຫ້ສົ່ງຊ່ຽວຊານໄປສັງເກດເບິ່ງສະຖານະການ. ພ້ອມກັນນີ້ ສະຫະລັດອາເມລິການ ຍັງສະເໜີຕໍ່ຄະນະກຳມະການມໍລະດົກໂລກ ໃຫ້ພິຈາລະນາເອົາສະຖານທີ່ນີ້ ເຂົ້າໃນບັນຊີ ລາຍຊື່ມໍລະດົກໂລກ ໃນຂັ້ນອັນຕະລາຍ.

## ທາງສຽງດັ່ງຄັດຄ້ານຕໍ່ໂຄງການຂຸດຄົ້ນບໍ່ແຮ່ ໃກ້ກັບແຢນໂລສະໂຕນ.

ໂຄງການບໍ່ແຮ່ ແມ່ນ "ໄພພິບັດ" ທີ່ຄຸກຄາມ" ສົມບັດໃນລະບົບອຸທິຍານຂອງອະເມລິກາ".

ນິວຢອກ ທາຍເມີ (New York Times)

ຜົນກຳໄລທີ່ພວກເຮົາໄດ້ຮັບຈາກການຂຸດຄົ້ນບໍ່ແຮ່ບໍ່ສາມາດທົດແທນຄວາມເສຍຫາຍຕະຫຼອດການຢ່າງໃດຢ່າງໜຶ່ງທີ່ເກີດຂຶ້ນກັບແຢນໂລສະໂຕນ.

ບິນກຼິນຕັນ, ປະທານາທິບໍດີ ສະຫະລັດອາເມລິກາ.

ປະຊາຊົນອາເມລິກາ ໃນຖານະເປັນເຈົ້າຂອງສະຖານທີ່ພິເສດແຫ່ງນີ້ ຄວນປົກປັກຮັກສາ ບໍ່ສະເພາະເພື່ອເພື່ອນຮ່ວມຊາດເທົ່ານັ້ນ ແຕ່ຍັງເພື່ອປະຊາກອນຂອງໂລກນຳອີກ ແລະ ບໍ່ສະເພາະເພື່ອຄົນຮຸ້ນນີ້ເທົ່ານັ້ນ ແຕ່ຍັງເພື່ອຄົນຮຸ້ນຕໍ່ໄປອີກດ້ວຍ.

ສະມາຄົມອະນຸລັກອຸທິຍານແຫ່ງຊາດ, ກັນຍາ 1995.

## ການປະຕິບັດງານຂອງຊ່ຽວຊານ, ກັນຍາ 1995.

ຄະນະຊ່ຽວຊານໄດ້ຮັບການມອບໝາຍໃຫ້ລົງປະຕິບັດງານ ໃນເດືອນ ກັນຍາ 1995. ໃນໂອກາດນີ້ ອົງການຈັດຕັ້ງຂອງລັດໃນຫຼາຍລະດັບ ໄດ້ຈັດການໂຕ້ວາທີ, ມີນັກອຸດສາຫະກຳ, ສະມາຊິກຂອງລັດຖະບານ ແລະ ກຸ່ມຄົນທີ່ມີສ່ວນກ່ຽວຂ້ອງກັບການປົກປັກຮັກສາສະພາບແວດລ້ອມໄດ້ເຂົ້າຮ່ວມ.

## ກອງປະຊຸມຄັ້ງທີ 19 ຂອງຄະນະກຳມະການມໍລະດົກໂລກ, ທັນວາ 1995.

ໃນເດືອນທັນວາ 1995, ປະເທດສະມາຊິກສົນທິສັນຍາ ແລະ ໄອຢູຊີເອນ (*IUCN*) ສະເໜີບົດສະຫຼຸບຂອງກອງປະຊຸມ ຕໍ່ຄະນະກຳມະການມໍລະດົກໂລກ. ໂຄງການຂຸດຄົ້ນບໍ່ແຮ່ຂະໜາດໃຫຍ່, ມົນລະພິດຂອງນ້ຳທີ່ເກີດຈາກການຮົ່ວໄຫຼຂອງທໍ່ນ້ຳ ແລະ ການຖິ້ມຂີ້ເຫຍື້ອ, ການສ້າງທາງ ແລະ ການໜີບຮັດຈາກການທ່ອງທ່ຽວ, ການຫຼຸດລົງຂອງສັດບາງຊະນິດ, ລວມທັງບາງຊະນິດປາທີ່ຫາຍາກ ແລະ ພະຍຸສັດທີ່ລະບາດກັບຝູງຄວາຍ ແມ່ນສິ່ງສະແດງອອກຂອງຄວາມຮ້າຍແຮງທີ່ຂົ່ມຂູ່ມໍລະດົກສະຖານທີ່ແຫ່ງນີ້.

ພາຍຫຼັງການສົນທະນາກັນຢ່າງຍືດຍາວ ແລະ ໂດຍຄຳນຶງເຖິງອັນຕະລາຍຕົວຈິງ ທີ່ສາມາດເກີດຂຶ້ນໄດ້, ຄະນະກຳມະການມໍລະດົກໂລກ ຈຶ່ງໄດ້ຕັດສິນໃຈຂຶ້ນທະບຽນອຸທິຍານແຫ່ງຊາດແຢນໂລສະໂຕນ ເຂົ້າໃນບັນຊີລາຍຊື່ມໍລະດົກໂລກ ໃນຂັ້ນອັນຕະລາຍ.

## ຖະແຫຼງການຂອງປະທານາທິບໍດີ ສະຫະລັດອາເມລິກາ, ກັນຍາ 1996.

ປະທານາທິບໍດີ ສະຫະລັດອາເມລິກາ ປະກາດຕໍ່ສາທາລະນະຊົນວ່າ ຕົນຈະອອກແຮງເພື່ອບັນລຸຂັ້ນເພິ່ງພໍໃຈໃນແກ້ໄຂບັນຫາການຂຸດຄົ້ນບໍ່ແຮ່.

## ກອງປະຊຸມຄັ້ງທີ 20 ຂອງຄະນະກຳມະການມໍລະດົກໂລກ, ທັນວາ 1996.

ຜູ້ຕາງໜ້າຂອງສະຫະລັດ ຊີ້ແຈງວ່າ ການແກ້ໄຂບັນຫາມີຄວາມຄືບໜ້າຫຼາຍແລ້ວ ເພື່ອຮັບປະກັນການອະນຸລັກແຢນໂລສະໂຕນ.

## ແລະ ຕໍ່ໄປເດ?

ເພື່ອຮັບປະກັນການອະນຸລັກສະຖານທີ່ ມໍລະດົກໂລກແຫ່ງນີ້, ຄະນະກຳມະການບັງຄັບໃຫ້ມີການລາຍງານຜົນສະຫຼຸບ ການຄົ້ນຄວ້າກ່ຽວກັບຜົນກະທົບຕໍ່ສະພາບແວດລ້ອມ ແລະ ມາດຕະການຂອງການອະນຸລັກຢູ່ເລື້ອຍໆ. ເຮັດແບບນີ້, ຄະນະກຳມະການ ສາມາດຕິດຕາມວິວັດທະນາການຂອງສະຖານະການຢ່າງໃກ້ສິດ. ໃນອະນາຄົດ, ຖ້າຄະນະກຳມະການຫາກພໍໃຈ ກັບຄວາມຄືບໜ້າໃນການອະນຸລັກ ແຢນໂລສະໂຕນແລ້ວ, ຄະນະກຳມະການ ອາດຈະຕັດສິນໃຈຖອນສະຖານທີ່ນີ້ ອອກຈາກບັນຊີລາຍຊື່ ມໍລະດົກໂລກ ໃນຂັ້ນອັນຕະລາຍ.

ການຂຶ້ນທະບຽນ ແຢນສະໂລສະໂຕນ ເຂົ້າໃນບັນຊີລາຍຊື່ມໍລະດົກໂລກ ໃນຂັ້ນອັນຕະລາຍໄດ້ເຮັດໃຫ້ປະຊາຊົນອາເມລິກາ, ຕະຫຼອດເຖິງ ປະທານາທິບໍດີ ສະຫະລັດອາເມລິກາ ແລະ ປະຊາຄົມສາກົນ ອະນຸລັກ ອຸທິຍານແຫ່ງຊາດທີ່ມີຄຸນຄ່ານີ້ເປັນພິເສດ.

### ກິດຈະກຳທີ 14 ສຳລັບນັກຮຽນ

## ສ້າງລາຍການວິທະຍຸກ່ຽວກັບມໍລະດົກໂລກ.

**ວັດຖຸປະສົງ:** ສ້າງໃຫ້ນັກຮຽນມີຄວາມຊຳນານການຕິດຕໍ່ພົວພັນໃນການນັກປົກປັກຮັກສາມໍລະດົກໂລກ.

ແບ່ງນັກຮຽນອອກເປັນຈຸ ແລະ ວາງແຜນໂຄງສ້າງລາຍການວິທະຍຸກ່ຽວກັບມໍລະດົກໂລກ: ໂຄງການປະກອບດ້ວຍ:

- ການສົນທະນາລະຫວ່າງນັກຮຽນ ວ່າຈະເຫັນດີ ຫຼື ຄັດຄ້ານທີ່ຈະເອົາສະຖານທີ່ມໍລະດົກເຂົ້າໃນບັນຊີມໍລະດົກໂລກ.
- ພັນລະນາຄວາມສຳຄັນ, ສະຖານທີ່ຕັ້ງ ແລະ ຄວາມງາມຂອງມໍລະດົກທີ່ຈະເອົາເຂົ້າໃນບັນຊີມໍລະດົກໂລກ.
- ດົນຕີ ແລະ ສຽງ (ທຳມະຊາດ, ສັດ, ລະຄັງ, ເທດສະໜາ, ສູດສ້ອຍ) ເປັນການເຕືອນຄວາມຊົງຈຳ ກ່ຽວກັບສະຖານທີ່ມໍລະດົກໂລກ.
- ຄັດຈ້ອນບາງຕອນ ຈາກກາບກອນ ຊຶ່ງພັນລະນາ ກ່ຽວກັບສະຖານທີ່ມໍລະດົກໂລກ.

ບົນພື້ນຖານການສະເໜີຂອງນັກຮຽນ ແລະ ເຫັນດີກັບຄວາມຄິດໃນການພັດທະນາສ້າງໂຄງການວິທະຍຸ, ມອບໝາຍໜ້າທີ່ໃຫ້ແຕ່ລະຈຸນັກຮຽນອັດສຽງໂຄງການວິທະຍຸ ແລ້ວສົ່ງໃຫ້ທ້ອງຖິ່ນ, ເຂດ ຫຼື ສະຖານີວິທະຍຸ.

## ກອງທຶນມໍລະດົກໂລກ.

ຜົນສຳເລັດອັນສຳຄັນອັນໜຶ່ງຂອງສົນທິສັນຍາ ແມ່ນສາມາດຊ່ວຍເຫຼືອທຶນຮອນໃຫ້ນາໆຊາດ ຈາກກອງທຶນມໍລະດົກໂລກ ເພື່ອນຳໃຊ້ເຂົ້າໃນໂຄງການປົກປັກຮັກສາມໍລະດົກໂລກ.

ກອງທຶນມໍລະດົກໂລກນຳໃຊ້ສຳລັບການຊ່ວຍເຫຼືອໄດ້ຫຼາຍແບບ, ການຮ່ວມມືດ້ານເຕັກນິກລວມທັງການຄົ້ນຄວ້າຂອງຊ່ຽວຊານ ເພື່ອຕັດສິນບັນຫາໃດໜຶ່ງ ຫຼື ຂັດຂວາງການທຳລາຍ, ຫຼື ວາງມາດຕາການ ການວາງແຜນປົກປັກຮັກສາ, ອົບຮົມໃຫ້ຊ່ຽວຊານທ້ອງຖິ່ນໃນການ

ປົກປັກຮັກສາ ຫຼື ປັບປຸງທາງດ້ານເຕັກນິກໃຫ້ດີຂຶ້ນກວ່າເກົ່າ, ຕອບສະໜອງອຸປະກອນ ເພື່ອນຳໃຊ້ເຂົ້າໃນການປ້ອງກັນສວນອຸດທະຍານທຳມະຊາດ ຫຼື ບູລະນະອະນຸສອນສະຖານ. ກອງທຶນຍັງສາມາດຊ່ວຍປະເທດເຫຼົ່ານັ້ນ ໃນຄວາມພະຍາຍາມ ທີ່ຈະຂຶ້ນທະບຽນບັນຊີມໍລະດົກວັດທະນະທຳ ແລະ ທຳມະຊາດ ແລະ ເພື່ອນຳສະເໜີຂຶ້ນທະບຽນເຂົ້າໃນບັນຊີມໍລະດົກໂລກ. ອີງແຕ່ສະໜິດ ແລະ ຈຳນວນເງິນທີ່ຕ້ອງການໆຊ່ວຍເຫຼືອ. ຄະນະກຳມະການ ຫຼື ປະທານຄະນະກຳມະການອາດຈະສະໜອງໃຫ້ການຊ່ວຍເຫຼືອລ້າໃຫ້ແກ່ປະເທດສະມາຊິກ ຕາມຄຳຮ້ອງຂໍ.

ກອງທຶນໃຫ້ບູລິມະສິດການຊ່ວຍເຫຼືອໃຫ້ສະຖານທີ່ໆຕ້ອງການປົກປັກຮັກສາອັນຮີບດ່ວນ ແລະ ທີ່ສະຖານທີ່ຂຶ້ນທະບຽນເຂົ້າໃນມໍລະດົກໂລກແລ້ວ ທາກຢູ່ໃນຂັ້ນອັນຕະລາຍ.

ກອງທຶນມໍລະດົກໂລກໄດ້ຮັບມາຈາກຫຼາຍແຫ່ງ.

- ໄດ້ຈາກການເສຍພັນທະຂອງປະເທດສະມາຊິກທີ່ເຊັນຮັບຮູ້ສົນທິສັນຍານັ້ນໃນຈຳນວນໜຶ່ງເປີເຊັນ ທີ່ປະເທດສະມາຊິກປະກອບສ່ວນເຂົ້າງົບປະມານໃຫ້ອົງການອຸຍແນດສະໂກ.
- ໄດ້ຈາກການອາສາສະໝັກປະກອບສ່ວນ ຂອງປະເທດສະມາຊິກ, ໄດ້ຈາກສະຖາບັນຕ່າງໆ ຫຼື ບຸກຄົນ ຫຼື ຈາກປະເທດ ຫຼື ນາໆປະເທດ ເພື່ອສົ່ງເສີມກິດຈະກຳ.

ຈຳນວນທີ່ໄດ້ຮັບແຕ່ລະປີປະມານສາມລ້ານໂດລາອະເມລິກາ.

ກອງທຶນມໍລະດົກໂລກທີ່ໄດ້ຮັບນັ້ນ ຍັງຕ່ຳກວ່າຄາດໝາຍ ຈຶ່ງເປັນເຫດໃຫ້ຄະນະກຳມະການມໍລະດົກໂລກ ບໍ່ສາມາດຕອບສະໜອງຄວາມຕ້ອງການທີ່ສະມາຊິກສະເໜີມານັ້ນໄດ້ທັງໝົດ. ເຖິງຢ່າງນັ້ນກໍດີ ກອງທຶນກໍໄດ້ຊ່ວຍເຫຼືອຫຼາຍໂຄງການທີ່ສຳຄັນຊຶ່ງມີມູນຄ່າຫຼາຍລ້ານໂດລາ ເພື່ອປົກປັກຮັກສາມໍລະດົກວັດທະນະທຳ ແລະ ທຳມະຊາດ ຢູ່ປະເທດອາຟຼິກກາ, ເອເຊຍ-ປາຊີຟິກ, ບັນດາປະເທດອາຣັບ, ລາຕິນອາເມລິກາ ແລະ ກາຣິບຽນ ແລະ ຢູໂຣບ.

ກິດຈະກຳ ທີ 15 ສຳລັບນັກຮຽນ.

## ການປຸກລະດົມ.

ວັດຖຸປະສົງ: ເພີ່ມທະວີຄວາມສາມັກຄີ ແລະ ການປະກອບສ່ວນຢ່າງຕັ້ງໜ້າຂອງນັກຮຽນ ເພື່ອສົ່ງເສີມການປົກປັກຮັກສາມໍລະດົກໂລກ.

- ສົນທະນາກ່ຽວກັບວິທີ ທີ່ເຮັດໃຫ້ນັກຮຽນສາມາດປະກອບສ່ວນ ໃນການປຸກລະດົມໂຮງຮຽນໃນທ້ອງຖິ່ນ, ໃນທົ່ວປະເທດ ແລະ ໃນໂລກ. ບັນທຶກຂໍ້ສະເໜີຂອງເຂົາເຈົ້າ. ໃນນັ້ນ ຈະມີຂໍ້ສະເໜີໜຶ່ງ ຫຼື ຫຼາຍຂໍ້ສະເໜີ ທີ່ສາມາດປະຕິບັດໄດ້.
- ສົນທະນາກ່ຽວກັບພາລະບົດບາດຂອງກອງທຶນມໍລະດົກໂລກ.
- ສົນທະນາກ່ຽວກັບຄວາມສາມາດໃນການຂົນຂວາຍທຶນ ເພື່ອສົ່ງເສີມການປົກປັກຮັກສາມໍລະດົກໂລກ.

## ສົນທິສັນຍາມໍລະດົກໂລກຕາມຫຼັກສູດຂອງລາຍວິຊາ:

### ສິລະປະ

- ສອນປະຫວັດຂອງສິລະປະດ້ວຍຮູບ ແລະ ຂ່າວສານກ່ຽວກັບສະຖານທີ່ມໍລະດົກໂລກ.
- ສ້າງຮູບຈຳລອງຂອງສະຖານທີ່ມໍລະດົກໂລກ.
- ກະກຽມຂະບວນປຸກລະດົມມວນຊົນເພື່ອປົກປັກຮັກສາມໍລະດົກໂລກ.
- ຢ້ຽມຢາມສະຖານທີ່ມໍລະດົກໂລກ, ແຕ້ມຮູບ ຫຼື ຖ່າຍຮູບສະຖານທີ່ນັ້ນ.
- ສອນຮູບແບບດ້ານສະຖາປັດຕິຍະກຳໃນສະຖານທີ່ມໍລະດົກໂລກ.

### ພາສາຕ່າງປະເທດ

- ອ່ານເອກະສານກ່ຽວກັບ ມໍລະດົກວັດທະນະທຳ ແລະ ທຳມະຊາດຂອງປະເທດອື່ນ.
- ສຶກສາສະຖານທີ່ມໍລະດົກໂລກ ຊຶ່ງເປັນແຫຼ່ງຂ່າວສານອະດີດຕະການ ແລະ ປະຈຸບັນນະການຂອງປະເທດອື່ນ.

## ພູມສາດ/ ວິທະຍາສາດ

- ບົ່ງບອກສະຖານທີ່ມໍລະດົກໂລກ ທີ່ກ່ຽວພັນກັບການປະດິດສ້າງດ້ານເຕັກນິກໃນອະດີດ.
- ຄັດເລືອກສະຖານທີ່ມໍລະດົກໂລກ ເພື່ອເປັນຕົວຢ່າງໃນການປັບຕົວຂອງມວນມະນຸດໃຫ້ສອດຄ່ອງກັບພື້ນທີ່ຕ່າງໆຂອງໂລກ.

## ປະຫວັດສາດ

- ຢ້ຽມຢາມສະຖານທີ່ມໍລະດົກໂລກ ຫຼື ສະຖານທີ່ມໍລະດົກທີ່ບໍ່ຢູ່ຫ່າງໄກຈາກໂຮງຮຽນ ແລະ ກ່ຽວພັນກັບໄລຍະປະຫວັດສາດ.
- ຮຽນຮູ້ສະຖານທີ່ມໍລະດົກໂລກທີ່ມີຄວາມໝາຍສຳຄັນພ້ອມຄົ້ນຄວ້າໄລຍະປະຫວັດສາດໃດໜຶ່ງ.
- ສະເໜີຮູບສະຖານທີ່ມໍລະດົກໂລກ ທີ່ກ່ຽວພັນກັບສາສະໜາ ແລະ ການເຊື່ອຖື.

## ພາສາ/ວັນນະຄະດີ

- ຂຽນບົດຂ່າວກ່ຽວກັບສິນທິສັນຍາ ຫຼື ສະຖານທີ່ພິເສດໃດໜຶ່ງຂອງມໍລະດົກໂລກ ສຳລັບຫ້ອງຮຽນ ຫຼື ເພື່ອລົງໃນໜັງສືພິມ.
- ສອບຖາມຜູ້ຄົນ ທີ່ອາໃສຢູ່ໃກ້ສະຖານທີ່ມໍລະດົກວ່າ ມັນມີຄວາມໝາຍແນວໃດສຳລັບເຂົາເຈົ້າ.
- ຂຽນປຶ້ມກ່ຽວກັບສະຖານທີ່ມໍລະດົກໃດໜຶ່ງ.
- ຂຽນບົດລະຄອນປະຫວັດສາດ.
- ອ່ານນິຍາຍ ຫຼື ເລື່ອງສັ້ນຢູ່ໜ້າສາກທີ່ມີຮູບຂອງສະຖານທີ່ມໍລະດົກ.

## ຄະນິດສາດ

- ຄົ້ນຄວ້າເອກະລັກດ້ານວັດຖຸຂອງສະຖານທີ່ມໍລະດົກໂລກ ເຊັ່ນ: ຈຳນວນຕະກຸນຂອງພືດ ແລະ ສັດ, ຂະໜາດຂອງອາຄານ ແລະ ສະເໜີພົນດ້ວຍກະລາພິກ, ແຜນວາດ ແລະ ສະຖິຕິ.
- ຄົ້ນຄວ້າຂະໜາດຂອງອາຄານ ແລະ ສິ່ງປຸກສ້າງເພື່ອສ້າງເປັນຮູບຈຳລອງ.

## ອິນເຕີແນັດ

- ເປີດເບິ່ງເວບໄຊຂອງສູນກາງມໍລະດົກໂລກ (http://www.UNESCO.org/whc) ແລະ ລະບົບໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດຂອງອຸຍແນດສະໂກ (http://www.education.unesco.org/educprog/asp) ຢູ່ອິນເຕີແນັດ.

# ມໍລະດົກໂລກ ແລະ ເອກະລັກປະຈຳຕົວ

"ຂ້າພະເຈົ້າບໍ່ຢາກໃຫ້ເຮືອນຂອງຂ້າພະເຈົ້າມີຝາອ້ອມໝົດທຸກດ້ານ ແລະ ປ່ອງຢ້ຽມອັດແຈບ. ຂ້າພະເຈົ້າ ຢາກໃຫ້ວັດທະນະທຳຂອງທຸກປະເທດພັດຜ່ານເຮືອນຂອງຂ້າພະເຈົ້າຢ່າງອິດສະລະທີ່ສຸດ. ແຕ່ຂ້າພະເຈົ້າບໍ່ຍອມປ່ອຍໃຫ້ວັດທະນະທຳໃດໜຶ່ງພັດເອົາຂ້າພະເຈົ້າໄປ".

ມະຫະມັດ ຄັນທີ

## ມໍລະດົກໂລກ ແລະ ເອກະລັກປະຈໍາຕົວ


**ວັດຖຸປະສົງ** 74

ດ້ານຄວາມຮູ້

ດ້ານທ່ານທີ່

ດ້ານຄວາມສາມາດ

**ມໍລະດົກໂລກ: ພື້ນຖານຂອງເອກະລັກປະຈໍາຕົວ** 75

ເອກະລັກປະຈໍາຕົວ: ຂ້ອຍແມ່ນໃຜ? ພວກເຮົາແມ່ນໃຜ?

ກິດຈະກໍາທີ 16 ສໍາລັບນັກຮຽນ: 76

ນາມສະກຸນ ແລະ ຊື່, ສິ່ງບັນທຸກເອກະລັກປະຈໍາຕົວ.

ເອກະລັກປະຈໍາຕົວໃນໂລກທີ່ມີການປ່ຽນແປງຢ່າງໄວວາ.

**ສະຖານທີ່ມໍລະດົກໂລກ ແລະ ເອກະລັກປະຈໍາຕົວ** 78

ກິດຈະກໍາທີ່ 17 ສໍາລັບນັກຮຽນ: 79

ສະຖານທີ່ມໍລະດົກໂລກ ແລະ ເອກະລັກປະຈໍາຕົວ

**ຮູບຊົງຂອງສິ່ງສ້າງບົ່ງບອກເອກະລັກປະຈໍາຕົວ** 79

ກິດຈະກໍາທີ 18 ສໍາລັບນັກຮຽນ: 81

ຮູບແບບການກໍ່ສ້າງບົ່ງບອກເອກະລັກປະຈໍາຕົວ

ກິດຈະກໍາ ທີ 19 ສໍາລັບນັກຮຽນ: 82

ສະພາຕັດສິນອະນາຄົດຂອງພາກສ່ວນຕົວເມືອງປະຫວັດສາດ

ກິດຈະກໍາທີ 20 ສໍາລັບນັກຮຽນ: 83

ການຮຽນດ້ວຍຫຼາຍວັດທະນະທໍາ

**ເອກະລັກປະຈໍາຕົວ ແລະ ປະຊາຊົນເດີມຂອງທ້ອງຖິ່ນ** 83

ກິດຈະກໍາທີ 21 ສໍາລັບນັກຮຽນ: 84

ອານຸສາວະລີແຫ່ງຊາດ ຂອງຊີມບັບເວໃຫຍ່

ກິດຈະກໍາທີ 22 ສໍາລັບນັກຮຽນ: 86

ອຸທິຍານແຫ່ງຊາດ ອູລູຣູ-ກາຣາຈູຕາ ຂອງອົດສະຕຣາລີ

**ມໍລະດົກໂລກ ແລະ ເອກະລັກປະຈໍາຕົວ** 89

**ຕາມຫຼັກສູດຂອງລາຍວິຊາ**

# ວັດຖຸປະສົງ

## ດ້ານຄວາມຮູ້

ຊ່ວຍນັກຮຽນໃຫ້ຮູ້ ແລະ ເຂົ້າໃຈດີ:

- ສະຖານທີ່ວັດທະນະທຳ ແລະ ທຳມະຊາດ ຂອງມໍລະດົກໂລກທີ່ຊີ້ບອກຄວາມຫຼາຍຮູບຫຼາຍສີຂອງວັດທະນະທຳ ແລະ ສະແດງເຖິງຄວາມໝັ້ນຄົງໃນໂລກທີ່ມີການປ່ຽນແປງຢ່າງໄວວາ;
- ເອກະລັກພິເສດຂອງແຕ່ລະວັດທະນະທຳ ແລະ ຄວາມຄິດກ່ຽວກັບທຸກໆວັດທະນະທຳ ທີ່ລວມເຂົ້າເປັນອະລິຍະທຳ ຂອງມວນມະນຸດ;
- ການມີຜົນກະທົບຕໍ່ກັນ ແລະ ການຂຶ້ນຕໍ່ກັນລະຫວ່າງທຳມະຊາດ ແລະວັດທະນະທຳ ແລະລະຫວ່າງກຸ່ມວັດທະນະທຳດ້ວຍກັນ.

## ດ້ານທ່າທີ

ຊຸກຍູ້ນັກຮຽນໃຫ້:

- ເຫັນຄຸນຄ່າວັດທະນະທຳຂອງຕົນ, ປະຫວັດສາດ ແລະ ສະພາບແວດລ້ອມທຳມະຊາດຂອງປະເທດຕົນ;
- ເຫັນໄດ້ຄຸນຄ່າເດັ່ນຂອງສັງຄົມ ແລະ ກົກເຄົ້າຂອງຕົນ;
- ປູກຝັງການເຄົາລົບທຸກປະຊາຊາດລວມທັງວັດທະນະທຳຂອງເຂົາເຈົ້າ ແລະ ປະກອບສ່ວນໃນການສ້າງຄວາມເຂົ້າໃຈ ແລະ ການເຄົາລົບຊຶ່ງກັນ ແລະ ກັນໃນທົ່ວໂລກ;
- ພັດທະນາການຮ່ວມກັນຮັບຜິດຊອບຕໍ່ມໍລະດົກໂລກ, ວັດທະນະທຳ ແລະ ທຳມະຊາດ.

## ຄວາມສາມາດ

ຊ່ວຍນັກຮຽນໃຫ້ພັດທະນາຄວາມຊຳນິຊຳນານໃນ:

- ການຄົ້ນຄວ້າຫາກົກເຄົ້າຂອງຄອບຄົວ ແລະ ປະເທດ;
- ການແກ້ໄຂບັນຫາດ້ວຍວິທີເປີດກວ້າງ ແລະ ປະຊາທິປະໄຕ;
- ການຊີ້ນຳພຶດຕິກຳ ເພື່ອສົ່ງເສີມການອະນຸລັກມໍລະດົກໂລກ.

## ມໍລະດົກແຫ່ງຊາດ: ພື້ນຖານຂອງເອກະລັກປະຈໍາຕົວ

ຄວາມເຂົ້າໃຈມໍລະດົກໂລກ ສາມາດຊ່ວຍພວກເຮົາໃຫ້ສໍານຶກກ່ຽວກັບກົກເຄົ້າ ແລະ ເອກະລັກປະຈໍາຕົວ ດ້ານວັດທະນະທໍາ ແລະ ສັງຄົມຂອງພວກເຮົາ. ການກວດເບິ່ງສະຖານທີ່ໃນບັນຊີລາຍຊື່ ມໍລະດົກໂລກຢ່າງຕັ້ງໜ້າ ສາມາດເຮັດໃຫ້ພວກເຮົາຄົ້ນພົບການເຊື່ອຖື, ຄຸນຄ່າ ແລະ ຄວາມຮູ້ຂອງປະຊາຊາດ ແລະ ຂອງອະລິຍະທໍາຕ່າງໆທີ່ເຂົາເຈົ້າສ້າງຂຶ້ນມາຄື: ວັດທະນະທໍາ ຫຼື ມີຜົນກະທົບຊຶ່ງກັນແລະກັນເຊັ່ນ: ສະຖານທີ່ທໍາມະຊາດ ແລະ ວັດທະນະທໍາ ແລະ ສະຖານທີ່ວັດທະນະທໍາ. ທັງໝົດເຫຼົ່ານີ້ໃຫ້ໂອກາດແກ່ພວກເຮົາເພື່ອຮຽນຮູ້ມໍລະດົກທີ່ເປັນວັດຖຸ ແລະ ບໍ່ເປັນວັດຖຸ.

"ສະຖານທີ່ວັດທະນະທໍາ ແລະ ທໍາມະຊາດລວມເຂົ້າກັນເປັນສະພາບແວດລ້ອມທີ່ຂາດບໍ່ໄດ້ໃນຊີວິດດ້ານຈິດໃຈ, ສາສະໜາ, ເສດຖະກິດຕະຫຼອດເຖິງການສຶກສາຂອງມວນມະນຸດ. ການທໍາລາຍ ຫຼື ການເຊື່ອມໂຊມຂອງສະຖານທີ່ເຫຼົ່ານີ້ ສາມາດທໍາລາຍການຄົງຕົວຂອງເອກະລັກປະຈໍາຕົວ, ຂອງປະເທດ ແລະ ຂອງໂລກພິພົບ ກໍ່ເປັນໄດ້. ສະນັ້ນ, ພວກເຮົາຈຶ່ງມີໜ້າທີ່ປົກປັກຮັກສາສະຖານທີ່ເຫຼົ່ານີ້ໄວ້ໃຫ້ຄົນຮຸ່ນຕໍ່ໆໄປ".

ຄໍາປະຕິຍານຂອງຊາວໜຸ່ມ, ກອງປະຊຸມໂລກຂອງຊາວໜຸ່ມ ວ່າດ້ວຍມໍລະດົກໂລກທີ່ເມືອງ ແບກເກັນ ປະເທດນອກແວ.

## ເອກະລັກປະຈໍາຕົວ: ຂ້ອຍແມ່ນໃຜ-ພວກເຮົາແມ່ນໃຜ?

**ເອກະລັກປະຈໍາຕົວ**

1. ລັກສະນະຂອງສິ່ງທີ່ຄືກັນ; ລັກສະນະຂອງສິ່ງທີ່ເປັນໜຶ່ງດຽວ;
2. ລັກສະນະຂອງສ່ວນບຸກຄົນ, ບຸກຄະລິກກະພາບ.... ການຄົງຕົວຂອງສ່ວນບຸກຄົນ;
3. ລັກສະນະຂອງສິ່ງທີ່ເປັນໜຶ່ງດຽວກັບຕົນໃນດ້ານອາລົມຈິດ, ສິດຜົນປະໂຫຍດ ແລະ ອື່ນໆ.

ມະນຸດແຕ່ລະຄົນທີ່ເກີດມາຕ່າງກັບຜູ້ອື່ນດ້ວຍຮູບຮ່າງ, ເວົ້າຢ່າງໜຶ່ງແມ່ນດ້ວຍເອກະລັກດ້ານພັນທຸກໍາ ແລະ ດ້ານຮ່າງກາຍທີ່ຖ່າຍທອດຈາກພໍ່ແມ່ ແລະ ປູ່ຍ່າຕາຍາຍ. ຕົວຢ່າງ: ລາຍມືຂອງພວກເຮົາເປັນເຄື່ອງໝາຍທີ່ລຶບລ້າງບໍ່ໄດ້ ຂອງເອກະລັກປະຈໍາຕົວຂອງແຕ່ລະຄົນ. ນາມສະກຸນ ທີ່ພວກເຮົາສືບທອດ ແລະ ຊື່ທີ່ຕັ້ງໃຫ້ສາມາດປ່ຽນແປງໃນເວລາພວກເຮົາຄົງຕົວຢູ່, ແຕ່ສິ່ງເຫຼົ່ານີ້ ເປັນສ່ວນປະກອບຂອງເອກະລັກປະຈໍາຕົວ ຂອງແຕ່ລະຄົນຄືກັນ.

## ກິດຈະກຳທີ 16 ສຳລັບນັກຮຽນ

## ນາມສະກຸນ ແລະ ຊື່, ສິ່ງບັນທຸກເອກະລັກປະຈຳຕົວ

**ວັດຖຸປະສົງ: ຄົ້ນຄິດກ່ຽວກັບເອກະລັກປະຈຳຕົວຂອງແຕ່ລະຄົນ ແລະ ຄອບຄົວ.**

- ບອກໃຫ້ນັກຮຽນຊອກຮູ້ຕົ້ນກຳເນີດນາມສະກຸນຂອງເຂົາເຈົ້ານຳພໍ່ແມ່ ຫຼື ພີ່ນ້ອງ.
- ບອກໃຫ້ເຂົາເຈົ້າອະທິບາຍວິທີຕັ້ງນາມສະກຸນ. ຖາມເຂົາເຈົ້າວ່າເຂົາເຈົ້າຄິດແນວໃດກ່ຽວກັບນາມສະກຸນຂອງເຂົາເຈົ້າ. ແມ່ນນາມສະກຸນຂອງຫຼາຍຄົນໃນທ້ອງຖິ່ນບໍ່? ມີຄວາມກ່ຽວພັນກັບສະຖານທີ່ທຳມະຊາດ ຫຼື ວັດທະນະທຳສຳຄັນຂອງທ້ອງຖິ່ນບໍ່? ເປັນນາມສະກຸນຂອງໜ້ອຍຄົນບໍ່? ເປັນນາມສະກຸນເພື່ອລະນຶກເຖິງໃຜຜູ້ໜຶ່ງບໍ່ ຕົວຢ່າງເຊັ່ນ: ປູ່ ຍ່າ ຕາ ຍາຍ ຫຼື ຜູ້ໃດຜູ້ໜຶ່ງຂອງຄອບຄົວ ຫຼື ບຸກຄົນສຳຄັນໃນປະຫວັດສາດ, ໃນຮູບເງົາ ແລະ ອື່ນໆ? ນາມສະກຸນມີຜົນກະທົບຕໍ່ເອກະລັກປະຈຳຕົວຂອງບຸກຄົນບໍ່ ຖ້າມີມັນສະແດງອອກແນວໃດ?

ແນວໃດກໍ່ຕາມ, ເອກະລັກປະຈຳຕົວ ບໍ່ແມ່ນສະເພາະຂອງສ່ວນບຸກຄົນ. "ຂ້ອຍແມ່ນໃຜ?" ຕິດພັນຢ່າງສະໜິດແໜ້ນກັບຄຳຖາມ "ພວກເຮົາແມ່ນໃຜ?" ພວກເຮົາໃນນີ້ແທນໃຫ້ເຜົ່າຊົນ, ຊາດ ຫຼື ຄວາມເຊື່ອຖື. ໃນຖານະເປັນສະມາຊິກຂອງກຸ່ມໃດກຸ່ມໜຶ່ງ, ພວກເຮົາຕິດພັນກັບສະມາຊິກຜູ້ອື່ນໆດ້ວຍພາສາ, ຄວາມເຊື່ອຖື, ຮີດຄອງ, ກິດຈະລິຍະທຳ, ຂະນົບທຳນຽມ, ໂພຊະນາການ, ການນຸ່ງຖື ແລະ ອື່ນໆ. ເອກະລັກປະຈຳຊາດສະແດງອອກໃນຫຼາຍສັນຍາລັກເຊັ່ນ: ພາສາ, ເຄື່ອງນຸ່ງປະຈຳຊາດ, ທຸງຊາດ, ເຄື່ອງໝາຍ ຫຼື ເພງຊາດ.

ເອກະລັກປະຈຳຕົວໃນໂລກທີ່ມີການປ່ຽນແປງຢ່າງໄວວາ "ໂລກປ່ຽນແປງຢ່າງໄວວາ ແລະ ຜູ້ຄົນສ່ວນຫຼວງຫຼາຍໄດ້ເຂົ້າສູ່ສະຕະວັດທີ 21 ໂດຍບໍ່ຈື່ກົກເຄົ້າຂອງຕົນເອງ. ທີ່ຈິງຄວນແມ່ນທາງປີ້ນ. ພວກເຮົາຄວນໃຫ້ຄຸນຄ່າແກ່ຕົ້ນກຳເນີດຂອງຕົນ, ວັດທະນະທຳຂອງຕົນ ແລະ ຮັກສາຄຸນຄ່າເຫຼົ່ານີ້ໄວ້ເປັນພື້ນຖານ. ພວກເຮົາຄວນສ້າງອະນາຄົດຂອງພວກເຮົາ.

ຄຳຮຽກຮ້ອງຂອງນັກຮຽນ, ກອງປະຊຸມໂລກຂອງຊາວໜຸ່ມວ່າດ້ວຍມໍລະດົກໂລກ, ປັກກິ່ງ, ປະເທດຈີນ.

ບໍ່ມີແຕ່ບຸກຄົນ, ປະຊາຄົມເຊັ່ນ: ກຸ່ມຊົນຊາດຊົນເຜົ່າທີ່ພວກເຮົາສັງກັດຢູ່ ປ່ຽນແປງຕາມກາລະເວລາດ້ວຍການກະທົບຊຶ່ງກັນແລະກັນ ກັບສະພາບແວດລ້ອມທຳມະຊາດ ກັບປະຊາຄົມອື່ນ ແລະ ວັດທະນະທຳອື່ນ. ເຖິງວ່າມັນເປັນແນວນີ້ເລື້ອຍໆກໍ່ຕາມແຕ່ການປ່ຽນແປງໃນສະຕະວັດທີ 20 ຍິ່ງໄວກວ່າເກົ່າອີກ ຍ້ອນມີການປະຕິວັດວິທະຍາສາດ ແລະ ເຕັກໂນໂລຊີ, ໂດຍສະເພາະ ຍ້ອນການນຳໃຊ້ພາຫະນະການຂົນສົ່ງ, ການໂທລະຄົມມະນາຄົມ ແລະ ການສື່ສານຂອງມວນຊົນ ເຊັ່ນ: ຄອມພິວເຕີ, ໂທລະສັບ, ໂທລະສານ, ໂທລະພາບ, ດາວທຽມການສື່ສານ ແລະ ອື່ນໆ ແລະ ສຸດທ້າຍຍ້ອນໂລກາພິວັດ.

ໂລກາພິວັດ, ຕົ້ນຕໍແມ່ນປະກົດການດ້ານເສດຖະກິດ ແຕ່ມັນມີຜົນກະທົບທີ່ສຳຄັນຕໍ່ສັງຄົມ ແລະ ວັດທະນະທຳ. ສິ່ງທີ່ພົ້ນເດັ່ນແມ່ນປະຊາກອນໃນເກືອບທົ່ວທຸກຂົງເຂດຂອງໂລກ ມີທ່າອ່ຽງນິຍົມຜະລິດຕະພັນທີ່ມີການໂຄສະນາໃນທົ່ວໂລກ ແລະ ມີຜູ້ບໍລິໂພກຢ່າງຫຼວງຫຼາຍ ເຊັ່ນ: ເພງ, ຮູບເງົາ, ລາຍການໂທລະພາບ, ເຄື່ອງນຸ່ງ ຫຼື ອາຫານດ່ວນ.

ເອກະສານສອງສະບັບຂອງອຸຍແນດສະໂກທີ່ເວົ້າເຖິງໂລກາພິວັດ ດ້ານວັດທະນະທຳໄດ້ພິມເຜີຍແຜ່ແລ້ວດັ່ງນີ້:

....ໂລກາພິວັດດ້ານວັດທະນະທຳປະກົດຕົວຂຶ້ນເທື່ອລະກ້າວໃນບາງພາກສ່ວນແລ້ວ. ໃນຕົວຈິງໂລກາພິວັດເປັນສິ່ງຫຼີກລຽງບໍ່ໄດ້, ພຶດຕິກຳ ແລະ ໄພອັນຕະລາຍຂອງມັນຈະບໍ່ຍົກເວັ້ນເອກະລັກ ແລະ ຄວາມມຸ້ງຫວັງຂອງສ່ວນບຸກຄົນໃນການເລືອກຊາຕາກຳຂອງຕົນ, ໃນການນຳໃຊ້ຄວາມສາມາດອັນບົ່ມຊ້ອນ ເພື່ອສ້າງຄວາມອຸດົມຮັ່ງມີຕາມປະເພນີ ແລະ ວັດທະນະທຳຂອງຕົນຍ້ອນວ່າ ປະເພນີ ແລະ ວັດທະນະທຳນັ້ນ ຈະຖືກຂົ່ມຂູ່ຈາກວິວັດທະນາການຂອງໂລກາພິວັດ ທີ່ພວມດຳເນີນຢູ່.

ການສຶກສາ: ຊຸມຊັບສົມບັດອັນລ້ຳຄ່າ

ບົດລາຍງານຕໍ່ອຸຍແນດສະໂກຂອງຄະນະກຳມາທິການສາກົນວ່າດ້ວຍການສຶກສາເພື່ອສະຕະວັດທີ XXI, ໜ້າ 12, 13, ອຸຍແນດສະໂກ, ປາຣີ, 1996.

ການປັບປຸງຕົວຂອງບຸກຄົນ ແລະ ຊຸມຊົນທີ່ດຳລົງຊີວິດໃນໂລກທັນສະໄໝ ແລະ ປ່ຽນແປງຢ່າງໄວວາ ໃຫ້ສອດຄ່ອງກັບການປ່ຽນແປງທີ່ເປັນທຳ ໂດຍບໍ່ປະຕິເສດສ່ວນປະກອບອັນປະເສີດໃນຮີດຄອງປະເພນີຂອງຕົນມີຄວາມສຳຄັນ.

ຕົວຢ່າງເຊັ່ນ: ໃນຄວາມເຊື່ອຖືຕາມປະເພນີເກົ່າແກ່, ຊາວອາຟຣິກາຖືການສຳພັນລະຫວ່າງຄົນກັບທຳມະຊາດ, ລະຫວ່າງສິ່ງທີ່ເປັນວັດຖຸກັບສິ່ງບໍ່ເປັນວັດຖຸ, ລະຫວ່າງເຫດຜົນກັບຈິດໃຈ, ລະຫວ່າງຄົນຮຸ່ນກ່ອນກັບຮຸ່ນປະຈຸບັນເປັນຄຸນຄ່າດ້ານຈິດໃຈທີ່ມີຄວາມສຳຄັນສຳລັບເຂົາ

ເຈົ້າ. ແຫຼ່ງຄວາມຮູ້ ແລະ ຄຸນຄ່າເຫຼົ່ານີ້ມີປະໂຫຍດເພື່ອນຳໃຊ້ເຂົ້າໃນການແກ້ໄຂບັນຫາໃນປັດຈຸບັນ ເຊັ່ນ: *ການປົກປັກຮັກສາສະພາບແວດລ້ອມ ຫຼື ການໄກ່ເກ່ຍໃນສະຖານະການຂອງການຂັດແຍ່ງ*.

*ຄວາມແຕກຕ່າງທີ່ປະດິດສ້າງຂອງພວກເຮົາ.*

ບົດລາຍງານຂອງຄະນະກຳມາທິການໂລກ ວ່າດ້ວຍວັດທະນະທຳ ແລະ ການພັດທະນາ, ໜ້າ 185, ອຸຍແນດສະໂກ, ປາຣີ, 1996.

## ສະຖານທີ່ມໍລະດົກໂລກ ແລະ ເອກະລັກປະຈຳຕົວ.

ສະຖານທີ່ຂຶ້ງຈົດທະບຽນໃນບັນຊີລາຍຊື່ມໍລະດົກໂລກ ບໍ່ມີເອກະລັກປະຈຳຕົວຄືກັນໝົດ ຕາມຕົວຢ່າງດັ່ງນີ້: ຊາກເມືອງເກົ່າຂອງຊິມບັບເວໃຫຍ່ (Grand Zimbabwe) ບອກໃຫ້ເຮົາຮູ້ກົກເຄົ້າຂອງຊາວອາຟຣິກກາຢູ່ຊິມບັບເວກ່ອນສະໄໝຫົວເມືອງຂຶ້ນ; ອຸທິຍານແຫ່ງຊາດ ອູລູຣູ-ກາຕາ ຈູຕາ (Uluru-kata Tjuta) ຢູ່ອົດສະຕາລີ ເປັນສັນຍາລັກການຕັ້ງພູມລຳເນົາ ໃນທະວີບອົດສະຕາລີ ທີ່ກວ້າງໃຫຍ່ຂອງຊາວອາໂບລິແຊນ. ວັງແກຼມແລັງ (kremlin) ແລະ ສະໜາມແດງ (*Place rouge*) ເປັນເອກະລັກປະຈຳຕົວຂອງສະຫະພັນລັດເຊຍ; ປະເທດອີຕາລີ ມີເມືອງເວນີ (Venise) ແລະ ອ່າວທະເລ, ຫໍງ່ຽງປີຊາ (Tour de Pise) ແລະ ເມືອງຟໍລັງເຊີ (Florence) ເປັນສັນຍາລັກ; ປະເທດລີບັງ ມີເມືອງເກົ່າ ບາອານເບັກ (Baalbek) ແລະ ບີບະລົດ (Byblos); ອິນເດຍມີໂບດຕັດສະມາຮານ /Taj Malhal) ທີ່ເມືອງອາກຼາ; ປະເທດກົວເຕມາລາມີເມືອງເກົ່າອັງຕີກາກົວເຕມາລາ (Antigua Guatemala); ອຸສະເບກີສະຖານມີສູນປະຫວັດສາດຢູ່ເມືອງບູກາຣາ (Boukhara).

ສະຖານທີ່ທຳມະຊາດບາງແຫ່ງເຊັ່ນ: ອຸທິຍານແຫ່ງຊາດອີເວີກະເລດເດີ (Everglades) ແລະອຸທິຍານແຫ່ງຊາດແກຣນເຄເຍິນ (Grand Canyon) ຢູ່ສະຫະລັດອາເມລິກາ, ອຸທິຍານແຫ່ງຊາດ ເຊີເຣັນເຊີຕີ (Serengeti) ຢູ່ສະທະພາບສາທາລະນະລັດຕັງຊານີ, ອຸທິຍານແຫ່ງຊາດ ຊາກາມາທາ (Sagarmatha) ຫຼື ພູເອເວີແຣດເຊີ (Mont Everest) ຢູ່ປະເທດເນປານ, ສາຍພູນ້ຳກ້ອນລົດກະລາຊີອາແຣດເຊີ (Los Glaciares) ຢູ່ປະເທດອາກຊັງຕິນ ເປັນຕົວຢ່າງທີ່ບົ່ງບອກເອກະລັກປະຈຳຕົວຂອງຊາດ ແລະ ຂອງຫຼາຍຊາດ.

ສະເຕຟານ ຈູດີ-ມາດເຊັນ (Stephan Tschudi-Madsen), ອະດີດເອກອະທິບໍດີ ສະພາບໍລິຫານງານດ້ານວັດທະນະທຳຂອງປະເທດນອກແວ ມີຄວາມເຫັນໃນບັນຫານີ້ວ່າ:

ກ່ອນອື່ນໝົດ... ຕ້ອງເບິ່ງຕົ້ນໄມ້. ລວງສູງເປັນປັດໄຈຕົ້ນຕໍເພື່ອກຳນົດຂະໜາດ. ຕົ້ນໄມ້ຊະນິດໃບໃຫຍ່ ບໍ່ມີລຳຕົ້ນສູງ ຫຼື ຊື່ ຫຼື ບໍ່ເປັນໄມ້ເນື້ອແຂງເພື່ອການປຸກສ້າງເຮືອນໄມ້ຖາວອນ ແລະ ມີເອກະລັກປະຈຳຕົວຄື: ຝາເຮືອນເຮັດດ້ວຍໄມ້ເປັນລຳຢອງກັນຕາມທາງນອນ.

ຈາກການມ້າງໂບດໂຮບເຟີ (Hof) ໃນ 1861, ເພິ່ນພົບເຫັນທ່ອນໄມ້ທີ່ຍາວກວ່າໝູ່ ຊຶ່ງບໍ່ຖືກນຳໃຊ້ເຂົ້າໃນການປຸກສ້າງເຮືອນໂດຍທົ່ວໄປ ແລະ ມີຄວາມຍາວເຖິງ 15 ແມັດນັ້ນບົ່ງບອກຂະໜາດຂອງຕົ້ນໄມ້ທີ່ຕັດຄື: ຕົ້ນແປກທີ່ໃຊ້ເປັນວັດສະດຸການກໍ່ສ້າງຫຼາຍກວ່າໝູ່ ໃນປະເທດນອກແວ. ນີ້ແມ່ນທ່ອນໄມ້ທີ່ຍາວທີ່ສຸດ. ໂດຍທົ່ວໄປແລ້ວ, ເພື່ອປຸກສ້າງເຮືອນທຳມະດາເພິ່ນໃຊ້ໄມ້ທີ່ສັ້ນກວ່ານີ້ເຄິ່ງໜຶ່ງ.

ເຈົ້າຊີວິດ ຫຼື ຂຸນນາງກໍບໍ່ສາມາດເຮັດໃຫ້ກາຍຂະໜາດໜີໄດ້ຍ້ອນວ່າ ຕົ້ນໄມ້ເປັນຜູ້ກຳນົດຂະໜາດ. ເວລາປຸກສ້າງເຮືອນທຸກຄົນປະຕິບັດຕາມກົດໝາຍດຽວກັນ ເຖິງວ່າໜ້າກວ້າງຂອງໄມ້ ແລະ ການປະດັບປະດາຕ່າງໆກັນກໍ່ຕາມ.

ເພິ່ນສາມາດຖາມຕົນເອງວ່າ ເງື່ອນໄຂເຫຼົ່ານີ້ ບໍ່ໄດ້ສົ່ງເສີມການມີປະຊາທິປະໄຕບໍ. ລັກສະນະ ແລະ ຂະໜາດຂອງໄມ້ທີ່ເຮັດໃຫ້ມີຄວາມຮູ້ສຶກວ່າ ສັງຄົມ ແລະ ຄົນມີສັນຕິສຸກນັ້ນ ມີສິ່ງໃດສິ່ງໜຶ່ງ ຂອງການເປັນມະນຸດ. ໄມ້ຂອງຝາເຮືອນທີ່ຢອງກັນຕາມທາງນອນເຮັດ ໃຫ້ມີຄວາມສະຫງົບ ແລະ ມີຄວາມສະດວກສະບາຍ ຕາມທຳມະຊາດ. ວຽກກ່ຽວກັບໄມ້ມີບົດບາດສຳຄັນຍ້ອນວ່າໄມ້ບໍ່ສະເພາະແຕ່ເປັນສິ່ງກັນຮ້ອນ ກັນໜາວເທົ່ານັ້ນ ແຕ່ຍັງໃຫ້ຄວາມນິ້ມນວນແກ່ການສຳພັດອີກດ້ວຍ.

ປະເພນີການປຸກສ້າງເຮືອນໄມ້ ໄດ້ຮັບການຮັກສາໄວ້ຢ່າງໝັ້ນຄົງ, ປະຈຸບັນ 80% ຂອງການປຸກສ້າງເຮືອນໃໝ່ຍັງແມ່ນເຮືອນໄມ້. ແນ່ນອນຖ້າເພິ່ນຕ້ອງການສົນທະນາກ່ຽວກັບລັກສະນະພິເສດຂອງມໍລະດົກວັດທະນະທຳແຫ່ງປະເທດນອກແວ, ສະຖານທີ່ນີ້ເປັນສັນຍາລັກດ້ານວັດທະນະທຳຫຼາຍກວ່າຮູບການສະແດງອອກອື່ນໆ ຍ້ອນວ່າຂະໜາດແລະຄຸນະພາບຂອງໄມ້ ກໍມີຜົນສະທ້ອນຕໍ່ການພັດທະນາ ເຊັ່ນກັນ.

ແຫຼ່ງເອກະສານ: ປະເທດນອກແວ ແລະ ມໍລະດົກວັດທະນະທຳ.

ອານຸສອນສະຖານ ແລະ ວັດທະນະທຳສະຖານ, ອຸຍນີແວຊິເຕສະຟໍລາເຊ (Universitet-sforlaget).

ກິດຈະກຳທີ 17 ສຳລັບນັກຮຽນ

## ສະຖານທີ່ມໍລະດົກແຫ່ງຊາດ ແລະ ມໍລະດົກໂລກ ແລະ ເອກະລັກປະຈຳຕົວ.

- ເອົາຮູບສະຖານທີ່ມໍລະດົກໂລກໃນປຶ້ມ ຫຼື ມໍລະດົກແຫ່ງຊາດທີ່ຊອກມາໄດ້ ເຊັ່ນ: ເມືອງຫຼວງພະບາງ, ຄອນພະເພັງ, ວັດພູ, ທົ່ງໄຫຫີນ, ທາດຫຼວງ, ອາດອີງຣັງ, ທາດສີໂຄດຕະບູນ, ຮູບທຳມະຊາດ ແລະ ອື່ນໆ ທີ່ມີຄວາມສຳຄັນໃນປະຫວັດສາດ ແລະ ໃນການປົກປັກຮັກສາມໍລະດົກທຳມະຊາດໃຫ້ນັກຮຽນເບິ່ງ. ຖາມເຂົາເຈົ້າວ່າຮູບໃດບົ່ງບອກ:
    - ສັນຍາລັກຂອງຊົນຊາດ.
    - ເຫດການດ້ານປະຫວັດສາດ
    - ສາສະໜາ ແລະ ຄວາມເຊື່ອຖື
    - ວິທີດຳລົງຊີວິດ.

- ຖາມເຂົາເຈົ້າວ່າເຂົາເຈົ້າຮູ້ຈັກສະຖານທີ່ມໍລະດົກໂລກແຫ່ງອື່ນບໍ່. ແຕ່ລະແຫ່ງມີຄວາມສຳຄັນແນວໃດ?

## ຮູບຊົງຂອງສິ່ງປຸກສ້າງບົ່ງບອກເອກະລັກປະຈຳຕົວ

ຮູບຊົງຂອງສິ່ງປຸກສ້າງທີ່ເປັນເອກະລັກປະຈຳຕົວຂອງສະຖານທີ່ມໍລະດົກໂລກ ສະແດງໃຫ້ເຫັນຜົນກະທົບຊຶ່ງກັນ ແລະ ກັນລະຫວ່າງຄົນກັບສະພາບແວດລ້ອມທຳມະຊາດ. ຄຸ້ມບຣິກເກນ (Bryggen) ຢູ່ເມືອງເບີເກນ (Bergen) ໃນປະເທດນອກແວ ເປັນຕົວຢ່າງຂອງສະຖານທີ່ມໍລະດົກໂລກ ຊຶ່ງສະແດງໃຫ້ເຫັນວ່າ ໄມ້ແມ່ນປັດໃຈຢັ້ງຢືນເອກະລັກປະຈຳຕົວດ້ານວັດທະນະທຳ ຂອງປະເທດນອກແວ.

### ໄມ້ມີຜົນສະທ້ອນແນວໃດຕໍ່ວັດທະນະທຳຂອງປະເທດນອກແວ?

ວັດສະດຸກໍ່ສ້າງ ແລະ ວັດທະນະທຳ ຂອງປະເທດນອກແວ ມີຜົນກະທົບຊຶ່ງກັນ ແລະ ກັນບໍ່?

### ກິດຈະກຳທີ 18 ສຳລັບນັກຮຽນ

## ຮູບຊົງການປຸກສ້າງບົ່ງບອກເອກະລັກປະຈຳຕົວ

ວັດຖຸປະສົງ: ຄົ້ນຄວ້າມໍລະດົກທີ່ເປັນວັດຖຸ ເຊັ່ນ: ການປຸກສ້າງ, ອານຸສອນສະຖານ ແລະ ອຸທິຍານແຫ່ງຊາດ ເພື່ອສະທ້ອນເອກະລັກປະຈຳຕົວຢ່າງສັດເຈນ.

- ບອກໃຫ້ນັກຮຽນຂຽນບົດກ່ຽວກັບຄຸນະພາບສະເພາະຕົວຂອງສິ່ງປຸກສ້າງ, ຂອງອານຸສອນສະຖານ ແລະ ຂອງອຸທິຍານແຫ່ງຊາດຢູ່ພາຍໃນປະເທດ ຫຼື ຢູ່ໃນພາກພື້ນ. ໃນນັ້ນ ມີມໍລະດົກແຫ່ງຊາດ ແລະ ມໍລະດົກໂລກບໍ່?
- ມັນມີຄວາມກ່ຽວກັບລະຫວ່າງວັດທະນະທຳ ແລະ ວັດສະດຸຂອງການກໍ່ສ້າງ, ແມ່ນຜັງການປຸກສ້າງ ເຊັ່ນ: ການຈັດວາງສິ່ງປຸກສ້າງຢູ່ຕົວເມືອງ ແລະ ຢູ່ບ້ານ, ວັດຖຸດິບ ຕົວຢ່າງ: ຫີນທີ່ມາຈາກວິຊາຊີບປະຈຳທ້ອງຖິ່ນ ແລະ ທິວທັດດ້ານວັດຖຸ ຕົວຢ່າງ ຕົວເມືອງອ້ອມໜອງບໍ່?
- ເອກະລັກດ້ານວັດທະນະທຳສະແດງອອກໃນຮູບແບບການປຸກສ້າງເຮືອນ ແລະ ວັດສະດຸການກໍ່ສ້າງບໍ່?

## ກິດຈະກຳທີ 19 ສຳລັບນັກຮຽນ

## ກອງປະຊຸມເພື່ອຕັດສິນອະນາຄົດເຂດປະຫວັດສາດຂອງຕົວເມືອງ.

- ຈັດສະແດງລະຄອນຢູ່ຫ້ອງຮຽນຕາມຫົວເລື່ອງສົມມຸດດັ່ງນີ້:

ອຳນາດການປົກຄອງມີແຜນການບູລະນະໃຈກາງຂອງຕົວເມືອງທີ່ພວກເຈົ້າຢູ່. ຄຸ້ມເກົ່າແກ່ນີ້ ມີເຮືອນບູຮານສຸດທ້າຍທີ່ຍັງເຫຼືອຢູ່ ແລະ ເປັນສັນຍາລັກສຳຄັນທີ່ບົ່ງບອກເອກະລັກປະຈຳທ້ອງຖິ່ນ. ແຕ່ວ່າເງື່ອນໄຂການດຳລົງຊີວິດໃນເຂດນີ້ ຍັງບໍ່ທັນພຽງພໍຫຼາຍຢ່າງ ຖ້າທຽບໃສ່ຄວາມຕ້ອງການໃນຍຸກທັນສະໄໝ. ເພິ່ນບໍ່ສາມາດຕິດຕັ້ງລະບົບນ້ຳປະປາ ແລະ ຫ້ອງນ້ຳ. ຖ້າແຜນການ ການບູລະນະຕົວເມືອງນີ້ໄດ້ຮັບການປະຕິບັດຄຸ້ມເກົ່າແກ່ຈະຖືກມ້າງແລ້ວສ້າງອາຄານທັນສະໄໝແທນ.

ຜູ້ແທນກອງປະຊຸມຈຳນວນໜຶ່ງເຫັນດີນຳໂຄງການບູລະນະຕົວເມືອງນີ້, ມີຈຳນວນໜຶ່ງຊໍ້າພັດຂັດຄ້ານ. ມື້ນີ້ ແຕ່ລະຝ່າຍມາປະຊຸມກັນເພື່ອຕັດສິນໂຄງການດັ່ງກ່າວ.

- ສັບຊ້ອນນັກຮຽນອອກເປັນ 5 ຈຸ:

1. ຈຸເຫັນດີກັບໂຄງການ
2. ຈຸບໍ່ເຫັນດີກັບໂຄງການ
3. ປະຊາຊົນທີ່ອາໄສຢູ່ຄຸ້ມເກົ່າແກ່
4. ຊ່ຽວຊານ (ນັກສະຖາປານິກ, ວິສະວະກອນຜັງເມືອງ ແລະ ອື່ນໆ...)
5. ນັກຂ່າວ

- ເລືອກປະທານກອງປະຊຸມ 1 ທ່ານ ແລະຮອງປະທານ 2 ທ່ານ ເພື່ອດຳເນີນການໂຕ້ວາທີ ແລະ ເລຂາກອງປະຊຸມ 2 ທ່ານ ເພື່ອຮຽບຮຽງບົດບັນທຶກກອງປະຊຸມ.
- ຄົ້ນຄິດກ່ຽວກັບອັນຕະລາຍຂະນິດນີ້ ທີ່ຂົ່ມຂູ່ເມືອງມໍລະດົກໂລກ ຫຼື ສະຖານທີ່ຊຶ່ງຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ ໃນຂັ້ນອັນຕະລາຍ ແລ້ວສົນທະນາກັນໃນບັນຫາເຫຼົ່ານີ້.

### ກິດຈະກຳທີ 20 ສຳລັບນັກຮຽນ

## ການຮຽນດ້ວຍການແລກປ່ຽນວັດທະນະທຳ

**ວັດຖຸປະສົງ:** ຮັບຮູ້ຄວາມສຳພັນລະຫວ່າງສະຖານທີ່ມໍລະດົກໂລກ ແລະ ເອກະລັກປະຈຳຕົວ.

- ສັບຊ້ອນນັກຮຽນເປັນຫຼາຍໆ ເພື່ອຂຽນບົດສະເໜີກ່ຽວກັບຫົວເລື່ອງດັ່ງນີ້:

- ໂຮງຮຽນຂອງເຂົາເຈົ້າ
- ຫ້ອງຮຽນຂອງເຂົາເຈົ້າ
- ສະຖານທີ່ມໍລະດົກໂລກໃນປະເທດ ຫຼື ສະຖານທີ່ມໍລະດົກແຫ່ງຊາດ

- ແລກປ່ຽນບົດສະເໜີນັ້ນກັບໂຮງຮຽນອື່ນພາຍໃນປະເທດ ຫຼື ຕ່າງປະເທດ ຕົວຢ່າງໂຮງຮຽນເພື່ອຄວາມເຂົ້າໃຈອັນດີ ລະຫວ່າງຊາດ. ພວກເຈົ້າໄດ້ແລກປ່ຽນຫຍັງກັນ? ມີຫຍັງແດ່ທີ່ຄ້າຍຄືກັນ?
- ສົນທະນາກ່ຽວກັບຜົນປະໂຫຍດຂອງອິນເຕີແນັດ ທີ່ສາມາດເຮັດໃຫ້ຄົນໃນທົ່ວໂລກ ປະຊຸມກັນ ຊຶ່ງໃນສະໄໝກ່ອນບໍ່ຄິດວ່າຈະເຮັດໄດ້ແບບນີ້.

## ເອກະລັກປະຈຳຕົວ ແລະ ປະຊາຊົນເດີມຂອງທ້ອງຖິ່ນ.

ຮຽນເພື່ອຮູ້ຈັກສາຍກ່ຽວພັນລະຫວ່າງ ປະຊາຊົນເດີມຂອງທ້ອງຖິ່ນກັບມໍລະດົກດ້ານວັດທະນະທຳ ແລະ ທຳມະຊາດຊຶ່ງໄດ້ຮັບການຮັບຮູ້ ແລະ ປົກປັກຮັກສາໄວ້ດ້ວຍວິທີຕ່າງໆຕາມຕົວຢ່າງຂອງການປົກປັກຮັກສາມໍລະດົກໂລກ. ກິດຈະກຳສຳລັບນັກຮຽນທີ່ສະເໜີຕໍ່ໄປນີ້ ເປັນພຽງຕົວຢ່າງເພື່ອໃຫ້ຄູຄິດເຮັດກິດຈະກຳດຽວກັນນີ້ ດ້ວຍຕົວຢ່າງໃນທ້ອງຖິ່ນ, ໃນປະເທດ ແລະ ໃນໂລກ.

ກິດຈະກຳທີ 21 ສຳລັບນັກຮຽນ

## ອານຸສອນສະຖານແຫ່ງຊາດຂອງ ຊິມບັບເວໃຫຍ່ (Grand Zimbabwe)

ວັດຖຸປະສົງ: ເຂົ້າໃຈຕົ້ນກຳເນີດຂອງສະຖານທີ່ປະຫວັດສາດໃດໜຶ່ງ.

- ເລົ່າປະຫວັດຄວາມເປັນມາຂອງຊິມບັບເວໃຫຍ່ ເພື່ອເປັນຕົວຢ່າງໃນການສົນທະນາກ່ຽວກັບ ກົກເຄົ້າຂອງສະຖານທີ່ປະຫວັດສາດທີ່ເປັນໜ້າສົນໃຈ. ການຂຸດຄົ້ນດ້ານວັດຖຸບູຮານ ຢູ່ຊິມບັບເວໃຫຍ່ໄດ້ພົບເຫັນຫຼັກຖານທີ່ປະຕິເສດບໍ່ໄດ້ ກ່ຽວກັບກົກເຄົ້າຂອງຊາວອາຟະຣິກາໃນສະຖານທີ່ແຫ່ງນີ້.

ຊິມບັບເວໃຫຍ່ ແມ່ນສ່ວນໃຫຍ່ຂອງການປຸກສ້າງເກົ່າແກ່ ຢູ່ຕອນໃຕ້ຂອງທະວີບອາຟະຣິກາ ຊຶ່ງໄດ້ຮັບການກໍ່ສ້າງຂຶ້ນໃນກາງປ່າ ຂອງເຂດທົ່ງພຽງ. ເມືອງເກົ່າແກ່ແຫ່ງນີ້ປະກອບດ້ວຍສອງເຂດ ຊຶ່ງຍັງມີຊາກຂອງຫໍຜາສາດເຫຼືອຢູ່. ຜູ້ກໍ່ສ້າງໃນຫຼາຍເຊັ່ນຄົນໄດ້ເອົາຫີນມາຍອງກັນເພື່ອເຮັດກຳແພງ ແລະ ທາງຍ່າງ. ຊາກຂອງການປຸກສ້າງຢູ່ເຂດຜາສາດໃຫຍ່ ເປັນບູຮານສະຖານອ້ອມດ້ວຍກຳແພງ 250 ແມັດ ແລະ ໃຊ້ກ້ອນຫີນ 15000 ໂຕນ ຊຶ່ງຍັງຢູ່ໃນສະພາບເກົ່າ.

ການຄົ້ນຄວ້າ ເພື່ອສະແດງກົກເຄົ້າຂອງຊາວອາຟະຣິກາ ແລະ ຄວາມຮຸ່ງເຮືອງດ້ານວັດທະນະທຳຂອງເຂົາເຈົ້າໃນດິນແດນແຫ່ງນີ້ ບໍ່ໄດ້ຮັບການຍອມຮັບເປັນຢ່າງດີ ຈາກຊາວຜິວຂາວ ທີ່ເຂົ້າມາຕັ້ງຖິ່ນຖານໃໝ່ ແລະ ຕັ້ງຊື່ໃໝ່ໃຫ້ດິນແດນແຫ່ງນີ້ວ່າ ປະເທດໂຣເດຊີ (Rhodésie) ເພື່ອຂຽນປະຫວັດສາດຄືນ ນັກການເມືອງ ແລະ ນັກໂຄສະນາພະຍາຍາມເຜີຍແຜ່ທິດສະດີວ່າດ້ວຍອິດທິພົນຂອງຊາວ ເຟນີຊຽງ, ອາຣັບ, ອິນເດຍ ຕະຫຼອດເຖິງຊາວ ເອບະເຣີ (ຢິວ) ຕໍ່ດິນແດນນີ້. ໃນເວລາໂຕ້ວາທີຢູ່ສະພາ, ຜູ້ແທນບາງຄົນຍັງໄດ້ຢັ້ງຢືນວ່າ ຊິມບັບເວໃຫຍ່ ບໍ່ແມ່ນກົກເຄົ້າຂອງຊາວອາຟະຣິກາ.

ນັກບູຮານຄະດີ ແຣນດອນ ມັກເວີ (Randall MacIver) ແລະ ເຈີຕະຣຸດ ກາເຕິນ-ທອມສັນ (Gertrude Caton-Thompson) ໄດ້ເຮັດການຂຸດຄົ້ນຢູ່ຊິມບັບເວໃຫຍ່ ແລະ ພົບເຫັນຫຼັກຖານຫຼາຍຢ່າງທີ່ຢັ້ງຢືນກົກເຄົ້າຂອງເມືອງເກົ່າແກ່ ຂອງອາຟະຣິກາແຫ່ງນີ້. ວັດຖຸບູຮານທີ່ນຳອອກມາໄດ້ຢັ້ງຢືນການໄດ້ຮັບອິດທິພົນຈາກເຜົ່າຊົນໂຊນາ (Shona) ຊຶ່ງເປັນເຜົ່າຊົນເດີມຂອງທ້ອງຖິ່ນນີ້ ແລະ ຈາກ

ການຂຸດຄົ້ນໃນແຕ່ລະໆດັບໄດ້ພົບເຫັນຮ່ອງຮອຍວິທີດຳລົງຊີວິດຂອງຊາວອາຟະຣິກາ.

ການຄົ້ນພົບເຫຼົ່ານີ້ ບວກກັບການຄົ້ນຄວ້າຢ່າງສະໝ່ຳສະເໝີ ຂອງນັກບູຮານຄະດີ, ນັກພາສາສາດ ແລະ ນັກມະນຸດວິທະຍາ ໄດ້ເປັນພື້ນຖານປະຫວັດສາດ ຂອງຊິມບັບເວໃຫຍ່ ຊຶ່ງປະກອບດ້ວຍສາມໄລຍະ ແຕ່ສະຕະວັດ ທີ 11 ເປັນຕົ້ນມາ ຜູ້ຄົນໄດ້ເຂົ້າມາຕັ້ງຖິ່ນຖານໃນສະຖານທີ່ນີ້ ແລະ ໄດ້ປຸກສ້າງເຮືອນແບບປະຖົມປະຖານດ້ວຍດິນ ແລະ ໄມ້ຕາມເນີນພູ. ສອງສະຕະວັດຕໍ່ມາ ໄດ້ມີການປຸກສ້າງເຮືອນດິນແທນເຮືອນໄມ້ ແບບປະຖົມປະຖານ ແລະ ກໍ່ກຳແພງດ້ວຍຫີນ. ໃນສະຕະວັດຕໍ່ມາ ສັງຄົມມີຄວາມຮຸ່ງເຮືອງ ຍ້ອນມີການຄ້າຂາຍກັບປະຊາຊົນ ເຂດຝັ່ງຕາເວັນອອກ ຂອງອາຟະຣິກາ, ໂດຍສະເພາະກັບພໍ່ຄ້າຊາວມຸສະລິມ. ແຕ່ສະຕະວັດທີ 15 ແມ່ນໄລຍະລົງຄ້ອຍຂອງຊິມບັບເວໃຫຍ່ ທີ່ດັບມອດລົງເທື່ອລະເລັກເທື່ອລະນ້ອຍ ຍ້ອນວ່າ ຊັບພະຍາກອນ ຂອງທ້ອງຖິ່ນໝົດໄປ.

ຮ່ອງຮອຍຄວາມເບັ່ງບານຂອງການຄ້າ ແລະ ແຜນຜັງຂອງສິ່ງປຸກສ້າງດ້ວຍຫີນໃນຊິມບັບເວໃຫຍ່ ເປັນຫົວເລື່ອງການໂຕ້ວາທີກ່ຽວກັບກົກເຄົ້າຂອງບູຮານສະຖານຢູ່ອາຟະຣິກາ.

ຈາກການຄົ້ນຄວ້າໃນຫຼາຍປີຜ່ານມາ, ຄວາມເປັນຈິງດ້ານປະຫວັດສາດ ແລະ ເອກະລັກປະຈຳຕົວຂອງຊິມບັບເວໃຫຍ່ ຈຶ່ງໄດ້ປະກົດອອກ. ໃນປະຈຸບັນ, ຊາກເມືອງເກົ່າແກ່ຂອງຊິມບັບເວໃຫຍ່ເປັນຈິດວິນຍານຂອງຊາດ ແລະ ແມ່ນໜຶ່ງໃນເພັດນິນຈິນດາຂອງ ມໍລະດົກແຫ່ງອາຟະຣິກາ.

- ສັບຊ້ອນນັກຮຽນເປັນຫຼາຍຈຸ ເພື່ອຂຽນປະຫວັດຂອງບູຮານສະຖານໃນທ້ອງຖິ່ນຕ່າງໆ ເຊັ່ນ: ຫຼວງພະບາງ, ໄຫຫີນ, ທາດຫຼວງ, ທາດອິງຮັງ, ທາດສີໂຄດຕະບອງ ແລະ ອື່ນໆ ທີ່ເປັນສັນຍາລັກຂອງທ້ອງຖິ່ນ ແລະ ຂອງຊາດ.

## ກິດຈະກຳ ທີ 22 ສຳລັບນັກຮຽນ

## ອຸທິຍານແຫ່ງຊາດ ອູລູຣູ-ຄາທາ ຈູທາ(Uluru-Kata Tjuta)

**ວັດຖຸປະສົງ:** ມີຄວາມຮູ້ພື້ນຖານກ່ຽວກັບທິວທັດວັດທະນະທຳ ແລະ ໜ້າທີ່ຂອງຊາວພື້ນເມືອງໃນການປົກປັກຮັກສາມໍລະດົກໂລກ.

ອຸທິຍານແຫ່ງຊາດ ອູລູຣູ-ຄາທາ ຈູທາ ຢູ່ອົດສະຕາລີ ເປັນຕົວຢ່າງທີ 2 ເພື່ອສະແດງວ່າການຂຶ້ນທະບຽນສະຖານທີ່ ໃນບັນຊີລາຍຊື່ມໍລະດົກໂລກ ສາມາດສົ່ງເສີມການຮັບຮູ້ ແລະ ການປົກປັກຮັກສາເອກະລັກປະຈຳຕົວຂອງປະຊາຊົນພື້ນເມືອງ ແລະ ວິທີດຳລົງຊີວິດຂອງເຂົາເຈົ້າ. ນອກນີ້ອຸທິຍານແຫ່ງນີ້ ຍັງເປັນຕົວຢ່າງຂອງການຄຸ້ມຄອງສະພາບທີ່ມໍລະດົກບົນຈິດໃຈການສ້າງສາຍຮ່ວມງານ ລະຫວ່າງ ປະຊາຊົນພື້ນເມືອງ ແລະ ອົງການເພື່ອການປົກປັກຮັກສາທຳມະຊາດຂອງອົດສະຕາລີ.

ອຸທິຍານແຫ່ງຊາດໄດ້ຂຶ້ນທະບຽນເປັນມໍລະດົກໂລກ ຕາມມາດຖານທິວທັດທຳມະຊາດ ໃນປີ 1987. ຕໍ່ມາໃນປີ 1994 ໄດ້ຂຶ້ນທະບຽນເປັນທິວທັດວັດທະນະທຳຕື່ມອີກ ຍ້ອນວ່າ ສະຖານທີ່ແຫ່ງນີ້ ເປັນຜົນງານທີ່ຄົນ ແລະ ທຳມະຊາດບັນຈົງສ້າງຂຶ້ນມາ ແລະ ເປັນການສະແດງອອກຂອງຜົນກະທົບ ຊຶ່ງກັນ ແລະ ກັນ ລະຫວ່າງຄົນ ແລະ ສະພາບແວດລ້ອມທຳມະຊາດ. ອຸທິຍານແຫ່ງຊາດ ອູລູຣູ-ຄາທາ ຈູທາ ແມ່ນທິວທັດວັດທະນະທຳ ແຫ່ງທຳອິດທີ່ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ.

ອຸທິຍານແຫ່ງຊາດ ອູລູຣູ-ຄາທາ ຈູທາ ຕັ້ງຢູ່ດິນແດນໃນສະໄໝບູຮານຂອງຊາວອາໂບຣິຈິນ ແລະ ໃນປະຈຸບັນເຂົາເຈົ້າຍັງອາໄສຢູ່ ແລະ ປາກພາສາຕົ້ນກຳເນີດຂອງເຂົາເຈົ້າ. ໃນປີ 1985 ລັດຖະບານຂອງປະເທດອົດສະຕາລີໄດ້ສົ່ງດິນແດນນີ້ ຄືນໃຫ້ຊົນເຜົ່າ ອາແນນກູ (anangu) ຊຶ່ງເປັນຊົນພື້ນເມືອງຢູ່ທະເລຊາຍດ້ານຕາເວັນຕົກ ຂອງອົດສະຕາລີ. ຫຼັງການສົ່ງຄືນ, ຊາວອາແນນກູໄດ້ເອົາອຸທິຍານແຫ່ງຊາດໃຫ້ອົງການເພື່ອການອະນຸລັກທຳມະຊາດ ຂອງອົດສະຕາລີ (ANCA) ເຊົ່າ. ໃນປະຈຸບັນ ຊາວອາແນນກູ ແລະ ອົງການເພື່ອການອະນຸລັກທຳມະຊາດຂອງອົດສະຕາລີ ຮ່ວມກັນອະນຸລັກ ແລະ ຄຸ້ມຄອງອຸທິຍານ. ການສົ່ງຄືນ ແລະ ການຄຸ້ມຄອງຮ່ວມກັນອະນຸລັກ ແລະ ຄຸ້ມຄອງອຸທິຍານ. ການສົ່ງຄືນ ແລະ ການຄຸ້ມຄອງຮ່ວມກັນເປັນຂີດໝາຍໃນປະຫວັດຂອງຂະບວນການເພື່ອຮັກສາສິດຂອງຊາວອາໂບຣິຈິນ ໃນການຄອບຄອງດິນແດນຂອງເຂົາເຈົ້າ ແລະ ໃນປະຫວັດແຫ່ງການອະນຸລັກ ມໍລະດົກຂອງອົດສະຕາລີ.

ຄວາມຮູ້ ແລະ ການດຳລົງຊີວິດ ຂອງຊາວອາໂບຣິຈີນ, ເອກະລັກ, ການຈັດຕັ້ງດ້ານສັງຄົມ, ຈັນຍາບັນ ຂອງເຂົາເຈົ້າ ແລະ ທິວທັດທຳມະຊາດ ທີ່ເຂົາເຈົ້າດຳລົງຊີວິດຢູ່ສ້າງຂຶ້ນມາ ແລະ ອະທິບາຍດ້ວຍຄວາມສຳນຶກທີ່ເຂົາເຈົ້າເອີ້ນວ່າ ຈູຄາພາ (Tjukarpa). ຈູຄາພາ ຖືກແປຄວາມໝາຍຢ່າງບໍ່ສັດເຈນວ່າ "ເວລາແຫ່ງການຝັນ" ນັ້ນບົ່ງບອກເຂົາເຈົ້າໃຫ້ຮູ້ຈັກວິທີເພື່ອການຈັດຕັ້ງທາງສັງຄົມ, ການພົວພັນຊຶ່ງກັນ ແລະ ກັນ ລະຫວ່າງເຂົາເຈົ້າເອງ ແລະ ລະຫວ່າງເຂົາເຈົ້າກັບທຳມະຊາດ. ມັນຊີ້ນຳທຸກການປະພຶດຂອງເຂົາເຈົ້າ. ເວລາຊາວອາແນນກູ ເຄື່ອນຍ້າຍໄປມາໃນດິນແດນຂອງສາຍພູອູລູຣູ ແລະ ຄາທາຈູທາເຂົາເຈົ້າມີຄວາມສຳນຶກ ແລະ ເຂົ້າໃຈການເດີນທາງ ແລະ ກິດຈະກຳຂອງປູ່ຍ່າຕາຍາຍຂອງເຂົາເຈົ້າ ຊຶ່ງຕ້ອງຍ້າຍບ່ອນຢູ່ໃນເວລາທີ່ພື້ນທີ່ນັ້ນບໍ່ມີຫຍັງປ່ຽນແປງ. ໃນເວລາເຄື່ອນຍ້າຍຈາກດິນແດນນີ້ໄປສູ່ດິນແດນອື່ນ, ປູ່ຍ່າຕາຍາຍຊຶ່ງໝາຍເຖິງຄົນ, ພືດ ແລະ ສັດປະກອບເປັນເອກະລັກຂອງທິວທັດທຳມະຊາດ ແລະ ສິ່ງຜົນກະທົບຊຶ່ງກັນ ແລະ ກັນຕາມຈັງຫວະການຄືບໜ້າຂອງແຕ່ລະພາກສ່ວນ. ໃນປະຈຸບັນກໍຄືໃນອະດີດ, ຄວາມຮັບຮູ້ໃນສິ່ງເຫຼົ່ານີ້ໄດ້ຮັບການທົບທວນຄືນ, ປົກປັກຮັກສາ ແລະ ຖ່າຍທອດດ້ວຍພິທີກຳ, ການຮ້ອງເພງ, ການຟ້ອນ, ສິລະປະ ແລະ ເຕັກນິກ. ສະນັ້ນ ທິວທັດທຳມະຊາດ ຊຶ່ງຊົນເຜົ່າອື່ນເຫັນແຕ່ການສະແດງອອກຂອງທຳມະຊາດ, ໃນຕົວຈິງ, ອຸດົມສົມບູນດ້ວຍຄວາມໝາຍດ້ານວັດທະນະທຳ ຊຶ່ງສ້າງຂຶ້ນຕາມຂະບວນການດ້ານວັດທະນະທຳ.

ຈົດໝາຍແຈ້ງຂ່າວຂອງສູນກາງມໍລະດົກໂລກ, ສະບັບທີ 10, ເດືອນມີນາ 1996.
(*Lettre du patrimoine mondial*, nº 10, mars 1996.)

ພວກເຮົາໄດ້ເວົ້າຢູ່ເລື້ອຍໆວ່າ, ສຳລັບພວກເຮົາແລ້ວ, ດິນມີຄວາມສຳຄັນຕໍ່ຄວາມສຳນຶກ (ຈູຄາພາ), ປະຈຸບັນຄົນໃນຕ່າງແດນ ແລະ ປະຊາຊົນທີ່ບໍ່ແມ່ນຄົນພື້ນເມືອງໄດ້ຮັບຮູ້ຄວາມສຳຄັນດ້ານວັດທະນະທຳຂອງມັນ - ສິ່ງນີ້ ເຮັດໃຫ້ຂ້ອຍມີຄວາມຮູ້ສຶກດີໃຈທີ່ໄດ້ເຫັນວ່າ ມັນໄດ້ຮັບການຍອມຮັບເອົາແລ້ວ. ໃນເມື່ອກ່ອນ ບາງຄົນຫົວເຍາະເຍີ້ຍ ແລະ ເອີ້ນມັນວ່າ "ເວລາແຫ່ງການຝັນ", ແຕ່ຄວາມສຳນຶກນີ້ແມ່ນຄວາມຈິງ, ມັນແມ່ນກົດເກນຂອງພວກເຮົາ, ພາສາຂອງພວກເຮົາ, ດິນຂອງພວກເຮົາ ແລະ ຄອບຄົວຂອງພວກເຮົາ.

ຢາມີແລດສະເຕີ, ປະທານສະພາບໍລິຫານງານຂອງ ອູລູຣູ-ກາທາຈູທາ.
(Yami Lester, président du Conseil d'administration d'Uluru-Kata Tjuta)

ການເຊັນຮັບຮອງສົນທິສັນຍາບໍ່ໄດ້ເຮັດໃນທັນທີທັນໃດ ໃຫ້ພວກເຮົາເຈົ້າໃຈສາຍກ່ຽວພັນ ລະຫວ່າງ ເອກະລັກປະຈຳຕົວ ແລະ ກົກເຄົ້າດ້ານວັດທະນະທຳຂອງພວກເຮົາ ກັບສິ່ງອື່ນໆຂອງໂລກ. ພວກເຮົາສາມາດເຂົ້າໃຈເປັນຫຍັງການປົກປັກຮັກສາມໍລະດົກແຫ່ງຊາດ ແລະ ຈັນຍາບັນ ຈຶ່ງມີຄວາມສຳຄັນແຕ່ມັນມີຄວາມຫຍຸ້ງຍາກ ເພື່ອຄົ້ນຄິດວ່າໃນຕົວຈິງພວກເຮົາ ມີຄວາມກ່ຽວພັນ ຊຶ່ງກັນ ແລະ ກັນ. ເພື່ອເຂົ້າໃຈເນື້ອແທ້ຂອງການຂຶ້ນຕໍ່ກັນ ແລະ ກັນນີ້, ພວກເຮົາສາມາດເບິ່ງໂລກຄືກັນກັບທະເລຂອງດອນແຫ່ງວັດທະນະທຳ, ທະເລຂອງຫີນພະກາລັງ.

ຫີນພະກາລັງປະກອບດ້ວຍຫຼາຍຊັ້ນ ແຕ່ວ່າຊັ້ນສູງສຸດແມ່ນຊັ້ນດຽວທີ່ມີຊີວິດ. ສອງສາມປີຕໍ່ມາຊັ້ນນີ້ຕາຍ ແລະ ຊັ້ນຫີນພະກາລັງໃໝ່ເກີດຂຶ້ນແທນ. ທຸກໆຄັ້ງທີ່ຊັ້ນໃໝ່ຂອງສັດທີ່ມີຊີວິດເກີດຂຶ້ນ ຫີນພະກາລັງປ່ຽນແປງເລັກນ້ອຍ; ມັນໃຫຍ່ຂຶ້ນ ແລະ ບໍລິມາດຂອງມັນກໍ່ເພີ່ມຂຶ້ນ. ເບິ່ງແບບຜິວເຜີນ, ສັດແຕ່ລະຕົວ ເຄື່ອນໄຫວຢ່າງມີອິດສະລະພາບ. ແຕ່ໃນຕົວຈິງ, ມັນຕິດພັນກັບຮຸ້ນຜ່ານມາ ແລະ ບໍ່ສາມາດແຍກຕົວອອກໄດ້. ສັດທີ່ມີຊີວິດ ແຕ່ລະຕົວຄ້າຍຄືວ່າບໍ່ກ່ຽວພັນກັບຕົວອື່ນໃນໝູ່ດຽວກັນ. ແຕ່ວ່າໃນຫຼາຍຮຸ່ນຜ່ານມາທີ່ຢູ່ໃຕ້ທະເລ, ເພິ່ນພົບເຫັນວ່າ ຫີນພະກາລັງທັງໝົດແມ່ນສ່ວນປະກອບຂອງຫີນເຄົ້າໜ່ວຍດຽວກັນ. ຖ້າວ່າຊັ້ນເກົ່າແກ່ຖືກທຳລາຍດ້ວຍການມ້າງເພ ຫຼື ມົນພາວະ ພວກເຮົາສາມາດຄາດຄະເນສິ່ງທີ່ເກີດຂຶ້ນກັບຫີນພະກາລັງທີ່ຍັງເຫຼືອຢູ່. ໂລກຂອງພວກເຮົາ ຄືກັບຫີນພະກາລັງ. ຫຼາຍພັນເຊັ່ນຄົນໄດ້ສ້າງມັນມາກ່ອນພວກເຮົາ - ຄວາມຄິດ, ການກະທຳ, ຜົນສຳເລັດຂອງເຂົາເຈົ້າ ແມ່ນສ່ວນປະກອບໃນຮ່າງກາຍຂອງພວກເຮົາ, ໃນສິ່ງທີ່ພວກເຮົາເປັນຢູ່. ເອກະລັກປະຈຳຕົວຂອງພວກເຮົາ ແລະ ມໍລະດົກຂອງພວກເຮົາ.

ໂທມັດ ຮິນລາກ ອີຣິກເສັນ
ສາສະດາຈານຝ່າຍມະນຸດວິທະຍາ, ມະຫາວິທະຍາໄລອົດສະໂລ ປະເທດນອກແວ.
Thomas Hyllard Erikson,
*Professeur d'anthropologie, université d'Oslo, Norvège.*

## ມໍລະດົກໂລກ ແລະ ເອກະລັກປະຈຳຕົວຕາມລາຍວິຊາ:

### ສິລະປະ

ໃຫ້ນັກຮຽນແຕ້ມຮູບສະຖານທີ່ມໍລະດົກໂລກທີ່ເປັນຫຼັກຖານຢັ້ງຢືນ ຄວາມປີຊາສາມາດຂອງຜູ້ປະດິດ ແລະ ສ່ອງແສງເຖິງເອກະລັກປະຈຳຕົວຂອງຜູ້ກໍ່ສ້າງ ຫຼື ຜູ້ເປັນເຈົ້າຂອງ ຖ້າແມ່ນກໍລະນີຂອງທິວທັດວັດທະນະທຳ.

### ພາສາຕ່າງປະເທດ

ສອນນັກຮຽນໃຫ້ຮູ້ຈັກມໍລະດົກແຫ່ງຊາດ ແລະ ມໍລະດົກໂລກ ດ້ວຍການຮຽນພາສາຕ່າງປະເທດ ເຊັ່ນ: ໃນດ້ານຄຳສັບ, ປະໂຫຍກ ແລະ ບົດ.

### ພູມສາດ/ວິທະຍາສາດ:

ຮຽນຮູ້ບັນຊີລາຍຊື່ມໍລະດົກໂລກ ແລະ ຍົກຕົວຢ່າງຜົນກະທົບຊຶ່ງກັນ ແລະ ກັນ ລະຫວ່າງຄົນ ແລະ ທີ່ຕັ້ງພູມສາດ. ເນັ້ນໜັກໜ້າທີ່ຂອງທຳມະຊາດ ໃນການກໍ່ສ້າງເອກະລັກຂອງປະຊາຊົນໃນການດຳລົງຊີວິດ ຕົວຢ່າງ ໜ້າທີ່ຂອງຕົ້ນໄມ້ ຢູ່ປະເທດນອກແວ.

### ປະຫວັດສາດ

ສະແດງລະຄອນ, ຖ້າເປັນໄປໄດ້ຈັດການສະແດງຢູ່ສະຖານທີ່ມໍລະດົກໂລກ ຫຼື ສະຖານທີ່ວັດທະນະທຳ ຫຼື ທຳມະຊາດ ເພື່ອເຮັດໃຫ້ນັກຮຽນເຂົ້າໃຈປະຊາຊົນທີ່ກໍ່ສ້າງສະຖານທີ່ແຫ່ງນັ້ນ ແລະ ຜູ້ທີ່ຕັ້ງຖິ່ນຖານໃນປະຈຸບັນ.

### ພາສາລາວ/ວັນນະຄະດີ.

ຂຽນບົດ ເພື່ອສະເໜີຄວາມສຳຄັນໃນການປົກປັກຮັກສາເອກະລັກດ້ານວັດທະນະທຳ ແລະ ຂະຫຍາຍບາງຂໍ້ຄວາມດ້ວຍການຂຽນເປັນບົດລະຄອນກ້ອມ.

ຈັດການປະກວດການສະແດງຄວາມເຫັນ 5 ນາທີ ກ່ຽວກັບການປົກປັກຮັກສາສະຖານທີ່ວັດທະນະທຳ ຫຼື ທຳມະຊາດ.

ໃຫ້ນັກຮຽນອ່ານ ແລະ ວິເຄາະບົດກ່ຽວກັບເອກະລັກ ທີ່ຕິດພັນກັບສະຖານທີ່ມໍລະດົກແຫ່ງຊາດ ແລະ ມໍລະດົກໂລກ.

### ສຶກສາພົນລະເມືອງ

ນຳໃຊ້ຜັງ ແລະ ຮູບຂອງອະນຸສອນສະຖານ ຫຼື ສາສະໜາສະຖານເພື່ອສະໜອງຂ່າວສານເພີ່ມເຕີມໃຫ້ແກ່ການສຶກສາອົບຮົມທາງດ້ານຈິດໃຈ.

# ມໍລະດົກໂລກ ແລະ ການທ່ອງທ່ຽວ

« ໃນປີ 1998 ນັກທ່ອງທ່ຽວ 500.000.000 ຄົນທ່ຽວຊົມສະຖານທີ່ ມໍລະດົກໂລກ 552 ແຫ່ງ »

# ມໍລະດົກໂລກ ແລະ ການທ່ອງທ່ຽວ

**ວັດຖຸປະສົງ** 94
ດ້ານຄວາມຮູ້
ດ້ານທ່າທີ
ດ້ານຄວາມສາມາດ

**ການທ່ອງທ່ຽວແມ່ນປະກົດການຂອງໂລກ ແລະ ທຸລະກິດຂະໜາດໃຫຍ່** 95
ກິດຈະກຳທີ 23 ສຳລັບນັກຮຽນ: ຄຳນວນທ່າອ່ຽງຂອງການທ່ອງທ່ຽວ 97
ກິດຈະກຳ ເພື່ອການສຶກສາ: ສະຖິຕິກ່ຽວກັບການທ່ອງທ່ຽວສາກົນ 98
ຜົນດີ ແລະ ຜົນເສຍຂອງການທ່ອງທ່ຽວ ຕໍ່ການອະນຸລັກມໍລະດົກໂລກ 101
ກິດຈະກຳທີ 24 ສຳລັບນັກຮຽນ: ຜົນດີ ແລະ ຜົນເສຍຂອງການທ່ອງທ່ຽວ ທີ່ອາດຈະເກີດຂຶ້ນກັບສະຖານທີ່ມໍລະດົກ. 102
ຄວາມຈຳເປັນຂອງການທ່ອງທ່ຽວແບບໃໝ່

**ມໍລະດົກໂລກ, ການທ່ອງທ່ຽວ ແລະ ການພັດທະນາແບບສົມເຫດສົມຜົນ ບົນພື້ນຖານດ້ານນິເວດວິທະຍາ.** 103

ກິດຈະກຳທີ 25 ສຳລັບນັກຮຽນ: ແບບຫຼິ້ນກ່ຽວກັບມໍລະດົກໂລກ ແລະ ການທ່ອງທ່ຽວ 105
ກິດຈະກຳເພື່ອການສຶກສາ: ແບບຫຼິ້ນກ່ຽວກັບມໍລະດົກໂລກ ແລະ ການທ່ອງທ່ຽວ 106
ກິດຈະກຳທີ 26 ສຳລັບນັກຮຽນ: ນັກທ່ອງທ່ຽວທີ່ຂາດຄວາມລະອຽດອ່ອນກັບ ນັກທ່ອງທ່ຽວທີ່ເປັນໜ້ານັບຖື. 107

ສະຖານທີ່ມໍລະດົກໂລກ ເພື່ອການທ່ອງທ່ຽວເພີ່ມຂຶ້ນ 108

ກິດຈະກຳທີ 27 ສຳລັບນັກຮຽນ: 109
ການປະເມີນສິ່ງອຳນວຍຄວາມສະດວກ
ສຳລັບການທ່ອງທ່ຽວໃນສະຖານທີ່ມໍລະດົກ.
ກິດຈະກຳເພື່ອການສຶກສາ: 110
ການປະເມີນສິ່ງອຳນວຍຄວາມສະດວກ
ສຳລັບການທ່ອງທ່ຽວໃນສະຖານທີ່ມໍລະດົກໂລກ.

ການທ່ອງທ່ຽວໃນຮູບການໃໝ່ ແລະ ມໍລະດົກໂລກ. 111

ການຄຸ້ມຄອງການທ່ອງທ່ຽວໃນສະຖານທີ່ມໍລະດົກໂລກ 112

ກິດຈະກຳທີ 28 ສຳລັບນັກຮຽນ: 113
ການສ້າງຖະໜົນຜ່ານສະຖານທີ່ທຳມະຊາດຂອງມໍລະດົກໂລກ

ກິດຈະກຳເພື່ອການສຶກສາ: 113
ການສ້າງຖະໜົນຜ່ານສະຖານທີ່ທຳມະຊາດຂອງມໍລະດົກໂລກ

ມໍລະດົກໂລກ ແລະ ການທ່ອງທ່ຽວຕາມຫຼັກສູດຂອງລາຍວິຊາ 115

# ວັດຖຸປະສົງ:

## ດ້ານຄວາມຮູ້

ເຮັດໃຫ້ນັກຮຽນຮູ້ ແລະ ເຂົ້າໃຈດີ:

- ທ່າອ່ຽງຂອງການທ່ອງທ່ຽວສາກົນ ແລະ ຜົນສະທ້ອນທີ່ອາດຈະເກີດຂຶ້ນກັບມໍລະດົກໂລກ.
- ວິທີຂອງການທ່ອງທ່ຽວທີ່ສາມາດເຮັດໃຫ້ຄວາມຮູ້ຂອງພວກເຮົາກ່ຽວກັບມໍລະດົກ, ວັດທະນະທຳ, ຄຸນຄ່າ ແລະ ປະເພນີອື່ນດີຂຶ້ນ.
- ຄວາມຈຳເປັນໃນການບັນຈຸການຄຸ້ມຄອງນັກທ່ອງທ່ຽວເຂົ້າໃນການຄຸ້ມຄອງສະຖານທີ່.

## ດ້ານທ່າທີ

ຊຸກຍູ້ນັກຮຽນໃຫ້:

- ເຂົ້າໃຈຄວາມຈຳເປັນໃນການສ້າງຮູບແບບໃໝ່ຂອງການທ່ອງທ່ຽວທີ່ແທດເໝາະກັບຄຸນຄ່າ ແລະ ການອະນຸລັກຂອງມໍລະດົກໂລກ.
- ຄົ້ນຄິດເພື່ອຊອກຫາມາດຕະການໃນການປົກປັກຮັກສາສະຖານທີ່ມໍລະດົກໂລກ ເພື່ອຮອງຮັບການທ່ອງທ່ຽວຂະໜາດໃຫຍ່ ແລະ ປະຕິບັດຕາມມາດຕະການເຫຼົ່ານັ້ນ.

## ດ້ານຄວາມສາມາດ

ເຮັດໃຫ້ນັກຮຽນພັດທະນາຄວາມສາມາດຂອງເຂົາເຈົ້າເພື່ອ:

- ຕີຄວາມໝາຍ ແລະ ວິເຄາະສະຖິຕິເພື່ອເຂົ້າໃຈແຈ້ງການຂຶ້ນຕໍ່ກັນລະຫວ່າງທ່າອ່ຽງຂອງການທ່ອງທ່ຽວ ແລະ ການປົກປັກຮັກສາມໍລະດົກໂລກ.
- ຮັບເອົາຄວາມຮູ້ພື້ນຖານເພື່ອເປັນຜູ້ນຳພາທ່ອງທ່ຽວໃນສະຖານທີ່ມໍລະດົກໂລກ.
- ທ່ຽວຊົມສະຖານທີ່ວັດທະນະທຳ ແລະ ທຳມະຊາດ ດ້ວຍຄວາມເຄົາລົບ ແລະ ຄວາມຮັບຜິດຊອບ.
- ນຳໃຊ້ຫົວຄິດປະດິດສ້າງເຂົ້າໃນການບໍລິການນັກທ່ອງທ່ຽວ ເພື່ອປັບປຸງການສະເໜີສະຖານທີ່ມໍລະດົກໂລກ ແລະ ຮັບປະກັນການປົກປັກຮັກສາ.

## ການທ່ອງທ່ຽວ: ປະກົດການຂອງໂລກ ແລະ ທຸລະກິດຂະໜາດໃຫຍ່.

ມີສິ່ງທີ່ດີກວ່າການທ່ອງທ່ຽວບໍ່ເພື່ອສົ່ງເສີມ ຄວາມເຂົ້າໃຈລະຫວ່າງ ປະຊາຊາດດ້ວຍການເຮັດໃຫ້ມີຄວາມຊື່ນຊົມຕໍ່ມໍລະດົກທຳມະຊາດ ແລະ ວັດທະນະທຳທີ່ໄດ້ແບ່ງປັນໃຫ້? ສະຖານທີ່ມໍລະດົກຍາມໃດກໍແມ່ນໜຶ່ງໃນຫຼາຍສິ່ງທີ່ຊັກຊວນໃຫ້ມີການທ່ອງທ່ຽວ. ຜົນງານຊັ້ນເອກະແຫ່ງຄວາມປີຊາສາມາດຂອງມວນມະນຸດ ແລະ ທຳມະຊາດເຮັດໃຫ້ພວກເຮົາຕົກຕະລຶງ ຊຶ່ງໃນຕົວແມ່ນຄວາມປ່ຽມລົ້ນຂອງຄວາມຮູ້ສຶກ. ແຕ່ວ່າການທ່ຽງທ່ຽວໂດຍບໍ່ມີການຄວບຄຸມ ແລະ ການພັດທະນາທີ່ຂາດຄວາມຮອບຄອບ ອາດນຳມາແຫ່ງການສູນເສຍ ທີ່ບໍ່ສາມາດຈະຕ່າວປົ້ນຄືນຕໍ່ຊັບສິນ ແລະ ສັງຄົມຂອງສະຖານທີ່ຕະຫຼອດເຖິງຊຸມຊົນອ້ອມຂ້າງນຳອີກ.

ເຟເດຣີໂກ ມາຍໍ, ຜູ້ອຳນວຍການໃຫຍ່ອົງການອຸຍແນດສະໂກ,
ມໍລະດົກໂລກ: ຊັບສິນບັດຂອງພວກເຮົາຕະຫຼອດການບໍ່?
ປາຣີ, ອຸຍແນດສະໂກ, 1995.
Federico Mayor, Directeur général de l'UNESCO, World Heritage: Ours Forever? Paris, UNESCO, 1995

ໜຶ່ງໃນຫຼາຍປະກົດການຂອງໂລກທີ່ສະແດງອອກຢ່າງເດັ່ນຊັດໃນສີ່ສິບປີຜ່ານມາແມ່ນການຂະຫຍາຍຕົວຂອງການທ່ອງທ່ຽວເປັນຂະບວນໃຫຍ່. ສິ່ງນີ້ເຮັດໃຫ້ຈຳນວນຂອງຜູ້ທ່ຽວຊົມມໍລະດົກໂລກເພີ່ມຂຶ້ນຢ່າງຫຼວງຫຼາຍ.

ເນື່ອງຈາກວ່າ ເຕັກໂນໂລຊີການຂົນສົ່ງມີຄວາມກ້າວໜ້າ, ເງື່ອນໄຂການດຳລົງຊີວິດດີຂຶ້ນ, ເວລາພັກປະຈຳປີ ແລະ ການພັກຜ່ອນເພີ່ມຂຶ້ນ. ສະນັ້ນໃນປະຈຸບັນຈຶ່ງມີຜູ້ຄົນທ່ອງທ່ຽວຫຼາຍ ແລະ ໄກກວ່າແຕ່ກ່ອນ. ອົງການທ່ອງທ່ຽວໂລກ (OMT) ໄດ້ເກັບກຳວ່າໃນ 1950 ມີນັກທ່ອງທ່ຽວສາກົນ 25 ລ້ານຄົນ, ໃນປີ 1995 ມີ 528 ລ້ານຄົນໝາຍວ່າ ໃນຊ່ວງເວລາສີ່ສິບຫ້າປີ ມີນັກທ່ອງທ່ຽວເພີ່ມຂຶ້ນ ຊາວເທື່ອ. ອົງການທ່ອງທ່ຽວໂລກ ຄາດຄະເນວ່າ ໃນ 2000 ຈະມີນັກທ່ອງທ່ຽວ 600 ລ້ານຄົນ ແລະ ໃນ 2010 ຈະມີນັກທ່ອງທ່ຽວ 940 ລ້ານຄົນ!

ຜູ້ຄົນຈຳນວນຫຼວງຫຼາຍຕ້ອງການຄົ້ນພົບສະຖານທີ່ໃໝ່ ຊຶ່ງເປັນໜ້າສົນໃຈ ແລະ ໂດຍຄຳນຶງເຖິງຄຸນຄ່າພິເສດລະດັບໂລກ ຂອງສະຖານທີ່ຊຶ່ງໄດ້ຂຶ້ນທະບຽນ ໃນບັນຊີລາຍຊື່ມໍລະດົກໂລກເຂົາເຈົ້າຈຶ່ງຢາກໄປທ່ຽວຊົມສະຖານທີ່ເຫຼົ່ານີ້. ປະຊາກອນຂອງຕົວເມືອງເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ, ສະນັ້ນ ເຂົາເຈົ້າຈຶ່ງຕ້ອງການໄປສຳພັດກັບສະຖານທີ່ ຊຶ່ງມີຄວາມສວຍງາມຕາມທຳມະຊາດ ແລະ ສະຖານທີ່ທຳມະຊາດ ຂອງມໍລະດົກໂລກ. ການທ່ອງທ່ຽວແບບນີ້ກົງກັບຮູບແບບທີ່ເພິ່ນເອີ້ນວ່າ "ການທ່ອງທ່ຽວອະນຸລັກ" ແຕ່ການທ່ອງທ່ຽວໃນສະຖານທີ່ວັດທະນະທຳເອີ້ນວ່າ ການທ່ອງທ່ຽວວັດທະນະທຳ.

**ນັກທ່ອງທ່ຽວ:**

ບຸກຄົນທີ່ເຄື່ອນຍ້າຍໄປມາ, ເດີນທາງເພື່ອການພັກຜ່ອນຍ່ອນໃຈ; ບຸກຄົນທີ່ເດີນທາງເພື່ອຄວາມດີໃຈ ຫຼື ເພື່ອຈຸດປະສົງດ້ານວັດທະນະທຳ, ທ່ຽວຊົມສະຖານທີ່ຍ້ອນຄວາມສົນໃຈ, ຍ້ອນຄວາມສວຍງາມຂອງທິວທັດ ແລະ ອື່ນໆ.

**ການທ່ອງທ່ຽວ:**

ກິດຈະກຳທີ່ຕິດພັນກັບການເດີນທາງຂອງນັກທ່ອງທ່ຽວ; ການເດີນທາງເພື່ອການພັກຜ່ອນຍ່ອນໃຈ.

ການທ່ອງທ່ຽວຍາມໃດກໍ່ຕິດພັນກັບການພັດທະນາຍ້ອນວ່າມັນສ້າງວຽກເຮັດງານທຳ ແລະ ນຳເງິນຕາທີ່ຈຳເປັນມາໃຫ້ປະເທດ. ຕາມການຄາດຄະເນ, ໃນ 1950 ນັກທ່ອງທ່ຽວໄດ້ຈ່າຍເງິນ 2,1 ລ້ານໂດລາສະຫະລັດ ແລະ ໃນ 1993 ເຂົາເຈົ້າຈ່າຍ 321 ລ້ານ ໝາຍວ່າເພີ່ມຂຶ້ນ 160 ເທື່ອ.

ບໍ່ມີວັດທະນະທຳອາດບໍ່ມີການທ່ອງທ່ຽວ ຍ້ອນວ່າວັດທະນະທຳແມ່ນ ໜຶ່ງໃນຫຼາຍສ່ວນປະກອບ ທີ່ເປັນຫົວຈັກຫຼັກແຫຼ່ງຂອງຂະບວນທ່ອງທ່ຽວຂອງປະຊາກອນ.

ບົດບັນທຶກກອງປະຊຸມໂຕະມົນໃນຫົວເລື່ອງ: ວັດທະນະທຳ, ການທ່ອງທ່ຽວ, ການພັດທະນາ: ສິ່ງທ້າທາຍຂອງສະຕະວັດທີ 21, ປາຣີ, ອຸຍແນດສະໂກ, 26-27 Juin 1996.

## ກິດຈະກຳທີ 23 ສຳລັບນັກຮຽນ

# ຄິດໄລ່ທ່າອ່ຽງຂອງການທ່ອງທ່ຽວ

**ວັດຖຸປະສົງ**: ຮຽນຮູ້ທ່າອ່ຽງຂອງການທ່ອງທ່ຽວໃນໂລກ ແລະ ຜົນກະທົບຂອງຈຳນວນນັກທ່ອງທ່ຽວຕໍ່ການປົກປັກຮັກສາມໍລະດົກໂລກ.

- ໃຫ້ນັກຮຽນສັງເກດແຜນສະຖິຕິ ທີ 1 (ຄູອາດຂຽນໃສ່ເຈ້ຍແຜ່ນໃຫຍ່ ຫຼື ໃຫ້ນັກຮຽນຂຽນເພື່ອຕິດໃສ່ກະດານ). ຄູອະທິບາຍວິທີອ່ານແຜນສະຖິຕິ, ການຕີຄວາມໝາຍ ແລະ ການນຳໃຊ້ເພື່ອການຄິດໄລ່.
- ໃຫ້ນັກຮຽນສັງເກດແຜນສະຖິຕິ ທີ 2 (ຄູອາດຂຽນໃສ່ເຈ້ຍແຜ່ນໃຫຍ່ ຫຼື ໃຫ້ນັກຮຽນຂຽນເພື່ອຕິດໃສ່ກະດານ). ຄູຖາມວ່າ ປະເທດໃດເປັນປະເທດອຸດສາຫະກຳ ແລະ ປະເທດໃດເປັນປະເທດອຸດສາຫະກຳທີ່ຂະຫຍາຍຕົວຊ້າ. ຖາມເຂົາເຈົ້າຕື່ມອີກວ່າ ລະດັບການຂະຫຍາຍຕົວດ້ານອຸດສາຫະກຳ ຂອງປະເທດມີສາຍກ່ຽວພັນກັບການທ່ອງທ່ຽວ ຂະໜາດໃຫຍ່ໃນສະຖານທີ່ມໍລະດົກໂລກບໍ່. ໃຫ້ນັກຮຽນສົນທະນາກັນ.
- ໃຫ້ນັກຮຽນສັງເກດແຜນສະຖິຕິ 3 ແລະ 2 (ຄູອາດຂຽນໃສ່ເຈ້ຍແຜນໃຫຍ່ ຫຼື ໃຫ້ນັກຮຽນຂຽນເພື່ອຕິດໃສ່ກະດານ). ຄູອະທິບາຍ "ອັດຕາການຂະຫຍາຍຕົວ" ແລ້ວຖາມນັກຮຽນວ່າເປັນຫຍັງອັດຕາການຂະຫຍາຍຕົວຈຶ່ງປ່ຽນແປງຕາມແຕ່ລະທົດສະຫວັດ.
- ຄູອາດໃຫ້ນັກຮຽນຊອກຫາສະຖິຕິການທ່ອງທ່ຽວສະຖານທີ່ມໍລະດົກຂອງຊາດ ແລະ ຂອງໂລກ ໃນແຂວງຂອງຕົນ ເພື່ອຊອກຮູ້ທ່າອ່ຽງການທ່ອງທ່ຽວ ແລະ ຜົນກະທົບດ້ານດີ ແລະ ດ້ານເສຍ.

## 10 ປະເທດ ທີ່ມີນັກທ່ອງທ່ຽວເດີນທາງຜ່ານຫຼາຍກວ່າໝູ່ ນັກທ່ອງທ່ຽວສາກົນ ເດີນທາງມາເຖິງ

ແຜນສະຖິຕິ 1

| ລະດັບ | ປະເທດ | ນັກທ່ອງທ່ຽວມາເຖິງ (ພັນ) | | ລະດັບ | ອັດຕາການຂະຫຍາຍຕົວ ໂດຍສະເລ່ຍຂອງປີ | | ເປີເຊັນນັກທ່ອງທ່ຽວ ເດີນທາງມາເຖິງ/ໂລກ | |
|---|---|---|---|---|---|---|---|---|
| 1993 | | 1993 | 1980 | 1980 | 1980 | 1993 | 1993 | 1980 |
| 1 | ຝຣັ່ງ | 60 100 | 30 100 | 1 | 5,46 | | 11,73 | 10,59 |
| 2 | ສ. ອາເມຣິກາ | 45 779 | 22 500 | 3 | 5,62 | | 8,93 | 7,91 |
| 3 | ແອດສະປາຍ | 40 085 | 23 403 | 2 | 4,23 | | 7,82 | 8,23 |
| 4 | ອີຕາລີ | 26 379 | 22 087 | 4 | 1,38 | | 5,15 | 7,77 |
| 5 | ຮັງກາຣີ | 22 804 | 9 413 | 10 | 7,04 | | 4,45 | 3,31 |
| 6 | ສ. ລາຊະອານາຈັກອັງກິດ | 19 488 | 12 420 | 7 | 3,53 | | 3,80 | 4,37 |
| 7 | ຈີນ | 18 982 | 3 500 | 15 | 13,89 | | 3,70 | 1,23 |
| 8 | ໂອຕະລິສ | 18 257 | 13 879 | 5 | 2,13 | | 3,56 | 4,88 |
| 9 | ໂປໂລຍ | 17 000 | 5 664 | 12 | 8,82 | | 3,32 | 1,99 |
| 10 | ເມັກຊິກ | 16 534 | 11 945 | 8 | 2,53 | | 3,23 | 4,20 |

ແຫຼ່ງເອກະສານ: ອົງການທ່ອງທ່ຽວໂລກ

## ຈຳນວນນັກທ່ອງທ່ຽວສາກົນ ທີ່ໄດ້ຮັບ

ແຜນສະຖິຕິ 1

| ລະດັບ | ປະເທດ | ນັກທ່ອງທ່ຽວມາເຖິງ (ພັນ) | | ລະດັບ | ອັດຕາການຂະຫຍາຍຕົວໂດຍສະເລ່ຍຂອງປີ | ເປີເຊັນນັກທ່ອງທ່ຽວເດີນທາງມາເຖິງ/ໂລກ | |
|---|---|---|---|---|---|---|---|
| 1993 | | 1993 | 1980 | 1980 | 1980 -1993 | 1993 | 1980 |
| 1 | ສ. ອາເມຣິກາ | 57 621 | 10 058 | 1 | 14,37 | 18,75 | 9,76 |
| 2 | ຝຣັ່ງ | 23 410 | 8 235 | 2 | 8,37 | 7,62 | 7,99 |
| 3 | ອີຕາລີ | 20 521 | 8 213 | 3 | 7,30 | 6,68 | 7,97 |
| 4 | ແອດສະປາຍ | 19 425 | 6 968 | 4 | 8,21 | 6,32 | 6,76 |
| 5 | ໂອຕະລິສ | 13 566 | 6 442 | 7 | 5,90 | 4,41 | 6,25 |
| 6 | ສ. ລາຊະອານາຈັກອັງກິດ | 13 451 | 6 893 | 5 | 5,28 | 4,38 | 6,69 |
| 7 | ເຢຍລະມັນ | 10 509 | 6 566 | 6 | 3,68 | 3,42 | 6,37 |
| 8 | ຮົງກົງ | 7 562 | 1 317 | 18 | 14,39 | 2,46 | 1,28 |
| 9 | ສະວິສ | 7 001 | 3 149 | 9 | 6,34 | 2,28 | 3,06 |
| 10 | ເມັກຊິກ | 6 167 | 5 393 | 8 | - | 2,01 | 5,23 |

ແຫຼ່ງເອກະສານ: ອົງການທ່ອງທ່ຽວໂລກ

ນັກທ່ອງທ່ຽວສາກົນເດີນທາງມາເຖິງ
ອັດຕາການຂະຫຍາຍຕົວໃນໄລຍະ 1950 - 1994

ແຜນສະຖິຕິ 3

| | ການເພີ່ມທະວີຂອງອັດຕາ ການຂະຫຍາຍຕົວປະຈຳປີ | ການເພີ່ມທະວີໂດຍສະເລ່ຍຂອງ ອັດຕາການຂະຫຍາຍຕົວປະຈຳປີ |
|---|---|---|
| 1950-1960 | 174,2 | 10,6 |
| 1960-1970 | 139,2 | 9,1 |
| 1965-1970 | 46,9 | 8,0 |
| 1970-1980 | 71,5 | 5,5 |
| 1975-1980 | 27,9 | 5,0 |
| 1980-1990 | 60,3 | 4,8 |
| 1985-1990 | 39,1 | 6,8 |
| 1990-1994 | 16,6 | 3,9 |

ແຫຼ່ງເອກະສານ: ອົງການທ່ອງທ່ຽວໂລກ

ສະຖິຕິການທ່ອງທ່ຽວສາກົນ

## ຜົນດີ ແລະ ຜົນເສຍຂອງການທ່ອງທ່ຽວຕໍ່ການປົກປັກຮັກສາມໍລະດົກໂລກ.

ການທ່ອງທ່ຽວມີຜົນດີຫຼາຍຢ່າງ ທີ່ພວກເຮົາປະຕິເສດບໍ່ໄດ້. ການທ່ອງທ່ຽວສ້າງວຽກເຮັດງານທຳ ແລະ ລາຍຮັບເງິນຕາຢູ່ປະເທດ, ເມືອງ ແລະ ສະຖານທີ່ມໍລະດົກທີ່ຕ້ອນຮັບນັກທ່ອງທ່ຽວ ແລະ ຊຸກຍູ້ໃຫ້ມີການປັບປຸງພື້ນຖານໂຄງລາງເຊັ່ນ: ການບູລະນະຖະໜົນຫົນທາງ, ອຸປະກອນການສື່ສານ ແລະ ການປິ່ນປົວສຸຂະພາບ. ນັກທ່ຽວສາມາດທ່ຽວຊົມຄວາມສວຍສົດງົດງາມຂອງທຳມະຊາດ ແລະ ຮຽນຮູ້ປະເທດອື່ນ ລວມທັງສະພາບແວດລ້ອມ, ວັດທະນະທຳ, ຄຸນຄ່າ ແລະ ວິທີດຳລົງຊີວິດຂອງປະຊາກອນໃນປະເທດ ແລະ ສາມາດປະກອບສ່ວນເຮັດໃຫ້ຄວາມເຂົ້າໃຈ ແລະ ຄວາມສາມັກຄີລະຫວ່າງຊາດດີຂຶ້ນ ພວກເຮົາຮຽນເພື່ອຮູ້ຈັກຜູ້ອື່ນແມ່ນພວກເຮົາຮຽນເພື່ອຮູ້ຈັກຊຶ່ງກັນ ແລະກັນດ້ວຍເຮົາເອງຢູ່ເລື້ອຍໆ.

ແນວໃດກໍ່ຕາມການທ່ອງທ່ຽວສາມາດສົ່ງຜົນສະທ້ອນທີ່ມີຄວາມເສຍຫາຍໄດ້. ດັ່ງໃນກໍລະນີນັກທ່ອງທ່ຽວຫຼາຍລ້ານຄົນ ທ່ຽວຊົມວັດໂບໂຣບູດູທີ່ໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ ແລະ ຕັ້ງຢູ່ເຂດຮ້ອນ ແລະ ຊຸ່ມຫຼາຍ. ເພື່ອເຮັດໃຫ້ນັກທ່ອງທ່ຽວມີຄວາມສຸກສະບາຍໃຈຄົນຂັບລົດນຳພານັກທ່ອງທ່ຽວຕິດຈັກລົດໄວ້ ເພື່ອເປີດເຄື່ອງປັບອາກາດລໍຖ້າ ນັກທ່ອງທ່ຽວສຳເລັດການທ່ຽວຊົມ. ການປ່ອຍອົກຊິດກາກບອນ ສາມາດທຳລາຍຫີນຂອງສິ່ງປຸກສ້າງໄດ້.

ການສັນຈອນໄປມາ ຂອງຍວດຍານພາຫະນະ ນັບມື້ນັບເປັນໄພຂົ່ມຂູ່ຕໍ່ສະຖານທີ່ມໍລະດົກໂລກ ແຫ່ງອື່ນໆ. ຖະໜົນໃກ້ກັບຫີນຕັ້ງ (Stonehenge) ຢູ່ສະຫະພາບລາຊະອານາຈັກອັງກິດ ສ້າງບັນຫາແກ່ຄວາມໝັ້ນຄົງ ຂອງສະຖານທີ່ແຫ່ງນີ້. ໂຄງການສ້າງທາງດ່ວນໃກ້ທາດຈອມຫຼຽມ ກີເຊ (Guizeh) ຢູ່ເມືອງດາຊົວ (Dahchour) ປະເທດເອຢິບ ຖືກຍົກເລີກໂດຍອຳນາດການປົກຄອງຂອງເອຢິບ ຕາມການຮ້ອງຂໍຂອງອຸຍແນດສະໂກ.

ໂດຍຄຳນຶງເຖິງລາຍຊື່ ມໍລະດົກໂລກໃນຂັ້ນອັນຕະລາຍ, ສົນທິສັນຍາວ່າດ້ວຍ ມໍລະດົກໂລກຈຶ່ງໄດ້ລະບຸອັນຕະລາຍທີ່ຮ້າຍແຮງຂອງໂຄງການ "ການພັດທະນາ ຢ່າງວ່ອງໄວຂອງຕົວເມືອງ ແລະ ການທ່ອງທ່ຽວ" (ມາດຕາ 11, ວັກທີ 4).

ການທ່ອງທ່ຽວ ມີຜົນດີ ແລະ ຜົນເສຍຕໍ່ສະຖານທີ່ມໍລະດົກໂລກ ສະນັ້ນ, ຄວນຮັບປະກັນອັນທີໜຶ່ງ ແລະ ກຳຈັດອັນທີສອງ.

ຄຳໝັ້ນສັນຍາຂອງຊາວໜຸ່ມ, ກອງປະຊຸມໂລກຂອງຊາວໜຸ່ມ ວ່າດ້ວຍມໍລະດົກໂລກ, ເມືອງເບີເກັນ, ປະເທດນອກແວ.

**ກິດຈະກຳທີ 24 ສຳລັບນັກຮຽນ**

## ຜົນດີ ແລະ ອັນຕະລາຍຂອງການທ່ອງທ່ຽວ ທີ່ອາດເກີດຂຶ້ນກັບສະຖານທີ່ມໍລະດົກໂລກ.

**ວັດຖຸປະສົງ**: ເຂົ້າໃຈດີຜົນດີ ແລະ ອັນຕະລາຍຂອງການທ່ອງທ່ຽວທີ່ອາດເກີດຂຶ້ນກັບສະຖານທີ່ມໍລະດົກໂລກ.

- ສັບຊ້ອນນັກຮຽນເປັນສອງຈຸ. ບອກຈຸທີ 1 ໃຫ້ຊອກຫາຜົນດີ ແລະ ຈຸທີ 2 ໃຫ້ຊອກຫາໄພຂົ່ມຂູ່ຂອງການທ່ອງທ່ຽວຕໍ່ສະຖານທີ່ມໍລະດົກຂອງຊາດ ແລະ ຂອງໂລກ. ຕໍ່ມາບອກໃຫ້ນັກຮຽນຜູ້ໜຶ່ງຕາງໜ້າຈຸ ສະເໜີຜົນການຄົ້ນຄວ້າຂອງຕົນ. ບອກໃຫ້ເຂົາເຈົ້າສົນທະນາກັນ ເຖິງວິທີເພື່ອຫຼຸດຜ່ອນອັນຕະລາຍຂອງການທ່ອງທ່ຽວ.

### ຮູບແບບໃໝ່ຂອງການທ່ອງທ່ຽວແມ່ນຄວາມຈຳເປັນ

ການທ່ອງທ່ຽວສາມາດເຮັດໃຫ້ຜູ້ຄົນເຫັນດ້ວຍຕົນເອງ ຄຸນຄ່າຂອງຄວາມແຕກຕ່າງດ້ານວັດທະນະທຳ, ວິທີດຳລົງຊີວິດ ແລະ ສະຖານທີ່ທຳມະຊາດ. ມັນສ້າງໂອກາດໃຫ້ຊາວໜຸ່ມແລກປ່ຽນວັດທະນະທຳ ຊຶ່ງກັນແລະກັນ ຢ່າງມີຜົນປະໂຫຍດ.

ການທ່ອງທ່ຽວສາມາດເປັນ......ໂຮງຮຽນຂອງການຜ່ອນຜັນ ຊຶ່ງທຸກຄົນສາມາດພົບເຫັນໂລກທີ່ເປັນໜຶ່ງດຽວ ແລະ ມີຫຼາຍຮູບຫຼາຍສີ. ບົດບັນທຶກກອງປະຊຸມໂຕະມົນໃນຫົວເລື່ອງ: ວັດທະນະທຳ, ການທ່ອງທ່ຽວ, ການພັດທະນາ: ສິ່ງທ້າທາຍຂອງສະຕະວັດທີ 21, ປາຣີ, ອຸຍແນດສະໂກ, 26-27 ມີຖຸນາ 1996. ແຕ່ວ່າການທ່ອງທ່ຽວສາມາດເຮັດໃຫ້ເສດຖະກິດ ແລະ ສັງຄົມບໍ່ມີຄວາມຫຸ່ນທ່ຽງ ຖ້າພວກເຮົາໃຫ້ຄວາມສຳຄັນແກ່ການສ້າງພື້ນຖານໂຄງລ່າງພຽງຢ່າງດຽວ ເຊັ່ນ: ໂຮງແຮມ, ສະລອຍນ້ຳ, ຮ້ານອາຫານ ແລະ ອື່ນໆ ເພື່ອຮັບໃຊ້ນັກທ່ອງທ່ຽວ ໂດຍບໍ່ຄຳນຶງເຖິງໂຮງຮຽນ ຫຼື ໂຮງໝໍ ສຳລັບປະຊາຊົນໃນທ້ອງຖິ່ນນັ້ນ.

ຮູບແບບໃໝ່ຂອງການທ່ອງທ່ຽວ ແມ່ນຄວາມຈຳເປັນເພື່ອສົ່ງເສີມການພັດທະນາແບບສົມເຫດສົມຜົນບົນພື້ນຖານ ຂອງນິເວດວິທະຍາ ແລະ ເພື່ອຊຸກຍູ້ປະເທດທີ່ຕ້ອນຮັບນັກທ່ອງ

ທ່ງວ ໃຫ້ຢັ້ງຢືນຄືນເອກະລັກດ້ານວັດທະນະທຳຂອງຕົນ, ເຮັດໃຫ້ຜູ້ອື່ນຮູ້ຈັກດີ, ປົກປັກຮັກສາ ແລະ ເຫັນຄຸນຄ່າໃນວັດທະນະທຳ ແລະ ສະພາບແວດລ້ອມຂອງຕົນ. ຄຽງຄູ່ກັນນີ້, ຕ້ອງສ້າງບັນຍາກາດແຫ່ງການພົບປະຂອງກຸ່ມວັດທະນະທຳ, ຄວາມສາມັກຄີ ແລະ ການເຄົາລົບຊຶ່ງກັນແລະກັນ. ຕົວຢ່າງໃນປະເທດທີ່ຂາດເຂີນນ້ຳ, ນັກທ່ອງທ່ຽວອາດສະແດງຄວາມສາມັກຄີຂອງຕົນດ້ວຍການປະຢັດນ້ຳ ແລະ ບໍ່ຮຽກຮ້ອງໃຫ້ຊັກຜ້າເຊັດຕົວ ແລະ ຜູ້ປູເສື່ອທຸກໆມື້.

## ມໍລະດົກໂລກ, ການທ່ອງທ່ຽວ ແລະ ການພັດທະນາແບບສົມເຫດສົມຜົນບົນພື້ນຖານຂອງນິເວດວິທະຍາ.

ຖ້າວ່າການທ່ອງທ່ຽວຫາກຕັ້ງຢູ່ບົນພື້ນຖານຄວາມຕື່ນຕົວສະມັກໃຈ ແລະ ການປະກອບສ່ວນຂອງປະຊາຊົນໃນທ້ອງຖິ່ນ ເຂົ້າໃນການກຳນົດ ແລະ ປະຕິບັດໂດຍເຂົາເຈົ້າເອງ ແລະ ຖ້າວ່າຊັບພະຍາກອນທຳມະຊາດ ແລະ ວັດທະນະທຳທີ່ຕິດພັນກັບການທ່ອງທ່ຽວຫາກໄດ້ຮັບການປົກປັກຮັກສາໄວ້ຢ່າງຍາວນານແລ້ວ, ການທ່ອງທ່ຽວສາມາດມີສ່ວນຮ່ວມໃນການພັດທະນາ ທີ່ມີຄຸນະພາບ ແລະ ຍືນຍົງ.

ບົດບັນທຶກກອງປະຊຸມໂຕະມົນໃນຫົວເລື່ອງ: ວັດທະນະທຳ, ການທ່ອງທ່ຽວ, ການພັດທະນາ: ສິ່ງທ້າທາຍ ຂອງສະຕະວັດທີ 21, ປາຣີ, ອຸຍແນດສະໂກ, 26-27 juin 1996.

ການທ່ອງທ່ຽວເປັນຂະບວນໃຫຍ່ສາມາດສົ່ງຜົນກະທົບຮ້າຍແຮງຕໍ່ການບູລະນະ ແລະ ການປົກປັກຮັກສາສະຖານທີ່ວັດທະນະທຳ ທີ່ຖືກສຳລຸດເປເພຈາກຜູ້ຄົນທີ່ທ່ຽວຊົມ ແລະ ສະຖານທີ່ທຳມະຊາດທີ່ຖືກທຳລາຍຈາກການນຳເອົາພືດ ແລະ ສັດຕະວາອື່ນ ເຂົ້າມາໂດຍນັກທ່ອງທ່ຽວ, ຈາກການສ້າງສະຖານທີ່ຕາກອາກາດຢູ່ແຄມທະເລ ທີ່ສຳລຸດງ່າຍ ແລະ ຈາກການຖິ້ມສິ່ງເສດເຫຼືອໂດຍນັກທ່ອງທ່ຽວ. ສະຖານທີ່ມໍລະດົກໂລກ ແລະ ໂດຍສະເພາະມໍລະດົກໂລກ ຕ້ອງໄດ້ຮັບການຄຸ້ມຄອງຢ່າງຖືກຕ້ອງ. ການຄົ້ນຄິດຂອງຊາວໜຸ່ມໃນຖານະຜູ້ຕັດສິນໃຈໃນອະນາຄົດ ເພື່ອຊອກຫາຄວາມອາດສາມາດປະກອບສ່ວນຂອງຕົນເຂົ້າໃນການຄຸ້ມຄອງສະຖານທີ່ມີຄວາມສຳຄັນ.

ພວກເຮົາສາມາດເຫັນ ແລະ ຮູ້ຈັກຄຸນຄ່າສະຖານທີ່ເຫຼົ່ານີ້ ຍ້ອນວ່າ ປູ່ ຍ່າ ຕາ ຍາຍ ປົກປັກຮັກສາໄວ້ໃຫ້ພວກເຮົາ ແລະ ເມື່ອຮອດຍຸ່ງຂອງພວກເຮົາກໍຕ້ອງປົກປັກຮັກສາໄວ້ ໃຫ້ລູກໃຫ້ຫຼານໃນພາຍໜ້າ ເພື່ອໃຫ້ເຂົາເຈົ້າຮູ້ຈັກຄຸນຄ່າ ແລະ ຊື່ນຊົມດ້ວຍຕົວເຂົາເຈົ້າເອງ. ຄຳຮຽກຮ້ອງຂອງນັກຮຽນ, ກອງປະຊຸມໂລກຂອງຊາວໜຸ່ມ ວ່າດ້ວຍມໍລະດົກໂລກ, ປັກກິ່ງ, ຈີນ

ສະຖານທີ່ມໍລະດົກໂລກຕ້ອງເປັນຕົວແບບຂອງການຄຸ້ມຄອງ ແລະ ການປົກປັກຮັກສາທີ່ມີປະສິດທິພາບ. ແຕ່ເປັນໜ້າເສຍດາຍ, ສະພາບປະຈຸບັນບໍ່ສາມາດເຮັດໃຫ້ບັນລຸຕາມມາດຖານລະດັບສູງທີ່ກຳນົດອອກ ສະເພາະສະຖານທີ່ມໍລະດົກໂລກ. ແຕ່ວ່າ ການກວດກາການທ່ຽວຊົມ ແລະ ການທ່ອງທ່ຽວຢ່າງເຂັ້ມງວດລົມທົບກັບການເຄົາລົບສະພາບແວດລ້ອມ ອາດເປັນວິທີເພື່ອລະດົມກອງທຶນທີ່ຈຳເປັນ ເພື່ອການບູລະນະສ່ວນໃຫຍ່ຂອງສະຖານທີ່ມໍລະດົກໂລກ ແລະ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາໃນໄລຍະຍາວ.

ການທ່ອງທ່ຽວ, ການທ່ອງທ່ຽວແບບອະນຸລັກ ແລະ ປ່າສະຫງວນ
(Tourism, Ecotourism and Protected Areas, H. Ceballos-Lascurair (éd), UICN, 1996).

### ກິດຈະກໍາທີ 25 ສໍາລັບນັກຮຽນ

## ແບບຫຼິ້ນກ່ຽວກັບ ມໍລະດົກໂລກ ແລະ ການທ່ອງທ່ຽວ

ວັດຖຸປະສົງ: ຮູ້ຈັກສິ່ງທ້າທາຍໃນການຄຸ້ມຄອງ ສະຖານທີ່ ແລະ ໃນການທ່ອງທ່ຽວດ້ວຍການເຮັດກິດຈະກໍາເພື່ອການຫຼິ້ນ

ວິທີຫຼິ້ນ:

- ສັບຊ້ອນນັກຮຽນເປັນຫຼາຍຈຸ
- ຄູສະເໜີບົດ, ຮູບ, ທີ່ຕັ້ງພູມສາດ, ເອກະລັກ ແລະ ອື່ນໆ ຂອງສະຖານທີ່ມໍລະດົກ ທໍາມະຊາດ ແລະ ວັດທະນະທໍາຂອງຊາດ ແລະ ຂອງໂລກ. ບອກໃຫ້ແຕ່ລະຈຸເລືອກເອົາສະຖານທີ່ໃດໜຶ່ງ ແລະ ຕ້ອງກະກຽມການຄຸ້ມຄອງສະຖານທີ່ຂອງຕົນ.
- ແຕ່ລະຈຸຈົກສະຫຼາກ ຫຼື ໂຍນໝາກກະລ້ອກ ເພື່ອຍ້າຍໝາກແຕ່ ຕານີ້ຫາຕານັ້ນ. ຕ້ອງປະຕິບັດຕາມຄໍາແນະນໍາໃນແຕ່ລະຕາໂດຍໃຊ້ເວລາ 10 ຫາ 30 ນາທີ. ຖ້າບໍ່ສໍາເລັດ ບໍ່ມີສິດຍ້າຍໝາກ. ຖ້າຮອດຕາ "ແຜ່ນໂຄສະນາ" ຕ້ອງຂຽນຂໍ້ຄວາມເພື່ອໂຄສະນາສະຖານທີ່ຂອງຕົນ. ຈຸທີ່ໄດ້ປະຕິບັດຕາມຄໍາແນະນໍາໃນຕາຜ່ານມາ ແລະ ມາເຖິງຕາ "ຫຼັກໄຊ" ແມ່ນຈຸໄຊຊະນະ.
- ໃນໂມງຮຽນຕໍ່ມາ ຄູອາດໃຫ້ນັກຮຽນສະເໜີຜົນງານຂອງເຂົາເຈົ້າ.

| | | | | | |
|---|---|---|---|---|---|
| **ຈຸດເລີ່ມຕົ້ນ**<br>ສະຖານທີ່ຂອງພວກເຈົ້າໄດ້ ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ.<br>ຈົ່ງສະເໜີແຜນການ ການຄຸ້ມຄອງການທ່ອງທ່ຽວຕໍ່ຈຸດອື່ນ | ແຜ່ນໂຄສະນາ | ແຜ່ນໂຄສະນາ | ສະຖານທີ່ຖືກທຳລາຍຈາກໄພພິບັດທຳມະຊາດ ອະທິບາຍສິ່ງທີ່ເກີດຂຶ້ນໂດຍໃຫ້ຄຳນຶງເຖິງເອກະລັກຂອງສະຖານທີ່ ແລະ ຜົນກະທົບທີ່ໄດ້ຮັບ<br><br>ກັບຄືນຫາຕາເລີ່ມຕົ້ນ | ແຜ່ນໂຄສະນາ | ສະຖານທີ່ມີຂີ້ເຫຍື້ອຫຼາຍ. ສະເໜີທາງວິທີເພື່ອແກ້ໄຂບັນຫານີ້.<br><br>ກັບຄືນຫາຕາທີ 4 |
| ແຜ່ນໂຄສະນາ | ແຜ່ນໂຄສະນາ | ແຜ່ນໂຄສະນາ | ສູນໂຄສະນາຂອງສະຖານທີ່ໄດ້ຮັບການຕຳນິວ່າບໍ່ມີສິ່ງອຳນວຍຄວາມສະດວກພຽງພໍ.<br>ຈົ່ງຂຽນຈົດໝາຍແຜ່ການບໍລິຈາກເພື່ອບູລະນະສະຖານທີ່<br><br>ກັບຄືນຫາຕາທີ 5 | ແຜ່ນໂຄສະນາ | ນັກທ່ອງທ່ຽວຢ້ຽມຢາມສະຖານທີ່ໃນຈຳນວນສູງສຸດ. ທ່ານມີເງິນເພື່ອປະຕິບັດແຜນງານການ ບູລະນະຂະໜາດໃຫຍ່. ສິ່ງທີ່ເປັນບຸລິມະສິດແມ່ນຫຍັງ ແລະ ຍ້ອນຫຍັງ? ແຕ້ມຮູບໂຄງການໂດຍບໍ່ຕ້ອງຂຽນບົດ<br><br>ຍ້າຍຂຶ້ນຕາທີ 17 |
| ສ່ວນໜຶ່ງຂອງສະຖານທີ່ສຳຫຼຸດ ຍ້ອນບໍ່ໄດ້ຮັບການບູລະນະຢ່າງພຽງພໍ. ເຮັດລາຍຊື່ຂອງ 5 ບັນຫາ ແລະ ວິທີແກ້ໄຂ.<br>ກັບຄືນຫາຕາເລີ່ມຕົ້ນ | ການຮ້ອງຂໍທຶນ ເພື່ອການປົກປັກຮັກສາໄດ້ຮັບໝາກຜົນ. ແຕ່ງບົດສະຫຼຸບໂດຍໃຫ້ສະເໜີ 7 ເຫດຜົນທີ່ພາໃຫ້ໄດ້ຮັບທຶນ<br><br>ຍ້າຍຂຶ້ນຕາທີ19 | ໂຮງແຮມເພື່ອການທ່ອງທ່ຽວຫຼັງໃໝ່ໄດ້ຮັບການກໍ່ສ້າງສຳເລັດແລ້ວ. ຜູ້ອຳນວຍການເຂົ້າໃຈຄວາມສຳຄັນຂອງການປົກປັກຮັກສາມໍລະດົກໂລກ. ຈົ່ງຂຽນບົດເພື່ອໂຄສະນາໂຮງແຮມໃນໜັງສືພິມ.<br>ຍ້າຍຂຶ້ນຕາ ທີ 19 | ຈາກການປະເມີນຜົນໂຄງການ 5 ປີ, ອົງການ icomos ສະຫຼຸບຄວາມບົກຜ່ອງໃນການປົກປັກຮັກສາ.<br>ກັບຄືນຫາຕາທີ 7 | ແຜ່ນໂຄສະນາ | ໂທລະພາບແຫ່ງຊາດສະເໜີລາຍການກ່ຽວກັບສະຖານທີ່.<br><br>ຍ້າຍຂຶ້ນຕາທີ 21 |
| ແຜ່ນໂຄສະນາ | ມີນັກທ່ອງທ່ຽວຢ້ຽມຢາມສະຖານທີ່ຫຼາຍໂພດເຮັດໃຫ້ມີການເຊາະເຈື່ອນ. ຈົ່ງສະເໜີ 5 ຜົນໄດ້ແລະ 5 ຜົນເສຍຂອງການທ່ອງທ່ຽວຕໍ່ສະຖານທີ່<br>ກັບຄືນຫາຕາທີ 9 | ແຜ່ນໂຄສະນາ | ໂຮງແຮມຕ້ອງຢຸດກິດຈະການຍ້ອນຫຼັງສາຂື່ວ<br><br>ກັບຄືນຫາຕາທີ 19 | ແຜ່ນໂຄສະນາ | "ຫຼັກໄຊ"<br>ພວກເຈົ້າມີສະຖານທີ່ພ້ອມດ້ວຍແຜນການປົກປັກຮັກສາທີ່ດີ. ຈົ່ງເຮັດບົດສະຫຼຸບກ່ຽວກັບການຄຸ້ມຄອງ, ບັນຫາທີ່ພົບພໍ້ ແລະ ວິທີແກ້ໄຂ. |

## ກິດຈະກຳທີ 26 ສຳລັບນັກຮຽນ

## ນັກທ່ອງທ່ຽວຂາດນ້ຳໃຈຮັບຜິດຊອບ ແລະ ນັກທ່ອງທ່ຽວມີສະຕິຮັບຜິດຊອບ

**ວັດຖຸປະສົງ: ກາຍເປັນນັກທ່ອງທ່ຽວທີ່ມີສະຕິຮັບຜິດຊອບ**

- ໃຫ້ນັກຮຽນຂຽນບົດ ແລະ ສະແດງລະຄອນກ່ຽວກັບນັກທ່ອງທ່ຽວທີ່ຂາດນ້ຳໃຈຮັບຜິດຊອບ ແລະ ບໍ່ເຄົາລົບສະຖານທີ່. ລາວຖິ້ມຂີ້ເຫຍື້ອທົ່ວທີບ, ຂຽນ ແລະ ແຕ້ມໃສ່ສະຖານທີ່, ບາງຄັ້ງດູຫມິ່ນປະໝາດຮີດຄອງປະເພນີຂອງທ້ອງຖິ່ນ. ລາວເປັນຫ່ວງເປັນໄຍນຳແຕ່ຄວາມສະດວກສະບາຍສ່ວນຕົວ. ນັກທ່ອງທ່ຽວທີ່ມີສະຕິຮັບຜິດຊອບມີຄວາມຕ້ອງການຢາກຮູ້ຈັກປະເພນີ ແລະ ວັດທະນະທຳປະຈຳທ້ອງຖິ່ນເຊັ່ນ: ປະຫວັດຂອງສະຖານທີ່, ຫັດຖະກຳ ແລະ ຜົນງານດ້ານສິລະປະ, ດົນຕີ, ອາຫານ, ການນຸ່ງຖືປະຈຳທ້ອງຖິ່ນ ແລະ ອື່ນໆ. ຫຼັງການສະແດງລະຄອນໃຫ້ນັກຮຽນສົນທະນາ ວິທີທີ່ນັກທ່ອງທ່ຽວຂາດນ້ຳໃຈຮັບຜິດຊອບປ່ຽນເປັນນັກທ່ອງທ່ຽວມີສະຕິຮັບຜິດຊອບຕາມຫຼັກການຂອງການປະພຶດທີ່ດີ ທີ່ສະເໜີຕໍ່ຈາກນີ້.
- ບອກໃຫ້ນັກຮຽນເລືອກສະຖານທີ່ມໍລະດົກໂລກ, ແຫ່ງຊາດ ແລະ ທ້ອງຖິ່ນ ແລະ ໃຫ້ເຂົາເຈົ້າຮ່າງຂໍ້ສະເໜີ ເພື່ອເຜີຍແຜ່ໃຫ້ນັກທ່ອງທ່ຽວທີ່ຈະມາທ່ຽວຊົມສະຖານທີ່ນັ້ນ. ວິເຄາະຂໍ້ສະເໜີເຫຼົ່ານັ້ນເພື່ອສົ່ງໃຫ້ຫ້ອງການທ່ອງທ່ຽວ ຫຼື ໃຫ້ອົງການມໍລະດົກປະຈຳທ້ອງຖິ່ນ.

## ຫຼັກການເພື່ອການປະພຶດທີ່ດີສຳລັບນັກທ່ອງທ່ຽວ.

**ເພື່ອກະກຽມການເດີນທາງ ນັກທ່ອງທ່ຽວຕ້ອງ:**

1. ຮຽນຮູ້ທຸກຢ່າງເທົ່າທີ່ຈະຮຽນຮູ້ໄດ້ ກ່ຽວກັບການເດີນທາງ.
2. ໃຫ້ການສະໜັບສະໜູນແກ່ຜູ້ບໍລິການ ທີ່ປະຕິບັດຕາມຫຼັກການນິເວດວິທະຍາ.
3. ຖ້າມີຄວາມສາມາດໃຫ້ວາງແຜນການພັກປະຈຳປີ ແລະ ການທ່ອງທ່ຽວໃນລະດູການທີ່ເໝາະສົມ.
4. ເລືອກສະຖານທີ່ຊຶ່ງບໍ່ມີຜູ້ຄົນຫຼາຍ.

ເມື່ອໄປເຖິງສະຖານທີ່ນັກທ່ອງທ່ຽວຕ້ອງ:

1. ເຄົາລົບວັດທະນະທຳ ແລະ ປະເພນີຂອງທ້ອງຖິ່ນ.
2. ເຄົາລົບຊີວິດສ່ວນຕົວ, ວັດທະນະທຳ, ຮີດຄອງປະເພນີຂອງຊຸມຊົນໃນທ້ອງຖິ່ນນັ້ນ.
3. ສົ່ງເສີມເສດຖະກິດຂອງທ້ອງຖິ່ນດ້ວຍການຜະລິດຕະພັນ ແລະ ການໃຊ້ການບໍລິການຂອງທ້ອງຖິ່ນ.
4. ປະກອບສ່ວນໃນຄວາມພະຍາຍາມຂອງທ້ອງຖິ່ນເພື່ອປົກປັກຮັກສາມໍລະດົກວັດທະນະທຳ ແລະ ທຳມະຊາດ.
5. ອະນຸລັກ ແລະ ປົກປັກຮັກສາສະພາບແວດລ້ອມທຳມະຊາດ, ລະບົບນິເວດວິທະຍາ, ສັດ ແລະ ພືດ.
6. ບໍ່ດັດແປງອະນຸສອນສະຖານ ແລະ ສະຖານທີ່ທຳມະຊາດ
7. ນຳໃຊ້ແຫຼ່ງພະລັງງານ, ນ້ຳ ແລະ ການກຳຈັດຂີ້ເຫຍື້ອຢ່າງມີປະສິດທິພາບ
8. ມີສະຕິລະວັງຕົວຕໍ່ການເກີດອັກຄີໄພ.
9. ບໍ່ໃຊ້ສຽງດັງທີ່ບໍ່ມີປະໂຫຍດ.
10. ສັນຈອນໄປມາຕາມຖະໜົນ ແລະ ທາງທີ່ກຳນົດໄວ້.

ຫຼັກການເພື່ອການປະພຶດທີ່ດີສຳລັບນັກທ່ອງທ່ຽວ, ກົດການປະພຶດດ້ານນິເວດວິທະຍາເພື່ອການທ່ອງທ່ຽວ, ແຜນງານດ້ານສະພາບແວດລ້ອມຂອງອົງການສະຫະປະຊາຊາດ.

## ສະຖານທີ່ມໍລະດົກໂລກເພື່ອການທ່ອງທ່ຽວເພີ່ມຂຶ້ນ.

ໃນ 1978 ສິບສອງສະຖານທີ່ທຳອິດໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ. ປີ 1987 ໃນບັນຊີລາຍຊື່ມີ 289 ແຫ່ງ ແລະ ສິບປີຕໍ່ມາຄືໃນ 1997 ມີ 552 ແຫ່ງ ໝາຍຄວາມວ່າເພີ່ມຂຶ້ນທົບເຄົ່າ. ໃນແຕ່ລະປີຄະນະກຳມະການມໍລະດົກໂລກຮັບການຂຶ້ນທະບຽນຂອງສະຖານທີ່ໃໝ່. ຊາວໜຸ່ມທີ່ເຂົ້າຮ່ວມກອງປະຊຸມຊາວໜຸ່ມ ວ່າດ້ວຍມໍລະດົກໂລກ ຊຶ່ງຈັດໂດຍອົງການອຸຍແນດສະໂກ ໄດ້ສະເໜີວ່າເຂົາເຈົ້າຕ້ອງການທ່ຽວຊົມສະຖານທີ່ມໍລະດົກໂລກຫຼາຍແຫ່ງທີ່ສຸດ ຖ້າມີຄວາມສາມາດ. ແຕ່ເປັນໜ້າເສຍດາຍ, ໂຮງຮຽນຫຼາຍແຫ່ງຕັ້ງຢູ່ຫ່າງໄກຈາກສະຖານທີ່ມໍລະດົກໂລກ ແລະ ຄ່າໃຊ້ຈ່າຍໃນການເດີນທາງກໍແພງຫຼາຍ. ສະນັ້ນ, ນັກຮຽນຈຶ່ງໄດ້ສະເໜີວ່າ ຄວນໃຫ້ໂຮງຮຽນໄດ້ຮັບນະໂຍບາຍເຂົ້າຊົມລ້າ ຫຼື ຫຼຸດຜ່ອນລາຄາ ແລະ ວິສະຫະກິດໃນທ້ອງຖິ່ນ ຄວນຊ່ວຍຈ່າຍຄ່າເດີນທາງເພື່ອເຮັດໃຫ້ເຂົາເຈົ້າສາມາດທ່ຽວຊົມສະຖານທີ່ມໍລະດົກໂລກ. ໂຮງຮຽນຈຳນວນໜຶ່ງໄດ້ເຮັດກິດຈະກຳຫາລາຍໄດ້ເພື່ອໃຊ້ຈ່າຍຄ່າເດີນທາງໃນການຢ້ຽມຢາມສະຖານທີ່ມໍລະດົກໂລກເຊັ່ນ: ຂາຍເຂົ້າໜົມ, ລ້າງລົດ, ສະແດງດົນຕີ ແລະ ອື່ນໆ.

ການກະກຽມຢ່າງລະອຽດ ແລະ ຮອບຄອບເປັນສິ່ງຈຳເປັນເພື່ອເຮັດໃຫ້ນັກຮຽນມີຄວາມສົນໃຈກັບສະຖານທີ່ວັດທະນະທຳ ແລະ ທຳມະຊາດ. ເຖິງວ່າການຢ້ຽມຢາມເຮັດໃຫ້ສະຖານທີ່ດັ່ງກ່າວສຳຫຼຸດ ຫຼື ເປ່ເພໃນບາງຄັ້ງຄາວກໍ່ຕາມ, ແຕ່ຖ້າມີການຈັດຕັ້ງດີການຢ້ຽມຢາມຈະຊຸກຍູ້ນັກຮຽນໃຫ້ປຸກລະດົມກັນເພື່ອປົກປັກຮັກສາ ແລະ ອະນຸລັກສະຖານທີ່ ໃນໄລຍະຍາວ.

ກິດຈະກຳທີ 27 ສຳລັບນັກຮຽນ

## ປະເມີນຜົນສິ່ງອຳນວຍຄວາມສະດວກສຳລັບການທ່ອງທ່ຽວໃນສະຖານທີ່ມໍລະດົກ

ວັດຖຸປະສົງ: ຮັບຮູ້ເຕັກນິກການສັງເກດ ເພື່ອປັບປຸງສິ່ງອຳນວຍຄວາມສະດວກສຳລັບການທ່ອງທ່ຽວໃນສະຖານທີ່ ມໍລະດົກ.

- ຈັດຕັ້ງການໄປຢ້ຽມຢາມສະຖານທີ່ມໍລະດົກທຳມະຊາດ ແລະ ວັດທະນະທຳ ທີ່ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວ.
- ໃຫ້ນັກຮຽນແຕ່ລະຄົນກຽມຮ່າງກິດຈະກຳ ເພື່ອການສຶກສາ.
- ໃຫ້ຄຳແນະນຳການຢ້ຽມຢາມສະຖານທີ່ໂດຍເນັ້ນໜັກໃຫ້ເຂົາເຈົ້າຕື່ມຮ່າງກິດຈະກຳເພື່ອການສຶກສາ ແລະ ຂຽນບົດລາຍງານ.
- ຫຼັງຈາກນັກຮຽນສົ່ງບົດລາຍງານແລ້ວ, ຕ້ອງສະຫຼຸບຂໍ້ສັງເກດຂອງເຂົາເຈົ້າ ແລະ ສົນທະນາວິທີເພື່ອປັບປຸງສິ່ງອຳນວຍຄວາມສະດວກ.

ສະຖານທີ່ມໍລະດົກໂລກຕ້ອງ:

- ກວດກາ ແລະ ຄວບຄຸມຈຳນວນຜູ້ທ່ຽວຊົມສະຖານທີ່ເພື່ອຫຼີກເວັ້ນການສຳຫຼຸດຂອງເຂດທີ່ເປ່ເພງ່າຍ.
- ສ້າງທາງຍ່າງສຳລັບ ຜູ້ສູງອາຍຸ, ເດັກນ້ອຍ ແລະ ຄົນພິການ.
- ບໍ່ໃຫ້ມີຮ້ານຄ້າຢູ່ໃກ້ສະຖານທີ່ສຳຄັນ.

ຄຳຮຽກຮ້ອງຂອງນັກຮຽນ, ກອງປະຊຸມໂລກຂອງຊາວໜຸ່ມວ່າດ້ວຍມໍລະດົກໂລກ, ປັກກິ່ງ, ຈີນ.

## ຮ່າງກິດຈະກໍາເພື່ອການສຶກສາ

- ໃຫ້ນັກຮຽນໝາຍຕີນກາໃສ່ແຕ່ລະຫ້ອງ ເພື່ອບອກຄຸນະພາບຂອງສິ່ງອໍານວຍຄວາມສະດວກ

| ສິ່ງອໍານວຍຄວາມສະດວກ | ບໍ່ພຽງພໍ | ພຽງພໍ | ດີ | ດີເລີດ |
|---|---|---|---|---|
| ລູກສອນບອກທາງ | | | | |
| ບ່ອນຈອດລົດ | | | | |
| ຫ້ອງນໍ້າ | | | | |
| ບ່ອນສອບຖາມ | | | | |
| ການວາງສະແດງ | | | | |
| ບ່ອນຂາຍເຄື່ອງທີ່ລະນຶກ | | | | |
| ຖັງຂີ້ເຫຍື້ອ | | | | |
| ຄວາມສະອາດ | | | | |
| ຜູ້ພາທ່ຽວ | | | | |
| ຮ້ານອາຫານ | | | | |
| ອື່ນໆ... | | | | |

ບົດລາຍງານເຖິງຜູ້ຄຸ້ມຄອງສະຖານທີ່ນໍລະດົກ.

ຮຽນທ່ານ...............................

ຂ້າພະເຈົ້າໄດ້ຢ້ຽມຢາມສະຖານທີ່ຂອງທ່ານ ແລະ ຂ້າພະເຈົ້າມີຂໍ້ສະຫຼຸບດັ່ງນີ້:

☐ ສະຖານທີ່ມີສິ່ງອໍານວຍຄວາມສະດວກພຽງພໍ

☐ ສິ່ງອໍານວຍຄວາມສະດວກຂອງສະຖານທີ່ບໍ່ພຽງພໍ ແລະ ຕ້ອງໄດ້ປັບປຸງດັ່ງນີ້.

ຂ້າພະເຈົ້າຫວັງວ່າ ບົດລາຍງານນີ້ຈະເປັນປະໂຫຍດແກ່ໂຄງການພັດທະນາສະຖານທີ່ຂອງທ່ານໃນຕໍ່ໜ້າ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ.

ຊື່ ແລະ ນາມສະກຸນ: ລາຍເຊັນ: ວັນທີ:

## ການປະເມີນຜົນສິ່ງອຳນວຍຄວາມສະດວກ ສຳລັບການທ່ອງທ່ຽວໃນສະຖານທີ່ມໍລະດົກ.

ການທ່ອງທ່ຽວດ້ວຍຮູບຈຳລອງ ແລະ ມໍລະດົກໂລກ.

ຍ້ອນມີນະວະຕະກຳດ້ານເຕັກໂນໂລຊີ, ນັບແຕ່ນີ້ໄປ ພວກເຮົາສາມາດທ່ຽວຊົມມໍລະດົກໂລກ ແລະ ສະຖານທີ່ອື່ນໆ ໂດຍບໍ່ຕ້ອງເດີນທາງ. ອຸທິຍານ ເພື່ອການພັກຜ່ອນຢ່ອນໃຈ ແລະ ພິພິທະພັນຂອງບາງປະເທດ ມີບ້ານຈຳລອງຄົບຊຸດ ຫຼື ຄຸ້ມຄອງເມືອງ. ຕົວຢ່າງ ນັກທ່ອງທ່ຽວສາມາດທ່ຽວຊົມດ້ວຍລົດໄຟອັດຕະໂນມັດ ຂະໜາດນ້ອຍ ບ້ານຂອງຊາວໄວຄິງ ຢູ່ຈໍວິກ (Jorvik) ທີ່ປະເທດນອກແວ ຊຶ່ງເພິ່ນສ້າງເປັນບ້ານຈຳລອງໃຕ້ດິນຢູ່ເມືອງ ຢອກ (York) ທີ່ປະເທດອັງກິດ ໂຫລະພາບສາມມິຕິ ພ້ອມດ້ວຍລະບົບແສງ ແລະ ສຽງພິເສດປະກອບເຂົ້າກັນເປັນໜຶ່ງໃນຫຼາຍຈຸດສົນໃຈຂອງອຸທິຍານ ທີ່ສ້າງຂຶ້ນ ຕາມຫົວເລື່ອງຂອງຍຸກສະໄໝໃໝ່ ແລະ ເຮັດໃຫ້ມີການທ່ອງທ່ຽວ "ແບບຈຳລອງ" ແລະ ສາມາດນຳພາຜູ້ຄົນໄປທ່ຽວຊົມທົ່ວທຸກບ່ອນຂອງໂລກ ຕະຫຼອດຮອດອະວະກາດໂດຍທີ່ເຂົາເຈົ້ານັ່ງເທິງຕັ່ງອີ້ ສັ່ນສະເທືອນ! ນີ້ແມ່ນຮູບໃໝ່ຂອງການທ່ອງທ່ຽວ! ຄູອາດສົນທະນາກັບນັກຮຽນເຖິງຜົນໄດ້ ແລະ ຜົນເສຍຂອງການທ່ອງທ່ຽວໃນຮູບແບບນີ້ ໃນອະນາຄົດ.

ຂ້ອຍແມ່ນນັກເດີນທາງ. ເຈົ້າແມ່ນນັກທ່ຽວຊົມ. ພວກເຮົາທັງໝົດແມ່ນນັກທ່ອງທ່ຽວ.

ສິ່ງທີ່ກົງກັນຂ້າມກັນໄດ້ບັນທຶກໄວ້ໃນປະໂຫຍກນີ້: ພວກເຮົາມັກເດີນທາງເພື່ອຄົ້ນພົບສະຖານທີ່ທຳມະຊາດທີ່ມີຄວາມສວຍສົດງົດງາມ, ແຕ່ພວກເຮົາຕົກຕະລຶງ ເມື່ອເຫັນຜູ້ຄົນຈຳນວນມະຫາສານເຮັດຄືກັນ. ແຕ່ລະຄົນກຽມພ້ອມເພື່ອເຮັດກິດຈະກຳດ້ວຍຄວາມບໍລິສຸດ: ເວລາແຫ່ງການພັກຜ່ອນຢ່ອນໃຈ. ແຕ່ວ່າ ພວກເຮົາທັງໝົດເຮັດໃຫ້ສະຖານທີ່ ຊຶ່ງພວກເຮົາຊື່ນຊົມນັ້ນເສຍຫາຍ. ໃນຕົວຈິງພວກເຮົາຮັກອຸທິຍານແຫ່ງຊາດ ແລະ ເຂດອະນຸລັກຂອງໂລກຫຼາຍຈົນເກືອບຈະເຮັດໃຫ້ສິ່ງເຫຼົ່ານັ້ນດັບສູນ.

Adrian Phillips, UICN, 1996.

ປະຈຸບັນນີ້ ຊີດີຣອມ ກ່ຽວກັບມໍລະດົກໂລກນັບມື້ນັບຫຼາຍສະນັ້ນ ຈຶ່ງມີຄວາມສາມາດທ່ຽວຊົມຕົວຢ່າງເຊັ່ນ: ເມືອງມໍລະດົກໂລກຮ້ອຍກວ່າແຫ່ງ ຊຶ່ງຕັ້ງຢູ່ສີ່ທິດຂອງໂລກດ້ວຍຊີດີຣອມຂອງອຸຍແນດສະໂກ ກ່ຽວກັບເມືອງມໍລະດົກໂລກ ຫຼື ສະຖານທີ່ດັ່ງ ອັງກໍວັດ ຢູ່ກຳພູເຈຍ ເປັນຕົ້ນ. ມີການວາງສະແດງທີ່ດີ ແລະ ເວບໄຊ ເພື່ອໃຫ້ນັກຮຽນທ່ຽວຊົມສະຖານທີ່ມໍລະດົກໂລກ. ຖ້າມີອິນເຕີແນັດ ສາມາດເປີດເບິ່ງເວບໄຊສູນກາງມໍລະດົກໂລກຂອງອຸຍແນດສະໂກທີ່ສະເໜີ 552 ສະຖານທີ່ຊຶ່ງຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ.

ນັກຮຽນທີ່ເຂົ້າຮ່ວມກອງປະຊຸມໂລກຊາວໜຸ່ມ ວ່າດ້ວຍມໍລະດົກໂລກ ທີ່ນໍ້າຕົກ ວິກຕໍເຣຍ ທ່ຽວຊົມພືກສາຊາດ ແລະ ສັດຢູ່ເຮືອເທິງແມ່ນໍ້າ ຊຳແບ.

## ການຄຸ້ມຄອງການທ່ອງທ່ຽວຢູ່ສະຖານທີ່ມໍລະດົກໂລກ.

ໜຶ່ງໃນສິ່ງທ້າທາຍໃນການປົກປັກຮັກສາມໍລະດົກໂລກ ແມ່ນການອະນຸຍາດໃຫ້ຜູ້ຄົນທ່ຽວຊົມສະຖານທີ່ໂດຍບໍ່ໃຫ້ມີການເປ່ເພ. ສະຖານທີ່ຊຶ່ງມີຄວາມສວຍສົດງົດງາມ, ໄດ້ຮັບການອະນຸລັກ ແລະ ບໍ່ມີນັກທ່ອງທ່ຽວຫຼາຍນັ້ນ ເປັນເປົ້າໝາຍຂອງການຈັດການນຳທ່ຽວ. ຍ້ອນແນວນີ້, ການຄຸ້ມຄອງຢ່າງດີ ການທ່ອງທ່ຽວໃນສະຖານທີ່ມໍລະດົກໂລກ ຈຶ່ງເປັນສິ່ງຈຳເປັນ.

ກຳແພງເມືອງຈີນໄດ້ຂຶ້ນທະບຽນໃນບັນຊີລາຍຊື່ ມໍລະດົກໂລກແຕ່ 1987. ກຳແພງຢູ່ໃກ້ນະຄອນຫຼວງປັກກິ່ງ ຊຶ່ງສ້າງດ້ວຍດິນຈີ່ ແລະ ຫີນໃນສະໄໝລາຊະວົງມິງ ດຶງດູດນັກທ່ອງທ່ຽວຈີນ ແລະ ຕ່າງປະເທດມາທ່ຽວຊົມເປັນຈຳນວນຫຼາຍລ້ານຄົນ. ຊາກຂອງກຳແພງຕອນໜຶ່ງທີ່ສວຍສົດງົດງາມ ແລະ ມີອາຍຸເຖິງສອງພັນປີ ຕັ້ງຢູ່ທະເລຊາຍ ໂກບີ ໃນແຂວງກັ່ງຊູ. ຄວາມແຫ້ງແລ້ງຂອງທະເລຊາຍ ຊ່ວຍອະນຸລັກວັດສະດຸ ທີ່ສຳຫຼຸດງ່າຍນັ້ນ ໃຫ້ຄົງຕົວຢູ່. ປະຈຸບັນພວກເຮົາຍັງເຫັນຫໍຄອຍທີ່ສ້າງດ້ວຍດິນ ແລະ ມັດຕົ້ນເລົາທີ່ກະກຽມໄວ້ ເພື່ອຈູດໃຫ້ສັນຍານການບຸກໂຈມຕີຈາກຊາວພະເນຈອນ ຢູ່ພາກເໜືອ. ມີນັກທ່ອງທ່ຽວຈຳນວນໜ້ອຍທີ່ຮູ້ຈັກກຳແພງເມືອງຈີນຕອນນີ້ ແລະ ການເພີ່ມຂຶ້ນຂອງນັກທ່ອງທ່ຽວອາດເຮັດໃຫ້ຊາກກຳແພງທີ່ບໍ່ແໜ້ນໜາໃນສະຖານທີ່ນີ້ເພພັງກໍເປັນໄດ້.

ເຕວາຮີປູນາມູ (Te Wahipounamu) ຊຶ່ງຕັ້ງຢູ່ຕາເວັນຕົກສ່ຽງໃຕ້ຂອງປະເທດນິວຊີແລນ ແມ່ນໜຶ່ງໃນຫຼາຍສະຖານທີ່ທຳມະຊາດຂອງມໍລະດົກໂລກທີ່ມີຄວາມສວຍສົດງົດງາມ. ຄວາມງາມຕາມທຳມະຊາດ ຍັງຖືກປົກປັກຮັກສາໄວ້ ເປັນຢ່າງດີ. ຍ້ອນຕັ້ງຢູ່ຫ່າງໄກຈາກປະເທດອື່ນ, ນິວຊີແລນ ຈຶ່ງສາມາດອະນຸລັກຄວາມຮັ່ງມີ ແລະ ເອກະລັກດ້ານຊີວະນາໆພັນ ຂອງຕົນໄວ້ໄດ້. ແນວໃດກໍ່ຕາມ ຍ້ອນການທ່ອງທ່ຽວຂະຫຍາຍຕົວ ແລະ ຍ້ອນພາຫະນະການຂົນສົ່ງລະຫວ່າງຊາດໄດ້ຮັບການປັບປຸງໃຫ້ດີຂຶ້ນ ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຢາມນິວຊີແລນ ຈຶ່ງເພີ່ມຂຶ້ນ. ສະນັ້ນ, ໃນຫຼາຍປີຜ່ານມາຈຶ່ງເກີດມີບັນຫາການສ້າງທາງດ່ວນແຕ່ເມືອງຮາອັດ (Haast) ຫາເມືອງມິນຟໍ (Milford) ໂດຍຜ່ານສະຖານທີ່ທຳມະຊາດແຫ່ງນີ້ ເພື່ອອຳນວຍຄວາມສະດວກໃນການສັນຈອນຂອງນັກທ່ອງທ່ຽວ. ແນ່ນອນໂຄງການນີ້ ມີສິ່ງຕັ້ງໜ້າ ແລະ ສິ່ງຫຍໍ້ທໍ້ ຊຶ່ງຈະເປັນເລື່ອງຂອງການຄົ້ນຄວ້າຢ່າງລະອຽດໃນກິດຈະກຳທີ 28 ສຳລັບນັກຮຽນ.

## ກິດຈະກຳທີ 28 ສຳລັບນັກຮຽນ

## ການສ້າງທາງດ່ວນຜ່ານສະຖານທີ່ທຳມະຊາດທີ່ເປັນມໍລະດົກໂລກ

ວັດຖຸປະສົງ: ເຂົ້າໃຈຄວາມຫຼາກຫຼາຍດ້ານສິດຜົນປະໂຫຍດ ແລະ ຄຳເຫັນກ່ຽວກັບການພັດທະນາ, ການທ່ອງທ່ຽວ ແລະ ມໍລະດົກໂລກ.

- ສັບຊ້ອນນັກຮຽນເປັນທ້າງໆ ແລ້ວໃຫ້ແຕ່ລະຈຸກຸ່ມຄຳເຫັນຕາມໜ້າທີ່ສົມມຸດ.
- ໃຫ້ແຕ່ລະຈຸສົ່ງຜູ້ຕາງໜ້າເຂົ້າຮ່ວມການໂຕ້ວາທີ ແລະ ເປັນກຳມະການເພື່ອຕັດສິນການສ້າງທາງດ່ວນ. ໃຫ້ເຂົາເຈົ້າວິເຄາະການຕັດສິນໃຈ.

### ຮ່າງກິດຈະກຳເພື່ອການສຶກສາ.

ສິ່ງສຸດທ້າຍທີ່ນິວຊີແລນ ຕ້ອງການ ແມ່ນການມີທາງສາຍໃໝ່ຜ່ານກາງທຳມະຊາດ. ສິ່ງນີ້ອາດມີຜົນກະທົບຮ້າຍແຮງຕໍ່ເຂດແດນທີ່ໄດ້ຮັບການອະນຸລັກຈົນເຖິງປະຈຸບັນ ແລະ ເປັນບາດຄ້ອນອັນໜັກໜ່ວງທີ່ຕີໃສ່ເສດຖະກິດ. ສິ່ງນີ້ ປ່ຽນວິທີການມາເຖິງນິວຊີແລນຂອງນັກທ່ອງທ່ຽວເທົ່ານັ້ນ ແຕ່ບໍ່ດູດດຶງເອົານັກທ່ອງທ່ຽວຕື່ມອີກ, ສະນັ້ນ, ພວກເຮົາບໍ່ຕ້ອງການສິ່ງນີ້. ໂຄງການສ້າງທາງ ໂຄງການນີ້ຈະບໍ່ປະກົດຜົນເປັນຈິງຈັກເທື່ອດອກ.

ຜູ້ອຳນວຍການສະມາຄົມເພື່ອ<br>ການອະນຸລັກປ່າໄມ້ ແລະ ນົກ

ໃນນີ້ ພວກເຮົາເຫັນຄຳຕອບສຳຄັນ ເພື່ອເຮັດໃຫ້ການທ່ອງທ່ຽວຢູ່ແຄມທະເລຂະຫຍາຍຕົວ. ທາງສາຍນີ້ ທົດແທນສິ່ງທີ່ພວກເຮົາສູນເສຍໄປ. ຖ້າ 10% ຂອງລົດບັດໃຫຍ່ທີ່ໄປມິນຟໍແລ່ນຂຶ້ນຕາມຝັ່ງຕາເວັນຕົກ ອຸດສາຫະກຳການທ່ອງທ່ຽວຂອງພວກເຮົາຈະເພີ່ມຂຶ້ນເຄິ່ງໜຶ່ງ.

ຜູ້ອຳນວຍການໃຫຍ່ ສະພາຂອງຄະນະກຳມະການເມືອງແວດສະແລນ.

ທາງທີ່ສ້າງຢູ່ພື້ນຂອງຮ່ອມພູ ອາດຈະນຳຄວາມເສຍຫາຍ ແກ່ລະບົບນິເວດວິທະຍາຂອງເຂດໜອງ ແລະ ບຶງ ທີ່ມີຄວາມສົມດູນທາງທຳມະຊາດບໍ່ແໜ້ນໜາ ແລະ ທາງເທິງຈ້າຍພູອາດຈະທຳລາຍຄວາມສົມສ່ວນຂອງທິວທັດທຳມະຊາດ.

ພະນັກງານກອງອະນຸລັກປ່າໄມ້.

ທິວທັດ ແລະ ສະຖານທີ່ທຳມະຊາດ ມີຄວາມສວຍສົດງົດງາມພິເສດ. ສິ່ງນີ້ອາດຈະເພີ່ມມິຕິໃໝ່ແກ່ນິວຊີແລນ ແລະ ການທ່ອງທ່ຽວສາກົນ. ການປະຕິບັດໂຄງການອາດຈະເຮັດໃຫ້ມີອິດສະລະພາບສ່ວນໜຶ່ງໃນການສັນຈອນໂດຍທາງລົດ ລະຫວ່າງຮາອັດ ແລະ ມິນພໍ.

ລັດຖະມົນຕີວ່າການກະຊວງຂົນສົ່ງ.

ລວມແລ້ວໂຄງການບໍ່ມີຜົນເສຍຫາຍແນວໃດເລີຍ ຖ້າວ່າການຄົ້ນຄວ້າດ້ານການຕະຫຼາດຫາກບໍ່ຊີ້ບອກລາຍຈ່າຍສູງໂພດຂອງປະເທດ. ໂຄງການອາດຈະນຳຜົນປະໂຫຍດມາໃຫ້ການທ່ອງທ່ຽວ ແລະ ຊຸມຊົນຂອງແວດສະແລນຕອນໃຕ້ ແລະ ຂອງຟີຢໍແລນ ທີ່ສ້າງລາຍໄດ້ຂອງເຂົາເຈົ້າໃຫ້ສູງຂຶ້ນ.

ໂອຕາໂກ, ເລລີຕາຍ, ບັນນາທິການໜັງສືພິມ
(Otago, Daily Times, Rédaction d'un journal)

ແຫຼ່ງເອກະສານ: ໂຮງຮຽນອຸດົມສຶກສາກະເຣມອນເທິ, ນິວຊີແລນ.
(Source: Greymonth High School, New Zealand)

## ມໍລະດົກໂລກ ແລະ ການທ່ອງທ່ຽວຕາມຫຼັກສູດຂອງລາຍວິຊາ:

### ສິລະປະສຶກສາ.

- ປະດິດສ້າງການໂຄສະນາເພື່ອສົ່ງເສີມການທ່ອງທ່ຽວ ດ້ວຍການຂຽນແຜ່ນໂຄສະນາ ເພື່ອດຶງດູດນັກທ່ອງທ່ຽວ.
- ປະດິດສ້າງປຶ້ມ ເພື່ອສະໜອງຂໍ້ມູນຂ່າວສານກ່ຽວກັບສະຖານທີ່ແກ່ນັກທ່ອງທ່ຽວ.
- ແຕ້ມຮູບ ຫຼື ຍັ່ງມຍາມສະຖານທີ່, ແສ່ວຮູບ ແລະ ອື່ນໆ...
- ປະດິດສ້າງແຜ່ນໂຄສະນາ ຄວາມຈຳເປັນຂອງການອະນຸລັກສະຖານທີ່ມໍລະດົກຂອງທ້ອງຖິ່ນ, ຂອງຊາດ, ຂອງຂົງເຂດ ແລະ ຂອງໂລກ.

### ພູມສາດ/ປະຫວັດສາດ.

- ສົນທະນາກ່ຽວກັບເງື່ອນໄຂ ແລະ ເຫດຜົນ ທີ່ພາໃຫ້ສະຖານທີ່ເປັນ ຫຼື ບໍ່ເປັນບ່ອນທ່ອງທ່ຽວ.
- ກວດເບິ່ງປະຫວັດຂອງສະຖານທີ່ເພື່ອຮູ້ວ່າເປັນສິ່ງສົນໃຈຂອງການທ່ອງທ່ຽວ ໃນລະດັບທ້ອງຖິ່ນ, ລະດັບຊາດ, ລະດັບພາກພື້ນ ແລະ ໃນລະດັບໂລກ.
- ສະເໜີວິທີທີ່ມີຊີວິດຊີວາໃນການເລົ່າປະຫວັດຂອງສະຖານທີ່ໃຫ້ນັກທ່ອງທ່ຽວຟັງ.
- ສຶກສາການເຊາະເຈື່ອນຂອງສະຖານທີ່ໂດຍນັກທ່ອງທ່ຽວ ແລະ ສະເໜີວິທີແກ້ໄຂ, ຕົວຢ່າງການສັບປ່ຽນເສັ້ນທາງການທ່ຽວຊົມ.

### ອິນເຕີແນັດ.

- ຊອກຫາຂໍ້ມູນຂ່າວສານກ່ຽວກັບມໍລະດົກໂລກ ແລະ ການທ່ອງທ່ຽວໃນປະເທດ ແລະ ໃນພາກພື້ນຕ່າງໆ.

### ພາສາ/ວັນນະຄະດີ.

- ຂຽນບົດເພື່ອສະໜອງຂ່າວສານແກ່ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ.
- ຂຽນບົດເພື່ອນຳພາການທ່ຽວຊົມສະຖານທີ່.
- ຈັດການໂຕ້ວາທີ ຫຼື ສະແດງລະຄອນກ່ຽວກັບຄຸນຄ່າຂອງສະຖານທີ່ມໍລະດົກໂລກແລະຄວາມເສຍຫາຍທີ່ອາດເກີດຂຶ້ນຈາກການທ່ອງທ່ຽວ.
- ແປເອກະສານກ່ຽວກັບສະຖານທີ່ທ່ອງທ່ຽວເປັນພາສາອື່ນ.
- ຮຽນດ້ວຍປຶ້ມໂຄສະນາກ່ຽວກັບສະຖານທີ່ມໍລະດົກໂລກ.
- ຊອກຫາການພັນລະນາສະຖານທີ່ໃນນິຍາຍ ຫຼື ບົດເລົ່າເລື່ອງ ແລະ ຊອກຮູ້ວິທີສັບຊ້ອນຂໍ້ຄວາມນັ້ນໃນເອກະສານກ່ຽວກັບການທ່ອງທ່ຽວ.

**ຄະນິດສາດ.**

ຮຽນຮູ້ທ່າອ່ຽງຂອງການທ່ອງທ່ຽວ ແລະ ຜົນເສຍຫາຍທີ່ອາດຈະເກີດຂຶ້ນກັບສະຖານທີ່ມໍລະດົກໂລກ ດ້ວຍການແຕ້ມເສັ້ນສະແດງ ແລະ ສະຖິຕິ, ຄຳນວນຜົນໄດ້ຮັບຂອງການສອບຖາມ ຫຼື ການຕອບປະມວນຄຳຖາມ.

**ສັງຄົມສາດ.**

- ຢ້ຽມຢາມສະຖານທີ່ ແລະ ເຮັດບົດບັນທຶກ.
- ເກັບກຳຂໍ້ມູນກ່ຽວກັບຜົນໄດ້ ແລະ ຜົນເສຍຂອງການທ່ອງທ່ຽວຕໍ່ການອະນຸລັກສະຖານທີ່ມໍລະດົກໂລກ.

# ມໍລະດົກໂລກ ແລະ ສະພາບແວດລ້ອມ

« ພວກເຮົາສາມາດຕີຄວາມໝາຍຂອງທຳມະຊາດໄດ້ຫຼາຍຢ່າງ ເຊັ່ນ: ເປັນພື້ນຖານຂອງການດຳເນີນງານດ້ານວິທະຍາສາດ ຫຼື ການຄ້າ, ເປັນຊັບພະຍາກອນ, ເປັນສິ່ງເພື່ອການສັງເກດ, ການທົດລອງ ແລະ ໃຫ້ຄຸນຄ່າ, ຫຼື ເປັນບໍ່ເກີດດ້ານສິລະປະ »

ປະທານາທິບໍດີ ແນນເຊິນ ມັງເດລາ, ຕຸລາ 94.

## ມໍລະດົກໂລກ ແລະ ສະພາບແວດລ້ອມ.


**ວັດຖຸປະສົງ** 120

ດ້ານຄວາມຮູ້

ດ້ານທ່າທີ

ດ້ານຄວາມສາມາດ

**ຊາວໜຸ່ມ ແລະ ການປົກປັກຮັກສາມໍລະດົກໂລກ.** 121

ກິດຈະກຳທີ 29 ສຳລັບນັກຮຽນ: 122

ລະບົບນິເວດວິທະຍາ ແລະ ຮູບແບບຕ່າງໆຂອງໜ້າໂລກ.

**ການປົກປັກຮັກສາສະພາບແວດລ້ອມຂອງໂລກ.** 123

ກິດຈະກຳທີ 30 ສຳລັບນັກຮຽນ: 126

ການຊຸດໂຊມຂອງສະພາບແວດລ້ອມ.

**ປົກປັກຮັກສາມໍລະດົກໂລກ**

**ເພື່ອປົກປັກຮັກສາຊີວະນາໆພັນ.**

ກິດຈະກຳທີ 31 ສຳລັບນັກຮຽນ: 127

ໄພຂົ່ມຂູ່ ຕໍ່ຊີວະນາໆພັນ.

ຄວາມຫຼາກຫຼາຍດ້ານວັດທະນະທຳ ແລະ 129

ຄວາມຫຼາກຫຼາຍດ້ານຊີວະສາດ ການວິວັດທະນາການ 129

ແລະ ການດັບສູນຂອງພືດ ແລະ ສັດ.

ປ່າສະຫງວນທຳມະຊາດ ທີ່ຮ່ອມພູພຶດສະພາ 131

(Vallée de Mai), ປະເທດເຊແຊນເລີ

ເຂດອະນຸລັກສັດປ່າ ທີ່ມານັດ (Manas). 131

ປະເທດອິນເດຍ ເຕວາຮີປູນາມູ, ນິວຊີແລນ. 132

ກິດຈະກຳທີ 32 ສຳລັບນັກຮຽນ: 133

ແບບຫຼິ້ນກ່ຽວກັບອຸທິຍານກົງດູອານາ (Gondwana).

ຮ່າງກິດຈະກຳເພື່ອການສຶກສາ:

ແບບຫຼິ້ນກ່ຽວກັບອຸທິຍານ ກົງດູອານາ

ກິດຈະກຳທີ 33 ສຳລັບນັກຮຽນ: 134

**ຮຽນຮູ້ມາດຖານກ່ຽວກັບສະຖານທີ່ທຳມະຊາດ ຂອງມໍລະດົກໂລກ.**

ການພັດທະນາແບບຍືນຍົງຕາມທັດສະນະດ້ານນິເວດວິທະຍາ ແລະ ດ້ານວັດທະນະທຳ.

ອຸທິຍານແຫ່ງຊາດ ແຄມຝັ່ງທະເລ ອາກແກ້ງ (banc d'Arguin) ຢູ່ປະເທດໂມຣິຕານີ.

ກິດຈະກຳ ທີ 34 ສຳລັບນັກຮຽນ: 136

ການປົກປັກຮັກສາສະພາບແວດລ້ອມ.

ກິດຈະກຳ ທີ 35 ສຳລັບນັກຮຽນ: 137

ພິດຕິກຳ ເພື່ອການພັດທະນານິເວດວິທະຍາ ແບບຍືນຍົງ.

ການສົ່ງເສີມຄວາມຍືນຍົງໃນທ້ອງຖິ່ນ.

ກິດຈະກຳ ທີ 36 ສຳລັບນັກຮຽນ: 138

ວົງຈອນຂອງມໍລະດົກໂລກ.

**ອະນາຄົດຂອງໂລກທີ່ພວກເຮົາອາໄສຢູ່.** 138

**ມໍລະດົກໂລກ ແລະ ສະພາບແວດລ້ອມ ຕາມຫຼັກສູດຂອງລາຍວິຊາ.** 138

## ວັດຖຸປະສົງ:

### ດ້ານຄວາມຮູ້

ເຮັດໃຫ້ນັກຮຽນ ຮູ້ ແລະ ເຂົ້າໃຈ:

- ສະພາບແວດລ້ອມທໍາມະຊາດ ແລະ ວັດທະນະທໍາ ແລະ ພົນກະທົບຊຶ່ງກັນ ແລະ ກັນລະຫວ່າງຄົນ ແລະ ສະພາບແວດລ້ອມ;
- ສະຖານທີ່ມໍລະດົກໂລກ ແມ່ນສະຖານທີ່ແຫ່ງການປົກປັກຮັກສາ ແລະ ມີຄວາມສໍາຄັນຕໍ່ການອະນຸລັກຊີວະນາໆພັນ ຂອງສັດ ແລະ ພືດ ທີ່ໃກ້ຈະດັບສູນ;
- ສົນທິສັນຍາວ່າດ້ວຍມໍລະດົກໂລກ ແມ່ນສ່ວນປະກອບສໍາຄັນຂອງການປະກອບສ່ວນເຂົ້າໃນພຶດຕິກໍາລວມຂອງສາກົນ ເພື່ອການປົກປັກຮັກສາສະພາບແວດລ້ອມ.

### ດ້ານທ່າທີ

ຊຸກຍູ້ນັກຮຽນໃຫ້:

- ມີສະຕິຮັບຜິດຊອບສູງຕໍ່ການປົກປັກຮັກສາສະພາບແວດລ້ອມ;
- ອອກແບບການດໍາລົງຊີວິດໃນໂລກແບບຍືນຍົງ ເພື່ອປົກປັກຮັກສາຄົນ ພືດ ແລະ ສັດ
- ແລະ ຄວາມຫຼາກຫຼາຍຂອງລະບົບນິເວດວິທະຍາ (ຊີວະນາໆພັນ) ແລະ ເພື່ອບໍ່ທໍາລາຍຄວາມສາມາດຂອງຄົນຮຸ່ນຫຼັງໃນການຕອບສະໜອງຄວາມຕ້ອງການຂອງເຂົາເຈົ້າ.

### ດ້ານຄວາມສາມາດ.

ເຮັດໃຫ້ນັກຮຽນພັດທະນາຄວາມສາມາດຂອງຕົນເພື່ອ:

- ເຂົ້າຮ່ວມ ການປົກປັກຮັກສາສະພາບແວດລ້ອມ, ໂດຍສະເພາະ ການອະນຸລັກມໍລະດົກໂລກ;
- ເຂົ້າຮ່ວມ ຂະບວນການພັດທະນາຢ່າງສົມເຫດສົມຜົນ ຕາມກົດເກນຂອງນິເວດວິທະຍາ ເພື່ອຄວາມສົມບູນພູນສຸກໃນອະນາຄົດຂອງໂລກ ແລະ ຂອງປະຊາກອນ;
- ພຶດຕິກໍາເພື່ອການອະນຸລັກມໍລະດົກໂລກ;

## ຊາວໜຸ່ມ ແລະ ການປົກປັກຮັກສາມໍລະດົກໂລກ.

ການອະນຸລັກມໍລະດົກໂລກ ສາມາດປະກອບສ່ວນຢ່າງມີຄວາມໝາຍເຂົ້າໃນການປົກປັກຮັກສາສະພາບແວດລ້ອມ, ຄວາມຫຼາກຫຼາຍດ້ານວັດທະນະທຳ ແລະ ທຳມະຊາດ ແລະ ຜົນກະທົບຊຶ່ງກັນ ແລະ ກັນລະຫວ່າງປະຊາກອນ ແລະ ສະພາບແວດລ້ອມ.

ການອະນຸລັກມໍລະດົກໂລກຊ່ວຍແກ້ໄຂບັນຫາໃຫຍ່ໃນຍຸກສະໄໝ ຂອງພວກເຮົາ ຊຶ່ງຕິດພັນກັບສະພາບແວດລ້ອມ, ໂດຍສະເພາະການເພີ່ມຂຶ້ນຂອງຈຳນວນສະກຸນພືດ ແລະ ສັດ ທີ່ຖືກໄພຂົ່ມຂູ່ ແລະ ຖືກດັບສູນ ແລະ ການຫຼຸດລົງຂອງຊີວະນາໆພັນ ຊຶ່ງເປັນເງົາຕາມຕົວ. ການອະນຸລັກສະຖານທີ່ມໍລະດົກໂລກທີ່ມີລາຍຊື່ໃນກອບການພັດທະນາແບບຍືນຍົງຂອງສາກົນ ມີຄວາມສຳຄັນ ຍ້ອນວ່າ ທຳມະນູນຂອງເຂດອະນຸລັກທີ່ຕິດພັນກັບສະຖານທີ່ມໍລະດົກໂລກ ສອດຄ່ອງກັບຄວາມຕ້ອງການຂອງປະຊາຊົນທ້ອງຖິ່ນໃນການຂຸດຄົ້ນຊັບພະຍາກອນ ແລະ ໃນການບູລະນະເສດຖະກິດ. ນອກນີ້, ສົນທິສັນຍາ ຍັງຮັບຮູ້ມໍລະດົກດ້ານວັດທະນະທຳ ແລະ ທຳມະຊາດ ແລະ ຜົນກະທົບ ຊຶ່ງກັນ ແລະ ກັນຢ່າງເດັ່ນຊັດຂອງສອງສິ່ງນີ້.

ຍ້ອນແນວນີ້, ສົນທິສັນຍາ ຈຶ່ງບໍ່ສະໜອງຄວາມເປັນໄປໄດ້ອື່ນ ນອກຈາກວິທີອະນຸລັກສະພາບແວດລ້ອມຄົບຊຸດ ຊຶ່ງກວມເອົາການປົກປັກຮັກສາຄຸນຄ່າດ້ານທຳມະຊາດ ແລະ ດ້ານວັດທະນະທຳອັນຫຼາກຫຼາຍຂອງສະຖານທີ່.

ສະຖານທີ່ທຳມະຊາດ 114 ແຫ່ງທີ່ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ ໃນປີ 1997 ເປັນບ່ອນອາໄສຂອງສັດ ແລະ ພືດຫຼາຍສະກຸນ, ລະບົບນິເວດວິທະຍາເປັນສະຖານທີ່ທຳລະນີສາດ, ຂະບວນການດ້ານນິເວດວິທະຍາ ແລະ ຊີວະສາດ, ເປັນຖິ່ນຖານຂອງທຳມະຊາດ ແລະ ເປັນພື້ນທີ່ຊຶ່ງມີຄວາມສວຍສົດງົດງາມພິເສດ ແລະ ມີຄວາມສຳຄັນດ້ານສິລະປະ ແລະ ວັດທະນະທຳ. ສະຖານທີ່ເຫຼົ່ານີ້ ກວມເອົາ 10% ຂອງເນື້ອທີ່ໂລກ (ດິນ ແລະ ທະເລ) ແລະ ໄດ້ຮັບການດູແລ ແລະ ຄຸ້ມຄອງຕາມວິທີທີ່ປະຕິບັດໃນເຂດອະນຸລັກ.

ຖ້າຕ້ອງການໃຫ້ຊາວໜຸ່ມມີຄວາມສາມາດປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການອະນຸລັກສະພາບແວດລ້ອມ, ຕ້ອງເຮັດໃຫ້ເຂົາເຈົ້າມີຄວາມສຳນຶກກ່ຽວກັບບັນຫາ, ສິ່ງທ້າທາຍ ແລະ ໃນທີ່ສຸດເຂົາເຈົ້າຕ້ອງມີວິທີການ ເພື່ອແກ້ໄຂສິ່ງເຫຼົ່ານີ້. ການຮຽນຮູ້ຄວາມສຳຄັນໃນການປົກປັກຮັກສາສະພາບແວດລ້ອມຂອງສົນທິສັນຍາ ວ່າດ້ວຍມໍລະດົກໂລກ ຊ່ວຍໃຫ້ບັນລຸວັດຖຸປະສົງນີ້ໄດ້. ບັນຫາໃຫຍ່ຂອງການປົກປັກຮັກສາສະພາບແວດລ້ອມທີ່ເຫັນວ່າມີຄວາມສຳຄັນ ເພື່ອປົກປັກຮັກສາ ມໍລະດົກໂລກ ຈະຖືກນຳມາສະເໜີໃນພາກນີ້.

ກິດຈະກຳທີ 29 ສຳລັບນັກຮຽນ.

## ລະບົບນິເວດວິທະຍາ ແລະ ຮູບແບບຕ່າງໆ ຂອງໜ້າໂລກ.

ວັດຖຸປະສົງ: ຮັບຮູ້ ແລະ ເຂົ້າໃຈລະບົບນິເວດວິທະຍາ ຊະນິດຕ່າງໆ ແລະ ສະຖານທີ່ທຳມະຊາດຂອງມໍລະດົກໂລກ

- ຖາມນັກຮຽນວ່າຢູ່ທ້ອງຖິ່ນຂອງເຂົາເຈົ້າມີລະບົບນິເວດວິທະຍາ ຫຼື ຮູບແບບພິເສດຂອງໜ້າດິນບໍ່ ແລະ ໃຫ້ເຂົາເຈົ້າສະເໜີເອກະລັກ ແລະ ຈຸດສຳຄັນ ຕົວຢ່າງເປັນບຶງ ຫຼື ເຂດຊຸ່ມຊື່ນ, ສັດ ແລະ ພືດ ຕົວຢ່າງເຊັ່ນ: ນົກ ແລະ ອື່ນໆ...

- ບອກໃຫ້ນັກຮຽນສະເໜີສະຖານທີ່ທຳມະຊາດທີ່ເປັນມໍລະດົກຂອງຊາດ ແລະ ຂອງໂລກເຊັ່ນ:
  - ປ່າໄມ້
  - ແມ່ນ້ຳ
  - ພູ

- ບອກໃຫ້ເຂົາເຈົ້າສະເໜີເອກະລັກຂອງສະຖານທີ່ທີ່ເຂົາເຈົ້າສະເໜີ.
- ເຂົາເຈົ້າມັກໄປທ່ຽວຊົມສະຖານທີ່ໃດຫຼາຍກວ່າໝູ່.
  - ປ່າໄມ້?
  - ແມ່ນ້ຳ?
  - ພູ?
  - ບຶງ?

- ບອກໃຫ້ເຂົາເຈົ້າສະເໜີເຫດຜົນ.

# ການປົກປັກຮັກສາສະພາບແວດລ້ອມຂອງໂລກ

ເພື່ອປະເຊີນໜ້າກັບການຊຸດໂຊມຂອງສະພາບແວດລ້ອມ, ມົນພາວະຂອງອາກາດ, ນ້ຳ ແລະ ດິນ, ການເພີ່ມອຸນຫະພູມຂອງໂລກ, ການຮົ່ວຂອງຊັ້ນໂອໂຊນ, ການສູນເສຍຂອງຊັບພະຍາກອນທຳມະຊາດທີ່ທົດແທນບໍ່ໄດ້, ການດັບສູນຂອງພືດ ແລະ ສັດ ແລະ ການຫຼຸດລົງຂອງຊີວະນາໆພັນ, ໝົດທຸກຄົນຈຶ່ງພ້ອມກັນຮີບຮ້ອນບູລະນະຜົນເສຍຫາຍທີ່ໄດ້ຮັບ, ຖ້າພວກເຮົາຕ້ອງການອະນຸລັກຄວາມຫຼາກຫຼາຍດ້ານທຳມະຊາດ ແລະ ດ້ານວັດທະນະທຳຂອງໂລກ ແລະ ຮັບປະກັນການພັດທະນາແບບຍືນຍົງແກ່ຮຸ່ນຄົນໃນປະຈຸບັນ ແລະ ໃນອານາຄົດ.

ການອະນຸລັກມໍລະດົກໂລກ, ໂດຍສະເພາະ ສະຖານທີ່ທຳມະຊາດສາມາດປະກອບສ່ວນໃນຂອບເຂດກວ້າງຂອງການບູລະນະ ແລະ ການປົກປັກຮັກສາສະພາບແວດລ້ອມຂອງພວກເຮົາ. ນອກຈາກສົນທິສັນຍາ ວ່າດ້ວຍມໍລະດົກໂລກແລ້ວ ຍັງມີສົນທິສັນຍາສາກົນກ່ຽວກັບການປົກປັກຮັກສາສະພາບແວດລ້ອມ ສະບັບອື່ນໆອີກ. ຜູ້ສົນໃຈສາມາດເປີດເວບໄຊສູນກາງມໍລະດົກໂລກຂອງອຸຍແນດສະໂກ ເພື່ອຊອກຮູ້ຂ່າວສານກ່ຽວກັບສົນທິສັນຍາ ແລະ ກອງເລຂາທິການດັ່ງກ່າວ.

ສົນທິສັນຍາ ວ່າດ້ວຍມໍລະດົກໂລກ ໄດ້ຮັບການຮັບຮອງເອົາສອງເດືອນຫຼັງກອງປະຊຸມຂອງອົງການສະຫະປະຊາຊາດ ວ່າດ້ວຍ ສະພາບແວດລ້ອມທີ່ໄດ້ໄຂຂຶ້ນໃນເດືອນກັນຍາ 1972 ທີ່ນະຄອນຫຼວງສະໂຕກໂຮມ ປະເທດຊູແອດ. ຊາວປີຫຼັງ ກອງປະຊຸມທີ່ສະໂຕກໂຮມ, ຜູ້ນຳຂອງປະເທດຕ່າງໆໃນໂລກໄດ້ເຂົ້າຮ່ວມກອງປະຊຸມຂອງສະຫະປະຊາຊາດ ວ່າດ້ວຍສະພາບແວດລ້ອມ ແລະ ການພັດທະນາທີ່ໄດ້ໄຂຂຶ້ນໃນເດືອນມິຖຸນາ 1992 ທີ່ເມືອງຣີໂຢເດີຊາແນໂຣ ປະເທດບຼາຊິນ. ກອງປະຊຸມທີ່ຣີໂຢ ຫຼື ກອງປະຊຸມສູງສຸດຂອງໂລກໄດ້ໄຂຂຶ້ນເພື່ອປະເມີນການຊຸດໂຊມຂັ້ນອັນຕະລາຍຂອງສະພາບແວດລ້ອມທຳມະຊາດແລ້ວ ວາງຍຸດທະສາດເພື່ອປັບປຸງສະຖານະການນີ້ໃຫ້ດີຂຶ້ນ. ກອງປະຊຸມໄດ້ຮັບຮອງເອົາແຜນປະຕິບັດງານ 21 ທີ່ປະກອບດ້ວຍຂໍ້ສະເໜີຕ່າງໆເພື່ອຊ່ວຍກອບກູ້ເອົາໂລກ ແລະ ໃນນີ້ ວັກທີ 36 ເນັ້ນໜັກໜ້າທີ່ສຳຄັນຂອງການສຶກສາ ແລະ ຊາວໜຸ່ມ.

ໃນດ້ານອື່ນ, 157 ປະເທດໄດ້ຮ່ວມກັບສະຫະພາບເອີຣົບ ເຊັນສົນທິສັນຍາວ່າດ້ວຍຊີວະນາໆພັນ ທີ່ຮຽກຮ້ອງໃຫ້ມີພຶດຕິກຳອັນລະອຽດ ເພື່ອປົກປັກຮັກສາຄວາມຫຼາກຫຼາຍດ້ານຊີວະສາດ.

ນອກນີ້ ຍັງມີຖະແຫຼງການກ່ຽວກັບການປົກປັກຮັກສາປ່າໄມ້ ທີ່ເພີ່ມເຕີມສົນທິສັນຍາສາກົນອື່ນອີກສອງສະບັບ ຊຶ່ງແມ່ນຜົນສືບຕໍ່ຈາກກອງປະຊຸມສູງສຸດຂອງໂລກທີ່ຣີໂອ.

ສົນທິສັນຍາວ່າດ້ວຍການປ່ຽນແປງຂອງອາກາດທີ່ມີຜົນສັກສິດ ແຕ່ວັນທີ 21 ມີນາ 1994 ໄດ້ຮັບການຮັບຮອງຈາກ 165 ປະເທດ. ສົນທິສັນຍານີ້ ມີເປົ້າໝາຍເພື່ອຢຸດຕິການເຕົ້າໂຮມອາຍພິດໃນຊັ້ນບັນຍາກາດ ແລະ ເພື່ອຕ້ານການຮ້ອນຂຶ້ນຂອງໜ່ວຍໂລກ.

ສົນທິສັນຍາຂອງອົງການສະຫະປະຊາຊາດເພື່ອຕ້ານການເກີດເປັນທະເລຊາຍ ໃນປະເທດທີ່ຖືກຄຸກຄາມຈາກຄວາມແຫ້ງແລ້ງ ແລະ/ຫຼື ການເກີດເປັນທະເລຊາຍ, ໂດຍສະເພາະຢູ່ອາຟະຣິກາ, ມີຜົນສັກສິດ ແຕ່ວັນທີ 26 ທັນວາ 1996 ເປັນຕົ້ນມາ. ສົນທິສັນຍານີ້ ມີເປົ້າໝາຍເພື່ອລົບລ້າງຄວາມທຸກທໍລະມານທີ່ຂົ່ມຂູ່ມວນມະນຸດ ແລະ ໄພພິບັດດ້ານນິເວດວິທະຍາ ທີ່ເກີດຈາກຄວາມແຫ້ງແລ້ງ ແລະ ການເກີດເປັນທະເລຊາຍ.

ຫຼັກການທີ່ເປັນກອບຂອງການຄຸ້ມຄອງ, ການອະນຸລັກ ແລະ ການພັດທະນາແບບຍືນຍົງສໍາລັບປ່າໄມ້ທຸກປະເພດໄດ້ຮັບການຮັບຮອງໃນກອງປະຊຸມທີ່ຣີໂອ. ເອກະສານສະບັບນີ້ ມີເປົ້າໝາຍເພື່ອຊຸກຍູ້ໃຫ້ແຕ່ລະປະເທດມີພຶດຕິກໍາ ເພື່ອບູລະນະປ່າໄມ້ຂອງໂລກ, ໂດຍສະເພາະການປູກປ່າ ແລະ ການອະນຸລັກຊັບພະຍາກອນທໍາມະຊາດ.

ນອກນີ້, ສົນທິສັນຍາສາກົນວ່າດ້ວຍການຄ້າສະກຸນສັດ ແລະ ພືດທີ່ໃກ້ຈະສູນພັນ "Convention on International Trade in Endangered Species of Wild fauna and flora (CITES)" ໄດ້ຮັບການຮັບຮອງໃນ 1975. ສົນທິສັນຍານີ້ ກໍານົດການຄວບຄຸມການຄ້າສະກຸນພືດ ແລະ ສັດທີ່ໄພຂົ່ມຂູ່. ໃນກໍລະນີຂອງສະກຸນທີ່ໃກ້ຈະສູນພັນ, ສົນທິສັນຍາເກືອດຫ້າມການແລກປ່ຽນຄ້າຂາຍໃນສະພາບທີ່ມີຊີວິດຢູ່.

ສົນທິສັນຍາ ຣາໍຊາ (Ramsar) ໃນປີ 1971 ວ່າດ້ວຍເຂດຊຸ່ມຊື່ນຂອງໂລກ ຊຶ່ງມີຊື່ເປັນທີ່ຮູ້ຈັກທົ່ວໄປວ່າ ສົນທິສັນຍາຣາໍຊາວ່າດ້ວຍເຂດຊຸ່ມຊື່ນ ແມ່ນສັນຍາລະຫວ່າງລັດຖະບານທີ່ກໍານົດການຮ່ວມມືສາກົນ ເພື່ອສົ່ງເສີມການອະນຸລັກ ແລະ ການຊຸດຄົ້ນຢ່າງສົມເຫດສົມຜົນ ຊັບພະຍາກອນຂອງເຂດຊຸ່ມຊື່ນ. ປະຈຸບັນມີເຂດຊຸ່ມຊື່ນຂອງໂລກ 88 ແຫ່ງ ໃນເນື້ອທີ່ທັງໝົດ 62,7 ລ້ານເຮັກຕາ ຊຶ່ງໄດ້ຂຶ້ນທະບຽນໃນບັນຊີລາຍຊື່ ຂອງສົນທິສັນຍາຣາໍຊາ.

ສະຖານທີ່ຂອງເຂດຊຸ່ມຊື່ນ ສິບຫ້າ ແຫ່ງໃນບັນຊີລາຍຊື່ຂອງສົນທິສັນຍາຣາໍຊາ ແມ່ນສະຖານທີ່ມໍລະດົກໂລກເຊັ່ນ:

| | |
|---|---|
| ອົດສະຕາລີ | ອຸທິຍານແຫ່ງຊາດ ຄາຄາດູ (Parc national de Kakadu) |
| ບູນກາຣີ | ປ່າສະຫງວນ ຊະເຣບາກນາ (Réserve naturelle de Sreberna) |
| ການາດາ | ສາມຫຼ່ຽມແມ່ນ້ຳ ແປ-ອາທາບັດສະກາ (Delta de la Paix-Athabasca) |
| ແອດສະປາຍ | ອຸທິຍານແຫ່ງຊາດ ໂດຍານາ (Parc national de Donãna) |
| ສະຫະພັນລັດເຊຍ | ສາມຫຼ່ຽມແມ່ນ້ຳ ເຊເລນກາ (ເຂດທະເລບາຍການ) (Delta du Selenga, partie du lac Baïkal) |
| ຝຣັ່ງ | ໂບດ ແລະ ແຄມທະເລ ແຊັງມີແຊນ (Mout Saint-Michel et sa baie) |
| ອິນເດຍ | ອຸທິຍານ ແຫ່ງຊາດ ເກໂອລາເດໂອ (Parc national de Keoladeo) |
| ໂມຣິຕານີ | ອຸທິຍານແຫ່ງຊາດ ບັງດາກແກັງ Parc national Banc d'Arguin) |
| ນີເຊ | ອຸທິຍານແຫ່ງຊາດດັບເບີນຢູ (Parc national du W) |
| ສາທາລະນະລັດ | |
| ປະຊາທິໄຕ ກົງໂກ | ອຸທິຍານແຫ່ງຊາດ ວິຣຸນກາ (Parc national des Virunga) |
| ຣູມານີ | ສາມຫຼ່ຽມແມ່ນ້ຳດານູບ (Delta du Danube) |
| ເຊເນການ | ອຸທິຍານ ນົກແຫ່ງຊາດ ທີ່ເມືອງຈູດເຈີ (Parc national des Oiseaux du Djoudj) |
| ຕູຍເນຊີ | ອຸທິຍານແຫ່ງຊາດ ອິດສະເກີນ (Parc national de l'Ichkeul) |

ນອກນີ້, ແຜນງານຂອງອຸຍແນດສະໂກກ່ຽວກັບຄົນ ແລະ ຊີວະໂລກ (MAB) ມີໜ້າທີ່ແກ້ໄຂຄວາມຂັດແຍ່ງລະຫວ່າງສະພາບແວດລ້ອມ ແລະ ໂຄງການການພັດທະນາທີ່ມີຜົນເສຍຫາຍຕໍ່ຊັບພະຍາກອນທຳມະຊາດ ດ້ວຍການຄົ້ນຄວ້າຜົນກະທົບ ຈາກກິດຈະກຳຂອງຄົນ ຕໍ່ສະພາບແວດລ້ອມ ແລະ ການຕອບໂຕ້ຂອງສັງຄົມຕໍ່ການປ່ຽນແປງທີ່ເກີດຂຶ້ນຕາມຕົວ. ການກຳນົດເຂດສະຫງວນຂອງຊີວະໂລກ ສາມາດອະນຸລັກຄວາມຫຼາກຫຼາຍຂອງຊີວະສາດ ແລະ ຮັກສາຄວາມສົມດູນຂອງລະບົບນິເວດວິທະຍາ, ນອກນີ້ ຍັງເປັນບ່ອນເພື່ອຮຽນຮູ້ວິທີນຳໃຊ້ດິນ ທີ່ເປັນປະເພນີສືບຕໍ່ກັນມາ ແລະ ເພື່ອເຜີຍແຜ່ຂ່າວສານຂອງການຄຸ້ມຄອງຊັບພະຍາກອນ ທຳມະຊາດທີ່ສົມເຫດສົມຜົນ ແລະ ປະກອບສ່ວນໃນການແກ້ໄຂບັນຫາດ້ານຊັບພະຍາກອນທຳມະຊາດ.

## ກິດຈະກຳທີ 30 ສຳລັບນັກຮຽນ

## ການຂຸດໂຊມຂອງສະພາບແວດລ້ອມ

**ວັດຖຸປະສົງ:** ຮູ້ຈັກຂອບເຂດຂອງບັນຫາສະພາບແວດລ້ອມໃນປະຈຸບັນ ແລະ ໃນອະນາຄົດຂອງປະເທດ ແລະ ຜົນກະທົບຕໍ່ສະຖານທີ່ທຳມະຊາດ ທີ່ເປັນມໍລະດົກໂລກ.

- ບອກໃຫ້ນັກຮຽນສະເໜີບັນຫາສະພາບແວດລ້ອມຂອງປະເທດ ຫຼື ຂອງທ້ອງຖິ່ນ ເຊັ່ນ: ການເຊາະເຈື່ອນ, ການປ່ຽນແປງຂອງດິນຟ້າອາກາດ ແລະ ການເພີ່ມຂຶ້ນຂອງລະດັບນ້ຳທະເລ, ການເກີດເປັນທະເລຊາຍ, ການທຳລາຍປ່າໄມ້ ແລະ ອື່ນໆ... ຖາມເຂົາເຈົ້າວ່າ ມີສະຖານທີ່ມໍລະດົກແຫ່ງຊາດ ແລະ ມໍລະດົກໂລກ ຖືກຂົ່ມຂູ່ຈາກບັນຫາທີ່ກ່າວມາບໍ່.
- ມີບັນຫາສະພາບແວດລ້ອມໃດແດ່ທີ່ໄດ້ຮັບການແກ້ໄຂໃນປະເທດ ຫຼື ໃນທ້ອງຖິ່ນຂອງເຂົາເຈົ້າ? ດ້ວຍວິທີໃດ? ຕາມມາດຕະການຂອງທ້ອງຖິ່ນ ຫຼື ຂອງສາກົນ?
- ບອກໃຫ້ນັກຮຽນຊອກຫາເອກະສານ ຫຼື ບົດໃນໜັງສືພິມທີ່ເວົ້າເຖິງສະພາບແວດລ້ອມ ເພື່ອນຳມາວິເຄາະ.

ສິ່ງບົ່ງບອກຄວາມເຄັ່ງຕຶງຂອງສະພາບແວດລ້ອມໃນໂລກ.

- ສອງສ່ວນສາມຂອງສະກຸນນົກໃນໂລກ ພວມຫຼຸດລົງ, ຢູ່ໃນຄວາມສ່ຽງ ຫຼື ໃກ້ຈະສູນພັນ.
- ໃນສອງຮ້ອຍປີຜ່ານມານີ້ ໜຶ່ງສ່ວນສີ່ຂອງສະກຸນນົກໃນໂລກໄດ້ດັບສູນພັນໄປແລ້ວ, ໂດຍສະເພາະຢູ່ເກາະ ແລະ ດອນໃນມະຫາສະມຸດຕ່າງໆ...
- ຈຳນວນຂອງກົບຫຼຸດລົງໂດຍທີ່ບໍ່ສາມາດອະທິບາຍໄດ້.
- ພື້ນທີ່ຂອງດອນພະການັງຫຼຸດລົງ.

*ປົກປັກຮັກສາມໍລະດົກໂລກ* ເພື່ອປົກປັກຮັກສາຄວາມຫຼາກຫຼາຍດ້ານຊີວະສາດ ຊີວະນາໆພັນ ຫຼື ຄວາມຫຼາກຫຼາຍດ້ານຊີວະສາດແມ່ນສຳຄັນ ຍັງຢືນການມີຫຼາຍຮູບແບບຂອງຊີວິດ ຊຶ່ງກວດເອົາພືດ, ສັດ ແລະ ຈຸລະຊີບ ພ້ອມທັງພັນທຸກຳ ແລະ ລະບົບນິເວດວິທະຍາ ຂອງສິ່ງເຫຼົ່ານີ້.

ການປົກປັກຮັກສາຊີວະນາໆພັນຂອງໂລກ ແມ່ນໂຄງການກວ້າງ ຍ້ອນວ່າມັນລວມມຸດ ການປົກປັກຮັກສາສິ່ງທີ່ມີຊີວິດໃນໂລກ, ເວົ້າຢ່າງໜຶ່ງແມ່ນການປົກປັກຮັກສາ ສະພາບແວດລ້ອມຂອງແມ່ນໍ້າ, ທະເລ, ເຂດອົບອຸ່ນ ແລະ ຈຸລະຊີບ. ການປົກປັກຮັກສາ ມໍລະດົກໂລກ ແມ່ນສ່ວນປະກອບສໍາຄັນໃນນະໂຍບາຍທີ່ລະດົມພຶດຕິກໍາລວມຂອງໂລກ ເຂົ້າໃນການປົກປັກຮັກສາຊີວະນາໆພັນຂອງໂລກ.

ເຂດອະນຸລັກສັດຢູ່ໂອກາປີ (okapis) ທີ່ສາທາລະນະລັດປະຊາທິປະໄຕກົງໂກ ໄດ້ຂຶ້ນທະບຽນໃນບັນຊີລາຍຊື່ ມໍລະດົກໂລກ ຍ້ອນວ່າສະຖານທີ່ນີ້ ແມ່ນໜຶ່ງໃນຫຼາຍພູມລໍາເນົາທໍາມະຊາດທີ່ເປັນຕົວແບບກວ່າໝູ່ຫຼາຍດ້ານຊີວະສາດ, ລວມທັງສະກຸນທີ່ຖືກໄພຂົ່ມຂູ່ ເຊັ່ນ: ລີງ ແລະ ນົກ ແລະ ເປັນບ່ອນອາໃສຂອງລະມັງ (okpis) 5.000 ໂຕໃນຈໍານວນ 30.000 ໂຕທີ່ຄາດຄະເນວ່າມີໃນໂລກ.

ເຂດອະນຸລັກສັດຢູ່ໂອກາປີ ສາທາລະນະລັດປະຊາທິປະໄຕ ກົງໂກ.

ການປົກປັກຮັກສາລະບົບນິເວດວິທະຍາ ແມ່ນສ່ວນປະກອບໜຶ່ງທີ່ສໍາຄັນ ຂອງການປົກປັກຮັກສາມໍລະດົກໂລກ. ສະນັ້ນ ເຄືອຂ່າຍເຂດອະນຸລັກດອນຢູ່ຊາຍຝັ່ງທະເລ ທີ່ປະເທດເບລີເຊີ (Belize) ຈຶ່ງໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ ໃນ 1996 ເພື່ອປົກປັກຮັກສາລະບົບທີ່ມີລັກສະນະພິເສດຂອງທໍາມະຊາດທີ່ປະກອບດ້ວຍດອນ, ຫາດຊາຍ, ປ່າແຄມນໍ້າ (mangroves) ແລະ ໜອງ ຊຶ່ງກວມເອົາເນື້ອທີ່ທັງໝົດ 93.400 ເຮັກຕາ. ນອກນີ້ ຍັງມີສະຖານທີ່ອັນກວ້າງຂວາງຂອງມໍລະດົກໂລກ ຊຶ່ງເປັນບ່ອນອາໃສຂອງລະບົບນິເວດວິທະຍາຂອງປ່າໄມ້ ເຊັ່ນ: ເຂດອະນຸລັກປ່າໄມ້ ຢູ່ສິງຫາຣາຊາທີ່ປະເທດ ສີລັງກາ ແລະ ເຂດຊຸ່ມຊື່ນ ເຊັ່ນ: ອຸທິຍານແຫ່ງຊາດໂດຍານາ ຢູ່ປະເທດແອດສະປາຍ ເປັນຕົ້ນ.

ການສູນເສຍຊີວະນາໆພັນ, ໂດຍສະເພາະ ລະບົບນິເວດວິທະຍາ ທີ່ຖືກໄພຂົ່ມຂູ່, ຕົວຢ່າງ: ດອນ ແລະ ເຂດຊຸ່ມຊື່ນ ບໍ່ສາມາດຕ່າວປົ້ນຄືນຫາສະພາບເກົ່າໄດ້. ຍ້ອນແນວນີ້ ຢູ່ທຸກບ່ອນທີ່ມີໄພຂົ່ມຂູ່ຕໍ່ຊີວະນາໆພັນ ຈຶ່ງມີການຕອບໂຕ້ຢ່າງທັນການ ເພື່ອຫຼຸດຜ່ອນຄວາມເສຍຫາຍ. ຢາກໃຫ້ການປົກປັກຮັກສາສະກຸນສະເພາະໃດໜຶ່ງ ທີ່ຖືກໄພຂົ່ມຂູ່ມີປະສິດທິພາບ, ຕ້ອງມີການປົກປັກຮັກສາໃນໄລຍະຍາວ ລະບົບນິເວດວິທະຍາ, ພືດ ແລະ ສັດ ແລະ ທິວທັດທໍາມະຊາດທັງໝົດໄປພ້ອມກັນ.

## ກິດຈະກຳ ທີ 31 ສຳລັບນັກຮຽນ.

## ໄພຂົ່ມຂູ່ຕໍ່ຄວາມຫຼາກຫຼາຍດ້ານຊີວະວິທະຍາ.

ວັດຖຸປະສົງ: ກຳນົດໄພຂົ່ມຂູ່ ທີ່ອາດຈະເກີດຂຶ້ນກັບຄວາມຫຼາກຫຼາຍດ້ານຊີວະວິທະຍາ.

- ຖາມນັກຮຽນວ່າ ໃນຕົວຢ່າງຕໍ່ໄປນີ້ ສິ່ງໃດເປັນໄພຂົ່ມຂູ່ຕໍ່ຄວາມຫຼາກຫຼາຍ ດ້ານຊີວະວິທະຍາ ໃນທ້ອງຖິ່ນຂອງເຂົາເຈົ້າເຊັ່ນ:
    - ການປ່ຽນແປງຂອງພູມລຳເນົາ ຕົວຢ່າງ: ການຖາງປ່າທຳມະຊາດ ເພື່ອຕອບສະໜອງຄວາມຕ້ອງການຂອງກະສິກຳ;
    - ການນຳເອົາສະກຸນຕ່າງຖິ່ນ ທີ່ກິນພືດ ແລະ ສັດຂອງທ້ອງຖິ່ນ ແລະ ຍາດຊິງເອົາພູມລຳເນົາ;
    - ມົນພາວະຂອງອາກາດ, ນ້ຳ, ດິນ ແລະ ສຽງ;
    - ການຂຸດຄົ້ນບໍ່ແຮ່;
    - ອື່ນໆ...
- ຖາມນັກຮຽນວ່າເຂົາເຈົ້າໄດ້ຮູ້ຈັກການຫຼຸດລົງຂອງນົກ, ສັດ ແລະ ພືດຂອງທ້ອງຖິ່ນຕ່າງໆບໍ່.
- ມີມາດຕະການໃນລະດັບທ້ອງຖິ່ນແນວໃດ ເພື່ອປົກປັກຮັກສາ ແລະ ສະກັດກັ້ນການຫຼຸດລົງຂອງຊີວະນາໆພັນ?
- ວາງແຜນເພື່ອນຳພາການທັດສະນະສຶກສາຢູ່ອຸທິຍານ, ປ່າໄມ້ ຫຼື ເຂດອະນຸລັກນົກ ຂອງທ້ອງຖິ່ນ ເພື່ອສຶກສາກ່ຽວກັບຊີວະນາໆພັນ ຂອງທ້ອງຖິ່ນ ເຊັ່ນ: ການສຳຫຼວດຈຳນວນຂອງພືດ ແລະ ສັດ ຖ້າມີຄວາມສາມາດເຮັດໄດ້.

## ▲ ຄວາມຫຼາກຫຼາຍດ້ານວັດທະນະທຳ ແລະ ຄວາມຫຼາກຫຼາຍດ້ານຊີວະສາດ

ສະຖານທີ່ວັດທະນະທຳ ແລະ ທຳມະຊາດຂອງມໍລະດົກໂລກບົ່ງບອກຄວາມຫຼາກຫຼາຍດ້ານວັດທະນະທຳ ແລະ ຊີວະວິທະຍາຢູ່ເລື້ອຍໆ.

ເພື່ອຮັບປະກັນການເຕີບໃຫຍ່ຂະຫຍາຍຕົວຂອງປະຊາຊົນໃນທ້ອງຖິ່ນ, ຕ້ອງປົກປັກຮັກສາຄວາມຫຼາກຫຼາຍດ້ານວັດທະນະທຳ ແລະ ຄວາມຫຼາກຫຼາຍດ້ານຊີວະວິທະຍາໄປພ້ອມກັນ ; ຄວາມຮູ້ທີ່ເຂົາເຈົ້າໄດ້ຮັບຈາກຊັບພະຍາກອນທີ່ເຂົາເຈົ້າມີ ແລະ ຈາກວິທີການຄຸ້ມຄອງທີ່ເໝາະສົມລວມເຂົ້າກັນເປັນຊັບພະຍາກອນຕົ້ນຕໍສຳລັບມວນມະນຸດທຸກຄົນ.

Jeffrey A. McNelley, IUCN, Nature et Ressources, vol.28, no 3,1992.

## ▲ ການວິວັດທະນາການ ແລະ ການດັບສູນຂອງສະກຸນພືດ ແລະ ສັດ

ການວິວັດທະນາການຂອງສະກຸນພືດ ແລະ ພືດແມ່ນຂະບວນວິວັດປົກກະຕິຂອງທຳມະຊາດ. ສະກຸນໃໝ່ເກີດຂຶ້ນຈາກການປ່ຽນແປງດ້ານພັນທຸກຳທີ່ພາໃຫ້ຊີວະນາໆພັນເພີ່ມຂຶ້ນ.

ໜຶ່ງໃນວັດຖຸປະສົງຂອງການປົກປັກຮັກສາມໍລະດົກໂລກ ແມ່ນປົກປັກຮັກສາສະຖານທີ່ທຳມະຊາດທີ່ຢັ້ງຢືນການວິວັດທະນາການຂອງສະກຸນພືດ ແລະ ສັດ. ມາດຖານ (i) ຂອງມໍລະດົກທຳມະຊາດແມ່ນໜຶ່ງໃນສີ່ມາດຖານເພື່ອຄັດເລືອກສະຖານທີ່ທຳມະຊາດທີ່ຈະຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກຢັ້ງຢືນວ່າ" ເປັນຕົວຢ່າງທີ່ສະແດງໃຫ້ເຫັນຢ່າງເດັ່ນຊັດໄລຍະໃໝ່ໃນປະຫວັດສາດຂອງໂລກ, ພ້ອມທັງເປັນຫຼັກຖານຂອງສິ່ງທີ່ມີຊີວິດ, ຂອງຂະບວນວິວັດດ້ານທໍລະນີສາດຕາມການພັດທະນາໃນຮູບຮ່າງຂອງເປືອກໂລກ ຫຼື ໃນສ່ວນປະກອບດ້ານພູມສັນຖານ ຫຼື ສະລິລະສາດທີ່ມີຄວາມໝາຍສຳຄັນ.

ສະຖານທີ່ ແລະ ຊາກກະດູກເກົ່າແກ່ຢູ່ເມືອງແມດແຊນເລີ (Messel) ທີ່ປະເທດເຢຍລະມັນ ເປັນຕົວຢ່າງຂອງສະຖານທີ່ຊຶ່ງໄດ້ຂຶ້ນທະບຽນໃນບັນຊີລາຍຊື່ຂອງມໍລະດົກໂລກຕາມມາດຖານ (i) ຂອງມໍລະດົກທຳມະຊາດ. ສະຖານທີ່ແຫ່ງນີ້ອຸດົມສົມບູນດ້ວຍຊາກກະດູກເກົ່າແກ່ຂອງຍຸກ ເອໂອແຊນ ( eocene era) ທີ່ມີອາຍຸແຕ່ 36 ລ້ານ ຫາ 57 ລ້ານປີ ກ່ອນ ຄ ສ, ສະນັ້ນສະຖານທີ່ແຫ່ງນີ້ຈຶ່ງເປັນສະຖານທີ່ດຽວຊຶ່ງສະໜອງຂ່າວສານ ແລະ ຂໍ້ມູນກ່ຽວກັບຂັ້ນຕອນທຳອິດໃນການວິວັດທະນາການຂອງສັດລ້ຽງລູກດ້ວຍນົມ.

ສະຖານທີ່ ແລະ ຊາກກະດູກເກົ່າແກ່ຂອງສັດລ້ຽງລູກດ້ວຍນົມຢູ່ເມືອງ ຣິເວີສະເລ(Riversleigh) ແລະ ນາຣາໂຄອອກເຕ (Naracoorte) ທີ່ປະເທດອົດສະຕຣາລີເປັນຫຼັກຖານຢັ້ງຢືນຂັ້ນຕອນຕ່າງໆໃນການວິວັດທະນາການຂອງສັດທີ່ລ້ຽງລູກດ້ວຍນົມ ແລະ ໄດ້ສູນພັນຢູ່ປະເທດອົດສະຕຣາລີ ເຊັ່ນ : ອົ້ນ ( marsupial moles) , ກະຮອກ
( feather-tailed possums) ແລະ ສິງ ( masupial lions) ຍັງໄດ້ຮັບການປົກປັກຮັກສາໄວ້ຢ່າງໜ້າສັນລະເສີນ. ສະຖານທີ່ແຫ່ງນີ້ໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກຕາມມາດຖານ (i)

ແລະ (ii) ຂອງມໍລະດົກທຳມະຊາດ.

ຊາກກະດູກເກົ່າແກ່ຂອງສັດລ້ຽງລູກດ້ວຍນົມ ຢູ່ອົດສະຕຣາລີ ( Riversleigh ແລະ Naracoorte)

**ການຄົ້ນພົບພືດສະກຸນໃໝ່ : ຕົ້ນແປກ ໂວເລີມີ ( The Wollemi pine), ສິ່ງຕົກທອດມາແຕ່ສະໄໝໄດໂນເສົາ.**

ໃນເດືອນທັນວາ 1994 ເພິ່ນໄດ້ຄົ້ນພົບພືດສະກຸນໃໝ່ຢູ່ໃກ້ເມືອງຊິດນີ ທີ່ປະເທດອົດສະຕຣາລີ. ຕົ້ນແປກ ໂວເລີມີ (Wollemi nobilis) ມີຄວາມສູງເຖິງ 35 ແມັດ. ລຳຕົ້ນມີເສັ້ນຜ່າໃຈກາງຍາວເກືອບ 1 ແມັດ. ການຄົ້ນພົບຕົ້ນໄມ້ສະກຸນໃໝ່ຂະໜາດໃຫຍ່ແບບນີ້ມີໜ້ອຍເທື່ອທີ່ສຸດ. ຕົ້ນແປກໂວເລີມີເກີດຢູ່ເຫວຊັນທີ່ຕັ້ງຢູ່ຕາເວັນຕົກສ່ຽງເໜືອຂອງຊິດນີ ແລະ ເປັນບ່ອນກຳບັງອັກຄີໄພທີ່ເກີດຂຶ້ນເປັນປະຈຳຢູ່ພູພຽງໃກ້ໆ. ສະນັ້ນ, ທີ່ຕັ້ງດັ່ງກ່າວຈຶ່ງເຮັດໃຫ້ຕົ້ນແປກມີຊີວິດລອດຈາກອັກຄີໄພ. ການຄົ້ນພົບພືດສະກຸນໃໝ່ເປັນຫຼັກຖານຢັ້ງຢືນຢ່າງເດັ່ນຊັດວ່າສ່ວນໜຶ່ງໃນມໍລະດົກດ້ານຊີວະວິທະຍາຂອງພວກເຮົາຍັງຖືກປົດບັງຢູ່. ແຫຼ່ງເອກະສານ : ບົດລາຍງານດ້ານສະພາບແວດລ້ອມຢູ່ອົດສະຕຣາລີ, 1996, ເຄືອຈັກກະພົບຂອງອົດສະຕຣາລີ.

ຊີວະນາໆພັນຫາຍສາບສູນໂດຍເລີ່ມຈາກສະກຸນພືດ ແລະ ສັດທີ່ບໍ່ສາມາດປັບຕົວເຂົ້າກັບເງື່ອນໄຂໃນສະພາບແວດລ້ອມໃໝ່ເຊັ່ນ : ການປ່ຽນແປງຂອງຝົນ ແລະ ອຸນຫະພູມ, ພົບກັບຄວາມຫຍຸ້ງຍາກໃນການແຜ່ພັນ ແລະ ໃນການສືບຕໍ່ມີຊີວິດ. ໃນທີ່ສຸດສະກຸນພືດ ແລະ ສັດເຫຼົ່ານີ້ກໍຖືກດັບສູນພັນ. ສັນຍາລັກຂອງຊາກກະດູກເກົ່າແກ່ຊີ້ບອກວ່າສະກຸນພືດ ແລະ ສັດໝົດໄປດ້ວຍການຫາຍສາບສູນ. ແຕ່ໃນປັດຈຸບັນນີ້ເພິ່ນຄາດຄະເນວ່າການດັບສູນພັນໄວກ່ວາການກຳເນີດຂອງສະກຸນໃໝ່. ນີ້ແມ່ນການປ່ຽນແປງຂອງໂລກທີ່ບໍ່ສາມາດຈະຕ່າວປີ້ນຄືນໄດ້.

ປັດຈຸບັນ

- 11 % ຂອງນົກທີ່ຍັງເຫຼືອ
- 11 % ຂອງສັດລ້ຽງລູກດ້ວຍນົມ → ຖືກຂົ່ມຂູ່ຈາກການດັບສູນ
- 5 % ຂອງປາ
- 8 % ຂອງສະກຸນພືດ
- ສັດລ້ຽງລູກດ້ວຍນົມຫຼາຍສະນິດ ແລະ ໃນຈຳນວນຫຼາຍຖືກດັບສູນດ້ວຍການ
- 

  ລ່າເນື້ອ
- ການຫາປາ ແລະ ອຸດສະຫະກຳກ່ຽວກັບປາບາແລນທຳລາຍຢ່າງຮ້າຍແຮງປະຊາກອນຂອງສະກຸນພືດ ແລະ ສັດທາງທະເລ.

ສະຖານທີ່ຫຼາຍແຫ່ງໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກເພື່ອຫຼີກເວັ້ນການຫາຍສາບສູນຂອງສະກຸນພືດ ແລະ ສັດທີ່ຖືກໄພຂົ່ມຂູ່.

## ▲ເຂດອະນຸລັກປ່າທຳມະຊາດຢູ່ຮ່ອມພູພຶດສະພາທີ່ປະເທດເຊແຊນ

ເຂດອະນຸລັກປ່າທຳມະຊາດຢູ່ຮ່ອມພູພຶດສະພາຊຶ່ງຕັ້ງຢູ່ໃຈກາງຂອງດອນນ້ອຍປະຣັດສະລິນ (Praslin)

ທີ່ປະເທດເຊແຊນໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກໃນປີ 1983 ຢູ່ເຂດນີ້ມີປ່າພ້າວທີ່ເກືອບຈະເວົ້າໄດ້ວ່າຍັງຢູ່ໃນສະພາບເດີມ. ນະທີ່ນີ້ເພິ່ນສາມາດເກັບກູ້ໝາກພ້າວໜັກ 20 ກິໂລ. ໃນເມື່ອກ່ອນດອນແຫ່ງນີ້ອຸດົມສົມບູນດ້ວຍຕົ້ນພ້າວຫຼາຍຊະນິດ ແຕ່ການຂຸດຄົ້ນໂດຍບໍ່ຈຳກັດຈຳນວນ ໄດ້ເຮັດໃຫ້ປ່າພ້າວທີ່ເປັນຄວາມຮັ່ງມີດ້ານຊີວະນາໆພັນພິເສດຂອງດອນນ້ອຍແຫ່ງນີ້ຫຼຸດລົງ. ດອນ ແລະ ປ່າພ້າວຖືກໄພຂົ່ມຂູ່ຈາກການນຳເຂົ້າສະກຸນພືດຕ່າງປະເທດ, ຈາກການເກັບກ່ຽວໝາກພ້າວບໍ່ເປັນລະດູການ ແລະ ການເກີດອັກຄີໄພ.

**ເຂດອະນຸລັກປ່າທຳມະຊາດຢູ່ຮ່ອມພູພຶດສະພາທີ່ປະເທດເຊແຊນ**

## ▲ ເຂດອະນຸລັກສັດປ່າຢູ່ເມືອງມານັດທີ່ປະເທດອິນເດຍ

ເຂດອະນຸລັກສັດປ່າຢູ່ເມືອງມານັດທີ່ປະເທດອິນເດຍຕັ້ງຢູ່ຕີນພູຫິມາໄລຊຶ່ງກວມເອົາໂນນພູທີ່ປົກຄຸມດ້ວຍປ່າໄມ້, ທົ່ງພຽງ ແລະ ປ່າໄມ້ເຂດຮ້ອນ ແລະ ເປັນບ່ອນອາໄສຂອງສະກຸນສັດທີ່ຖືກໄພຂົ່ມຂູ່. ມານັດທີ່ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກໃນປີ 1985 ແລະ ໃນບັນຊີລາຍຊື່ມໍລະດົກໂລກໃນຂັ້ນອັນຕະລາຍໃນປີ 1992 ມີສະກຸນສັດທີ່ຖືກໄພຂົ່ມຂູ່ເຊັ່ນ : ເສືອ, ໝູປ່າ, ແຮດ ແລະ ຊ້າງອິນເດຍ. ການໄສ່ແຮ້ວແມ່ນໜຶ່ງໃນໄພອັນຕະລາຍສຳລັບສັດເຫຼົ່ານີ້. ຕາມບົດລາຍງານທີ່ພິມເຜີຍແຜ່ໃນປີ 1997, ແຮດຊາວສອງຕົວຖືກຂ້າຕາຍ ແລະ ໃນປັດຈຸບັນຍັງເຫຼືອແຮດແຕ່ສິບ ຫຼື ສິບຫ້າຕົວເທົ່ານັ້ນ.

## ທີວາຣີປູນາມູທີ່ປະເທດນິວຊີແລນ
## (Te Wahipounamu New Zealand)

ອຸທະຍານທີວາຣີປູນາມູຕັ້ງຢູ່ດອນໃນພາກໃຕ້ຂອງນິວຊີແລນ. ເນື້ອທີ່ສ່ວນໃຫຍ່ (ປະມານ 216 ເຮັກຕາ ຫຼື 10 % ຂອງເນື້ອທີ່ປະເທດນິວຊີແລນ) ປະກອບດ້ວຍໜອງ ແລະ ບຶງ, ພູສູງ ແລະ ຜາຊັນທີ່ຕົກໃສ່ມະຫາສະມຸດ. ທີວາປູນາມູມີທິວທັດຂອງຫີນມະຫີທີ່ຕັດແບ່ງດ້ວຍຮ່ອມພູ, ເຫວ, ທະເລຢູ່ຮ່ອມຜາຊັນ (fjord) ແລະ ພື້ນທີ່ຊຶ່ງປົກຫຸ້ມດ້ວຍນ້ຳແຂງ. ການຕັ້ງຢູ່ໂດດດ່ຽວຕາມທຳມະຊາດຂອງນິວຊີແລນເຮັດໃຫ້ພືດ ແລະ ສັດມີລັກສະນະພິເສດສະເພາະຕົວ. ສະກຸນນົກບາງສະກຸນບໍ່ມີປີກ, ຕົ້ນໄມ້ ແລະ ພືດປັບຕົວເຂົ້າກັບລະບົບຝົນໄດ້ຢ່າງເດັ່ນຊັດ ຕົວຢ່າງ ຕົ້ນແປກຫຼວງ ຫຼື ຕົ້ນແປກຂາວ (kahikatea)ທີ່ມີຄວາມສູງເຖິງ 30 ແມັດ. ໂດຍທົ່ວໄປແລ້ວເພິ່ນ ໃສ່ຊື່ປ່າໄມ້ເຫຼົ່ານີ້ວ່າ «ປ່າໄດໂນເສົາ » ຍ້ອນວ່າປ່າໄມ້ຍັງຮັກສາລັກສະນະດັ້ງເດີມໃນສະໄໝໄດໂນເສົາທີ່ມີອາຍຸໄດ້ 65 ລ້ານປີແລ້ວ.

ແນວໃດກໍ່ຕາມ, ຊາວເອີຣົບທີ່ເຂົ້າມາຕັ້ງຖິ່ນຖານໃນດິນແດນແຫ່ງນີ້ໄດ້ເອົາສັດກິນຊີ້ນ ແລະ ສະກຸນສັດອື່ນທີ່ເປັນໄພເຂົ້າມາດ້ວຍ, ສະນັ້ນພືດ ແລະ ສັດຂອງທ້ອງຖິ່ນຈຶ່ງຖືກໄພຂົ່ມຂູ່ ແລະ ໃນບາງກໍລະນີໄດ້ຫາຍສາບສູນໄປໃນທີ່ສຸດ.

ໜຶ່ງໃນຜົນກະທົບຂອງການຕັ້ງຢູ່ໂດດດ່ຽວ ແລະ ການປ່ຽນແປງດ້ານທໍລະນີສາດ ແລະ ພູມອາກາດແມ່ນການວິວັດທະນາການຂອງສະກຸນພືດ ແລະ ສັດຊຶ່ງບໍ່ມີໃນແຫ່ງອື່ນນອກຈາກນິວຊີແລນ. ແນວໃດກໍ່ຕາມ, ສິ່ງເຫຼົ່ານີ້ແມ່ນປາກົດການລວມທີ່ສ້າງເອກະລັກຂອງສະພາບແວດລ້ອມ, ພືກສາຊາດ ແລະ ສັດໃນປະເທດນີ້ ແລະ ເຮັດໃຫ້ສິ່ງເຫຼົ່ານີ້ມີຄວາມສ່ຽງຕໍ່ການດັບສູນຢ່າງໜ້າເສົ້າໃຈ. ຊາວໂປລີເນເຊຍທີ່ມາຕັ້ງຖິ່ນຖານຜູ້ທຳອິດຢູ່ນິວຊີແລນໄດ້ທຳລາຍພື້ນທີ່ ແລະ ສະກຸນພືດ ແລະ ສັດເປັນຈຳນວນຫຼວງຫຼາຍ. ໃນເວລາທີ່ຊາວເອີຣົບເຂົ້າມາເອົານິວຊີແລນເປັນທົວເມືອງຂື້ນ, ປະເທດນີ້ໄດ້ສູນເສຍປ່າໄມ້ 23 % ແລະ ນົກ 30 % ແລ້ວ. ໃນນີ້ເດັ່ນກວ່າໝູ່ແມ່ນການຫາຍສາບສູນຂອງນົກໃຫຍ່ທີ່ບິນບໍ່ໄດ້ (moa) ຈາກການເພີ່ມຂຶ້ນຂອງປະຊາກອນ ແລະ ສັດກິນຊີ້ນ, ໃນປັດຈຸບັນມີສັດກິນຊີ້ນ ແລະ ສັດຂອງນິວຊີແລນ 503 ສະກຸນພວມຕົກຢູ່ໃນອັນຕະລາຍ ແລະ ຖືກໄພຂົ່ມຂູ່, ໃນນີ້ມີ 44 ສະກຸນທີ່ຖືກບັນທຶກໄວ້ໃນບັນຊີຂອງສະກຸນທີ່ສົງໃສວ່າຫາຍສາບສູນ.

ແຫຼ່ງເອກະສານ : ໂຮງຮຽນອຸດົມສຶກສາກະເຣເມົາ, ນິວຊີແລນ.

(Source : Greymouth High School, New Zealand)

## ກິດຈະກຳທີ 32 ສຳລັບນັກຮຽນ

# ການຫຼິ້ນຕ໋ອຍທະວີບເກົ່າແກ່ກົງດົວນາ (Gondwana)

ວັດຖຸປະສົງ : ຮຽນຮູ້ການກຳເນີດຂອງທະວີບ ແລະ ວິທີປົກປັກຮັກສາມໍລະດົກທາງທຳມະຊາດຂອງການຕັ້ງຢູ່ໂດດດ່ຽວ.

- ອະທິບາຍທະວີບກົງດົວນາເກົ່າໃຫ້ນັກຮຽນຟັງ

ຊະນິດຂອງຫີນ ແລະ ຊາກກະດູກເປັນຫຼັກຖານດ້ານວັດຖຸໃຫ້ແກ່ນັກວິທະຍາສາດເພື່ອຢັ້ງຢືນວ່ານິວຊີແລນໃນເມື່ອກ່ອນແມ່ນສ່ວນໜຶ່ງຂອງທະວີບ(Gondwana)ຊຶ່ງປະກອບດ້ວຍອົດສະຕຣາລີ, ອາຟຣິກາໃຕ້, ອາເມລິກາໃຕ້, ອິນເດຍ, ອັງຕາກຕິກ ແລະ ອື່ນໆ. ນິວຊີແລນອາດແມ່ນສາຍຕິດພັນທີ່ສຳຄັນກັບທະວີບກົງດົວນາຊຶ່ງໂລກຍັງຮັກສາໄວ້ຍ້ອນວ່ານິວຊີແລນຕັ້ງຢູ່ໂດດດ່ຽວຫຼັງການແຍກຕົວອອກຈາກອັງຕາກຕິກ ແລະ ອົດສະຕຣາລີແຕ່ 80 ລ້ານປີຜ່ານມາ. ນິວຊີແລນມີຊາຍຝັ່ງ 1600 ກິໂລແມັດແຕ່ມີຜູ້ຄົນມາຕັ້ງຖິ່ນຖານໃນດິນແດນແຫ່ງນີ້ແຕ່ພັນປີຜ່ານມາເທົ່ານັ້ນ. ໃນລ້ານປີຜ່ານມາສັດຂອງນິວຊີແລນຢູ່ໃນສະພາບເກົ່າ. ປັດຈຸບັນນິວຊີແລນຍັງແມ່ນໜຶ່ງໃນສະຖານທີ່ຊຶ່ງຍັງມີລັກສະນະດັ່ງເດີມກ່ວາໝູ່ໃນໂລກ.

- ສັບຊ້ອນນັກຮຽນເປັນຫຼາຍຈຸເພື່ອແຕ້ມທະວີບທີ່ແຍກຕົວອອກຈາກທະວີບກົງດົວນາແລ້ວຕໍ່ເຂົ້າກັນເປັນທະວີບກົງດົວນາເກົ່າ. ໃຫ້ເຂົາເຈົ້າອະທິບາຍການແຍກຕົວຂອງທະວີບກົງດົວນາ ແລະ ການປົກປັກຮັກສາພືດ ແລະ ສັດຢູ່ນິວຊີແລນ.
- ໃຫ້ເຂົາເຈົ້າລົມທຽບທະວີບກົງດົວນາ ແລະ ທະວີບຕ່າງໆໃນປັດຈຸບັນ

ແຫຼ່ງເອກະສານ : (Greymouth High School, New Zealand)

ກິດຈະກຳທີ 33 ສຳລັບນັກຮຽນ

## ຄັດເລືອກສະຖານທີ່ທຳມະຊາດ ແລະ ວັດທະນະທຳຕາມມາດຖານຂອງມໍລະດົກໂລກ

**ວັດຖຸປະສົງ** : ເຂົ້າໃຈມາດຖານການຄັດເລືອກສະຖານທີ່ທຳມະຊາດ ແລະ ວັດທະນະທຳຂອງມໍລະດົກໂລກ

- ໃຫ້ນັກຮຽນຊອກຫາສະຖານທີ່ວັດທະນະທຳໃນທ້ອງຖິ່ນ ຫຼື ໃນປະເທດທີ່ສອດຄ່ອງກັບມາດຖານໃດໜຶ່ງໃນ 6 ມາດຖານ ໃຫ້ເຂົາເຈົ້າຂຽນຄຳຂວັນເພື່ອໂຄສະນາການທ່ອງທ່ຽວ ແລະ ການອະນຸລັກ
- ໃຫ້ນັກຮຽນຊອກສະຖານທີ່ທຳມະຊາດໃນທ້ອງຖິ່ນ ຫຼື ໃນປະເທດທີ່ສອດຄ່ອງກັບມາດຖານໃດໜຶ່ງໃນ 4 ມາດຖານ. ໃຫ້ເຂົາເຈົ້າຂຽນຄຳຂວັນເພື່ອໂຄສະນາການທ່ອງທ່ຽວ ແລະ ການອະນຸລັກ.

## ການພັດທະນາແບບຍືນຍົງຕາມທັດສະນະດ້ານນິເວດວິທະຍາ ແລະ ດ້ານວັດທະນະທຳ

ການພັດທະນາຕ້ອງເປັນສິ່ງຍືນຍົງເພື່ອຢັ້ງຢືນວ່າ ການພັດທະນາຕອບສະໜອງຄວາມຕ້ອງການຂອງຄົນຮຸ່ນປັດຈຸບັນ ໂດຍບໍ່ທຳລາຍຄວາມສາມາດຂອງຄົນຮຸ່ນໃໝ່ໃນການຕອບສະໜອງຄວາມຕ້ອງການຂອງເຂົາເຈົ້າ.

ສະພາບແວດລ້ອມ ແລະ ການພັດທະນາແບບຍືນຍົງ, ອຸຍແນດສະໂກ 1997.

( Environment and Sustainable Development, Paris, UNESCO, 1997)

ຄວາມຈຳເປັນໃນການປົກປັກຮັກສາຄວາມສົມດູນລະຫວ່າງມວນມະນຸດ ແລະ ສະພາບແວດລ້ອມໄດ້ບັນທຶກໄວ້ໃນສົນທິສັນຍາວ່າດ້ວຍມໍລະດົກໂລກ. ນິຍາມຂອງມໍລະດົກໂລກທີ່ມີຄຸນຄ່າດ້ານວັດທະນະທຳ ແລະ ທຳມະຊາດທົບທວນຄືນອີກຄັ້ງໜຶ່ງເພື່ອໃຫ້ວົງຄະນາຍາດສາກົນເຫັນຄວາມສຳຄັນຂອງການຂຶ້ນຕໍ່ກັນລະຫວ່າງຄົນ ແລະ ສະພາບແວດລ້ອມທຳມະຊາດຕໍ່ການພັດທະນາແບບຍືນຍົງຕາມທັດສະນະດ້ານນິເວດວິທະຍາ.

ໃນຂອບເຂດຂອງຂະບວນວິວັດແຫ່ງການພັດທະນາ, ຕ້ອງມີການອະນຸລັກປ່າຕາມທຳມະຊາດຊຶ່ງເປັນບໍ່ເກີດຂອງຄວາມອຸດົມຮັ່ງມີດ້ານຈິດໃຈ ແລະ ເປັນພື້ນຖານໃນການດຳລົງຊີວິດຂອງພວກເຮົາ.

ຈີບຟະເຣ ເອ ມັກ ນີເລ, ອຸຍອີຊີແອນ, ທຳມະຊາດ ແລະ ຊັບພະຍາກອນ, ທົວທີ 28, ສະບັບທີ 3 , 1992.

(Jeffrey A.Mc Nelley, UICN, Nature et Ressources, vol 28, no 3, 1992)

ໄພພິບັດຫຼາຍຢ່າງທີ່ຂົ່ມຂູ່ສະພາບແວດລ້ອມເຊັ່ນ : ການຖາກຖາງປ່າເພື່ອສະໜອງຄວາມຕ້ອງການຂອງກະສິກຳ, ການຫາປາ ແລະ ມົນພາວະອັນເນື່ອງມາຈາກການພັດທະນາຢ່າງບໍ່ຢຸດຢັ້ງ ແລະ ການເພີ່ມຂຶ້ນຂອງປະຊາກອນ, ຕ້ອງຖືກຢັບຢັ້ງເພື່ອອະນຸລັກຄວາມຫຼາກຫຼາຍດ້ານຊີວະວິທະຍາ ແລະ ດ້ານວັດທະນະທຳຂອງໂລກ. ການອະນຸລັກ ແລະ ການນຳໃຊ້ຊັບພະຍາກອນເຊັ່ນກະສິກຳ, ການຂຸດຄົ້ນບໍ່ແຮ່ ແລະ ປ່າໄມ້, ຍາມໃດກໍແມ່ນກິດຈະກຳທີ່ຂັດແຍ່ງກັນ. ຍ້ອນແນວນີ້ຈຶ່ງມີການເກືອດຫ້າມການຂຸດຄົ້ນຊັບພະຍາກອນທຳມະຊາດຢູ່ເຂດອະນຸລັກກຳຄືສະຖານທີ່ມໍລະດົກໂລກ, ແຕ່ໃນບາງກໍລະນີຂອງການຄຸ້ມຄອງທີ່ເຂັ້ມງວດຍັງມີວິທີທີ່ມີປະສິດທິພາບ ເພື່ອເຮັດໃຫ້ການອະນຸລັກມໍລະດົກທຳມະຊາດ ແລະ ວັດທະນະທຳທີ່ຕິດຕາມດ້ວຍເກືອດຫ້າມການນຳໃຊ້ສົມດູນກັບຄວາມອາດສາມາດໃນການຂຸດຄົ້ນຢ່າງສົມເຫດສົມຜົນ ຫຼື ກິດຈະກຳດ້ານເສດຖະກິດເພື່ອເຮັດໃຫ້ປະຊາຊົນໃນທ້ອງຖິ່ນມີຄວາມຮູ້ສຶກກ່ຽວຂ້ອງໂດຍກົງກັບຄວາມພະຍາຍາມໃນການປົກປັກຮັກສາ.

## ▲ ອຸທະຍານແຫ່ງຊາດຝັ່ງທະເລອາກແກ້ງທີ່ປະເທດໂມຣີຕານີ

ອຸທະຍານທິດຕາເວັນຕົກຂອງທະວີບອາຟຣິກາແຫ່ງນີ້ ແມ່ນບ່ອນອາໄສຂອງນົກຫຼາຍລ້ານໂຕ. ຍ້ອນຕັ້ງຢູ່ຕາມລວງຍາວຂອງຊາຍຝັ່ງອັດລັງຕິກ, ອຸທະຍານແຫ່ງນີ້ຈຶ່ງປະກອບດ້ວຍໂນນຊາຍ, ໜອງ ແລະ ບຶງຕາມແຄມທະເລ, ດອນນ້ອຍ ແລະ ນ້ຳຕາມຊາຍຝັ່ງບໍ່ເລິກຊຶ່ງລວມເຂົ້າກັນເປັນທິວທັດທາງບົກ ແລະ ທາງທະເລທີ່ມີຫຼາຍສີສັນພ້ອມດ້ວຍຄວາມຫຼາກຫຼາຍດ້ານຊີວະວິທະຍາ. ອຸທະຍານແຫ່ງນີ້ເປັນບ່ອນອາໄສຂອງນົກທີ່ເຄື່ອນຍ້າຍຕາມລະດູການ, ເຕົ່າທະເລ ແລະ ປາຂ່າຫຼາຍສະກຸນ.

ຝັ່ງທະເລອາກແກ້ງມີຄວາມສຳຄັນຫຼາຍຕໍ່ເສດຖະກິດຂອງທ້ອງຖິ່ນ : ຊາວຫາປາໃນເຈັດໝູ່ບ້ານດຳລົງຊີວິດດ້ວຍຊັບພະຍາກອນທຳມະຊາດອັນອຸດົມຮັ່ງມີ, ສ່ວນອຸທະຍານນັ້ນເປັນພື້ນຖານໃຫ້ແກ່ການທ່ອງທ່ຽວອະນຸລັກ. ການຫາປາແບບພື້ນເມືອງຂອງປະຊາຊົນໃນທ້ອງຖິ່ນ ບໍ່ມີຜົນເສຍຫາຍພໍສັງເກດໄດ້ຕໍ່ຊັບພະຍາກອນທຳມະຊາດຂອງອຸທະຍານ. ແຕ່ຖ້າວ່າຊາວຫາປານຳໃຊ້ເຮືອຈັກເພື່ອເພີ່ມການຈັບປາແລ້ວ, ສິ່ງນີ້ອາດຈະນຳຜົນເສຍຫາຍຢ່າງຫຼີກລ່ຽງບໍ່ໄດ້ຕໍ່ການດຳລົງຊີວິດຂອງນົກໃນເຂດນີ້.

## ກິດຈະກຳທີ 34 ສຳລັບນັກຮຽນ

## ການປົກປັກຮັກສາສະພາບແວດລ້ອມ

**ວັດຖຸປະສົງ** : ເຂົ້າໃຈຄວາມສຳຄັນຂອງການຄຸ້ມຄອງມໍລະດົກໂລກທີ່ເປັນສະຖານທີ່ທຳມະຊາດດີ.

- ອະທິບາຍເພື່ອໃຫ້ນັກຮຽນເຂົ້າໃຈສະພາບຂອງອຸທິຍານແຫ່ງຊາດຝັ່ງທະເລອາກເກັງທີ່ປະເທດໂມຣິຕານີ. ໃຫ້ນັກຮຽນສະແດງລະຄອນສັບຊ້ອນເຂົາເຈົ້າເປັນຈຸຕາມກຸ່ມຜົນປະໂຫຍດເພື່ອກຽມບົດຕາມເນື້ອເລື່ອງລຸ່ມນີ້ :
- ນັກທຸລະກິດຕ້ອງການຂະຫຍາຍອຸດສະຫະກຳການຫາປາ ແລະ ໄດ້ພົບນັກລົງທຶນຕ່າງປະເທດ. ຜູ້ຄຸ້ມຄອງອຸທິຍານ ແລະ ຊ່ຽວຊານດ້ານສະພາບແວດລ້ອມຢູ່ທ້ອງຖິ່ນເຫັນວ່າການຈັບປາເປັນຈຳນວນຫຼວງຫຼາຍ ຈະເຮັດໃຫ້ນົກພົບກັບຄວາມຫຍຸ້ງຍາກໃນການດຳລົງຊີວິດ. ອຳນາດການປົກຄອງກຽມພ້ອມເພື່ອເພີ່ມລາຍໄດ້ໃຫ້ແກ່ປະຊາຊົນໃນທ້ອງຖິ່ນແຕ່ບໍ່ຢາກທຳລາຍຄວາມສົມດູນຂອງລະບົບນິເວດວິທະຍາ. ຄວນຕັດສິນໃຈແນວໃດເພື່ອເຮັດໃຫ້ທຸກຝ່າຍພໍໃຈ ?.

## ກິດຈະກຳທີ 35 ສຳລັບນັກຮຽນ

## ການປົກປັກຮັກສາສະພາບແວດລ້ອມ

**ວັດຖຸປະສົງ** : ເຮັດໃຫ້ນັກຮຽນມີຄວາມສຳນຶກກ່ຽວກັບບັນຫາຂອງການກຳຈັດຂີ້ເຫຍື້ອ.

- ມົນພາວະເກີດຈາກການບໍລິໂພກເກີນສ່ວນ ແລະ ການຟູມເຟືອຍ. ການຂຸດຄົ້ນຊັບພະຍາກອນຢ່າງສົມເຫດສົມຜົນ ແລະ ຍືນຍົງບວກກັບການນຳໃຊ້ຄືນອາດແມ່ນວິທີການແກ້ໄຂບັນຫານີ້. ພວກເຮົາໝົດທຸກຄົນຕ້ອງຄົ້ນຄິດຢ່າງຮີບດ່ວນເພື່ອຊອກຫາວິທີປະກອບສ່ວນເຂົ້າໃນການນຳໃຊ້ຄືນ ແລະ ການນຳໃຊ້ຊັບພະຍາກອນໜ້ອຍ. ເຊີນຊ່ຽວຊານດ້ານສະພາບແວດລ້ອມມາປາຖະກະຖາກ່ຽວກັບຄວາມສຳຄັນຂອງການນຳໃຊ້ຄືນ ແລະ ວິທີປະຕິບັດໃນບັນຫານີ້. ບອກນັກຮຽນຈັດຂະບວນໃນໂຮງຮຽນ ຫຼື ໃນທ້ອງຖິ່ນເພື່ອການນຳໃຊ້ຄືນ : ເຈັ້ຍ, ກະປ໋ອງອາລູມີນຽມ, ເຫຼັກ ແລະ ແກ້ວ. ເກັບ ແລະ ຄັດເລືອກຜະລິດຕະພັນເພື່ອການນຳໃຊ້ຄືນແຕ້ມແຜ່ນໂຄສະນາໃນໂມງຮຽນວິຊາແຕ້ມ. ປະເມີນຜົນຂະບວນເພື່ອການນຳໃຊ້ຄືນ.
- ສົນທະນາບັນຫາຂອງການປົກປັກຮັກສາ ແລະ ຄວາມຍືນຍົງຂອງມໍລະດົກໂລກ.ເປັນຫຍັງການນຳໃຊ້ຄືນ ແລະ ການບໍ່ຟູມເຟືອຍຊັບພະຍາກອນຈຶ່ງມີຄວາມສຳຄັນ ?
- ເຮັດໃຫ້ນັກຮຽນມີຄວາມຮູ້ສຶກກ່ຽວຂ້ອງກັບຄວາມສະອາດຂອງສະພາບແວດລ້ອມ ແລະ ສະຖານທີ່ມໍລະດົກໃນທ້ອງຖິ່ນດ້ວຍການສອນໃຫ້ເຂົາເຈົ້າຮູ້ຈັກເກັບສິ່ງເສດເຫຼືອເພື່ອກຳຈັດ ແລະ ນຳໃຊ້ຄືນຢ່າງສົມເຫດສົມຜົນ.

### ▲ ການສົ່ງເສີມຄວາມຍືນຍົງໃນທ້ອງຖິ່ນ

ການສົ່ງເສີມການອະນຸລັກໃນລະດັບທ້ອງຖິ່ນສາມາດຂະຫຍາຍຕົວໃນຮູບການຍືນຍົງໄດ້ຖ້າວ່າປະຊາຊົນໃນທ້ອງຖິ່ນຫາກສາມາດນຳໃຊ້ສະຖານທີ່ອະນຸລັກ ເຊັ່ນ ສະຖານທີ່ມໍລະດົກໂລກ. ໂຄງການອະນຸລັກ ແລະ ການພັດທະນາໄດ້ຮັບການບັນຈຸເຂົ້າໃນການຄຸ້ມຄອງພື້ນທີ່ຂອງການອະນຸລັກ ຫຼື ພື້ນທີ່ໃກ້ຄຽງຢູ່ເລື້ອຍໆ. ການປະກອບສ່ວນຂອງທ້ອງຖິ່ນເຂົ້າໃນການອອກແບບ ແລະ ການຄຸ້ມຄອງໂຄງການຂອງການອະນຸລັກມີຄວາມສຳຄັນທີ່ສຸດເພື່ອເຮັດໃຫ້ໂຄງການສົ່ງເສີມການຂຸດຄົ້ນຊັບພະຍາກອນຢ່າງສົມເຫດສົມຜົນ.

ບໍ່ວ່າເມືອງ ຫຼື ອຸທິຍານທຳມະຊາດກໍ່ຕາມ, ຖ້າບໍ່ມີຄວາມມຸ້ງຫວັງ ແລະ ການປະກອບສ່ວນຢ່າງຕັ້ງໜ້າຂອງປະຊາຊົນໃນທ້ອງຖິ່ນຊຶ່ງເປັນ " ຜູ້ເຝົ້າຍາມ " ສະຖານທີ່ແລ້ວ, ທຸກຄວາມ

ພະຍາຍາມໃດໆກໍຈະບໍ່ມີຜົນສຳເລັດໃນໄລຍະຍາວ. ຍ້ອນແນວນີ້, ນະໂຍບາຍ ແລະ ກິດຈະກຳຂອງການອະນຸລັກຕ້ອງສອດຄ່ອງ ແລະ ໄດ້ຮັບການປະຕິບັດຮ່ວມກັບການພັດທະນາເສດຖະກິດ ແລະ ສັງຄົມຂອງທ້ອງຖິ່ນ ແລະ ຂອງຊາດ.

ເບນີວັນດຣົດ ສະເຕີ, ຜູ້ອຳນວຍການ, ສູນມໍລະດົກໂລກອຸຍແນດສະໂກ, ວາລະສານມໍລະດົກໂລກ, ສະບັບທີ 3, ພະຈິກ 1996

( Bernd von Droste, *Directeur*, Centre du patrimoine mondial de l'UNESCO, Revue du patrimoine mondial, no 3 novembre 1996)

## ກິດຈະກຳທີ 36 ສຳລັບນັກຮຽນ

## ການທ່ອງທ່ຽວຊົມມໍລະດົກໂລກ

**ວັດຖຸປະສົງ : ສ້າງໂອກາດໃຫ້ນັກຮຽນໄປທັດສະນະສຶກສາເພື່ອເຮັດໃຫ້ເຂົາເຈົ້າມີຫົວຄິດປະດິດສ້າງ ແລະ ມີຈິດສຳນຶກກ່ຽວກັບສະພາບແວດລ້ອມ**

- ນັກຮຽນມັກການເດີນທາງ ແລະ ການຊອກຮູ້, ສະນັ້ນຄວນໃຫ້ເຂົາເຈົ້າມີໂອກາດທ່ອງຊົມມໍລະດົກໂລກ. ປຶກສາຫາລືກັບນັກຮຽນເພື່ອເລືອກສະຖານທີ່ເຊັ່ນ : ມໍລະດົກທຳມະຊາດ, ວັດທະນະທຳ ຫຼື ຕົວເມືອງ ຫຼື ສະຖານທີ່ເພື່ອເບິ່ງສັດ, ການສະແດງຮູບພາບ ຫຼື ວີດີໂອ. ກ່ອນຈະອອກເດີນທາງຕ້ອງກະກຽມເນື້ອໃນການທ່ອງຊົມ.
- ອາດຈະຈັດການໄປທັດສະນະສຶກສາໃນວັນພັກເພື່ອບໍ່ໃຫ້ລົບກວນການຮຽນ. ນຳໃຊ້ການໄປທັດສະນະສຶກສາເພື່ອພັດທະນາການສຳພັດເຊັ່ນ : ກາຍະວິນຍານ, ຈັກຂຸວິນຍານ, ໂສຕະວິນຍານ, ຊິວຫາວິນຍານ ແລະ ອື່ນໆ.
- ອາດຈະຈັດກິດຈະກຳຮ່ວມກັບໂຮງຮຽນອື່ນເຊັ່ນ : ການອອກໄປທັດສະນະສຶກສາຮ່ວມກັນ, ການແລກປ່ຽນການຢ້ຽມຢາມ ແລະ ອື່ນໆ ພໍ່ແມ່ນັກຮຽນ ແລະ ຊຸມຊົນສາມາດເຂົ້າຮ່ວມກິດຈະກຳນຳໂຮງຮຽນ.

## ອານາຄົດຂອງໂລກທີ່ພວກເຮົາອາໄສຢູ່

ຫ້າປີຫຼັງກອງປະຊຸມຣີໂອ, ທິດທາງລວມຂອງວົງຄະນາຍາດສາກົນກ່ຽວກັບການອະນຸລັກໂລກຂອງພວກເຮົາບໍ່ມີຜົນທາງບວກເທົ່າກັບປີ 1992.

ຕ້ອງຮັບຮູ້ວ່າການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ພະລັງງານໃນປະເທດອຸດສະຫະກຳມີປະສິດທິພາບ...ໃນນີ້ມົນພາວະຂອງອາກາດ, ນ້ຳ ແລະ ດິນຫຼຸດຜ່ອນລົງ. ແຕ່ໃນປະເທດພວມພັດທະນາພວກເຮົາເຫັນປະກົດການກົງກັນຂ້າມ : ມົນພາວະນັບມື້ນັບເພີ່ມຂຶ້ນ.

ສິ່ງທີ່ເປັນຜົນທາງບວກແມ່ນເຂົາເຈົ້າເຂົ້າໃຈດີວ່າ ການພັດທະນາເສດຖະກິດ ແລະ ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມແຍກອອກກັນບໍ່ໄດ້.

ມົດສະຕາຟາ ໂຕນບາ, ປະທານຄະນະກຳມາທິການເພື່ອການພັດທະນາແບບຍືນຍົງ, ແຫຼ່ງເອກະສານ ອຸຍແນດສະໂກ, ສະບັບທີ 92, ກໍລະກົດ-ສິງຫາ 1997

(Mostafa Tolba, président de la Commission du développement durable, sources UNESCO, no 92, juillet-août 1997)

ແຕ່ກອງປະຊຸມສຸດຍອດທີ່ຣີໂອ ໃນປີ 1992, ສະຖານທີ່ວັດທະນະທຳ ແລະ ທຳມະຊາດ 149 ແຫ່ງໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກ, ໃນນີ້ຊາວແປດແຫ່ງແມ່ນສະຖານທີ່ທຳມະຊາດ. ສິ່ງເຫຼົ່ານີ້ແມ່ນການປະກອບສ່ວນຢ່າງມີຄວາມໝາຍເຂົ້າໃນການປົກປັກຮັກສາໂລກ ແລະ ສະພາບແວດລ້ອມ.

## ຈຳນວນສະຖານທີ່ໃນບັນຊີລາຍຊື່ມໍລະດົກໂລກ




ເນື່ອງດ້ວຍວ່າສະຖານທີ່ມໍລະດົກໂລກໄດ້ຮັບການຮັບຮູ້ໃນລະດັບສາກົນຍ້ອນ < ຄຸນຄ່າພິເສດລະດັບໂລກ>, ສະນັ້ນສະຖານທີ່ມໍລະດົກໂລກຕ້ອງເປັນຕົວແບບຂອງການຄຸ້ມຄອງທີ່ມີປະສິດທິພາບ.

Bernd von Droste, Directeur, Centre du patrimoine mondial de l'UNESCO, Paris, et Jeffrey A.McNelly, UICN, World Heritage, Twenty Years Later, UICN,1992.

## ມໍລະດົກໂລກ ແລະ ສະພາບແວດລ້ອມຕາມຫຼັກສູດຂອງລາຍວິຊາ :

### ສິລະປະ

ໃຫ້ນັກຮຽນແຕ້ມຮູບສະຖານທີ່ທຳມະຊາດທີ່ເປັນມໍລະດົກແຫ່ງຊາດ ຫຼື ມໍລະດົກໂລກ

### ຊີວະວິທະຍາ

ເຮັດບັນຊີລາຍຊື່ພືດ ແລະ ສັດຂອງສະຖານທີ່ທຳມະຊາດທີ່ເປັນມໍລະດົກແຫ່ງຊາດ ຫຼື ມໍລະດົກໂລກ. ສົມທຽບລາຍຊື່ພືດ ແລະ ສັດໃນທ້ອງຖິ່ນຂອງຕົນອອກທັດສະນະ
ສຶກສາເພື່ອຮຽນຮູ້ພືດ, ສັດ ແລະ ຫີນໃນສະຖານທີ່ໃດໜຶ່ງ

### ພາສາຕ່າງປະເທດ

ສ້າງສາຍພົວພັນກັບໂຮງຮຽນຢູ່ຕ່າງປະເທດ (ອາດຈະພົວພັນຜ່ານໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດ) ແລະ ແລກປ່ຽນຄວາມຄິດຄວາມເຫັນຂອງຕົນກ່ຽວກັບສະພາບແວດລ້ອມຊຶ່ງມີຄວາມຫ່ວງໄຍຄືກັນ ແລະ ອາດຈະເປັນໄປໄດ້ທີ່ຈະກະທົບຕໍ່ການປົກປັກຮັກສາມໍລະດົກໂລກ.

### ປະຫວັດສາດ

ເລືອກສະຖານທີ່ທຳມະຊາດແລ້ວໃຫ້ນັກຮຽນຄົ້ນຄິດຫາຮູບຊົງຂອງພື້ນທີ່ໃນເມື່ອກ່ອນ, ໃນປັດຈຸບັນ ແລະ ມາດຕະການເພື່ອປົກປັກຮັກສາສະຖານທີ່ງອາດຈະຖືກໄພຂົ່ມຂູ່ໃນອະນາຄົດ.

### ພູມສາດ

ເລືອກສະຖານທີ່ທຳມະຊາດເຊັ່ນ ສະຖານທີ່ງເປັນນ້ຳແຂງ ແລະ ສົນທະນາເບິ່ງຜົນຮ້າຍຈະຕາມມາເມື່ອອຸນຫະພູມຂອງນ້ຳທາກອຸ່ນຂຶ້ນ ( ເບິ່ງ Los Glaciares, Argentina, ປະຫວັດຫຍໍ້ ) ເລືອກສະຖານທີ່ທໍລະນີວິທະຍາ ຫຼື ສະຖານທີ່ງມີຊາກແຂງເພື່ອຄົ້ນຄ້ວາ (fossil)

### ພາສາລາວ

ໃຫ້ນັກຮຽນເລືອກສະຖານທີ່ເພື່ອເປີດຂະບວນສິ່ງເສີມການທ່ອງທ່ຽວພັກຜ່ອນມີນພາວະ ແລະ ໂຄສະນາມາດຕະການເພື່ອການປົກປັກຮັກສາສະພາບແວດລ້ອມຂອງສະຖານທີ່

### ຄະນິດສາດ

ເຮັດບັນຊີສະກຸນພືດ ແລະ ສັດທີ່ຖືກໄພຂົ່ມຂູ່ ແລະ ໃກ້ຈະດັບສູນ ຄິດໄລ່ເປີເຊັນ ແລະ ເຮັດສະຖິຕິ.

### ວິທະຍາສາດ

- ໃຫ້ເອົາຕົວຢ່າງນ້ຳຈາກຫ້ວຍ ຫຼື ລຳເຊເພື່ອກວດເບິ່ງສັນຍານເຕືອນໄພຂອງມົນລະພິດ
- ກວດກາເບິ່ງດ້ານໜ້າຂອງອາຄານກ່ຽວກັບມົນລະພິດຂອງອາກາດ
- ສົນທະນາເບິ່ງວ່າເຮັດແນວໃດຄວາມປະພຶດຂອງມວນມະນຸດຈະປ່ຽນໄດ້ເພື່ອປົກປັກຮັກສາສະຖານທີ່ມໍລະດົກ.

# ມໍລະດົກໂລກ ແລະ ວັດທະນະທຳແຫ່ງ ສັນຕິພາບ

« ສົງຄາມເກີດຈາກແນວຄິດ ແລະ ຈິດໃຈຂອງຄົນ, ສະນັ້ນແນວຄິດ ແລະ ຈິດໃຈຂອງຄົນຈຶ່ງເປັນບ່ອນທີ່ຄວນເພີ່ມພູນຄູນສ້າງການປົກປັກຮັກສາສັນຕິພາບ»

ອະລຳພະບົດກົດບັດຂອງອົງການອຸຍແນດສະໂກ

## ວັດຖຸປະສົງ 146

ດ້ານຄວາມຮູ້

ດ້ານທ່າທີ

ດ້ານຄວາມສາມາດ

## ມໍລະດົກໂລກ ແລະ ວັດທະນະທຳແຫ່ງສັນຕິພາບ 147

ກິດຈະກຳທີ 37 ສຳລັບນັກຮຽນ: 148

ນິຍາມຂອງສັນຕິພາບ ແລະ ມໍລະດົກໂລກ

## ສະຖານທີ່ຊຶ່ງເປັນສັນຍາລັກແຫ່ງສັນຕິພາບ 149

ກິດຈະກຳທີ 38 ສຳລັບນັກຮຽນ: 150

ມໍລະດົກໂລກ ແລະ ສັນຕິພາບໃນພາກພື້ນ

## ການປົກປັກຮັກສາມໍລະດົກໂລກໃນຍາມສົງຄາມ 150

ກິດຈະກຳທີ 39 ສຳລັບນັກຮຽນ: 151

ການປະຕິສັງຂອນມໍລະດົກທີ່ໄດ້ຮັບຄວາມເສຍຫາຍຈາກສົງຄາມ

ສົນທິສັນຍາລາໄຮປົກປັກຮັກສາມໍລະດົກວັດທະນະທຳ

ກິດຈະກຳທີ 40 ສຳລັບນັກຮຽນ: 153

ການປົກປັກຮັກສາມໍລະດົກວັດທະນະທຳ ແລະ ທຳມະຊາດໃນຍາມສົງຄາມ

ການປົກປັກຮັກສາມໍລະດົກທຳມະຊາດໃນຍາມສົງຄາມ

## ມໍລະດົກໂລກ ແລະ ສິດທິມະນຸດ 154

ກິດຈະກຳທີ 41 ສຳລັບນັກຮຽນ: 155

ຄວາມອະຄະຕິອັນຕະລາຍຕໍ່ສັນຕິພາບ

ກິດຈະກຳທີ 42 ສຳລັບນັກຮຽນ: 156

ແບບຫຼິ້ນດ້ວຍການຕໍ່ຄຳສັບກ່ຽວກັບມໍລະດົກໂລກ ແລະ ສັນຕິພາບ

ຮ່າງກິດຈະກຳເພື່ອການສຶກສາ: 157
ແບບຫຼິ້ນດ້ວຍຄຳສັບກ່ຽວກັບມໍລະດົກໂລກ ແລະ ສັນຕິພາບ

**ມໍລະດົກໂລກ ແລະ ວັດທະນະທຳແຫ່ງສັນຕິພາບ 158**
**ຕາມຫຼັກສູດຂອງລາຍວິຊາ**

# ວັດຖຸປະສົງ

## ດ້ານຄວາມຮູ້

ຊ່ວຍໃຫ້ນັກຮຽນຮູ້ ແລະ ເຂົ້າໃຈ:

- ສະຖານທີ່ມໍລະດົກໂລກ, ເປັນສັນຍາລັກແຫ່ງສັນຕິພາບ, ສິດທິມະນຸດ ແລະ ປະຊາທິປະໄຕ;
- ຂໍ້ຄວາມໃນຈັນຍາບັນຂອງອຸຍແນດສະໂກ ແລະ ຂອງສົນທິສັນຍາວ່າດ້ວຍມໍລະດົກໂລກ;
- ຄວາມສຳຄັນຂອງການບໍ່ຈຳແນກເຊື້ອຊາດ, ການຜ່ອນຜັນ ແລະ ການເຄົາລົບທຸກປະຊາຊາດ ແລະ ວັດທະນະທຳ.

## ດ້ານທ່າທີ

ຊຸກຍູ້ນັກຮຽນໃຫ້:

- ເຄົາລົບປະຊາຊາດອື່ນພ້ອມດ້ວຍວັດທະນະທຳຂອງເຂົາເຈົ້າ ແລະ ມີຄວາມກະຕືລືລົ້ນໃນການຄົ້ນຄວ້າຫາວິທີແກ້ໄຂຄວາມຂັດແຍ່ງຕະຫຼອດຊີວິດຂອງເຂົາເຈົ້າ;
- ຮ່ວມມືບົນຈິດໃຈຄວາມສາມັກຄີເພື່ອສົ່ງເສີມການອະນຸລັກມໍລະດົກໂລກ.

## ດ້ານຄວາມສາມາດ

ຊ່ວຍນັກຮຽນໃຫ້ພັດທະນາຄວາມສາມາດເພື່ອ:

- ເຮັດວຽກຮ່ວມກັນເປັນໝູ່ຄະນະ
- ແກ້ໄຂຄວາມຂັດແຍ່ງລະຫວ່າງເຂົາເຈົ້າເອງໂດຍສັນຕິວິທີ ແລະ ຊ່ວຍເຫຼືອຜູ້ອື່ນໃຫ້ຮຽນຮູ້ວິທີແກ້ໄຂຄວາມຂັດແຍ່ງໂດຍສັນຕິວິທີຄືກັນ;
- ປະກອບສ່ວນເຂົ້າໃນຊີວິດການເມືອງ ແລະ ສັງຄົມ;
- ປະກອບສ່ວນໃນຄວາມພະຍາຍາມອະນຸລັກມໍລະດົກໂລກຂອງອຸຍແນດສະໂກ.

## ມໍລະດົກໂລກ ແລະ ວັດທະນະທຳແຫ່ງສັນຕິພາບ

ສັນຕິພາບຮຽກຮ້ອງໃຫ້ມີຄວາມສຳພັນໂດຍບໍ່ມີຄວາມຮຸນແຮງບໍ່ສະເພາະແຕ່ລະຫວ່າງປະເທດເທົ່ານັ້ນ, ແຕ່ຍັງລະຫວ່າງບຸກຄົນກັບບຸກຄົນ, ລະຫວ່າງຊັ້ນຄົນໃນສັງຄົມ, ລະຫວ່າງປະເທດກັບຄົນໃນຊາດ ແລະ ລະຫວ່າງຄົນກັບສະພາບແວດລ້ອມອີກດ້ວຍ. ການຮຽນຮູ້ສະຖານທີ່ວັດທະນະທຳ ແລະ ທຳມະຊາດທີ່ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກຊ່ວຍໃຫ້ພວກເຮົາເຂົ້າໃຈສັນຕິພາບໃນຫຼາຍດ້ານຍ້ອນວ່າສິ່ງເຫຼົ່ານີ້ໄດ້ຍົກໃຫ້ພວກເຮົາເຫັນສິ່ງປະດິດສ້າງອັນສວຍສົດງົດງາມໂດຍທຳມະຊາດ ແລະ ໂດຍສີມືຂອງມວນມະນຸດຊຶ່ງໄດ້ສ່ອງແສງເຖິງຄວາມປາດຖະໜາໃຫ້ມີເສລີພາບ, ຄວາມຍຸຕິທຳ, ຄວາມເຂົ້າໃຈ ແລະ ຄວາມເຄົາລົບຊຶ່ງກັນ ແລະ ກັນ, ຄວາມຮັກແພງ ແລະ ມິດຕະພາບຕະຫຼອດການະນານຂອງພວກເຮົາ. ຄຸນຄ່າເຫຼົ່ານີ້ແມ່ນສິດພື້ນຖານຂອງພວກເຮົາ ແລະ ເປັນສ່ວນປະກອບອັນຂາດບໍ່ໄດ້ຂອງສັນຕິພາບ ແລະ ການພັດທະນາຂອງແຕ່ລະຄົນ, ສັງຄົມ ແລະ ຂອງໂລກ.

**ສັນຕິພາບ**

1. (ກ) ເສລີພາບຂອງຊາດໜຶ່ງ, ລັດໜຶ່ງທີ່ບໍ່ມີສົງຄາມ, ຄວາມສຳພັນລະຫວ່າງລັດໃນສະພາບທີ່ບໍ່ມີສົງຄາມ;
   (ຂ) ສັນຍາລະຫວ່າງຄູ່ກໍລະນີເພື່ອຢຸດຕິສົງຄາມ.
2. ຄວາມສຳພັນທີ່ມີຄວາມສະຫງົບລະຫວ່າງພົນລະເມືອງດ້ວຍກັນ; ສະພາບທີ່ປັດສະຈາກສຽງພຶດສະໜັ່ນ ແລະ ສຽງບັນ.

ສົນທິສັນຍາວ່າດ້ວຍການປົກປັກຮັກສາມໍລະດົກດ້ານວັດທະນະທຳ ແລະ ດ້ານທຳມະຊາດ ແລະ ກອງທຶນມໍລະດົກໂລກເປັນພື້ນຖານໃຫ້ແກ່ພຶດຕິກຳລວມຂອງສາກົນເພື່ອປົກປັກຮັກສາສະຖານທີ່ສຳຄັນທີ່ສຸດຂອງໂລກ.

ຕະຫຼອດໄລຍະຂອງປະຫວັດສາດ, ຄວາມບໍ່ເຂົ້າໃຈຊຶ່ງກັນ ແລະ ກັນຂອງປະຊາຊາດໄດ້ເປັນບໍ່ເກີດຂອງຄວາມລະແວງສົງໄສ ແລະ ຄວາມບໍ່ໄວ້ເນື້ອເຊື່ອໃຈຊຶ່ງກັນ ແລະ ກັນລະຫວ່າງປະເທດ, ຈາກນີ້ຄວາມບໍ່ເຫັນດີນຳກັນໄດ້ນຳໄປສູ່ສົງຄາມຢູ່ເລື້ອຍໆ;

ສົງຄາມຂະໜາດໃຫຍ່ ແລະ ຮ້າຍກາດທີ່ຫາກໍ່ສິ້ນສຸດລົງໄດ້ເກີດຂຶ້ນຍ້ອນການປະຕິເສດອຸດົມຄະຕິ ການມີປະຊາທິປະໄຕໃນກຽດສັກສີ, ຄວາມສະເໝີພາບ ແລະ ການເຄົາລົບຊີວິດອິນຊີຂອງຄົນ ແລະ ຍ້ອນເຈດຕະນາໃນການປ່ຽນແທນສິ່ງເຫຼົ່ານີ້ດ້ວຍການສວຍໃຊ້ຄວາມບໍ່ຮູ້ ແລະ ອະຄະຕິ, ທິດສະດີແຫ່ງຄວາມບໍ່ສະເໝີພາບຂອງເຊື້ອຊາດ ແລະ ຂອງຄົນ...;

ກຽດສັກສີຮຽກຮ້ອງໃຫ້ມີການເຜີຍແຜ່ວັດທະນະທຳ ແລະ ການໄດ້ຮັບການສຶກສາຂອງໝົດທຸກຄົນເພື່ອຄວາມຍຸຕິທຳ, ເສລີພາບ ແລະ ສັນຕິພາບ, ໃນນີ້ທຸກປະເທດຕ້ອງສຳເລັດໜ້າທີ່ອັນສັກກະລະບູຊາຂອງຕົນບົນຈິດໃຈແຫ່ງການຊ່ວຍເຫຼືອຊຶ່ງກັນ ແລະ ກັນ;

... ສະນັ້ນ, ສັນຕິພາບຕ້ອງຕັ້ງຢູ່ບົນພື້ນຖານຂອງຄວາມສາມັກຄີໃນດ້ານສະຕິປັນຍາ ແລະ ຈັນຍາບັນຂອງມວນມະນຸດ.

ອະລຳພະບົດໃນກົດບັດຂອງອົງການອຸຍແນດສະໂກ.

ຂະບວນການແຫ່ງວັດທະນະທຳແຫ່ງສັນຕິພາບປຽບເໝືອນແມ່ນ້ຳໃຫຍ່ທີ່ລໍ່ລ້ຽງໂດຍຫຼາຍກະແສ - ຫຼາຍປະເພນີ, ຫຼາຍວັດທະນະທຳ, ຫຼາຍພາສາ, ຫຼາຍສາສະໜາ ແລະ ຫຼາຍແນວທາງການເມືອງ. ຈຸດປະສົງຂອງຂະບວນການແມ່ນເຮັດໃຫ້ໂລກເປັນບ່ອນຢູ່ຮ່ວມກັນລະຫວ່າງວັດທະນະທຳອັນຫຼາກຫຼາຍ ແລະ ອຸດົມຮັ່ງມີຕາມກອບຂອງຄວາມເຂົ້າໃຈວັດທະນະທຳຂອງກັນ ແລະ ກັນ, ຄວາມຜ່ອນຜັນ ແລະ ຄວາມສາມັກຄີ.

ເຣີເນ ກ.ໂຣເມໂຣ, ຜູ້ປະສານງານແຫ່ງຊາດໂຮງຮຽນເພື່ອຄວາມເຂົ້າໃຈອັນດີລະຫວ່າງຊາດ, ຄະນະກຳມາທິການແຫ່ງຊາດຟີລິບປິນເພື່ອອຸຍແນດສະໂກ.

## ກິດຈະກຳທີ 37 ສຳລັບນັກຮຽນ

# ນິຍາມຂອງສັນຕິພາບ ແລະ ມໍລະດົກໂລກ

**ວັດຖຸປະສົງ: ເຂົ້າໃຈດີສາຍກ່ຽວພັນລະຫວ່າງສັນຕິພາບ ແລະ ມໍລະດົກໂລກ.**

- ຂຽນຄຳສັບ "ສັນຕິພາບ" ໃສ່ກະດານ (ຄູສອນພາສາຝຣັ່ງ ຫຼື ອັງກິດສາມາດຂຽນ paix ຫຼື peace). ບອກນັກຮຽນໃຫ້ຊອກຫາຄຳສັບທີ່ກ່ຽວຂ້ອງກັບສັນຕິພາບ. ຂຽນຄຳສັບທີ່ນັກຮຽນສະເໜີໃສ່ກະດານ. ບອກນັກຮຽນຊອກຫາຄຳສັບທີ່ມີຄວາມໝາຍຄືກັນຢູ່ກະດານ ແລະ ຄຳສັບທີ່ກ່ຽວພັນກັບສັນຕິພາບຢູ່ເລື້ອຍໆ.
- ເຮັດບົດຝຶກຫັດແບບນີ້ດ້ວຍສັບ "ມໍລະດົກໂລກ" ( ຄູສອນພາສາຝຣັ່ງ ຫຼື ອັງກິດສາມາດຂຽນ patrimoine mondial ຫຼື world heritage ).

# ສະຖານທີ່ຊຶ່ງເປັນສັນຍາລັກຂອງສັນຕິພາບ

ສະຖານທີ່ບາງແຫ່ງຂອງມໍລະດົກໂລກສະທ້ອນຄຸນຄ່າພື້ນຖານຂອງສັນຕິພາບ ແລະ ສິດທິມະນຸດ ແລະ ຮຽກຮ້ອງໃຫ້ມີການຮ່ວມມືສາກົນຢູ່ເລື້ອຍໆເພື່ອອະນຸລັກຄຸນຄ່າຂອງຕົນ. ບາງແຫ່ງຂອງສະຖານທີ່ເຫຼົ່ານີ້ເປັນສິ່ງສຳຄັນພິເສດເພື່ອບົ່ງບອກບັນຫານີ້. ອຸທະຍານສາກົນແຫ່ງສັນຕິພາບ ກະລາເຊີເຢ ວາເທີເຕີນ ( le Parc international de la paix Glacier waterton ) ຊຶ່ງຕັ້ງຢູ່ຊາຍແດນກາງຂອງການາດາ ແລະ ສະຫະລັດອາເມລິກາມີຄຳສັບສັນຕິພາບໃນຊື່ຂອງຕົນ. ອຸທະຍານແຫ່ງນີ້ໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກໃນປີ 1995 ແລະ ມີພື້ນທີ່ກວມເອົາອຸທະຍານແຫ່ງຊາດ ວາເທີເຕີນ ເລກ ( le Parc national de waterton Lakes) ໃນລັດອານແບກຕາ (Alberta)ຂອງການາດາ ແລະ ອຸທະຍານກະລາຊີເຢ ( Glacier) ໃນລັດມົນຕານາ (Montana) ຢູ່ສະຫະລັດອາເມລິກາ. ສະຖານທີ່ສອງແຫ່ງລວມເຂົ້າກັນເປັນອຸທະຍານສາກົນແຫ່ງສັນຕິພາບບ່ອນທຳອິດຂອງໂລກ ແລະມີທິວທັດທຳມະຊາດອັນສວຍສົດງົດງາມພິເສດ ແລະ ພິເສດແມ່ນມີຄວາມອຸດົມສົມບູນດ້ວຍສະກຸນພືດ ແລະ ສັດລວມທັງລັກສະນະຂອງສາຍພູອານເປ ແລະ ທົ່ງຫຍ້າ.

ອະນຸສອນສະຖານແຫ່ງສັນຕິພາບທີ່ເມືອງ ຮີໂຣຊິມາ (Dôme de Genbaku) ທີ່ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກໃນປີ 1996 ເປັນສັນຍາລັກອັນເຂັ້ມແຂງ ແລະ ເດັດດ່ຽວໃນການປົກປັກຮັກສາສັນຕິພາບຂອງໂລກຫຼາຍກ່ວາເຄິ່ງສະຕະວັດຜ່ານມາ, ຫຼັງການລະເບີດຂອງອາວຸດມະຫາປະໄລທີ່ມວນມະນຸດບໍ່ໄດ້ສ້າງຂຶ້ນມາຈັກເທື່ອ.

ຂໍ້ຄວາມສຳຄັນຕົ້ນຕໍໃນຄວາມໝາຍທີ່ສື່ໂດຍຫຼັງຄາກົມ (Dôme) ມີດັ່ງນີ້: ໃນດ້ານໜຶ່ງຊາກທີ່ເວົ້າບໍ່ໄດ້ຂອງເຮືອນທີ່ຖືກທຳລາຍເປັນສັນຍາລັກຂອງຄວາມສຸດຍອດໃນການທຳລາຍມະນຸດແຕ່ໃນດ້ານໜຶ່ງອີກສິ່ງນີ້ເປັນສານທີ່ສື່ຄວາມຫວັງຕໍ່ການປົກປັກຮັກສາສັນຕິພາບຂອງໂລກໃຫ້ໝັ້ນຄົງຕະຫຼອດການະນານຫຼັງການແຕກຂອງລະເບີດປະລະມະນູໃນເດືອນສິງຫາ 1945. ໃນເວລາລະເບີດລູກທຳອິດແຕກຢູ່ເທິງເມືອງຮີໂຣຊິມາໃນວັນທີ 6 ສິງຫາ 1945 ແລະ ເຮັດໃຫ້ມີຄົນເສຍຊີວິດ 140,000 ຄົນ, ອາຄານທີ່ຢູ່ໃກ້ຈຸດໃຈກາງຂອງແຮງລະເບີດຖືກທຳລາຍ, ອາຄານນີ້ເປັນອາຄານດຽວທີ່ຍັງເຫຼືອຢູ່ແຕ່ຢູ່ໃນສະພາບເໝືອນໂຄງກະດູກ. ໃນເວລາສ້າງເມືອງຄືນໃໝ່, ອາຄານນີ້ໄດ້ຮັບການອະນຸລັກໃຫ້ຢູ່ໃນສະພາບຄົງຕົວ ແລະ ໄດ້ຮັບການຕັ້ງຊື່ເປັນ "ຫຼັງຄາກົມເຈນບາກູ" (Dôme de Genbaku) ຫຼື " ຫຼັງຄາກົມລະເບີດປະລະມະນູ " (Dôme de la bombe atomatique). ໃນປີ 1996 ສະພາຂອງເມືອງຮີໂຣຊິມາໄດ້ມີມະຕິໃຫ້ອະນຸລັກອາຄານນີ້ໄວ້ຕະຫຼອດການະນານ. ອຸທະຍານຂອງອະນຸສອນສະຖານແຫ່ງສັນຕິພາບທີ່ມີຫຼັງຄາກົມເປັນສ່ວນປະກອບສຳຄັນຕົ້ນຕໍໄດ້ຮັບການບູລະນະແຕ່ 1950 ຫາ 1964. ແຕ່ 1952 ເປັນຕົ້ນມາ, ໃນວັນທີ 6 ສິງຫາຂອງແຕ່ລະປີເພິ່ນຈັດພິທີໃນສະຖານແຫ່ງນີ້ເພື່ອສັກກະລະບູຊາອະນຸສອນສະຖານແຫ່ງສັນຕິພາບທີ່ເມືອງຮີໂຣຊິມາ.

Conseil international des monuments et des sites(ICOMOS

ກິດຈະກຳທີ 38 ສຳລັບນັກຮຽນ

## ມໍລະດົກໂລກ ແລະ ສັນຕິພາບໃນພາກພື້ນຂອງຕົນ

ວັດຖຸປະສົງ: ຄົ້ນຄິດເຖິງສະຖານທີ່ມໍລະດົກໂລກທີ່ເປັນສັນຍາລັກຂອງສັນຕິພາບ.

- ບອກນັກຮຽນໃຫ້ຊອກສະຖານທີ່ວັດທະນະທຳ ແລະ ທຳມະຊາດຊຶ່ງເປັນບ່ອນເຊັນສັນຍາສັນຕິພາບ ຫຼື ມີຄຸນຄ່າດ້ານສັນຍາລັກຂອງເຫດການປະຫວັດສາດເຊັ່ນ: ປັ້ນຮົບໃຫຍ່, ຖະໜົນການທີ່ສຳຄັນ ແລະ ອື່ນໆ.
- ບອກນັກຮຽນໃຫ້ຊອກເອກະສານກ່ຽວກັບສະຖານທີ່ເພື່ອເປັນບ່ອນອີງໃຫ້ການຈັດກິດຈະກຳເພື່ອເສີມສ້າງຫົວຄິດປະດິດສ້າງເຊັ່ນ: ຂຽນບົດ, ແຕ້ມຮູບເພື່ອສື່ສານຂໍ້ມູນຂ່າວສານຂອງສະຖານທີ່.

## ການປົກປັກຮັກສາມໍລະດົກໂລກໃນຍາມສົງຄາມ

ເມື່ອມີການສູ້ຮົບດ້ວຍອາວຸດ, ສະຖານທີ່ທຳມະຊາດ ແລະ ວັດທະນະທຳອາດໄດ້ຮັບຄວາມເສຍຫາຍ. ບາງຄັ້ງສະຖານທີ່ວັດທະນະທຳເປັນເປົ້າໝາຍຂອງການບຸກໂຈມຕີເພື່ອທຳລາຍສັນຍາລັກອັນລ້ຳຄ່າໃນເອກະລັກສະເພາະຂອງຊົນຊາດໃດໜຶ່ງ. ສະຖານທີ່ທຳມະຊາດຊຶ່ງລວມມີສັດ ແລະ ພືດອາດໄດ້ຮັບຄວາມເສຍຫາຍຈາກຫຼາຍປັດໄຈເຊັ່ນ: ການຖິ້ມລະເບີດ, ລົດທະຫານແລ່ນຜ່ານເຂດອະນຸລັກທຳມະຊາດ, ອັກຄີໄພ, ກາງວາງກັບລະເບີດ ແລະ ການເຄື່ອນຍ້າຍເປັນຂະບວນໃຫຍ່ຂອງພົນລະເມືອງ. ໃນຍາມສົງຄາມສະຖານທີ່ວັດທະນະທຳ ແລະ ທຳມະຊາດທີ່ເປັນແຫຼ່ງລາຍຮັບຂອງການທ່ອງທ່ຽວ ກາຍເປັນເປົ້າໝາຍການທຳລາຍໂດຍເຈດຕະນາຢູ່ເລື້ອຍໆ. ໃນທ່າມກາງຄວາມທຸກທໍລະມານທີ່ສົງຄາມສ້າງຂຶ້ນນັ້ນ, ການປົກປັກຮັກສາສະຖານທີ່ວັດທະນະທຳ ແລະ ທຳມະຊາດກາຍເປັນສິ່ງຟູມເຟືອຍທີ່ບໍ່ສາມາດແຕະຕ້ອງໄດ້. ເຖິງຈະມີຄວາມຮູ້ສຶກແບບນີ້ໃນເວລາເຫັນຄັ້ງທຳອິດກໍຕາມແຕ່ການປະຕິສັງຂອນມໍລະດົກວັດທະນະທຳ ແລະ ທຳມະຊາດມີຄວາມສຳຄັນແບບເປັນຕາຍ ໂດຍສະເພາະຖ້າວ່າສະຖານທີ່ຖືກທຳລາຍແມ່ນສິ່ງປຸກສ້າງທີ່ເປັນຫໍສະໝຸດແຫ່ງຊາດ, ໂບດ, ພິພິດທະພັນ, ມະຫາວິທະຍາໄລ ແລະ ຂົວທີ່ມີອາຍຸຫຼາຍກວ່າຮ້ອຍປີ.

ໜຶ່ງໃນຫຼາຍຕົວຢ່າງອັນເດັ່ນຊັດແມ່ນການປະຕິສັງຂອນສູນປະຫວັດ ຢູ່ເມືອງວາກໂຊວີຂອງປະເທດໂປໂລຍຊຶ່ງໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກໃນປີ 1980. ໃນເດືອນສິງຫາ 1994, ໃນສະໄໝສົງຄາມໂລກຄັ້ງທີ 2 , 85 % ຂອງສູນປະຫວັດສາດທີ່ໄດ້ຮັບການກໍ່ສ້າງໃນສະຕະວັດທີ 18 ຖືກທຳລາຍໂດຍກອງກຳລັງຂອງນາຊີ. ຫຼັງສົງຄາມປະຊາຊົນໂປໂລຍໄດ້ໃຊ້ເວລາຫ້າ

ປີເພື່ອເປີດຂະບວນການບູລະນະໂບດ, ພະລາດຊະວັງ ແລະ ເດີ່ນຕະຫຼາດໃຫ້ຢູ່ໃນສະພາບເດີມ. ນີ້ແມ່ນຕົວຢ່າງພິເສດຂອງການບູລະນະຄືນສະຖານທີ່ໃນໄລຍະປະຫວັດສາດແຕ່ ສະຕະວັດທີ 18 ຫາສະຕະວັດທີ 20 ແລະ ເປັນການສະແດງອອກຂອງຄວາມທະນົງໃຈ ແລະ ລັກສະນະຊາດຂອງໂປໂລຍ.

## ຄຳຮຽກຮ້ອງຂອງຊາວໜຸ່ມເມືອງດູບຣົບນິກ

ຕ້ອງເພີ່ມທະວີຄວາມພະຍາຍາມ ແລະ ພຶດຕິກຳແກ້ໄຂບັນຫາໂດຍສັນຕິວິທີຍ້ອນວ່າສົງຄາມທຳລາຍມໍລະດົກຂອງພວກເຮົາ

**ກິດຈະກຳທີ 39 ສຳລັບນັກຮຽນ**

## ການປະຕິສັງຂອນມໍລະດົກທີ່ຖືກທຳລາຍຈາກສົງຄາມ

**ວັດຖຸປະສົງ: ຊອກຮູ້ການປະຕິສັງຂອນມໍລະດົກໂລກ**

- ບອກນັກຮຽນໃຫ້ສອບຖາມພໍ່ເຖົ້າ-ແມ່ເຖົ້າ, ປູ່- ຍ່າ ແລະ ຜູ້ໃກ້ຄຽງເພື່ອຊອກຮູ້: ສົງຄາມທີ່ພວກເພິ່ນຮູ້ຫຼືເຄີຍຜ່ານມາ ແລະ ສະຖານທີ່ວັດທະນະທຳ ແລະ ສະຖານທີ່ທຳມະຊາດທີ່ຖືກທຳລາຍ.
- ການປະຕິສັງຂອນສະຖານທີ່ເຫຼົ່ານັ້ນ ແລະ ຄວາມຮູ້ສຶກຂອງເພິ່ນ.
    - ບອກນັກຮຽນໃຫ້ເຮັດບົດບັນທຶກເພື່ອການສົນທະນາໃນຫ້ອງຮຽນ

## ▲ ສົນທິສັນຍາລາໄຮ (La Haye) ປົກປ້ອງມໍລະດົກວັດທະນະທຳ

ຍ້ອນໄດ້ເຫັນການທຳລາຍມໍລະດົກວັດທະນະທຳຂອງພວກເຮົາຢ່າງຫຼວງຫຼາຍໃນສົງຄາມໂລກຄັ້ງທີ 2 ວົງຄະນາຍາດສາກົນຈຶ່ງໄດ້ຮັບຮອງເອົາໃນປີ 1954 ທີ່ເມືອງ ລາໄຮ ປະເທດ ໂຮນລັງ ສົນທິສັນຍາວ່າດ້ວຍການປົກປັກຮັກສາຊັບສົມບັດດ້ານວັດທະນະທຳໃນຍາມສົງຄາມ. ສົນທິສັນຍາລາໄຮມີຈຸດປະສົງເພື່ອປົກປັກຮັກສາ ແລະ ຮັບປະກັນການເຄົາລົບຕໍ່ຊັບສົມບັດທີ່ເປັນສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ແລະ ມີຄວາມສຳຄັນຢ່າງໃຫຍ່ຫຼວງຕໍ່ມໍລະດົກວັດທະນະທຳຂອງປະຊາຊາດໂດຍບໍ່ຈຳແນກທີ່ມາ ຫຼື ຜູ້ເປັນເຈົ້າຂອງ.

ອະລຳພະບົດສົນທິສັນຍາລາໄຮ(1954)

ປະເທດພາຄີສົນທິສັນຍາ,

ເຫັນວ່າຊັບສົມບັດດ້ານວັດທະນະທຳໄດ້ຮັບຄວາມເສຍຫາຍໃນສົງຄາມທີ່ຜ່ານມາ ແລະ ຍິ່ງຖືກຂົ່ມຂູ່ຈາກການທຳລາຍຢູ່ເລື້ອຍໆຍ້ອນວ່າເຕັກນິກຂອງສົງຄາມໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ;

ຮັບຮູ້ວ່າການລົບລູ່ຕໍ່ຊັບສົມບັດດ້ານວັດທະນະທຳທີ່ເປັນກຳມະສິດຂອງປະຊາຊາດໃດກໍຕາມເປັນການລົບລູ່ຕໍ່ມໍລະດົກວັດທະນະທຳຂອງມວນມະນຸດ ຍ້ອນວ່າທຸກປະຊາຊາດມີສ່ວນຮ່ວມໃນວັດທະນະທຳຂອງໂລກ;

ພິຈາລະນາເຫັນວ່າການອະນຸລັກມໍລະດົກວັດທະນະທຳມີຄວາມສຳຄັນຢ່າງໃຫຍ່ຫຼວງຕໍ່ທຸກປະຊາຊາດຂອງໂລກ ແລະ ຕ້ອງຮັບປະກັນວ່າມໍລະດົກເຫຼົ່ານີ້ຈະໄດ້ຮັບການປົກປັກຮັກສາຈາກສາກົນ;

ພິຈາລະນາເຫັນວ່າເພື່ອໃຫ້ມີປະສິດທິພາບໃນການປົກປັກຮັກສາຊັບສົມບັດເຫຼົ່ານີ້ໃນຍາມສັນຕິພາບຕ້ອງໄດ້ຮັບການຈັດຕັ້ງປະຕິບັດດ້ວຍມາດຕະການລະດັບຊາດ ແລະ ລະດັບສາກົນ;

ມີມະຕິເຮັດໃຫ້ທຸກຄວາມສາມາດເພື່ອປົກປັກຮັກສາມໍລະດົກວັດທະນະທຳສະນັ້ນຈຶ່ງເຫັນດີປະຕິບັດຕາມຂໍ້ຕົກລົງດັ່ງຕໍ່ໄປນີ້...

ປະເທດທີ່ເປັນພາຄີຂອງສົນທິສັນຍາລາໄຮໄດ້ຮັບການມອບໝາຍໃຫ້ປະຕິບັດທຸກມາດຕະການທີ່ຈຳເປັນເພື່ອປົກປັກຮັກສາຊັບສົມບັດດ້ານວັດທະນະທຳທີ່ຕັ້ງຢູ່ໃນເຂດແດນຂອງຕົນ. ເວົ້າລວມແຕ່ລະປະເທດໄດ້ຮັບການມອບໝາຍໃຫ້:

- ຫຼຸດຜ່ອນຜົນກະທົບຂອງສົງຄາມຕໍ່ມໍລະດົກວັດທະນະທຳ ແລະ ວາງມາດຕະການການປ້ອງກັນເພື່ອຮັບປະກັນການປົກປັກຮັກສາບໍ່ສະເພາະແຕ່ໃນຍາມສົງຄາມແຕ່ໃນຍາມສັນຕິພາບອີກດ້ວຍ;
- ສ້າງກົນໄກຂອງການປົກປັກຮັກສາ; ຕິດເຄື່ອງໝາຍເພື່ອຊີ້ບອກວ່າສິ່ງປຸກສ້າງ ແລະ ອະນຸສອນສະຖານນັ້ນຕ້ອງໄດ້ຮັບການປົກປັກຮັກສາພິເສດ;
- ສ້າງໜ່ວຍງານພິເສດໃນກຳລັງປະກອບອາວຸດເພື່ອປະຕິບັດໜ້າທີ່ກຳກັບດູແລການປົກປັກຮັກສາມໍລະດົກວັດທະນະທຳ.

ສົນທິສັນຍາລາໄຮໄດ້ຮັບການປະຕິບັດໃນສະໄໝສົງຄາມ 1967 ແລະ ໃນພໍ່ໆນີ້ແມ່ນໃນສະໄໝສົງຄາມທີ່ລ້າງຜານວັດທະນະທຳສະຖານຢູ່ ບົດສະນີເຮີເຊໂກວີນ ( Bosnie-Herzégovine), ກຳພູເຈຍ, ໂກອາຊີ (Croatie) ໂດຍສະເພາະເມືອງເກົ່າແກ່ ດູບະໂຣນິກ ແລະ ຢູ່ ອີຣັກ.

## ກິດຈະກຳທີ 40 ສຳລັບນັກຮຽນ

## ການປົກປັກຮັກສາມໍລະດົກວັດທະນະທຳ ແລະ ທຳມະຊາດໃນຍາມສົງຄາມ

**ວັດຖຸປະສົງ: ເຮັດໃຫ້ຮູ້ຈັກສົນທິສັນຍາລາໄຮ ແລະ ຊີ້ແຈງຄວາມຈຳເປັນໃນການປົກປັກຮັກສາສະພາບແວດລ້ອມໃນຍາມສົງຄາມ.**

- ສົນທະນາສົນທິສັນຍາລາໄຮກັບນັກຮຽນຕາມຈຸດປະສົງດັ່ງນີ້:
- ສະພາບແວດລ້ອມດ້ານປະຫວັດສາດ (ຫຼັງສົງຄາມ) ຂອງການຮ່າງສົນທິສັນຍາລາໄຮ;
- ວັດຖຸປະສົງຂອງສົນທິສັນຍາລາໄຮ ຫຼື ການປົກປັກຮັກສາມໍລະດົກໃນຍາມປົກກະຕິ ແລະ ໃນຍາມສົງຄາມ;
- ສົມທຽບສົນທິສັນຍາລາໄຮ ແລະ ສົນທິສັນຍາວ່າດ້ວຍມໍລະດົກໂລກ ແລະ ສົນທິສັນຍາສອງສະບັບມີສິ່ງເພີ່ມເຕີມກັນແນວໃດ?
- ສົງຄາມເຮັດໃຫ້ສະພາບແວດລ້ອມທຳມະຊາດເສຍຫາຍແນວໃດ?

- ຊີ້ແຈງວິທີທີ່ສົງຄາມທຳລາຍສະພາບແວດລ້ອມທຳມະຊາດ.

### ▲ ການປົກປັກຮັກສາມໍລະດົກທຳມະຊາດໃນຍາມສົງຄາມ

ສົງຄາມຄັ້ງຫຼັງສຸດທີ່ເປັນຕົ້ນກຳເນີດຂອງການທຳລາຍລະບົບນິເວດວິທະຍາບາງແຫ່ງທີ່ສຳຄັນຂອງໂລກຊີ້ໃຫ້ເຫັນວ່າມັນມີຄວາມຫຍຸ້ງຍາກໃນການປົກປັກຮັກສາມໍລະດົກທຳມະຊາດໃນເງື່ອນໄຂທີ່ມີການເຄື່ອນທີ່ດ້ວຍພາຫະນະຂອງກອງທັບ, ການເຜົາຜານປ່າໄມ້ດ້ວຍກຳລັງໄຟ ແລະ ການເຄື່ອນທີ່ຂອງກຳລັງພົນ. ຄວາມເສຍຫາຍຂອງມໍລະດົກໂລກຢູ່ກາຮູຊີ-ບີເອກາ (Kahuzi-Biega) ຢູ່ປະເທດຊາເອຍໃນເມື່ອກ່ອນ ແລະ ຢູ່ສາທາລະນະລັດ ປະທິປະໄຕກົງໂກໃນປັດຈຸບັນເປັນຕົວຢ່າງທີ່ຊີ້ບອກສະພາບດັ່ງກ່າວ. ໃນສະໄໝສົງຄາມທີ່ຫາກໍສິ້ນສຸດຢູ່ຣູອັນດາ, ຄ້າຍຂອງຊາວອົບພະຍົບ 50.000 ຄົນ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ໃກ້ກັບອຸທະຍານແຫ່ງຊາດຊຶ່ງເປັນບ່ອນທີ່ຝູງລີງທີ່ຄ້າຍຄືກັນກັບຄົນ (les gorilles de montagne)ແລະ ໃກ້ຈະສູນພັນອາໄສຢູ່ຕາມການສັງເກດຂອງນັກວິທະຍາສາດ ຊອກເຊີ ໂຊນເລີ (George Schaller)ສາສະດາຈານ ກະຣະຊີເມັກ (Grzzimek) ທີ່ຖືກຫາຍສາບສູນ ແລະ ໄດແອນ ຟົດເຊ (Diane Fossey) ຄ້າຍອົບພະຍົບແຫ່ງນີ້

ໄດ້ຖືກຍົກຍ້າຍໄປຕັ້ງຢູ່ສະຖານທີ່ເໝາະສົມກ່ວາໂດຍໄດ້ຮັບການສະໜັບສະໜູນຈາກອົງການ ອຸຍແນດສະໂກ, ອົງການຂ້າຫຼວງໃຫຍ່ ອົງການສະຫະປະຊາຊາດເພື່ອຊາວອົບພະຍົບ, ອຳນາດການປົກຄອງໃນປະເທດ, ອົງການຈີທີແຊດ (GTZ) ຊຶ່ງແມ່ນອົງກອນເພື່ອການພັດທະນາຂອງເຢຍລະມັນ ແລະ ດ້ວຍການຊ່ວຍເຫຼືອດ້ານການເງິນຈາກກອງທຶນມໍລະດົກໂລກ.

## ມໍລະດົກໂລກ ແລະ ສິດທິມະນຸດ

ການຕໍ່ສູ້ຂອງມວນມະນຸດເພື່ອການຮັບຮູ້ ແລະ ການເຄົາລົບສິດທິມະນຸດມີພຶດຕິກຳເພື່ອສິ່ງເສີມເສລີພາບ, ສັນຕິພາບ ແລະ ການພັດທະນາຕິດຕາມຢູ່ເລື້ອຍໆ. ຕັ້ງແຕ່ເລີ່ມຕົ້ນການຕໍ່ສູ້ດັ່ງກ່າວຕິດພັນກັບຫຼັກການຂອງປະຊາທິປະໄຕ ແລະ ການປະກອບສ່ວນຂອງພົນລະເມືອງໃນລັດຖະບານ.

ສະຖານທີ່ຂອງມໍລະດົກໂລກຫຼາຍແຫ່ງເປັນສັນຍາລັກຂອງອຸດົມຄະຕິເຫຼົ່ານີ້ເຖິງວ່າມີທາງສຽງອື່ນໃນບາງຄັ້ງຄາວ ແລະ ເປັນສິ່ງຮັບໄດ້ຍາກກໍຕາມ. ສິ່ງຕໍ່ໄປນີ້ເປັນຕົວຢ່າງຂອງບັນຫານີ້.

ໃນສະຕະວັດທີ 15 ຫາ ສະຕະວັດທີ 19 ດອນກໍເຣ (Gorée) ຊຶ່ງຕັ້ງຢູ່ຊາຍຝັ່ງຂອງປະເທດເຊເນການ ແລະ ຢູ່ຕໍ່ໜ້ານະຄອນຫຼວງດາກາ (Dakar) ເປັນສູນການຄ້າຂ້າທາດຂອງຊາຍຝັ່ງທະເລໃນທະວີບອາຟຣິກາ. ຈາກການຄອບຄອງຂອງປອກຕຸຍການ, ໂຮນລັງ, ອັງກິດ ແລະ ຝຣັ່ງຕາມລຳດັບນັ້ນ ເຮືອນຂອງພໍ່ຄ້າຂ້າທາດມີເອກະລັກດ້ານສະຖາປັດຕິຍະກຳທີ່ໂອ່ອ່າລະໂຫຖານແຕກຕ່າງກັນກັບສະຖານທີ່ຢູ່ອັນເສົ້າໝອງຂອງຂ້າທາດ. ປັດຈຸບັນສະຖານທີ່ແຫ່ງນີ້ຍັງເປັນສັນຍາລັກຂອງການກົດຂີ່ຂູດຮີດ ແລະ ເປັນປູສະນີຍະຖານເພື່ອຄວາມປອງດອງຂອງກຸ່ມຊົນຕ່າງໆ.

ຫຼັກຖານໜຶ່ງອີກທີ່ມີຄວາມສະເທືອນຂວັນຂອງການມິ່ນປະໝາດສິດທິມະນຸດ ແລະ ຄວາມທຸກທໍລະມານອັນແສນສາຫັດຂອງຜູ້ບໍລິສຸດຫຼາຍລ້ານຄົນແມ່ນຄ້າຍທໍລະມານອົດສະວິດ (le camp de concentration d'Auschwitz) ຢູ່ໂປໂລຍຊຶ່ງໄດ້ຂຶ້ນທະບຽນບັນຊີລາຍຊື່ມໍລະດົກໂລກໃນປີ 1979. ກຳແພງ, ໜາມໝາກຈັບ, ປ້ອມຍາມ, ເຮືອນນອນ, ຫຼັກແຂວນຄໍ ແລະ ໂດຍສະເພາະຫ້ອງອາຍພິດ ແລະ ເຕົາເຜົາສົບປະຈຳຄ້າຍເປັນຫຼັກຖານຢັ້ງຢືນເງື່ອນໄຂທີ່ພວກນາຊີປະຫານຊີວິດຜູ້ຄົນສີ່ລ້ານຄົນຊຶ່ງລວມມີເດັກນ້ອຍ ແລະ ຜູ້ເຖົ້າໃນຊາວສີ່ສັນຊາດແຕ່ໂດຍສະເພາະແລ້ວແມ່ນຊາວຢິວ. ສະຖານທີ່ແຫ່ງນີ້ເປັນຕົວແທນໃຫ້ໄລຍະໜຶ່ງໃນປະຫວັດສາດ ຂອງມວນມະນຸດທີ່ຄວນຈົດຈຳໄວ້ເພື່ອຫຼີກເວັ້ນການກັບຄືນມາອີກຄັ້ງໃໝ່ ຂອງຄວາມໂຫດຮ້າຍປ່າເຖື່ອນສິ່ງເຫຼົ່ານີ້ສ່ອງແສງໃຫ້ເຫັນຜົນສະທ້ອນອັນສະຍົດສະຫຍອງຂອງອະຄະຕິ.

ໃນສູ່ມື້ນີ້ຜູ້ທີ່ມາຢ້ຽມຢາມ ແລະ ຊອກຮູ້ສະຖານທີ່ແຫ່ງນີ້ສາມາດພົບເຫັນໃນພິພິດທະພັນອົດສະວິດ ຫ້ອງນັກໂທດ, ຫ້ອງອາຍພິດ ແລະ ເຕົາເຜົາສົບຂອງຄ້າຍ. ຢູ່ພິພິດທະພັນແຫ່ງນີ້ຍັງມີສູນເພື່ອຄົ້ນຄ້ວາປະຫວັດສາດດ້ວຍເອກະສານພຽງຢ່າງດຽວ. ຍ້ອນວ່ານັກທ່ອງທ່ຽວຫຼາຍພັນຄົນຊຶ່ງລວມມີນັກຮຽນຈາກຫຼາຍພາກພື້ນຂອງໂລກມາທ່ຽວຊົມ ອົດສະວິດ ໃນແຕ່ລະປີ, ສະນັ້ນສະ

ຖານທີ່ແຫ່ງນີ້ຈຶ່ງປະກອບສ່ວນຢ່າງມີຄວາມໝາຍເຂົ້າໃນການຕໍ່ສູ້ຢ່າງບໍ່ຢຸດຢັ້ງເພື່ອສັນຕິພາບ ແລະ ຄວາມປອດໄພຂອງໂລກ.

## ກິດຈະກໍາທີ 41 ສໍາລັບນັກຮຽນ

## ອະຄະຕິ: ອັນຕະລາຍແກ່ສັນຕິພາບ

**ວັດຖຸປະສົງ: ກໍາຈັດປັດເປົ່າການບໍ່ປະນີປະນອມ ແລະ ສົ່ງເສີມການຮຽນຮູ້ຫຼາຍວັດທະນະທໍາ ແລະ ການເຄົາລົບສະພາບແວດລ້ອມຂອງໂລກ.**

- ຕໍ່ໜ້າເຫດການໃຫຍ່ ຕົວຢ່າງ ສົງຄາມໂລກຄັ້ງທີ ໜຶ່ງ ແລະ ຄັ້ງທີ ສອງ ແລະ ລະບອບຂ້າຫາດຊຶ່ງໄດ້ປຸກປັ້ນອະຄະຕິ, ການບໍ່ປະນີປະນອມ ແລະ ການຈໍາແນກ ແລະ ຕໍ່ໜ້າຄວາມຈໍາເປັນທີ່ຕ້ອງຮັບປະກັນສັນຕິພາບໃນອະນາຄົດ, ບອກນັກຮຽນໃຫ້ສະແດງຄວາມຄິດເຫັນຂອງຕົນດ້ວຍການຂຽນບົດ, ການແຕ້ມຮູບ, ແຜ່ນໂຄສະນາ, ການແຕ່ງກາບກອນ, ເພັງ ຫຼື ດົນຕີ.
- ຖາມນັກຮຽນວ່າສິ່ງທີ່ເຂົາເຈົ້າໄດ້ສະເໜີນັ້ນມີສາຍກ່ຽວພັນກັບມໍລະດົກໂລກທີ່ເຂົາເຈົ້າໄດ້ຮຽນຮູ້ແນວໃດ, ການຮູ້ຈັກວັດທະນະທໍາ ແລະ ວິທີດໍາລົງຊີວິດອື່ນໆ, ຜ່ານການຮຽນມໍລະດົກໂລກຊ່ວຍໃຫ້ເຂົາເຈົ້າເຂົ້າໃຈ, ເຫັນຄຸນຄ່າ ແລະ ເຄົາລົບປະຊາຊາດອື່ນ ແລະ ສະພາບແວດລ້ອມຂອງໂລກບໍ່?

ເສລີພາບແມ່ນຄຸນຄ່າພື້ນຖານ ແລະ ເປັນຄວາມໝາຍຂອງຫຼາຍສະຖານທີ່ໃນມໍລະດົກໂລກ ຕົວຢ່າງ ຮູບປັ້ນຂອງເທພີແຫ່ງສັນຕິພາບ (La statue de la Liberté) ແລະ ສາລາແຫ່ງເອກະລາດ (Independence Hall) ຊຶ່ງຕັ້ງຢູ່ສະຫະລັດອາເມລິກາ. ຮູບປັ້ນຂອງເທພີເສລີພາບຕັ້ງຢູ່ປະຕູຂອງທ່າກໍາປັ່ນທີ່ນິວຢອກ ເພື່ອຕ້ອນຮັບຊາວອົບພະຍົບຫຼາຍລ້ານຄົນທີ່ມາຕັ້ງຖິ່ນຖານຢູ່ສະຫະລັດໃນເມື່ອກ່ອນ ໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກໃນປີ 1984. ອະນຸສອນສະຖານແຫ່ງນີ້ໄດ້ເປີດເປັນທາງການໃນປີ 1886 ແລະ ມີຄວາມສູງ 46 ແມັດໂດຍແມ່ນ ຟະເຣເດຣິກ-ໂອກຸດບາກໂຕນດີ (Frédéric-Auguste Bartholdi) ນັກປະຕິມາກໍາຝຣັ່ງ ແລະ ກຸດສະຕາວ ແອບແຟນ (Gustave Eiffel) ຜູ້ສ້າງຫໍແອບແຟນເປັນຜູ້ຮ່ວມງານທີ່ຮັບຜິດຊອບດ້ານເສົາເຫຼັກຮ່ວມກັນສ້າງທີ່ນະຄອນຫຼວງປາຣີ. ສັນຍາລັກແຫ່ງເສລີພາບນີ້ແມ່ນໜຶ່ງໃນການນໍາໃຊ້ເຕັກນິກຂະໜາດໃຫຍ່ຂອງສະຕະວັດທີ 19. ຍ້ອນວ່າອະນຸສາວະລີໄດ້ສ້າງຂຶ້ນຢູ່ທະວີບເອີຣົບໂດຍນັກປະຕິມາກໍາ

ຝຣັ່ງແຕ່ໂດຍການອຸປະຖໍາຂອງສາກົນ, ສະນັ້ນ ສະຖານທີ່ມໍລະດົກໂລກແຫ່ງນີ້ຈຶ່ງເປັນບ່ອນສະແດງອອກຂອງການແລກປ່ຽນວັດທະນະທໍາຢ່າງສັນຕິ ແລະ ມີຄຸນຄ່າສູງໃນດ້ານສັນຍາລັກ. ອະນຸສອນສະຖານແຫ່ງນີ້ໄດ້ຂຶ້ນທະບຽນໃນບັນຊີລາຍຊື່ມໍລະດົກໂລກໃນປີ 1979.

ກິດຈະກໍາທີ 42 ສໍາລັບນັກຮຽນ

## ຈື່ຄໍາສັບກ່ຽວກັບມໍລະດົກໂລກ ແລະ ສັນຕິພາບ

ວັດຖຸປະສົງ: ເສີມສ້າງຄວາມຮັບຮູ້ຂອງນັກຮຽນກ່ຽວກັບສາຍກ່ຽວພັນລະຫວ່າງມໍລະດົກໂລກ ແລະ ສັນຕິພາບ

- ບອກນັກຮຽນໃຫ້ຊອກຄໍາສັບກ່ຽວກັບມໍລະດົກໂລກ ແລະ ສັນຕິພາບເຊັ່ນ: ຄໍາສັບທີ່ມີຄວາມໝາຍຄືກັນ ຫຼື ໃກ້ຄຽງກັນ ຫຼື ຄໍາກົງກັນຂ້າມກັນ.
- ໃຫ້ເຂົາເຈົ້າສ້າງຄໍາສັບໄຂວ່ກັນດັ່ງ ຕົວຢ່າງ ໃນຮ່າງກິດຈະກໍາເພື່ອການສຶກສາ.

## ກິດຈະກຳເພື່ອການສຶກສາ
## ສ້າງຄຳສັບກ່ຽວກັບມໍລະດົກໂລກ ແລະ ສັນຕິພາບ



## ມໍລະດົກໂລກ ແລະ ວັດທະນະທຳແຫ່ງສັນຕິພາບ ຕາມຫຼັກສູດຂອງລາຍວິຊາ

### ສິລະປະ

ຄັດເລືອກສະຖານທີ່ມໍລະດົກໂລກທີ່ມີຄວາມກ່ຽວພັນກັບສັນຕິພາບ ຫຼື ຄວາມງາມ ສ້າງແຜ່ນໂຄສະນາທີ່ສົ່ງເສີມສັນຕິພາບ ແລະ ການປົກປັກຮັກສາມໍລະດົກໂລກ

### ພາສາຕ່າງປະເທດ

ໃຫ້ນັກຮຽນແປຄຳສັບ "ສັນຕິພາບ" ແລະ "ມໍລະດົກໂລກ"ເປັນພາສາຕ່າງປະເທດ. ອາດໃຫ້ເຂົາເຈົ້າແຕ່ງປະໂຫຍກ ຫຼື ຂຽນບົດສັ້ນຖ້າມີຄວາມສາມາດເຮັດໄດ້.

### ພູມສາດ

ຊອກບົດໃນໜັງສືພິມທີ່ສະເໜີຄວາມຂັດແຍ່ງ ແລະ ການສູ້ຮົບໃນພາກພື້ນຕ່າງໆຂອງໂລກຊຶ່ງເປັນໄພຂົ່ມຂູ່ຕໍ່ມໍລະດົກໂລກ

### ປະຫວັດສາດ

ຊອກສະຖານທີ່ໃນປະເທດຊຶ່ງເປັນສັນຍາລັກຂອງສັນຕິພາບ

ສະເໜີຄວາມສຳຄັນໃນປະຫວັດສາດຂອງສະຖານທີ່ນັ້ນ, ສະພາບໃນປັດຈຸບັນ ແລະ ໃນອະນາຄົດ.

### ພາສາລາວ

ຊອກຫາຄຳສັບທີ່ມີຄວາມໝາຍຄືກັນກັບສັນຕິພາບ, ເລືອກເອົາຄຳສັບໜຶ່ງເພື່ອຂຽນບົດສັ້ນກ່ຽວກັບຄວາມສຳພັນລະຫວ່າງຄຳສັບ ແລະ ມໍລະດົກໂລກ

### ຄະນິດສາດ

ເລືອກສະຖານທີ່ມໍລະດົກໂລກ ຕົວຢ່າງ ດອນກຳເຣ ຢູ່ປະເທດເຊເນການ ແລ້ວຊອກຫາຈຳນວນຂ້າທາດທີ່ຖືກສົ່ງໄປຂາຍທີ່ອາເມລິກາເພື່ອສ້າງເປັນສະຖິຕິໃນໄລຍະສິບປີ ຫຼື ສະຕະວັດເພື່ອວິເຄາະຂະບວນວິວັດຂອງການຄ້າຂ້າທາດ.